ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ການດັດສົມຮູບແບບການສົ່ງເສີມ
# ໃນ ສ ປ ປ ລາວ

ມິຖຸນາ 2005

ຮຽບຮຽງໂດຍ:  ກອງສົ່ງເສີມກະສິກຳ ແລະ ປ່າໄມ້ (NAFES) ພາຍໃຕ້
ການສະໜັບສະໜູນຈາກໂຄງການສົ່ງເສີມກະສິກຳ (LEAP)

# ຄໍານໍາ

ລັດຖະບານ ສ ປ ປ ລາວ ຍາມໃດກໍ່ເປັນຫ່ວງເປັນໃຍຕໍ່ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃນການຄໍ້າປະກັນສະບຽງອາຫານ, ການໃຫ້ບໍລິການສົ່ງເສີມສັງຄົມ ແລະ ການຮັກສາສະພາບແວດລ້ອມ. ຄວາມຫ່ວງໃຍນີ້ແມ່ນໄດ້ກໍານົດແຈ້ງໃນແຜນຍຸດທະສາດການລົດຜ່ອນຄວາມທຸກຍາກແຫ່ງຊາດ (2004). ໃນແຜນຍຸດທະສາດດັ່ງກ່າວໄດ້ລະບຸແຈ້ງວ່າລັດຖະບານຈະຕ້ອງໄດ້ "ພັດທະນາລະບົບການສົ່ງເສີມແບບປະສົມປະສານເພື່ອຖ່າຍທອດເຕັກໂນໂລຢີການຜະລິດກະສິກໍາໃຫ້ໄປເຖິງຊາວກະສິກອນ, ໂດຍສະເພາະຜູ້ທີ່ທຸກຍາກ. "ເພື່ອກ້າວໄປເຖິງຈຸດມຸ້ງໝາຍສຸດທ້າຍນັ້ນ, ຈໍາຕ້ອງໄດ້ມີການປັບປຸງ, ຍົກບົດບາດຂອງກອງສົ່ງເສີມຂຶ້ນ, ຮວມທັງເສີມສ້າງຂີດຄວາມສາມາດຂອງພະນັກງານສົ່ງເສີມຢູ່ໃນລະດັບເມືອງ ແລະ ແຂວງ. ການສົ່ງເສີມມີການກ່ຽວພັນໂດຍກົງກັບການສື່ສານສໍາພັນເພື່ອສະໜັບສະໜູນຄວາມພະຍາຍາມຂອງປະຊາຊາຊົນຊົນນະບົດໃນການແກ້ໄຂບັນຫາຂອງຕົນ ແລະ ໃຫ້ສາມາດນໍາໄຊ້ທຸກທ່າແຮງທີ່ມີໃນທ້ອງຖິ່ນ. ກອງສົ່ງເສີມແຫ່ງຊາດ ແມ່ນອົງການຈັດຕັ້ງທີ່ຮັບຜິດຊອບໃນວຽກງານດັ່ງກ່າວຂອງປະເທດ, ຊຶ່ງມີບົດບາດສໍາຄັນໃນການຄຸ້ມຄອງ, ປະສານບັນດາໂຄງການສົ່ງເສີມ. ກໍານົດຍຸດທະສາດເພື່ອຊຸກຍູ້ແຂວງ ແລະ ເມືອງໄດ້ມີການຈັດຕັ້ງການຝຶກອົບຮົມ ແລະ ສະໜອງຂໍ້ມູນຂ່າວສານທາງເຕັກນິກໂດຍອີງໃສ່ຄວາມຕ້ອງການຕົວຈິງຂອງຊາວກະສິກອນ, ແນໃສ່ສ້າງ ຄວາມເຂັ້ມແຂງໃນການບໍລິການວຽກສົ່ງເສີມໃຫ້ບັນລຸຜົນສໍາເລັດ. ໃນໄລຍະຜ່ານມາ ກອງສົ່ງເສີມໄດ້ພັດທະນາແລະທົດສອບຮູບແບບການສົ່ງເສີມຂອງລາວມາແລ້ວ. ຮູບແບບດັ່ງກ່າວແມ່ນຜົນງານຂອງບັນດາໂຄງການສົ່ງເສີມທີ່ໄດ້ປະຕິບັດຜ່ານມາກ່ວາສິບປີໃນຫຼາຍໆແຂວງທົ່ວປະເທດ, ມັນເປັນຮູບແບບທີ່ສະໜອງຕອບຄວາມຕ້ອງການຂອງປະຊາຊົນ, ປະສົມປະສານ ແລະ ສ້າງໜໍ່ແໜງລວມໝູ່, ຊຶ່ງສາມາດເຂົ້າເຖິງໄດ້ທັງຍິງແລະຊາຍຢ່າງສະເໝີພາບ. ຜົນທີ່ໄດ້ຈາກການທົດສອບນໍາໄຊ້ຜ່ານມາເປັນທີ່ໜ້າພໍໃຈ, ຊຶ່ງສະແດງອອກໃນຜົນຜະລິດຂອງຊາວກະສິກອນໄດ້ມີການເພີ່ມຂຶ້ນແລະ ກາຍເປັນສິນຄ້າໄດ້. ກະຊວງກະສິກໍາ ແລະ ປ່າໄມ້ໄດ້ເຫັນດີໃຫ້ມີການນໍາໄຊ້ຮູບແບບດັ່ງກ່າວຢ່າງກ້ວາງຂວາງໃນຂອບເຂດທົ່ວປະເທດໂດຍຄວາມເປັນເຈົ້າການຂອງກອງສົ່ງເສີມ. ດັ່ງນັ້ນ, ກອງສົ່ງເສີມ ຈຶ່ງຮຽກຮ້ອງມາຍັງທຸກພາກສ່ວນກ່ຽວຂ້ອງໄດ້ນໍາໄຊ້ຮູບແບບດັ່ງກ່າວເພື່ອສ້າງປະໂຫຍດໃຫ້ແກ່ປະຊາຊົນຜູ້ທຸກຍາກ. ຮຽກຮ້ອງໃຫ້ເກີດການຮ່ວມມືຢ່າງສູງມາຍັງພະນັກງານຂັ້ນແຂວງ ແລະ ເມືອງ ຕະລອດຮອດໂຄງການຊ່ວຍເຫຼືອຂອງຕ່າງປະເທດທີ່ເຮັດວຽກດັ່ງກ່າວໃນຂະແໜງການກະສິກໍາ ແລະ ປ່າໄມ້. ມີພຽງແຕ່ການຮ່ວມໄມ້ຮ່ວມມືກັນລະວ່າງພາກສ່ວນກ່ຽວຂ້ອງທັງຫຼາຍ, ພວກເຮົາຈຶ່ງຈະສາມາດເສີມສ້າງຂີດຄວາມສາມາດໃນການກະຈ່າຍການບໍລິການຕ່າງໆທີ່ເປັນການສ້າງ ແລະ ນໍາມາຊຶ່ງຄວາມຜາສຸກ, ຄວາມຈະເລີນໃຫ້ແກ່ປະຊາຊົນໄດ້.

ນະຄອນຫຼວງວຽງຈັນ, ມິຖຸນາ, 2005

ຫົວໜ້າກອງສົ່ງເສີມ ກ ປ

ອານົນ ຄໍາຮຸ່ງ

# *ບົດນຳ*

ເອກະສານສະບັບນີ້ໄດ້ຈັດທຳແລະຮຽບຮຽງຂຶ້ນໂດຍກອງສົ່ງເສີມກະສິກຳ ແລະ ປ່າໄມ້,ແນໃສ່ເພື່ອເຮັດໃຫ້ ວຽກງານ ການສົ່ງເສີມ ເກີດການປັບປຸງຢ່າງຕັ້ງໜ້າຢູ່ໃນ ສ ປປ ລາວ. ການສົ່ງເສີມກະສິກຳຢູ່ໃນປະເທດໄດ້ກຳເນີດຂື້ນມາກ່ວາ50ປີ, ແຕ່ກໍ່ຍັງເຫັນວ່າບໍ່ທັນມີຄວາມເຂັ້ມແຂງ, ບໍ່ທັນເອກະພາບແລະບໍ່ທັນເປັນລະບົບທີ່ມີປະສິດຕິພາບພໍເທົ່າໃດ. ຕໍ່ບັນຫາດັ່ງກ່າວມັນໄດ້ເລັ່ງທວງໃຫ້ມີການປັບປຸງໄວໃຫ້ທັນກັບສະພາບຄວາມຕ້ອງການຂອງຊາວຊົນນະບົດເພື່ອພັດທະນາຊີດຄວາມສາມາດໃນການຍົກປະສິດຕິຜົນການຜະລິດ ແນໃສ່ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກໄດ້. ເອກະສານການດັດສົມຮູບແບບການສົ່ງເສີມໃນ ສ ປປ ລາວ ສະບັບນີ້ຈະໄດ້ສະເໜີເປັນ ສາມພາກ ໃຫຍ່

<u>ພາກທີ 1. ອະທິບາຍຂະບວນວິວັດຂອງວຽກງານການສົ່ງເສີມໃນໂລກ</u> . ຊຶ່ງຈະໄດ້ທົບທວນຄືນກອບຄວາມຄິດ,ຍຸດທະສາດ ແລະ ບັນດາກິດຈະກຳ,ແນໃສ່ໃຫ້ເຫັນໄດ້ທ່າອ່ຽງອັນສຳຄັນໃນຮອບ 25 ປີຜ່ານມາ.

<u>ພາກທີ 2. ອະທິບາຍຂະບວນການພັດທະນາວຽກສົ່ງເສີມໃນ ສ ປ ປ ລາວ:</u> ປະກອບມີການທວນຄືນຮູບແບບສົ່ງເສີມ ຂອງບັນດາໂຄງການກ່ຽວຂ້ອງສຳຄັນທີ່ໄດ້ຈັດຕັ້ງປະຕິບັດຜ່ານມາແລະບົດຮຽນທີ່ຖອດຖອນໄດ້.

<u>ພາກທີ 3. ອະທິບາຍການດັດສົມຮູບແບບຕ່າງໆສຳລັບການນຳໃຊ້ໃນ ສ ປ ປ ລາວ ຕໍ່ໄປ.,</u> ຊຶ່ງຮຽກ ວ່າ "***ຮູບແບບການສົ່ງເສີມຂອງລາວ***" ໃນພາກນີ້ປະກອບມີລາຍລະອຽດຂອງຫຼັກການ ແລະຂັ້ນຕອນການປະຕິບັດ ຊຶ່ງໄດ້ຜ່ານການທົດສອບມາແລ້ວຈາກຫຼາຍໆໂຄງການ, ໂດຍສະເພາະກໍ່ ແມ່ນໂຄງການສົ່ງເສີມກະສິກຳ(LEAP).

ການດັດສົມໃນນີ້ ແມ່ນ "ການເສີມສ້າງ ຄວາມເຂັ້ມແຂງໂດຍນຳເອົາຫຼາຍສິ່ງທີ່ດີໆມາຮວມຕົວເຂົ້າກັນ" ອັນເປັນເປົ້າໝາຍຂອງການສ້າງຮູບແບບການສົ່ງເສີມຂອງລາວໂດຍສະເພາະ.

- ຮູບແບບການສົ່ງເສີມຂອງລາວສະແດງໃຫ້ເຫັນເຖິງການສັງຮວມເອົາ ບັນດາບົດຮຽນທີ່ດີຈາກອາດີດທັງຢູ່ໃນປະເທດ ແລະ ຈາກປະເທດອື່ນໆ
- ຮູບແບບການສົ່ງເສີມຂອງລາວສະແດງໃຫ້ເຫັນເຖິງຄວາມພະຍາຍາມເພື່ອໃຫ້ພະນັກງານວິຊາການກະສິກຳຂອງລັດໃນທຸກແຂວງແລະທຸກເມືອງໄດ້ ຮັບຮູ້ ຫຼັກການ ແລະ ຂັ້ນຕອນທີ່ຈຳເປັນ ຕ້ອງນຳໄປຈັດຕັ້ງປະຕິບັດວຽກງານການສົ່ງເສີມໃນຂອບເຂດທົ່ວປະເທດ.
- ຮູບແບບການສົ່ງເສີມຂອງລາວໄດ້ສະແດງເຫັນເຖິງຄວາມພະຍາຍາມ ໃຫ້ບັນດາໂຄງການຊ່ວຍເຫຼືອຈາກຕ່າງປະເທດ,ອົງການຈັດຕັ້ງສາກົນ ແລະ NGOs ໄດ້ມີການນຳໃຊ້ບັນດາຫຼັກການ ແລະ ຂັ້ນຕອນການຈັດຕັ້ງປະຕິບັດທີ່ໄດ້ອະທິບາຍໃນເອກະສານສະບັບນີ້

ໂດຍອີງໃສ່ວິໄສທັດ ຂອງລັດຖະບານ ໃນການພັດທະນາ ຂະແໜງການກະສິກຳ ແລະ ປ່າໄມ້ 1999,ຊີ້ໃຫ້ເຫັນຈະແຈ້ງວ່າ ຮູບແບບການສົ່ງເສີມໃນລາວຕ້ອງເກີດຂຶ້ນບົນພື້ນຖານຄວາມຕ້ອງການຂອງຊາວກະສິກອນ,ເຮັດຢ່າງຮອບດ້ານ, ຮັບໄຊ້ໃຫ້ຮາກຖານການຜະລິດ.ດັ່ງນັ້ນຮູບແບບການສົ່ງເສີມທີ່ພັດທະນາຂຶ້ນຈຶ່ງສັງຮວມເອົາບັນດາຫຼັກການເຊັ່ນ: ຫັນລົງສູ່ຮາກຖານ,ການມີສ່ວນຮ່ວມ,ເຂົ້າເຖິງໄດ້ທຸກເພດທຸກໄວແລະຍົກສູງຄວາມເປັນເຈົ້າການ.

ຮູບແບບການສົ່ງເສີມຂອງລາວສະທ້ອນໃຫ້ເຫັນຄວາມສຳພັນຂອງ 2 ລະບົບຍ່ອຍຄື: ການບໍລິການວິຊາການຈາກລະບົບຂອງລັດ ແລະ ລະບົບການສົ່ງເສີມຂັ້ນບ້ານຂອງພາກປະຊາຊົນ.

<u>ການບໍລິການວິຊາການຂອງພາກລັດ</u> ປະກອບມີ ສາມຂັ້ນການຄຸ້ມຄອງຄື: ກອງສົ່ງເສີມແຫ່ງຊາດ(NAFES), ສູນສົ່ງເສີມຂັ້ນແຂວງ(PAFEC), ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ (DAFES). ພະນັກງານລະດັບແຂວງແມ່ນຖືວ່າເປັນວິຊາການສະເພາະດ້ານ(SMS) ,ສ່ວນໃນຂັ້ນ ເມືອງຕ້ອງເປັນນັກສົ່ງເສີມຮອບດ້ານ(FSEWs)

<u>ລະບົບການສົ່ງເສີມຂັ້ນບ້ານ(VES)</u> ແມ່ນລະບົບທີ່ມີສ່ວນຮ່ວມໃນການຄຸ້ມຄອງລະວ່າງຊາວບ້ານກັບ ອຳນາດການປົກຄອງ. ການເຄື່ອນໄຫວເອື້ອອຳນວຍກິດຈະກຳ ການຖ່າຍທອດບົດຮຽນແມ່ນວິຊາການບ້ານ(VEW), ຊຶ່ງເປັນຜູ້ໄດ້ຮັບການຝຶກບັນດາເຕັກນິກການຜະລິດຕ່າງໆຈາກພະນັກງານຂອງລັດມາແລ້ວ.

ການເຄື່ອນໄຫວຕົວຈິງຂອງລະບົບແມ່ນເລີ່ມຈາກການຫາຄວາມຕ້ອງການຝຶກຂອງຊາວກະສິກອນ.ຜົນການຕົກລົງອັນນັ້ນແມ່ນຕໍ່ດ້ວຍການວິເຄາະວິໃຈຫາສິ່ງທີ່ຊາວກະສິກອນຕ້ອງການຢາກມີຄວາມຮູ້ແລະປັບປຸງທັກສະອັນໃດໃນຮອບການຮຽນຮູ້ນີ້ໆ. ນອກນັ້ນກໍ່ຍັງມີການກຳນົດຄອບຄົວທີ່ຕ້ອງເຂົ້າຮ່ວມໂຄງການຮຽນຮູ້. ຕະລອດຊ່ວງລະດູການຜະລິດ, ການຕິດຕາມຊຸກຍູ້ ແລະ ປະເມີນຜົນການຮຽນຮູ້ແບບມີສ່ວນຮ່ວມແມ່ນດຳເນີນການຢ່າງເປັນລະບົບຕໍ່ເນື່ອງແນໃສ່ໃຫ້ເຫັນໄດ້ຜົນສຳເລັດ,ຊອກເຫັນໄດ້ຜູ້ທີ່ສົນໃຈຮຽນຮູ້ຕໍ່ໂດຍມີການຈັດການແລກປ່ຽນບົດຮຽນລະວ່າງຊາວກະສິກອນດ້ວຍກັນທັງນີ້ກໍ່ເພື່ອຮັບປະກັນໃຫ້ຜົນການຮຽນຮູ້ໄດ້ແຜ່ຂະຫຍາຍອອກສູ່ວົງກ້ວາງພາຍໃນບ້ານ ແລະ ໄປສູ່ບ້ານອື່ນໆ.

ຫຼັກການແລະຂະບວນການໃນຮູບແບບການສົ່ງເສີມທີ່ໄດ້ອະທິບາຍໃນເອກະສານນີ້ແມ່ນສາມາດນຳໄຊ້ເຂົ້າໃນວຽກປົກກະຕິຂອງ ສູນສົ່ງເສີມຂັ້ນແຂວງ ແລະ ເມືອງຮວມທັງລະດັບໂຄງການ ທີ່ໄດ້ຮັບການຊ່ວຍເຫຼືອຂອງຕ່າງປະເທດ ນອກຈາກນັ້ນແລ້ວຮູບແບບການສົ່ງເສີມຂອງລາວນີ້ ບໍ່ແມ່ນເປັນຮູບແບບທີ່ແຂງກະດ້າງ,ມັນສາມາດດັດປັບໄຊ້ໃຫ້ແທດເໝາະກັບສະພາບຂອງແຕ່ ລະໂຄງການສົ່ງເສີມບົນພື້ນຖານການຕັດສິນໃຈໃນຂັ້ນບ້ານຕໍ່ການກຳນົດເອົາປະເພດເຕັກໂນໂລຢີ.

# *ຄຳຮູ້ບຸນຄຸນ Acknowledgments*

ໃຫ້ການສະໜັບສະໜູນແກ່ການກະກຽມເອກະສານສະບັບນີ້ແມ່ນໂຄງການສົ່ງເສີມກະສິກຳຊື່ງເປັນໂຄງການຊ່ວຍເຫຼືອຈາກອົງການຮ່ວມມືເພື່ອການພັດທະນາ(SDC)ຂອງປະເທດສະວິດສະແລນ,ໂດຍມີ Helvetas ຮ່ວມກັບກອງສົ່ງເສີມແຫ່ງຊາດເປັນຜູ້ຈັດຕັ້ງປະຕິບັດ.

ສາລະບານ

**ພາກທີ 1: ວິວັດທະນາການຂອງການສົ່ງເສີມໃນໂລກ ..... 1**

***1.1*** ບົດນຳກ່ຽວກັບການສົ່ງເສີມ ..... *1*

1.1.1 ກອບຄວາມຄິດທີ່ສຳຄັນ ..... 1

1.1.2 ຄຳສັບ ..... 2

1.1.3 ຄຳນິຍາມ ..... 2

1.1.4 ຄວາມແຕກຕ່າງຂອງຄວາມເຂົ້າໃຈຕໍ່ການສົ່ງເສີມ ..... 4

1.1.5 ປະຫັວດຂອງການພັດທະນາ ..... 8

1.1.6 ອົງປະກອບ ຂອງ ລະບົບການສົ່ງເສີມ ..... 10

1.1.7 ເປົ້າໝາຍສະເພາະຂອງການສົ່ງເສີມ ..... 11

***1.2*** ຍຸດທະສາດການສົ່ງເສີມ ..... *12*

1.2.1 ພາບລວມ ..... 12

1.2.2 ການສົ່ງເສີມແບບ ‘ການລະດົມ,ຊຸກຍູ້ທົ່ວໄປ’ ..... 12

1.2.3 ການສົ່ງເສີມທີ່ ‘ເນັ້ນຜະລິດໃຫ້ເປັນສິນຄ້າ’ ..... 13

1.2.4 ການສົ່ງເສີມແບບໃຫ້ ‘ການບໍລິການດ້ານທີ່ປຶກສາ’ ..... 14

1.2.5 ການສົ່ງເສີມແບບ ‘ຝຶກອົບຮົມ ແລະ ຢ້ຽມຢາມ’(T&V) ..... 15

1.2.6 ການສົ່ງເສີມແບບ ‘ການ ພັດທະນາຊຸມຊົນ’ ..... 16

1.2.7 ການສົ່ງເສີມ ‘ໃນຮູບແບບຄົ້ນຄ້ວາທົດລອງ’ ..... 17

1.2.8 ການສົ່ງເສີມແບບ ‘ກະຈ່າຍຈາກມະຫາວິທະຍາໄລ’ ..... 18

1.2.9 ການສົ່ງເສີມແບບເປັນ ‘ໂຄງການສົ່ງເສີມ’ ..... 19

***1.3*** ທ່າອ່ຽງສຳຄັນຂອງ ການສົ່ງເສີມໃນຊ່ວງໄລຍະ 25 ປີຜ່ານມາ ..... *20*

1.3.1 ການກຳເນີດ ແລະ ຄວາມລົ້ມສະຫຼາຍຂອງຮູບການສົ່ງເສີມແບບ(T&V) ..... 20

1.3.2 ພັດທະນາການຂອງຮູບແບບການມີສ່ວນຮ່ວມ ..... 21

1.3.3 ການຊຸກຍູ້ພາກສ່ວນເອກະຊົນເຂົ້າຮ່ວມ ແລະ ຄວາມພະຍາຍາມໄລ່ລຽງເສດຖະກິດ ..... 27

***1.4*** ວິທີໃນການສົ່ງເສີມ ..... *30*

1.4.1 ພາບລວມ ..... 30

1.4.2 ສື່ມວນຊົນ ..... 31

1.4.3 ການຕິດຕໍ່ສ່ວນບຸກຄົນ ..... 32

1.4.4 ການສາທິດ ..... 33

1.4.5 ການຈັດຝຶກອົບຮົມ ..... 34

1.4.6 ການຮຽນຮູ້ຈາກປະສົບການ ....................................................................35
1.4.7 ການຈັດການແລກປ່ຽນບົດຮຽນ ລະວ່າງຊາວກະສິກອນ ................................36

**ພາກທີ 2: ພັດທະນາການຂອງວຽກສົ່ງເສີມໃນລາວ .............................................38**

***2.1*** ອຸປະສັກໃນການພັດທະນາກະສິກຳ ......................................................... ***38***

***2.2*** ປະຫວັດເບື້ອງຕົ້ນຂອງການສົ່ງເສີມໃນລາວ ................................................***39***

***2.3*** ບັນດາໂຄງການສົ່ງເສີມທີ່ສຳຄັນໃນຊ່ວງ 10 ປີຫຼັງ ........................................***41***

2.3.1 ໂຄງການທົດສອບການສົ່ງເສີມ (PEP).......................................................41
2.3.2 ໂຄງການຝຶກອົບຮົມຊາວນາ (FIAT) ........................................................43
2.3.3 ໂຄງການປ້ອງກັນພືດແບບປະສົມປະສານ(IPM) ຂອງ FAO .........................45
2.3.4 ໂຄງການປ່າໄມ້ລາວ-ຊູແອດ (LSFP)........................................................47

***2.4*** ສະພາບລວມຂອງຮູບແບບການສົ່ງເສີມຜ່ານມາໃນລາວ ...................................***49***

2.4.1 ອັດຕາສ່ວນຂອງວຽກສົ່ງເສີມ ....................................................................50
2.4.2 ຫົວຂໍ້ການສົ່ງເສີມ ...................................................................................51
2.4.3 ວິທີໃນການສົ່ງເສີມ ..................................................................................54

***2.5*** ບົດຮຽນທີ່ຖອດຖອນໄດ້ຈາກອາດີດ ..........................................................***56***

***2.6 LEAP ແລະ ການດັດສົມ ປະສົບການ ໃນລາວ.....................................................59***

**ພາກທີ 3: ອະທິບາຍ "ຮູບແບບການສົ່ງເສີມຂອງລາວ" ...........................................63**

***3.1*** ເຫດຜົນໃນການດັດສົມຮູບແບບຕ່າງໆ ......................................................***63***

3.1.1 ນະໂຍບາຍລັດຖະບານ ..............................................................................63
3.1.2 ສິ່ງທ້າທາຍສຳລັບການສົ່ງເສີມໃນຕໍ່ໜ້າ .......................................................64

***3.2*** ຍຸດທະສາດການສົ່ງເສີມ .......................................................................***66***

3.2.1 ຫຼັກການລວມສຳລັບການສົ່ງເສີມໃນ ສ ປ ປ ລາວ ........................................66
3.2.2 ລັກສະນະສະເພາະຂອງຮູບແບບການສົ່ງເສີມຂອງລາວ ...................................68
3.2.3 ບົດບາດຂອງນັກສົ່ງເສີມ ..........................................................................69

***3.3*** ໂຄງສ້າງການຈັດຕັ້ງວຽກສົ່ງເສີມຂອງລັດ ...................................................***70***

3.3.1 ສະພາບລວມໃນການໃຫ້ບໍລິການຂອງລັດ ......................................................70
3.3.2 ບົດບາດ,ໜ້າທີ່ໃນລະດັບສູນກາງ ................................................................71
3.3.3 ບົດບາດ, ໜ້າທີ່ໃນລະດັບແຂວງ ..................................................................73
3.3.4 ບົດບາດ,ໜ້າທີ່ໃນລະດັບເມືອງ ...................................................................73

3.3.5 ທ່າແຮງໃນການຈັດຕັ້ງໃຫ້ມີຫ້ອງການສົ່ງເສີມປະຈຳເຂດ................................74

***3.4*** ການດຳເນີນລະບົບການສົ່ງເສີມຂັ້ນບ້ານ(VES) **.............................................*75***

3.4.1 ພາບລວມຂອງລະບົບການສົ່ງເສີມຂັ້ນບ້ານ.............................................. 75

3.4.2 ຂະບວນການສົ່ງເສີມໃນລະດັບບ້ານ.........................................................76

3.4.3 ການລິເລີ່ມ ແລະ ການຂະຫຍາຍລະບົບການສົ່ງເສີມຂັ້ນບ້ານ ......................778

3.4.4 ງົບປະມານຂອງລະບົບການສົ່ງເສີມຂັ້ນບ້ານ ...............................................80

3.4.5 ເຄື່ອງມືໃນຂະບວນການສົ່ງເສີມ...............................................................82

***3.5*** ກໍລະນີສຶກສາຮູບແບບການສົ່ງເສີມຂອງລາວ **..................................................*84***

***3.6*** ການເສີມສ້າງຄວາມເຂັ້ມແຂງຂອງອົງກອນ**...................................................*87***

3.6.1 ບົດບາດຂອງການຝຶກອົບຮົມ ...................................................................87

3.6.2 ການຝຶກອົບຮົມຂອງພະນັກງານສົ່ງເສີມ .....................................................88

3.6.3 ການຝຶກອົບຮົມຂອງຊາວກະສິກອນ........................................................889

***3.7*** ວິທີຈັດຕັ້ງຜັນຂະຫຍາຍຂອງບັນດາໂຄງການ**..................................................*90***

3.7.1 ປະເພດຂອງໂຄງການ..............................................................................90

3.7.2 ການສອດທ້ອຍເຂົ້າກັບຮູບແບບການສົ່ງເສີມ.............................................911

3.7.3 ຄວາມຢືດຢຸ່ນໃນເວລາຈັດຕັ້ງປະຕິບັດ .....................................................933

*ເອກະສານອ້າງອີງ* ......................................................................................................

# *Acronyms*

| | |
|---|---|
| ADO | Agricultural Development Organisation |
| AEA | Agricultural Extension Agency |
| CETDU | Central Extension Training and Development Unit |
| DAFO | District Agricultural and Forestry Office (formerly DAFSO) |
| EVES | Extend Village Extension System |
| FAO | Food and Agriculture Organisation of the UN |
| FEF | Farmer to Farmer Exchange |
| FFS | Farmer Field School |
| FIAT | Farmer Irrigated Agricultural Training project |
| FSEW | Farming Systems Extension Worker |
| FSR/E | Farming Systems Research and Extension |
| GOL | Government of Laos |
| HRD | Human Resource Development |
| ILEIA | Institute for Low External Input Agriculture |
| IPM | Integrated Pest Management |
| IRRI | International Rice Research Institute |
| KAP | Knowledge, Attitudes and Practices |
| KISS | Keep It Short and Simple |
| LEA | Lao Extension Approach |
| LEAP | Laos Extension for Agriculture Project |
| LSFP | Lao-Swedish Forestry Programme |
| MAF | Ministry of Agriculture and Forestry |
| NAFES | National Agriculture and Forestry Extension Service |
| NAFRI | National Agriculture and Forestry Research Institute |
| NGO | Non Government Organisation |
| NPEP | National Poverty Eradication Programme |
| PAFES | Provincial Agriculture and Forestry Extension Service |
| PAFO | Provincial Agricultural and Forestry Office (formerly PAFSO) |
| PEP | Pilot Extension Project |
| PRA | Participatory Rural Appraisal |
| PTD | Participatory Technology Development |
| RRA | Rapid Rural Appraisal |
| SDC | Swiss Agency for Development and Cooperation |
| SIFT | Success, Implementation, Failure and Training Needs |
| SMS | Subject Matter Specialist |
| T&V | Training and Visit System |
| TNA | Training Needs Assessment |
| UNDP | United Nations Development Programme |
| VES | Village Extension System |
| VEW | Village Extension Worker |
| WUG | Water Users Group |

# ພາກທີ I ວິວັດທະນາການຂອງການສົ່ງເສີມໃນໂລກ

## 1.1 ບົດນຳກ່ຽວກັບການສົ່ງເສີມ

### *1.1.1 ກອບຄວາມຄິດທີ່ສຳຄັນ*

ໃນເກືອບທຸກປະເທດທົ່ວໂລກໄດ້ມີຫຼາຍໆອົງກອນທີ່ຈັດຕັ້ງປະຕິບັດກິດຈະກຳທີ່ອາດຮຽກວ່າ"ການສົ່ງເສີມ"ແຕ່ທີ່ຈິງແລ້ວກໍ່ແມ່ນການເຮັດວຽກຊໍ້າໆກັນ ດັ່ງນັ້ນຈິ່ງເກີດມີຄຳຖາມຢູ່ວ່າ "ການສົ່ງເສີມແມ່ນ ຫຍັງກັນແທ້?"

ແທນທີ່ຈະເປັນຄວາມແຕກຕ່າງຢ່າງຊື້ນເຊີງ,ແຕ່ບັນດາອົງການຈັດຕັ້ງສົ່ງເສີມຕະລອດຮອດແຜນງານກໍ່ຍັງມີລັກສະນະສະເພາະໃດນຶ່ງທີ່ຄ້າຍຄຽງກັນ,ຊຶ່ງເຮັດໃຫ້ສາມາດຈັດລຽງເປັນກອບຄວາມຄິດກ້ວາງໆຂຶ້ນມາໄດ້ເຊັ່ນ...

... "ການສົ່ງເສີມ" ແມ່ນລະບົບການສື່ສານສຳພັນທີ່ອອກແບບສະເພາະເພື່ອໃຫ້ຊາວຊົນນະບົດມີຄວາມຮູ້ໃນການສະໜັບສະໜູນການປະຕິບັດນະໂຍບາຍການພັດທະນາໃຫ້ບັນລຸຜົນ.

ໃນທັດສະນະວຽກສົ່ງເສີມແລ້ວ"ການສື່ສານສຳພັນ"ແມ່ນກະແສການໄຫຼວຽນຂອງຂໍ້ມູນຂ່າວສານແລະຂໍ້ຄິດເຫັນ,ແຕ່ຫາກບໍ່ແມ່ນການຂົນສົ່ງຜູ້ຄົນ ຫຼື ວັດຖຸອຸປະກອນ.ໂດຍທຳມະຊາດຄົນສື່ສານສຳພັນກັນຢູ່ແລ້ວພຽງແຕ່ຍັງຂາດການອະທິບາຍໃນຮູບການສົ່ງເສີມທັງໆທີ່ມັນເປັນສ່ວນນຶ່ງຂອງລະບົບທີ່ຮັບໄຊ້ການວາງແຜນ,ການຄຸ້ມຄອງເພື່ອບັນລຸໄດ້ເປົ້າໝາຍສຸດທ້າຍ.

ລະບົບການສົ່ງເສີມມີຫຼາຍອົງປະກອບດ້ວຍກັນເຊັ່ນ: ເປົ້າໝາຍ,ຍຸດທະສາດ,ແລະກິດຈະກຳ. ຖ້າເວົ້າເປົ້າໝາຍສະເພາະແລ້ວມັນແມ່ນການຍົກຜົນຜະລິດດ້ານສະບຽງອາຫານ,ປັບປຸງການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາຊຸມຊົນ. ໃນທາງຍຸດທະສາດ ກໍ່ແມ່ນການເນັ້ນໃຫ້ເກີດການຜະລິດເປັນສິນຄ້າ, ດຳເນີນບົນພື້ນຖານການການຄົ້ນຄ້ວາທົດລອງ ແລະ ຖືເອົາລະບົບການຝຶກ ການຢ້ຽມຢາມເປັນສຳຄັນ. ສ່ວນກິດຈະກຳຕົ້ນຕໍແລ້ວກໍ່ແມ່ນການຈັດຝຶກອົບຮົມ, ຈັດການປະຊຸມໃຫ້ຄຳແນະນຳ,ເຮັດແປງສາທິດ ແລະ ນຳໄຊ້ບັນດາສື່ມວນຊົນ.

### *1.1.2 ຄຳສັບ ( Terminology)*

ຄຳວ່າ"ການສົ່ງເສີມ"ໄດ້ເລີ່ມນຳໃຊ້ເພື່ອ ອະທິບາຍໃນໂຄງການສຶກສາຜູ້ໃຫຍ່ຢູ່ປະເທດອັງກິດໃນຊ່ວງທ້າຍສັດຕະວັດທີ 19 . ໂຄງການດັ່ງກ່າວໄດ້ຊ່ວຍການຂະຫຍາຍຫຼືກະຈ່າຍວຽກຈາກຂອບເຂດມະຫາວິທະຍາໄລໄປສູ່ຊຸມຊົນໃກ້ຄຽງ. ຕໍ່ມາຄຳສັບດັ່ງກ່າວຈຶ່ງໄດ້ມີການນຳໃຊ້ຢູ່ໃນສະຫາລັດອາເມລິກາ,ສ່ວນໃນອັງກິດປ່ຽນມາເປັນ"ການໃຫ້ບໍລິການແນະນຳ"ໃນສັດຕະວັດທີ 20.ຍັງມີຫຼາຍຄຳສັບທີ່ມີການນຳໃຊ້ຢູ່ຫຼາຍສ່ວນຂອງໂລກເພື່ອອະທິບາຍກອບຄວາມຄິດທີ່ຄ້າຍຄຽງກັນນີ້.

| | | |
|---|---|---|
| ໂຮນລັງ | Voorlichting | ("ເຮັດໃຫ້ເປັນວິທີງ່າຍ") |
| ເຢັຍລະມັນ | Beratung | ("ວຽກການແນະນຳ") |
| ຝຣັ່ງ: | Vulgarisation | ("ການເຮັດໃຫ້ງ່າຍ") |
| ສະເປນ: | Capacitacion | ("ການປັບປຸງທັກສະ") |
| ລາວ,ໄທ: | Song-Suem | ("ການສົ່ງເສີມ") |

ໃນເອກະສານນີ້ຄຳວ່າ "ຮູບແບບການສົ່ງເສີມ" ແມ່ນນຳໃຊ້ໃນຄວາມໝາຍທີ່ສະແດງເຖິງການປະຕິບັດກິດຈະກຳສົ່ງເສີມ. ສ່ວນຄຳສັບອື່ນໆທີ່ໄຊ້ເພີ່ມເຕີມນັ້ນແມ່ນເພື່ອຄວາມເຂົ້າໃຈແຈ້ງດ້ານຄວາມໝາຍ:

- 'ທັດສະນະໃນການສົ່ງເສີມ' ແມ່ນກອບວິໃສທັດກ່ຽວກັບເປົ້າໝາຍຂອງການສົ່ງເສີມໂດຍສະທ້ອນໃຫ້ເຫັນວ່າຈະເຮັດແນວໃດ ແລະຍ້ອນຫຍັງຕ້ອງເຮັດໃຫ້ມີຂະບວນການສື່ສານສຳພັນ (ເບິ່ງ 1.1.4)
- 'ລະບົບການສົ່ງເສີມ' ແມ່ນປະກອບມີທັງອົງກອນ, ມີທັງເປົ້າໝາຍ, ມີໂຄງສ້າງການຈັດຕັ້ງ, ມີບຸກຄະລາກອນ,ມີຂັ້ນຕອນປະຕິບັດ, ປະເພດວຽກແລະກິດຈະກຳ(ເບິ່ງ 1;1;6)
- 'ຍຸດທະສາດການສົ່ງເສີມ'  ແມ່ນໂຄງປະກອບຂອງບັນດາໜ້າວຽກທີ່ສະແດງລັກສະນະອອກເປັນລະບົບສະເພາະເຈາະຈົງ(ເບິ່ງ 1;2)

### *1.1.3 ຄຳນິຍາມ*

ການຕີຄວາມໝາຍການສົ່ງເສີມແມ່ນຍັງບໍ່ມີຄຳນິຍາມທີ່ແຜ່ກ້ວາງແຕກຕ່າງກັນຫຼາຍພໍເທົ່າໃດ. ມີປະມານ ສິບຕົວຢ່າງທີ່ຈະໄດ້ຍົກຂຶ້ນເພື່ອໃຫ້ເຫັນວ່າໃນຊ່ວງ 50 ປີຜ່ານມາ ໄດ້ມີ ການຕີຄວາມ ໃຫ້ ນິຍາມການສົ່ງເສີມ ຢ່າງໃດ(ໂດຍອີງໃສ່ເອກະສານອ້າງອີງ)

**1949:** *ພາລະກິດຕົ້ນຕໍຂອງການສົ່ງເສີມແມ່ນເພື່ອຊ່ວຍບັນດາຄອບຄົວຊາວຊົນນະບົດ ໃຫ້ເຂົາເຈົ້າຊ່ວຍຕົນເອງໄດ້ໂດຍໃຫ້ມີການນໍາໃຊ້ວິທີວິທະຍາສາດແທນທີ່ການນໍາໃຊ້ພຽງແຕ່ວັດຖຸທີ່ມີເຂົ້າໃນການຜະລິດປະຈໍາວັນ,ການທຸງຕົ້ມ,ການດໍາເນີນວິຖີຊີວິດຂອງຄອບຄົວແລະຂອງທັງໝົດຊຸມຊົນ.*[1]

**1965:** *ການສົ່ງເສີມກະສິກໍາໄດ້ມີຄໍາອະທິບາຍວ່າ ເປັນລະບົບການສຶກສານອກໂຮງຮຽນ ສໍາລັບປະຊາຊົນໃນຊົນນະບົດ.*[2]

**1966:** *ບຸກຄະລາກອນການສົ່ງເສີມມີໜ້າທີ່ນໍາເອົາຄວາມຮູ້ທາງວິທະຍາສາດໄປສູ່ຄອບຄົວທີ່ເຮັດການຜະລິດຢູ່ບ່ອນຜະລິດຕົວຈິງຫຼືຢູ່ກັບຄອບຄົວເຂົາເຈົ້າແນໃສ່ໃຫ້ການຜະລິດກະສິກໍາເກີດມີ ປະສິດຕິຜົນສູງຂຶ້ນ*[3]

**1973:** *ການສົ່ງເສີມແມ່ນລະບົບໃຫ້ບໍລິການທີ່ມຸ້ງເນັ້ນ ຊ່ວຍຊາວກະສິກອນໂດຍຜ່ານຂະບວນການທາງການສຶກສາເພື່ອປັບປຸງຮູບແບບແລະວິທີການທໍາຟາມ,ຍົກຜະລິດຕະພາບແລະລາຍຮັບຂຶ້ນແນໃສ່ເຮັດໃຫ້ລະດັບຊີວິດການເປັນຢູ່ແລະສະຖານະພາບທາງສັງຄົມມີມາດຖານດີ*[4]

***1974:*** *ການສົ່ງເສີມແມ່ນກ່ຽວພັນສະໜິດແໜ້ນກັບການສື່ສານສໍາພັນຂໍ້ມູນເພື່ອຊ່ວຍປະຊາຊົນບຸລະນະຈັດຮູບແບບທາງດ້ານຄວາມຄິດແລະການຕັດສິນໃຈ*[5]

**1982**: *ການສົ່ງເສີມກະສິກໍາແມ່ນການຊ່ວຍຊາວກະສິກອນໃນການກໍານົດແລະວິເຄາະບັນຫາການຜະລິດອັນຈະນໍາໄປສູ່ການເຫັນໄດ້ ບັນດາໂອກາດໃນການປັບປຸງ*[6]

**1988:** *ການສົ່ງເສີມແມ່ນການເສີມສ້າງບົດບາດຂອງລະບົບສື່ສານຂໍ້ມູນທີ່ມີການຈັດຕັ້ງ ເພື່ອສ້າງໂອກາດໃຫ້ເກີດການນໍາໃຊ້ສິ່ງໃໝ່ດ້ວຍຄວາມສະມັກໃຈຂອງປວງຊົນຢ່າງພ້ອມພຽງ*[7]

**1997:** *ການສົ່ງເສີມແມ່ນຮູບການຈັດຕັ້ງແລກປ່ຽນຂໍ້ມູນຂ່າວສານຢ່າງນຶ່ງແນໃສ່ເປົ້າໝາຍການເພີ່ມທັກສະໃດນຶ່ງໃຫ້ສູງຂຶ້ນ*[8]

**1999:** *ໃຈຄວາມສໍາຄັນຂອງການສົ່ງເສີມກະສິກໍາແມ່ນການເອື້ອອໍານວຍໃຫ້ເກີດການປະຕິສໍາພັນ ອັນເປັນເຫື້ງາພະລັງຂຶ້ນໃນກະໂຕຂອງລະບົບຂໍ້ມູນຂ່າວສານຊຶ່ງປະກອບມາຈາກພາກສ່ວນຄົ້ນຄ້ວາທົດລອງ,ພາກສ່ວນການສຶກສາດ້ານກະສິກໍາ ຮວມທັງມາຈາກພາກສ່ວນສໍາຄັນກ່ຽວຂ້ອງ ທາງພາກທຸລະກິດ*[9]

**2004**: *ການສົ່ງເສີມແມ່ນການທ້ອນໂຮມ,ສຸມກໍາລັງຂອງບັນດາຂໍ້ມູນຈາກແຫຼ່ງຕ່າງໆເພື່ອພັດທະນາແລະຈັດສິ່ງກໍາມະວິທີທີ່ສາມາດຊ່ວຍແກ້ສະພາບການທີ່ເກີດເປັນບັນຫາ*[10]

### 1.1.4 *ຄວາມແຕກຕ່າງຂອງຄວາມເຂົ້າໃຈຕໍ່ການສົ່ງເສີມ*

ຄໍານິຍາມທີ່ກ່າວຂ້າງເທິງໄດ້ສັງຮວມເອົາກອບຄວາມຄິດຕ່າງໆຢ່າງກ້ວາງຂວາງແລະບາງຢ່າງກໍ່ບໍ່ສອດຄ່ອງກັນພໍເທົ່າໃດ. ຄວາມຫຼາກຫຼາຍທີ່ໄດ້ສະເໜີໄປນັ້ນຊີ້ໃຫ້ເຫັນເຖິງຄວາມແຕກຕ່າງຂອງກອບຄວາມຄິດກ່ຽວກັບການສົ່ງເສີມທີ່ຢາກຊີ້ໃຫ້ເຫັນວ່າການສົ່ງເສີມມັນເຮັດສິ່ງໃດແດ່ ຫຼື ມັນຄວນເຮັດສິ່ງໃດ!. ມີຢູ່ ສີ່ ວິໄສທັດຫຼືກອບຄວາມເຂົ້າໃຈທີ່ສາມາດນໍາມາໃຈ້ແຍກ/ກວດສອບເພື່ອໃຫ້ເຫັນ ຂະບວນ ການສື່ສານສໍາພັນທີ່ເກີດຂື້ນໃນລະບົບນັ້ນໆ,ທີ່ເຫັນວ່າເປັນໃຈຄວາມສໍາຄັນ ຂອງຄໍາວ່າ "ການສົ່ງ ເສີມ", ແລະ ອີກສອງປະເດັນທີ່ຕ້ອງເບິ່ງຕື່ມກໍ່ຄື ການສື່ສານສໍາພັນນັ້ນເກີດຂື້ນແນວ ໃດ! ແລະ ເປັນຫຍັງມັນຈື່ງເກີດຂື້ນ.

ກ) <u>ການສື່ສານສໍາພັນເກີດຂື້ນໃນລະບົບການສົ່ງເສີມແບບ"ປູ່ສອນຫຼານ" ແຕກຕ່າງກັບການມີສ່ວນຮ່ວມຢ່າງໃດ!</u>

ປື້ມສົ່ງເສີມເມື່ອກ່ອນຫຼາຍສະບັບໄດ້ອະທິບາຍຮູບການສື່ສານສໍາພັນແມ່ນການຈັດສົ່ງຂໍ້ຄວາມລະວ່າງຜູ້ສົ່ງ'sender'ໄປຫາຜູ້ຮັບ'receiver'. ໃນຮູບແບບດັ່ງກ່າວບົ່ງບອກວ່າຜູ້ສົ່ງແມ່ນບຸກຄົນທີ່ຢູ່ໃນການຈັດຕັ້ງຂອງລັດ,ອາດເປັນນັກວາງແຜນ,ນັກຄົ້ນຄ້ວາທົດລອງແລະນັກສົ່ງເສີມ, ສ່ວນຜູ້ຮັບແມ່ນຊາວກະສິກອນຊື່ງມັກເປັນຜູ້ທີ່ທຸກຍາກ,ຂາດການສຶກສາ. ໃນຮູບແບບດັ່ງກ່າວຍັງຊີ້ແຈງວ່າມີການສະທ້ອນກັບ'feedback',ຊື່ງເປັນອັນຈະແຈ້ງວ່າການໄຫຼວຽນຂອງຂໍ້ຄວາມຈາກຜູ້ສົ່ງຫາຜູ້ຮັບນັ້ນ ແມ່ນ ໄລຍະເວລາແລະໄລຍະທາງເປັນສິ່ງທີ່ມີອິດທິພົນຫຼາຍກ່ວາເລື່ອງອື່ນ, ກ່າວຄືຜູ້ ສົ່ງຈະເປັນຜູ້ຄວບຄຸມຂະບວນການສື່ສານສໍາພັນແລະເປົ້າໝາຍຂອງການວິເຄາະເບິ່ງ"ການ ສະທ້ອນກັບ" ກໍ່ແມ່ນເພື່ອໃຫ້ຜູ້ສົ່ງໄດ້ມີການປະກອບຂໍ້ຄວາມແລະວິທີສົ່ງໃຫ້ມີປະສິດຕິພາບ.

ຮູບແບບການສົ່ງຂໍ້ຄວາມດັ່ງທີ່ໄດ້ກ່າວມານັ້ນແມ່ນມີຄວາມສໍາພັນກັບແນວຄວາມຄິດທີ່ວ່ານັກສົ່ງເສີມແມ່ນເປັນຜູ້ເຊື່ອມຕໍ່(ຜູ້ນໍາຂໍ້ຄວາມໄປ)ລະວ່າງນັກທົດລອງ(ຜູ້ສົ່ງ)ກັບຊາວກະສິ ກອນ (ຜູ້ຮັບ). ໂຄງການສົ່ງເສີມທີ່ນໍາໃຊ້ຮູບການຖ່າຍທອດດັ່ງກ່າວໄດ້ຖືກອະທິບາຍວ່າເປັນ "ຮູບແບບ ປູ່ ສອນ ຫຼານ ຫຼື paternalism". ອີກຄໍານື່ງກໍ່ຄື "ຮູບແບບການສໍາພັນລະວ່າງ " ຄູ ສອນນັກ ຮຽນ". ມີນັກຂຽນບາງທ່ານກໍ່ໃຫ້ຊື່ຮູບການດັ່ງກ່າວແມ່ນ "ແບບເທິງລົງລຸ່ມ ຫຼື top-down" ເພື່ອ ການອະທິບາຍກອບຄວາມຄິດດັ່ງກ່າວ.

ໃນຫຼາຍໆປະເທດແນວຄິດການສົ່ງເສີມແບບ"ປູ່ ສອນ ຫຼານ"ໄດ້ຖືກປ່ຽນແທນດ້ວຍຮູບແບບການມີສ່ວນຮ່ວມ,ຊື່ງເປັນຮູບແບບທີ່ຖືສໍາຄັນຕໍ່ຂໍ້ຄິດເຫັນ,ຄວາມຮັບຮູ້ຂອງຊາວບ້ານເທົ່າທຽມກັບຂອງນັກທົດລອງ ແລະ ນັກສົ່ງເສີມ. ຮູບແບບການມີສ່ວນຮ່ວມແມ່ນເນັ້ນໃສ່ການແລກປ່ຽນຂ່າວສານຂໍ້ມູນແລະຮ່ວມກັນຕັດສິນໃຈເອົາທາງເລືອກ. ສະນັ້ນ, ຄໍາສັບ"ແບບມີການປະຕິສໍາ

ພັນ" ແລະ "ແບບລຸ່ມ ຫາ ເທິງ bottom up" ຈຶ່ງຖືກນໍາມາໄຊ້ເພື່ອອະທິບາຍກອບຄວາມຄິດເລົ່ານີ້.

ການພັດທະນາຮູບແບບການສົ່ງເສີມແບບມີສ່ວນຮ່ວມມີຄວາມຈໍາເປັນຕ້ອງໄດ້ກວດກາຄືນຂະບວນການສື່ສານສໍາພັນ. ມາຮອດປະຈຸບັນຍັງບໍ່ທັນມີການຊີ້ແຈງໃດໆເພື່ອປ່ຽນແທນຮູບແບບການນໍາສົ່ງຂໍ້ຄວາມທີ່ໄດ້ກ່າວຂ້າງເທິງນັ້ນເທື່ອ. ແຕ່ຢ່າງໃດກໍດີຍັງມີຢູ່ສອງແນວຄວາມຄິດໄດ້ກາຍເປັນທີ່ຍອມຮັບຢ່າງແຜ່ຫຼາຍ:

- ການສື່ສານສໍາພັນໃນລະບົບການສົ່ງເສີມແບບມີສ່ວນຮ່ວມຈະບໍ່ສາມາດນໍາໄຊ້ເພື່ອອະທິບາຍໄດ້ໃນກໍລະນີທາກມີຫຼາຍກຸ່ມຜູ້ສົ່ງແລະຜູ້ຮັບຂໍ້ຄວາມ. ເນື່ອງຈາກວ່າກິດຈະກໍາການສົ່ງເສີມເກີດມີຂື້ນຢູ່ໃນລະບົບການໃຫ້ຄວາມຮູ້ທີ່ປະກອບ ຈາກຫຼາຍພາກສ່ວນທີ່ເຮັດ ບົດບາດໜ້າທີ່ແຕກຕ່າງກັນ ແລະ ໃນເວລາທີ່ຕ່າງກັນ.
- ອີກຢ່າງນຶ່ງບາງພາກສ່ວນໃນລະບົບການໃຫ້ຄວາມຮູ້ນີ້ມີອິດທິພົນສູງກ່ວາພາກສ່ວນອື່ນ, ດັ່ງນັ້ນການສື່ສານສໍາພັນປົກກະຕິຈະກ່ຽວຂ້ອງກັບການຕໍ່ລອງຫຼາຍກ່ວາການນໍາສົ່ງ. ຜົນທີ່ເກີດຂື້ນກໍ່ມັກຈະເປັນຂໍ້ຕົກລົງລະວ່າງພາກສ່ວນຕ່າງໆນັ້ນ,ຫາກບໍ່ແມ່ນຂໍ້ມູນຂ່າວສານເພື່ອການຮຽນຮູ້ທີ່ງ່າຍດາຍພໍເທົ່າໃດ.

ຂ) <u>ເປັນຫຍັງການສື່ສານສໍາພັນທີ່ເກີດຂື້ນຈຶ່ງມັກເປັນພຽງການຜັກດັນ ຫາກບໍ່ແມ່ນໃຫ້ການສຶກສາ</u>

ເຖີງແມ່ນວ່າໂຄງການສົ່ງເສີມຕ່າງໆມີເປົ້າໝາຍແຕກຕ່າງກັນແຕ່ກໍ່ສາມາດຈັດເຂົ້າເປັນສອງໝວດລັກສະນະພື້ນຖານເຊັ່ນ:

- ລະບົບການສື່ສານສໍາພັນທີ່ມີເປົ້າໝາຍເພື່ອປ່ຽນພຶດຕິກໍາຊາວຊົນນະບົດ;
- ລະບົບການສື່ສານສໍາພັນທີ່ມີເປົ້າໝາຍເພື່ອປ່ຽນຄວາມຮັບຮູ້ຂອງຊາວຊົນນະບົດ.

ແນ່ນອນແລ້ວວ່າຄວາມຮັບຮູ້ແລະພຶດຕິກໍາມີຄວາມກ່ຽວພັນກັນສະໜິດແໜ້ນ,ຖ້າສິ່ງນຶ່ງເກີດມີການປ່ຽນແປງກ່ອນ, ສິ່ງອື່ນກໍ່ຈະປ່ຽນແປງຕາມມາ.ແຕ່ວ່າຄວາມແຕກຕ່າງລະວ່າງສອງຢ່າງນີ້ສາມາດຊີ້ແຈງໃຫ້ທັນໄດ້ໃນຄໍາຕອບຂອງຄໍາຖາມສໍາຄັນເຊັ່ນ:ໃຜເປັນຜູ້ກໍານົດວ່າກໍາມະວິທີອັນໃດທີ່ຊາວຊົນນະບົດຕ້ອງນໍາໄປໄຊ້ ແລະໃຜເປັນຜູ້ກໍານົດວ່າເຕັກໂນໂລຢີອັນໃດທີ່ເຂົາເຈົ້າຕ້ອງນໍາໄຊ້,ໄຊ້ແນວໃດ?ໃຜເປັນຜູ້ກໍານົດວ່າເຂົາຕ້ອງຮ່ວມມືກັນແນວໃດ? ແລະກໍານົດເວລາໃນການ ປະຕິບັດກິດຈະກໍາຄວນເປັນແນວໃດ??

ຖ້າຫາກຄໍາຕອບຕໍ່ຄໍາຖາມດັ່ງກ່າວຫາກແມ່ນຜູ້ອອກນະໂຍບາຍຂອງລັດຖະບານ ຫຼື ຜູ້ຄຸ້ມຄອງໂຄງການ ຫຼື ນັກຄົ້ນຄ້ວາທົດລອງແນ່ນອນວ່າເປົ້າໝາຍການສົ່ງເສີມແມ່ນເພື່ອປ່ຽນແປງພຶດຕິ

ກໍາ. ຮູບແບບດັ່ງກ່າວໃນທັດສະນະສົ່ງເສີມໄດ້ຖືກອະທິບາຍຢ່າງແຜ່ຫຼາຍວ່າເປັນຮູບແບບ"ທິດນໍາໃນການສົ່ງເສີມ","ເສີມສ້າງການຕະຫຼາດ", ແລະ "ການລະດົມຂົນຂວາຍ".

ແຕ່ຖ້າຜູ້ຕອບຫາກເປັນຊາວກະສິກອນ ຫຼື ຊາວຊົນນະບົດບໍ່ວ່າ "ຍິງແລະຊາຍ" ກໍ່ເປັນອັນວ່າເປົ້າໝາຍການສົ່ງເສີມແມ່ນເພື່ອປຸ່ງແລະເສີມສ້າງຄວາມຮັບຮູ້. ເພາະຄວາມຮູ້ເລົ່ານັ້ນເປັນສິ່ງຊ່ວຍຊາວຊົນນະບົດໃນການຕັດສິນໃຈວ່າຈະເລືອກໄຊ້ກໍາມະວິທີໃນການຜະລິດອັນໃດ, ໄຊ້ແບບໃດ?. ຮູບແບບດັ່ງກ່າວໃນທັດສະນະສົ່ງເສີມຮຽກກັນວ່າ " ການສຶກສານອກລະບົບ" ແລະ "ການປູກຈິດສໍານຶກ".

ຄ) <u>ສີ່ແນວຄວາມຄິດ ແລະ ຕົວຢ່າງ</u>

ລະບົບການສົ່ງເສີມໃດກໍ່ຕາມມັກຈະກ່າວເຖິງວ່າ "ການສື່ສານສໍາພັນເກີດຂື້ນແນວໃດ" ແລະ "ເປັນຫຍັງມັນຈື່ງເກີດ" ແຕ່ນັ້ນບໍ່ໄດ້ໝາຍວ່າລະບົບສົ່ງເສີມ"ແບບປູ່ສອນຫຼານ" ເວລາໃດກໍ່ເປັນການຜັກດັນ ຫຼື ວ່າໂຄງການສົ່ງເສີມແບບມີສ່ວນຮ່ວມມີຄວາມຈໍາເປັນຕ້ອງເປັນການໃຫ້ການສຶກສາຕະລອດໄປ. ເນື່ອງຈາກວ່າມັນມີ ສີ່ ອົງປະກອບສໍາຄັນທີ່ເປັນໄປໄດ້ຊື່ງແຕ່ລະຢ່າງເປັນຕົວແທນໃຫ້ແກ່ກອບຄວາມຄິດທີ່ແຕກຕ່າງກັນເຊັ່ນ:

- <u>ການຖ່າຍທອດເຕັກໂນໂລຢີ</u> (ການຜັກດັນ +ແບບປູ່ສອນຫຼານ).
  ແນວຄວາມຄິດນີ້ສະແດງອອກໃນຊ່ວງການລ້າອະນານິຄົມແລະໄດ້ຍ້ອນຄືນມານໍາໄຊ້ໃນຊ່ວງ 1970 ແລະ 1980 ຂະນະທີ່ລະບົບ T&V ໄດ້ຈັດຕັ້ງປະຕິບັດໃນທົ່ວອາຊີ. ການຖ່າຍທອດເຕັກໂນໂລຢີເປັນໄປໃນຮູບແບບ "ເທິງລົງລຸ່ມ" ໂດຍສຸມໃສ່ການໃຫ້ຂໍ້ແນະນໍາເປັນອັນສະເພາະດ້ານກໍາມະວິທີແກ່ຊາວກະສິກອນເພື່ອນໍາໄປໄຊ້.
- <u>ວຽກການແນະນໍາ</u> (ການຜັກດັນ+ການມີສ່ວນຮ່ວມ).
  ແນວຄວາມຄິດນີ້ສາມາດເຫັນໄດ້ໃນເວລາທີ່ການຈັດຕັ້ງພາກລັດຫຼືບໍລິສັດທີ່ປຶກສາຕອບສະໜອງຕາມຄວາມຕ້ອງການຂອງຊາວກະສິກອນດ້ານເຕັກນິກ. ບາງຄັ້ງຍັງເກີດມີໃນຮູບແບບໂຄງການທີ່ອົງການຈັດຕັ້ງສາກົນ ແລະ NGOs ຄຸ້ມຄອງເອງຊື່ງມີການໄຊ້ຮູບແບບການມີສ່ວນຮ່ວມເພື່ອຊຸກຍູ້ການນໍາໄຊ້ບັນດາເຕັກໂນໂລຢີທີ່ກໍານົດໄວ້ລ່ວງໜ້າແລ້ວ.
- <u>ການພັດທະນາຊັບພະຍາກອນມະນຸດ</u> (ໃຫ້ການສຶກສາ+ຮູບແບບປູ່ສອນຫຼານ). ແນວຄວາມຄິດນີ້ໄດ້ເກີດມີຂື້ນໃນຊ່ວງມີການສົ່ງເສີມໄລຍະຕົ້ນໃນຢູໂຣບ ແລະ ອາເມລິກາເໜືອໃນຂະນະທີ່ບັນດາມະຫາວິທະຍາໄລໄດ້ມີການຝຶກອົບຮົມຊາວຊົນນະບົດທີ່ເຫັນວ່າທຸກຍາກຫຼາຍເພື່ອໄດ້ເຂົ້າຮ່ວມຝຶກເຕັມສ່ວນ. ມາເຖີງປະຈຸບັນບັນດາວິທະຍາໄລຊັ້ນກາງກໍ່ຍັງມີການນໍາໄຊ້ກັບນັກຮຽນຝຶກງານຢູ່ໃນທົ່ວໂລກ., ທັງນີ້ກໍ່ຍ້ອນຮູບແບບການສອນໃນໂຮງຮຽນແມ່ນແບບ "ເທິງລົງລຸ່ມ" ແຕ່ເນື່ອງຈາກນັກສຶກສາຕ້ອງໄດ້ມີການຕັດສິນໃຈເອງໃນການນໍາໄຊ້ຄວາມຮູ້ທີ່ໄດ້ຮັບນັ້ນໃຫ້ເກີດຜົນ!..

- <u>ການເອື້ອອຳນວຍໃຫ້ເກີດອຳນາດຕໍ່ລອງ</u> (ໃຫ້ການສຶກສາ+ການມີສ່ວນຮ່ວມ). ແນວຄວາມຄິດນີ້ແມ່ນກ່ຽວພັນກັບການແລກປ່ຽນປະສົບການລະວ່າງຊາວກະສິກອນດ້ວຍກັນ. ຄວາມຮັບຮູ້ຈະໄດ້ຮັບຜ່ານຂະບວນການກະຕຸ້ນປະຕິສຳພັນ ແລະ ຜູ້ເຂົ້າຮ່ວມຈະຖືກກະຕຸ້ນໃຫ້ເກີດການຕັດສິນໃຈເອງ. ຕົວຢ່າງທີ່ດີໃນອາຊີກໍ່ແມ່ນໂຄງການສ້າງໂຮງຮຽນຊາວນາ(FFS) ແລະ ການສ້າງເຕັກໂນໂລຢີແບບມີສ່ວນຮ່ວມ(PTD).

ສາມາດເວົ້າໄດ້ວ່າໄດ້ມີຫຼາຍຂໍ້ໂຕ້ຖຽງກ່ຽວຂ້ອງກັບກອບຄວາມຄິດແລະຊື່ຂອງຄຳວ່າ"ການສົ່ງເສີມ"ທີ່ຕ້ອງໄດ້ຍົກຂື້ນມາໃຫ້ເຫັນຊື່ງກ່ຽວພັນກັບ ສີ່ ແງ່ແນວຄວາມຄິດ. ມີບາງກຸ່ມຜູ້ຊ່ຽວຊານເຊື່ອວ່າການຕີຄວາມໝາຍຕ້ອງເນັ້ນໃສ່ໃຫ້ສະແດງເຖີງຮູບແບບການລະດົມຂົນຂວາຍ, ຂະນະອີກ ບາງກຸ່ມເຊື່ອວ່າຕ້ອງໃຫ້ກ່ຽວຂ້ອງກັບການໃຫ້ເຫັນວ່າ ເປັນກິດຈະກຳໃຫ້ ການສຶກສາແລະບາງ ກຸ່ມຍັງຍົກຂໍ້ຄິດເຫັນວ່າ"ການສົ່ງເສີມ" ແລະ " ການມີສ່ວນຮ່ວມ" ເປັນສິ່ງ ທີ່ມີຄວາມໝາຍກົງກັນຂ້າມກັນ. ທັງໝົດນັ້ນແມ່ນມີເຫດຜົນທາງປັດສະຍາຢູ່ເບື້ອງຫຼັງ. ຢ່າງໃດ ກໍດີ,ຈາກຈຸດຢືນໃນ ພາກ ປະຕິບັດແລ້ວເຫັນວ່າ ຂະບວນການສື່ສານສຳພັນໄດ້ເປັນສິ່ງບົ່ງບອກຮູບຮ່າງແທ້ຈິງຂອງ ແຕ່ລະ ແນວຄວາມຄິດສີ່ຢ່າງນັ້ນ ແລະ ໄດ້ມີການຮັບຮູ້ເປັນທາງການພາຍໃຕ້ກອບຄວາມຄິດ ໃນການ ສົ່ງເສີມໃນໄລຍະຫຼັງນີ້ຢູ່ສ່ວນໃດນື່ງຂອງໂລກພວກເຮົາ. ຖ້າສັງຮວມແລ້ວສິ່ງທີ່ເກີດໄດ້ ໃນພາກປະຕິບັດຈິງ ແຕ່ຫາກບໍ່ເປັນພຽງແຕ່ ອຸດົມການ ກໍ່ສາມາດເວົ້າໄດ້ວ່າ ກິດຈະກຳທັງໝົດ ເລົ່ານັ້ນ ແມ່ນ ການສົ່ງເສີມ.

### 1.1.5 *ປະຫັວດການພັດທະນາ*

ກ) ຕົ້ນກຳເນີດຂອງການສົ່ງເສີມ

ມະນຸດທັງຍິງແລະຊາຍໄດ້ມີການປູກພືດ ແລະ ລ້ຽງສັດມາແລ້ວກ່ວາ 10,000 ປີ. ຕະລອດຊ່ວງໄລຍະດັ່ງກ່າວຊາວກະສິກອນໄດ້ມີການດັດປັບເຕັກໂນໂລຢີ, ມີການປະເມີນຜົນທີ່ໄດ້ຮັບ ແລະ ທັງໄດ້ມີການແລກປ່ຽນບົດຮຽນພາຍໃນສາມະຊິກຊຸມຊົນດ້ວຍກັນ. ໂດຍສ່ວນໃຫຍ່ແລ້ວການສື່ສານສຳພັນແມ່ນເກີດຂື້ນໃນຮູບບອກເລົ່າສືບທະນາ, ແລະບາງສ່ວນຂໍ້ມູນທີ່ເປັນການບັນທຶກຂີດຂຽນແມ່ນໄດ້ເກີດຂື້ນພ້ອມໆກັບຊ່ວງທີ່ລະບົບການຂຽນມີການພັດທະນາຕົວຂື້ນມານັ້ນ. ວິທີການຜະລິດກະສິກຳລະອຽດໄດ້ມີການຄົ້ນພົບໃນບັນທຶກຂອງຍຸກໂບຮານ"ເມໂສໂປຕາເມຽ" ໃນ ປະເທດເອຢິບ ແລະ ປະເທດຈີນ ມາກອ່ນແລ້ວ ຫຼາຍກ່ວາ 3000 ປີ. ແຕບໍ່ເປັນອັນປະຈັກແຈ້ງວ່າກິດຈະກຳການສົ່ງເສີມອັນໃດ,ເລີ່ມເກີດຂື້ນຢູ່ທີ່ໃດ?. ຢ່າງໃດກໍດີສິ່ງທີ່ປະຈັກແຈ້ງແມ່ນເສນາບໍດີຂອງຈີນ ໄດ້ມີການຂຽນນະໂຍບາຍການຜະລິດກະສິກຳ,ໄດ້ມີການຂຽນວິທີການຜະລິດ ແລະຂໍ້ແນະນຳຊາວກະສິກອນມາກ່ອນແລ້ວກ່ວາ 2,000 ປີ. ຕົວຢ່າງ: ປະມານ 800 ປີກ່ອນຄຣິດຕະການ, ເສນາບໍດີຜູ້ຮັບຜິດຊອບການກະສິກຳຂອງຣາຊວົງ ຈູ ໄດ້ມີການຈັດຕັ້ງສອນການປູກພືດໝູນວຽນ ແລະ ລະບົບການລະບາຍນ້ຳໃຫ້ແກ່ຊາວກະສິກອນຈີນ.ນອກນັ້ນອຳນາດດັ່ງກ່າວຍັງໄດ້ມີການມອບເຄື່ອງມື/ອຸປະກອນຈຳເປັນໃຫ້ຊາວກະສິກອນ[11].

ການສົ່ງເສີມທີ່ເປັນ ຮູບເປັນຮ່າງ ແບບໃໝ່ ໄດ້ເກີດມີຂື້ນທີ່ປະເທດ ໄອແລນ ໃນຊ່ວງກາງຂອງສັດຕະວັດທີ 19 [11] ,ໂດຍສະເພາະໃນຊ່ວງ 1845-51 ຊຶ່ງເປັນຊ່ວງທີ່ຕົ້ນມັນຝລັ່ງຂອງຊາວ ໄອຣິສ ຖືກພະຍາດ ເຊື້ອລາ ທຳລາຍໜັກໜ່ວງ,ຕົກໃນພາວະຂາດແຄນ. ລັດຖະບານອັງກິດໄດ້ສັນຫາ ແລະມອບໝາຍໃຫ້ "ຜູ້ນຳພາປະຕິບັດ"ລົງກວດກາຕາມເຂດຊົນນະບົດແລະໃຫ້ການສອນແກ່ຊາວກະສິກອນປູກພືດອື່ນທົດແທນ. ວິທີການດັ່ງກ່າວໄດ້ສ້າງຄວາມສົນໃຈໃຫ້ແກ່ພະນັກງານລັດໃນເຢຍລະມັນທີ່ມີການລົງສິດສອນຊາວກະສິກອນເໝືອນກັນແຕ່ໃນອີກຮູບການນຶ່ງ. ໃນຊ່ວງທ້າຍຂອງສັດຕະວັດທີ19,ແນວຄິດດັ່ງ ກ່າວໄດ້ແຜ່ໄປເຖິງ ປະເທດ ແດນມາກ,ໂຮນລັງ, ອີຕາລີ ແລະ ຝຣັ່ງເສດ.

ຮູບແບບ"ການສົ່ງເສີມຈາກມະຫາວິທະຍາໄລ" ໄດ້ເລີ່ມດຳເນີນການຈາກ ມະຫາວິທະຍາໄລແຄມບຣິຊ ແລະ ອອກສະຟອດ ໃນ ປີ 1867 ເພື່ອເປັນການສະເໜີ ວິທີສອນກິດຈະກຳຕ່າງໆໃນການຂະຫຍາຍວຽກຢູ່ພາຍໃນຂອບເຂດພື້ນທີ່ຂອງມະຫາວິທະຍາໄລຄຸ້ມຄອງ. ຕໍ່ມາໃນຊ່ວງຕົ້ນສັດຕະວັດທີ 20 ກໍ່ມີການນຳໄຊ້ວິທີການດັ່ງກ່າວຢ່າງແຜ່ຫຼາຍຈາກບັນດາ ວິທະ ຍາໄລໃນປະເທດສະຫະລັດອະເມລິກາຢູ່ຕາມສະໂມສອນຊາວກະສິກອນ, ຈາກນັ້ນ ຄຳວ່າ "ບໍລິການສົ່ງເສີມ"ຈຶ່ງໄດ້ນຳໄຊ້ ເປັນ ຄຳນາມນຶ່ງ ທີ່ກາຍມາເປັນ ຊື່ ຂອງຮູບແບບ ແລະປະເພດ ວຽກທີ່ພວກເຮົາໄດ້ມີການຮັບຮູ້ມາເຖິງປະຈຸບັນ.

ຂ) <u>ສີ່ ໄລຍະຂະຫຍາຍຕົວຂອງການສົ່ງເສີມໃນ ອາຊີ</u>

ການພັດທະນາວຽກບໍລິການສົ່ງເສີມໃນອາຊີຍຸກໃໝ່ຂອງແຕ່ລະປະເທດແມ່ນແຕກຕ່າງກັນໄປ. ສະນັ້ນ,ເພື່ອເປັນການເຫັນແຈ້ງໃນສິ່ງແຕກຕ່າງນັ້ນຈຶ່ງສັງຮວມໃຫ້ເຫັນຄວາມຕໍ່ເນື່ອງແຫ່ງ"ໄລ ຍະ ການຂະຫຍາຍຕົວ"ອອກເປັນສີ່ໄລຍະ

<u>ການກະສິກຳໃນຊ່ວງເປັນທີວເມືອງຂຶ້ນ:</u>
ພາຍໄຕ້ອຳນາດຂອງອະນານິຄົມ,ສະຖານີການທົດລອງໄດ້ຖືກສ້າງຕັ້ງຂຶ້ນຢູ່ຫຼາຍໆປະເທດໃນ ອາຊີ. ເປົ້າໝາຍຕົ້ນຕໍຂອງການສ້າງຕັ້ງນັ້ນກໍ່ແມ່ນເພື່ອຮັບໄຊ້ການມີຜະລິດຕະພັນພືດເພື່ອສົ່ງ ອອກ ເຊັ່ນ: ຢາງພາລາ,ຊາ,ຝ້າຍ ແລະ ນ້ຳຕານ. ການໃຫ້ຄຳປຶກສາດ້ານເຕັກນິກແມ່ນຜ່ານທີວ ໜ້າງານພາກສະໜາມ ແລະເຈົ້າຂອງຟາມໃຫຍ່ໆ. ສ່ວນການຊຸກຍູ້ຊາວນານ້ອຍຫຼືຜູ້ຜະລິດພໍ ຢັ່ງຊີບນັ້ນແມ່ນມີນ້ອຍທີ່ສຸດ ເວັ້ນແຕ່ມີກໍລະນີສຸກເສີນທາງທຳມະຊາດ.

<u>ການກະຈ່າຍວຽກສົ່ງເສີມແບບເທິງ ຫາ ລຸ່ມ(top-down):</u>
ຫຼັງຈາກປະເທດມີເອກະລາດການຜະລິດທີ່ເປັນສິນຄ້າຍັງດຳເນີນການຈາກລະບົບທີ່ອະນານິຄົມ ສ້າງປະໄວ້ນັ້ນ, ມີການວາງຄາດໝາຍສູ່ຊີນໃນແຜນການ 5 ປີ, ມີຫຼາຍຂະແໜງການວິຊາສະ ເພາະໄດ້ເລີ່ມໃຫ້ຄວາມສຳຄັນໃນການຊ່ວຍເຫຼືອຜູ້ຜະລິດນ້ອຍທີ່ພໍຢັ່ງຊີບໂດຍການສະໜັບສະ ໜູນຈາກໂຄງການຊ່ວຍເຫຼືອຂອງຕ່າງປະເທດ

<u>ການຫ້ອນໂຮມວຽກສົ່ງເສີມແບບເທິງ ຫາ ລຸ່ມ(top-down)</u>. ໃນຊ່ວງຊຸມປີ 1970-80 ຮູບການ ສົ່ງເສີມແບບ(ຝຶກ-ຢ້ຽມຢາມ)ຫຼື (T&V)ໄດ້ຮັບການນຳສະເໜີໃຫ້ນຳໄຊ້ໂດຍ ທານະ ຄານໂລກ. ບັນດາອົງການຈັດຕັ້ງກ່ຽວຂ້ອງໄດ້ຖືກຫ້ອນໂຮມເຂົ້າກັນເປັນລະບົບບໍລິການເຕັກນິກ ແຫ່ງຊາດ. ບັນດາຂໍ້ແນະນຳໄດ້ກະຈ່າຍສູ່ກຸ່ມຜູ້ຜະລິດຢ່າງຕໍ່ເນື່ອງ,ທັງນີ້ກໍ່ເພື່ອຊຸກຍູ້ການນຳໄຊ້ເຕັກໂນໂລ ຢີ ຕາມທິດສະດີ"ການປະຕິວັດຂຽວ"

<u>ການກະຈ່າຍວຽກສົ່ງເສີມແບບ"ລຸ່ມຫາເທິງ"(bottom-Up).</u>
ຂະນະທີ່ການສະໜອງງົບປະມານຈາກທານະຄານໂລກກ້າວສູ່ວາລະຢຸດສະງັກ ຮູບການສົ່ງເສີມ ແບບ (T&V)ລົ້ມສະຫຼາຍໃນຫຼາຍປະເທດ, ເຫຼືອໄວ້ພຽງບາງສ່ວນຂອງວຽກໃນບັນດາແຜນງານ ທີ່ຍັງມີເງິນຊ່ວຍເຫຼືອຈາກແລ່ງຜູ້ໃຫ້ທຶນອື່ນໆ. ບົດບາດການປະຕິບັດຄາດໝາຍສູ້ຊີນຈາກແຜນ ການ ມາຈາກສູນກາງ ລົດລົງ. ການປະສານສົມທົບລະວ່າງແນວຄວາມຄິດ/ວິທີການສ້າງຄວາມ ຢືນ ຍົງ ແລະ ຄວາມສະເໝີພາບທາງສັງຄົມມີໝາກຜົນເຫັນໄດ້ຊັດເຈນໂດຍຮູບການມີສ່ວນ ຮ່ວມ ແລະ ໄດ້ເຂົ້າປ່ຽນແທນຮູບການສົ່ງເສີມແບບ" ເທິງ ຫາ ລຸ່ມ"

ຮູບແບບການສົ່ງເສີມ"ໄລຍະທີສີ່" ໄດ້ຖືກສ້າງຂຶ້ນໃນຫຼາຍປະເທດ ແລະ ພຽງຂະນະທີ່ມັນຖືກ ເລີ່ມຕົ້ນສ້າງຕົວຂຶ້ນໃນຫຼາຍສ່ວນຂອງໂລກກໍ່ເຫັນໄດ້ຈະແຈ້ງວ່າຮູບແບບການມີສ່ວນຮ່ວມມີທ່າ

ຂະຫຍາຍຕົວໄປອີກຫຼາຍໆປີຕໍ່ໜ້າ ແລະ ກໍ່ອາດເປັນລະບົບ/ຮູບແບບການສົ່ງເສີມກະສິກຳໃນຍາວນານກໍ່ໄດ້ ຖ້າທຽບໃສ່ຜົນການສົ່ງເສີມທີ່ຜ່ານມາ 20 ກ່ວາປີ ເຖິງແມ່ນວ່າການສະ ໜັບສະໜູນໃນວຽກງານດັ່ງກ່າວຈາກອົງກອນຜູ້ໃຫ້ທຶນພາຍນອກມີນ້ອຍລົງ. ລະວ່າງອົງກອນການສຶກສາກໍ່ມີບາງພາກສ່ວນໄດ້ໃຫ້ທັດສະນະວ່າ:, "ການສົ່ງເສີມກະສິກຳ" ຄວນໄດ້ມີການຟື້ນຟູຕົບແຕ່ງຂຶ້ນຢ່າງເອົາຈິງເອົາຈັງຢ່າງເປັນອາຊີບ"[10] ອີກບາງພາກສ່ວນ ກໍ່ໃຫ້ທັດສະນະວ່າ" ວຽກການສົ່ງເສີມແມ່ນຕ້ອງຫັນລົງສູ່ຫົວໜ່ວຍຂັ້ນເມືອງ, ໂດຍເນັ້ນການ ສ້າງ"ລະບົບຄວາມຮູ້ຄວາມສາມາດ" ແລະຕ້ອງເຫັນຊາວກະສິກອນນັ້ນເປັນຜູ້ທີ່ຊ່ຽວຊານ ຫາກບໍ່ແມ່ນພຽງເປັນຜູ້ຍອມຮັບເອົາເຕັກນິກໄປໄຊ້[11]

### 1.1.6 *ອົງປະກອບຂອງລະບົບການສົ່ງເສີມ*

ຄຳວ່າ 'ລະບົບ' ແມ່ນການປະສານສຳພັນລະວ່າງອົງປະກອບຕ່າງໆທີ່ເຮັດໃຫ້ເກີດການດຳເນີນງານໄດ້ຢ່າງຄ່ອງຕົວ.ອົງປະກອບໃນລະບົບສົ່ງເສີມມີດັ່ງຕໍ່ໄປນີ້:

- <u>ເປົ້າໝາຍ ແລະ ຈຸດປະສົງ:</u><br>ແມ່ນຂໍ້ຕົກລົງທີ່ເອກະພາບນຶ່ງສ້າງຂຶ້ນໃນຮູບແບບການຂຽນທີ່ບົ່ງບອກເຖິງວ່າລະບົບຫຼືສ່ວນໃດນຶ່ງໃນລະບົບນັ້ນຕ້ອງບັນລຸ. ເປົ້າໝາຍຈະມີຂອບເຂດກ້ວາງກ່ວາຈຸດປະສົງ
- <u>ແຜນງານ ແລະ ໂຄງການ</u>:<br>ແມ່ນເອກະສານສັງຮວມບັນດາກິດຈະກຳທີ່ຕ້ອງຈັດຕັ້ງປະຕິບັດໃຫ້ເກີດຜົນສຳເລັດຕາມຈຸກປະສົງ/ຄາດໝາຍພາຍ ໃນກຳນົດເວລາໃດນຶ່ງໂດຍຜ່ານການອະນຸມັດເປັນທາງການ. ໂຄງການຈະມີຂອບເຂດເວລາ,ກອບການປະຕິບັດສັ້ນ/ແຄບກ່ວາແຜນງານ.
- <u>ຊັບພະຍາກອນມະນຸດ:</u> ແມ່ນບັນດາບຸກຄົນທີ່ຈັດຕັ້ງປະຕິບັດກິດຈະກຳຕ່າງໆໃນລະບົບ, ຮວມທັງຂີດຄວາມສາມາດ,ປະສົບການແລະຂະບວນການປະຕິບັດຂອງກຸ່ມຄົນເລົ່ານັ້ນ. ໃນລະບົບການສົ່ງເສີມແມ່ນພະນັກງານໃນອົງກອນສົ່ງເສີມ,ໂຄງການສົ່ງເສີມຮວມທັງການມີສ່ວນຮ່ວມຂອງຊາວກະສິກອນເປົ້າໝາຍ.
- <u>ໂຄງຮ່າງການຈັດຕັ້ງ:</u><br>ແມ່ນການຈັດວາງບຸກຄະລາກອນເຂົ້າໃນຕຳແນ່ງງານໂດຍກຳນົດຂອບເຂດສິດ, ໜ້າທີ່ຮັບຜິດຊອບທີ່ຊັດເຈນຮວມທັງວິທີການປະສານສົມທົບ.
- <u>ຂະບວນການວາງແຜນແລະການຄຸ້ມຄອງ:</u><br>ແມ່ນຄວາມຕໍ່ເນື່ອງຂອງບັນດາຂັ້ນຕອນທີ່ເປັນທາງການເພື່ອການຕັດສິນໃຈ,ປະສານສົມທົບ ແລະການຈັດຕັ້ງປະຕິບັດກິດຈະກຳຂອງອົງກອນ
- <u>ກົນໄກທາງດ້ານການເງິນ:</u> ແມ່ນແລ່ງທຶນ,ຮູບແບບການຈັດວາງທຶນ ແລະ ລະບຽບການໃນການໄຊ້ຈ່າຍຕ່າງໆ.

- <u>ຍຸດທະສາດ:</u> ແມ່ນຮູບແບບການປະສົມປະສານບັນດາວິທະຍາວິທີ ທີ່ ເປັນການເອື້ອອຳນວຍໃຫ້ແກ່ການປະຕິບັດກິດຈະກຳໃຫ້ບັນລຸຕາມເປົ້າໝາຍທີ່ວາງໄວ້
- <u>ວິທີການສົ່ງເສີມ:</u> ແມ່ນການຈັດກຸ່ມກິດຈະກຳທີ່ມີຄວາມແຕກຕ່າງກັນໃນທາງປະຕິບັດ,ຊຶ່ງໃນນັ້ນຈະມີຮູບການສື່ສານສຳພັນເປັນອັນສະເພາະ(ເຊັ່ນ: ຂະໜາດກິດຈະກຳ ແລະ ອຸປະກອນທີ່ຕ້ອງນຳໃຊ້).
- <u>ກິດຈະກຳ:</u> ແມ່ນໜ້າວຽກ ແລະ ຄວາມພະຍາຍາມປະຕິບັດຂອງບຸກຄົນ/ກຸ່ມຄົນໂດຍມີວິທີການສະ ເພາະເຈາະຈົງ.
- <u>ວິຊາສະເພາະ:</u> ແມ່ນຂໍ້ຄວາມເນື້ອໃນທາງເຕັກນິກທີ່ກ່ຽວຂ້ອງກັບການ ນຳໃຊ້ ເຕັກໂນໂລຢີເຂົ້າໃນກິດຈະກຳນັ້ນໆ

### 1.1.7 *ເປົ້າໝາຍສະເພາະຂອງການສົ່ງເສີມ*

ເປົ້າໝາຍແມ່ນຈຸດເລີ່ມຕົ້ນສຳລັບການວາງແຜນແລະການຄຸ້ມຄອງໃນວຽກສົ່ງເສີມ. ການກຳນົດເປົ້າໝາຍແມ່ນມີຫຼາຍລະດັບ: ນະໂຍບາຍການພັດທະນາລະດັບຊາດ,ແຜນພັດທະນາລະດັບ ທ້ອງຖິ່ນ ແລະ ຈຸດປະສົງລະດັບໂຄງການ. ຖັດລົງໄປກ່ວານັ້ນແມ່ນເປົ້າໝາຍການສົ່ງເສີມສະເພາະພືດຫຼືການສົ່ງເສີມດ້ານການປ່າໄມ້:

| *ຂະແໜງການ* | *ນະໂຍບາຍ* |
|---|---|
| ກະສິກຳ ແລະ ການຜະລິດສະບຽງ | • ປັບປຸງການຄ້ຳປະກັນສະບຽງແຫ່ງຊາດ |
| | • ຜະລິດວັດຖຸດິບສະໜອງອຸດສະຫະກຳ |
| | • ລົດຜ່ອນການນຳເຂົ້າ/ປັບປຸງຂາດດູນທາງການຄ້າ |
| ການຄຸ້ມຄອງຊັບພະຍາກອນທຳມະຊາດ | • ຍົກສູງຄວາມຍືນຍົງຂອງການຜະລິດ |
| | • ລົດຜ່ອນການແກ່ງແຍ້ງໃນການນຳໃຊ້ຊັບພະຍາກອນ |
| | • ຮັກສາຊີວະນາໆພັນ/ປ້ອງກັນໄພທຳມະຊາດ |
| ການພັດທະນາຊຸມຊົນ | • ປັບປຸງຊີວິດການເປັນຢູ່ຂອງຊາວຊົນນະບົດ |
| | • ຂະຫຍາຍການມີວຽກເຮັດງານທຳ |
| | • ເພີ່ມທະວີຄວາມເປັນເຈົ້າການ/ການພັດທະນາອົງກອນ |

ໃນນີ້ຈະເຫັນວ່າມີຄວາມສຳພັນທີ່ສະໜິດແໜ້ນລະວ່າງແນວຄວາມຄິດໃນການສົ່ງເສີມໃນ ຂໍ້ 1.1.4 ຂ້າງເທິງ ແລະເປົ້າໝາຍທີ່ກຳນົດໂດຍລັດຖະບານຫຼືອົງກອນຜູ້ໃຫ້ທຶນ.ທັງສອງຢ່າງບໍ່ວ່າແນວຄວາມຄິດ ແລະ ເປົ້າໝາຍແມ່ນສະທ້ອນໃຫ້ເຫັນເຖິງການຈັດຕັ້ງນັ້ນໆວ່າມີທັດສະນະຢ່າງໃດຕໍ່ບົດບາດ ໜ້າທີ່ຂອງ ຕົນ ແລະ ຕໍ່ປະຊາຊົນຊາວຊົນນະບົດ

ຮູບແບບການຊຸກຍູ້,ຊົນຂວາຍຢູ່ໃນວຽກສົ່ງເສີມແລ້ວແມ່ນມີສ່ວນກ່ຽວຂ້ອງກັບການເຮັດໃຫ້ບັນລຸເປົ້າໝາຍທີ່ຕັ້ງໄວ້ເປັນຕົວເລກສູ້ຊົນໃນແຜນພັດທະນາໄລຍະກາງເປັນສຳຄັນ. ຕົວຢ່າງ:ເມື່ອ

ລັດຖະບານຕັ້ງເປົ້າໝາຍວ່າຕ້ອງຍົກຜະລິດຕະພາບການປູກເຂົ້າຂື້ນໃຫ້ໄດ້ໃນລະດັບເປົ້າເຊັ່ນໃດນຶ່ງໃນຊ່ວງ ຫ້າປີຕໍ່ໜ້າ, ພາລະກິດຂອງການສົ່ງເສີມກໍ່ຄືການສ້າງຂີດຄວາມສາມາດໃນການກະຈ່າຍເຕັກໂນໂລຢີທີ່ພາກສ່ວນຄົ້ນຄ້ວາທົດລອງຄິດວ່າສາມາດນຳໃຊ້ໄດ້ເພື່ອໃຫ້ບັນລຸໄດ້ຕາມຄາດໝາຍ. ແຕ່ເມື່ອໃດທີ່ເປົ້າໝາຍຫາກກ້ວາງກ່ວາ,ກຳນົດໃນໄລຍະຍາວກ່ວາ ວຽກການສົ່ງເສີມກໍ່ຈະ ບໍ່ໄດ້ຖືສຳຄັນການຊຸກຍູ້,ຂົນຂວາຍ ແຕ່ຈຳຕ້ອງເນັ້ນການໃຫ້ການສຶກສາເປັນອັນກົກ. ຕົວຢ່າງ: ຖ້າລັດຖະບານກຳນົດວ່າຕ້ອງຍູ້ແຮງການຜະລິດກະສິກຳແບບຍືນຍົງດ້ວຍຫຼາຍຮູບການ, ພາລະກິດຂອງການສົ່ງເສີມກໍ່ອາດເນັ້ນໃສ່ການຊ່ວຍໃຫ້ຜູ້ຜະລິດສາມາດວິເຄາະຫາສິ່ງທີ່ເປັນອຸປະສັກ ແລະ ໂອກາດໃນການຟື້ນຟູຕ່າງໆເພື່ອໃຫ້ສາມາດຕັດສິນໃຈວ່າຈະເລືອກປູກພືດຫຍັງ ແລະ ດ້ວຍວິທີການໃດ?.

## 1.2 ຍຸດທະສາດໃນການສົ່ງເສີມ

### *1.2.1 ພາບລວມ*

ໃນພາກນີ້ຈະໄດ້ເບິ່ງລົງເລິກວ່າກິດຈະກຳການສົ່ງເສີມຖືກຈັດຕັ້ງຄຸ້ມຄອງແນວໃດເພື່ອໃຫ້ບັນລຸຕາມຄາດໝາຍວາງໄວ້.
ເກືອບວ່າໃນທຸກປະເທດຢ່າງນ້ອຍຈະມີນຶ່ງກົມໃນການຈັດຕັ້ງພື້ນຖານຂອງລັດເປັນຜູ້ຮັບຜິດຊອບວຽກບໍລິການ ວຽກສົ່ງເສີມໄປສູ່ຊາວຊົນນະບົດ. ໃນບາງກໍລະນີແມ່ນມີຫຼາຍກົມທີ່ມີການແບ່ງຄວາມຮັບຜິດຊອບສະເພາະວຽກງານ: ການສົ່ງເສີມປູກພືດ,ສົ່ງເສີມລ້ຽງສັດ ແລະ ການປ່າມົ້ງ. ນອກນັ້ນ,ອົງການຈັດຕັ້ງອື່ນເຊັ່ນມະຫາວິທະຍາໄລ,ສະຖານີທົດລອງ ແລະ NGOs ປົກກະຕິກໍ່ ຈະເຮັດກິດຈະກຳການສົ່ງເສີມເປັນໜ້າທີ່ອັນດັບສອງຂອງຕົນ.

ເຖິງຈະເປັນໜ້າທີ່ອັນທີນຶ່ງ ຫຼື ສອງກໍ່ຕາມວຽກສົ່ງເສີມຍັງເປັນກິດຈະກຳປົກກະຕິຕໍ່ເນື່ອງໃນທາງປະຕິບັດທີ່ມີ ຄວາມແຕກຕ່າງກັນໄປລະວ່າງເຂດນຶ່ງກັບອີກເຂດນຶ່ງ, ລະວ່າງປີ ຕໍ່ປີ , ຂະນະທີ່ອີກບາງກໍລະນີ ຍັງກຳນົດເປັນແຜນງານ/ໂຄງການທີ່ມີຈຸດປະສົງຄາດໝາຍແລະຂອບເຂດເວລາສະເພາະ.

ໄດ້ມີການກ່າວເຖິງມາແລ້ວວ່າສະຖາບັນການສົ່ງເສີມແລະ ແຜນງານຕ່າງໆມີລັກສະນະຫຼາກຫຼາຍແຕ່ກໍ່ສາມາດສັງຮວມໃນຮູບຍຸດທະສາດດັ່ງທີ່ຈະໄດ້ລະບຸຕໍ່ໄປນີ້:

### *1.2.2 ການ ລະດົມ, ຊຸກຍູ້ທົ່ວໄປ*

ຍຸດທະສາດນີ້ແມ່ນມີການນຳໃຊ້ທົ່ວໄປກ່ອນມີການນຳສະເໜີຮູບການສົ່ງເສີມ ແບບT&V.ໃນ

ເວລານັ້ນລັດຖະບານໄດ້ນໍາໃຊ້ພະນັກງານພາກສະໜາມຫຼາຍສາຂາວິຊາເພື່ອເຮັດວຽກສົ່ງເສີມຮວມທັງໜ້າທີ່ອື່ນເຊັ່ນ:

- ການສະໜອງປັດໃຈການຜະລິດເຊັ່ນ: ແນວພັນ,ສິນເຊື່ອ ແລະ ຝຸ່ນ/ຢາເຄມີ;
- ໃຫ້ບໍລິການໃນການສັກຢາວັກຊີນສັດລ້ຽງ ແລະ ກວດສອບດິນ;
- ຈັດຕັ້ງກຸ່ມຜູ້ໃຊ້ນໍ້າ ແລະ ສະຫະກອນ;
- ວຽກລະບຽບການເຊັ່ນການກັກກັນພືດ ແລະ ໃຫ້ຄໍາປຶກສາດ້ານການຕະລາດ;
- ເກັບກໍາ ສັງຮວມຂໍ້ມູນສະຖິຕິ ການຜະລິດ ແລະ ການນໍາໃຊ້ທີ່ດິນ.
- ເປັນຂົວຕໍ່ລະວ່າງປະຊາຊົນ ກັບພາກລັດ(ເຊັ່ນ: ປະກາດການເລືອກຕັ້ງ ແລະ ການຮັກສາສຸກກະພາບ)

ນັ້ນເປັນຍຸດທະສາດທີ່ມີເງື່ອນໄຂຕ້ອງນໍາໃຊ້ ໃນຂະນະທີ່: ກ.) ມີເປົ້າໝາຍເພື່ອຍົກສະມັດຕະພາບການຜະລິດໂດຍຜ່ານການກະຈ່າຍເຕັກໂນໂລຢີ ແລະ ຂ.) ເປັນກິດຈະກໍາທີ່ປະຕິບັດຢູ່ເຂດທີ່ຫຍຸ້ງຍາກບໍ່ທັນມີພາກສ່ວນໃດ(ເອກະຊົນ)ເຂົ້າໄປບໍລິການ. ໂດຍສະເພາະແລ້ວຍຸດທະສາດນີ້ມີສາຍພົວພັນກັນດ້ານແຜນການຢູ່ສີ່ຂັ້ນຕອນ:




ຍຸດທະສາດດັ່ງກ່າວມີຈຸດບົກພ່ອງຫຼາຍຢ່າງ. ອັນທີ່ນຶ່ງ,ພາກລັດໃນບາງປະເທດບໍ່ສາມາດສະໜອງປັດໃຈການຜະລິດໄດ້ຫຼືບໍ່ກໍ່ຊາວກະສິກອນຂັດຂ້ອງຕໍ່ຄຸນນະພາບຂອງປັດໃຈ,ຈັດສົ່ງໃຫ້ຊັກຊ້າ ແລະຄວາມບໍ່ຊື່ສັດຂອງເຈົ້າໜ້າທີ່. ຍິ່ງໄປກ່ວານັ້ນມັນຍັງເປັນການສະໜອງແບບຜູກຂາດ ແລະ ຍັງເປັນການສະກັດກັ້ນພາກສ່ວນເອກະຊົນທີ່ມີຄວາມອາດສາມາດເຮັດໄດ້ດີກ່ວາ.

ອີກບັນຫາອື່ນທີ່ມີໃນຍຸດທະສາດນີ້ແມ່ນ, ເຖິງມີພະນັກງານມາຈາກຫຼາຍສາຂາວິຊາ ແຕ່ກໍ່ໃຊ້ເວລານ້ອຍທີ່ສຸດໃຫ້ແກ່ກິດຈະກໍາທີ່ເປັນການສຶກສາເພີ່ມຄວາມຮູ້/ສາມາດ, ດັ່ງນັ້ນຜົນທີ່ໄດ້ຮັບກໍ່ຄືມີພຽງແຕ່ຄອບຄົວມີຖານະດີ ທີ່ໄດ້ຮັບຄໍາແນະນໍາ. ເວລາທີ່ມີການແນະນໍາກໍ່ເປັນໄປໃນຮູບແບບນໍາສະເໜີປະລິມານ/ວິທີການທີ່ຕ້ອງນໍາໃຊ້ປັດໃຈການຜະລິດ ,ແຕ່ຫາກບໍ່ແມ່ນການເຮັດໃຫ້ຊາວກະສິກອນສາມາດວິເຄາະວິໃຈໃຫ້ເຫັນບັນຫາ,ທ່າແຮງທີ່ເຂົາເຈົ້າມີ

### *1.2.3 ການສົ່ງເສີມທີ່ເນັ້ນຜະລິດໃຫ້ເປັນສິນຄ້າ*

ການສົ່ງເສີມການຜະລິດໃຫ້ເປັນສິນຄ້າໄດ້ເປັນການສັງຮວມເອົາການບໍລິການດ້ານເຕັກນິກເຂົ້າ

ສູ່ການປູກພືດດ່ຽວ. ຍຸດທະສາດດັ່ງກ່າວມັກຈະນຳໄຊ້ໃນການຜະລິດພືດເພື່ອສົ່ງອອກເຊັ່ນ: ຢາງພາລາ, ຊາ, ຝ້າຍ, ນ້ຳຕານ ແລະ ປໍ.

ສອງຈຸດພິເສດສຳຄັນຂອງຍຸດທະສາດນີ້ມີຄື: ຢ່າງທີ່ນຶ່ງການສົ່ງເສີມທີ່ເນັ້ນເພື່ອຜະລິດເປັນສິນຄ້າ ປົກກະຕິເປັນສ່ວນນຶ່ງຂອງການຜະລິດແບບຜູກພັນ. ຊາວກະສິກອນຕ້ອງໄດ້ມີການເຊັນຂໍ້ສັນຍາກັບຜູ້ເກັບຊື້, ບໍລິສັດປຸງແຕ່ງ ຫຼື ໃນຊ່ວງໃກ້ໆນີ້ກໍ່ແມ່ນການຄ້າລາຍໃຫຍ່ເຊັ່ນຊຸບເປີມາກເກດ. ພາຍໄຕ້ສັນຍານັ້ນຊາວກະສິກອນຈະໄດ້ຮັບການສະໜອງປັດໃຈໃຫ້(ມັກຈະເປັນໃນຮູບສິນເຊື່ອ)ແລະຈະມີການລະບຸລາຄາທີ່ຈະຊື້ໄວ້ໃນສັນຍາ. ຊາວກະສິກອນຕ້ອງໄຊ້ແນວພັນແລະເຕັກນິກທີ່ກຳນົດໃຫ້ໂດຍຜູ້ທີ່ຈະຊື້ ແລະຫ້າມຂາຍໃຫ້ແກ່ພາກສ່ວນອື່ນ. ການຜະລິດແບບສັນຍາຜູກພັນນີ້ໄດ້ນຳໄຊ້ໃນການຜະລິດນ້ຳຕານໃນ ອາຊີມາແລ້ວກ່ວາ 100 ປີ. ໃນຊຸມປີກ່ອນໜ້ານີ້ໆນີ້ກໍ່ມີການນຳໄຊ້ທີ່ແຜ່ຫຼາຍໃນການລ້ຽງສັດປີກແລະອາດມີການແຜ່ໄປສູ່ການຜະລິດພືດຜັກສຳຄັນໆອີກດ້ວຍ(ຊຶ່ງມີບາງບ່ອນໃນ ຢູໂຣບມີການນຳໄຊ້ແລ້ວ)

ປະການທີສອງເຫັນວ່າການສົ່ງເສີມທີ່ເນັ້ນການຜະລິດເປັນສິນຄ້ານີ້ປົກກະຕິມີການພົວພັນກັບການຄົ້ນຄ້ວາທົດລອງ. ແນວພັນ,ຂັ້ນຕອນທາງເຕັກນິກໃນການຜະລິດແມ່ນຖືກພັດທະນາຂື້ນໂດຍອີງກອນດັ່ງກ່າວນັ້ນຈະຖືກນຳໄປໃຫ້ຊາວກະສິກອນ. ຜົນອອກມາກໍ່ຄືຂໍ້ມູນທາງເຕັກນິກທີ່ຊາວກະສິກອນໄດ້ຮັບ ແມ່ນມີລະດັບສູງເກີນໄປ, ເຖິງແມ່ນວ່າເປັນພຽງຫົວຂໍ້ອັນໃດອັນນຶ່ງຫຼືເລື່ອງໃດນຶ່ງກໍ່ຕາມ ແຕ່ມີ ຄວາມສຳຄັນສຳລັບບໍລິສັດທີ່ຈະຮັບຊື້.

ການຜະລິດແບບສັນຍາຜູກພັນ ແລະ ການສົ່ງເສີມທີ່ເນັ້ນການຜະລິດເປັນສິນຄ້າປົກກະຕິມີຜະລິດຕະຜົນສູງ ແລະ ຊາວກະສິກອນໄດ້ຮັບປະໂຫຍດດ້ານການເງິນທີ່ໝັ້ນຄົງໂດຍມີການຄ້ຳປະກັນລາຄາໄວ້, ແຕ່ກໍ່ມີສອງປະເດັນບັນຫາເກີດຂື້ນ:

- ຊາວກະສິກອນຂາດອຳນາດໃນການຕັດສິນໃຈແລະຕໍ່ລອງ,ກາຍເປັນພຽງຜູ້ໄຊ້ແຮງງານໃນເນື້ອທີ່ດິນກະສິກຳຂອງຕົນເອງ
- ຜົນປະໂຫຍດຂອງຜູ້ຜະລິດຖືກຜູກມັດໂດຍລະບົບຜູກຂາດຂອງຜູ້ຊື້ ແລະຊາວກະສິກອນໄດ້ກາຍ ເປັນລູກໜີ້ປະຈຳໃນທີ່ສຸດ

### *1.2.4 ການບໍລິການດ້ານທີ່ປຶກສາ*

ແຕກຕ່າງກັບສອງຍຸດທະສາດກ່ອນນີ້ຄື ການບໍລິການດ້ານທີ່ປຶກສາແມ່ນເນັ້ນໃສ່ການສະໜອງຂໍ້ມູນໃຫ້ ຫຼາຍກ່ວາການສະໜອງປັດໃຈເຊັ່ນໃຫ້ສິນເຊື່ອແລະວັດຖຸພັນທາງເຄມີ. ໃນບາງກໍລະນີການໃຫ້ຄຳປຶກສາແມ່ນດຳເນີນການກັບລາຍຄອບຄົວຜູ້ຜະລິດ ແລະບາງກໍລະນີດຳເນີນການເປັນກຸ່ມຜູ້ຜະລິດ.

ການບໍລິການດ້ານທີ່ປຶກສາແມ່ນແຜ່ຫຼາຍໃນຢູໂຣບ. ການບໍລິການດັ່ງກ່າວໄດ້ເລີ່ມຈາກພາກລັດຕໍ່ມາກໍ່ໄດ້ຫັນໄປສູ່ພາກເອກະຊົນ. ນອກນັ້ນ,ບາງບໍລິສັດທີ່ປຶກສາຍັງມີການດຳເນີນການເພື່ອຮັກສາສະຖຽນລະພາບການຜະລິດຂອງບາງປະເພດຜູ້ຜະລິດ(ເຊັ່ນ: ຜູ້ຜະລິດທີ່ໄຊ້ເຮືອນແກ້ວ, ຜູ້

ຜະລິດ ຜະລິດຕະພັນນົມ). ຜົນອອກມາກໍ່ຄື ຊາວກະສິກອນໃນຫຼາຍປະເທດຂອງຢູໂຣບພໍໃຈຈ່າຍຄ່າການສະໜອງຂໍ້ມູນ ເໝືອນກັບການຈ່າຍຄ່າປັດໃຈການຜະລິດ. ບັນດາຂໍ້ມູນທີ່ໄດ້ຮັບອາດ ກ່ຽວກັບເຕັກນິກການຜະລິດ, ການເງິນ ແລະ ລະບຽບການກ່ຽວຂ້ອງ ແລະ ຜູ້ທີ່ໄດ້ຮັບເລືອກເປັນທີ່ປຶກສາແມ່ນເປັນຜູ້ທີ່ຜ່ານປະສົບການ,ການຝຶກຝົນເປັນຢ່າງດີເພື່ອຕອບສະໜອງໄດ້ຕາມສິ່ງທີ່ຊາວກະສິກອນຕ້ອງການ.

ຍັງມີຮູບແບບທີ່ແຕກຕ່າງໃນການເຮັດວຽກທີ່ປຶກສາທີ່ບັນດາໂຄງການພັດທະນານຳໄຊ້ໃນອາຊີ. ມີຫຼາຍໂຄງການໄຊ້ຮູບແບບການມີສ່ວນຮ່ວມເພື່ອຊຸກຍູ້ການເຮັດຝຸ່ນບົ່ມ, ການລ້ຽງປາ,ການປູກເຫັດ,ການສັກຢາວັກຊິນສັດປີກແລະ ອື່ນໆ. ໃນຂະນະດຽວກັນ,ໂຄງການເລົ່ານັ້ນກໍ່ເປັນສ່ວນນຶ່ງໃນການພັດທະນາຊຸມຊົນ(ເບິ່ງເພີ່ມໃນຂໍ້ 1.2.6), ແຕ່ການແກ້ໄຂຕໍ່ບັນຫາຕ່າງໆເລົ່ານັ້ນແມ່ນຖືກອອກແບບໂດຍຊ່ຽວຊານພາຍນອກ.ຊ່ຽວຊານພາຍນອກເລົ່ານັ້ນກໍ່ເຮັດແຕ່ໜ້າທີ່ຜູ້ຊ່ຽວຊານຫາກບໍ່ແມ່ນຜູ້ເອື້ອອຳນວຍການຮຽນຮູ້; ແລະສິ່ງນີ້ເອງໄດ້ເຮັດໃຫ້ຮູບແບບດັ່ງກ່າວມີຄວາມຄ້າຍຄຽງກັນກັບຮູບແບບທີ່ໄຊ້ໃນຢູໂຣບ.

ທັງສອງກໍລະນີ,ມີຄວາມຈຳເປັນຕ້ອງມີປະຕິສຳພັນໃນລະດັບສູງລະວ່າງຊາວກະສິກອນແລະທີ່ປຶກສາເຂົາເຈົ້າ,ທັງນີ້ກໍ່ເພື່ອໃຫ້ເກີດຄວາມແນ່ໃຈວ່າຂໍ້ມູນນັ້ນສອດຄ່ອງກັບພື້ນຖານການຜະລິດຕ້ອງການ.ຍິ່ງໄປກ່ວານັ້ນໃນກະໂຕຂະບວນການດຳເນີນການນັ້ນມັນຍັງເປັນການໃຫ້ຄຳ ຕອບຕໍ່ບັນຫາທີ່ຮີບດ່ວນຂອງຊາວກະສິກອນໄດ້ໄວ ແທນທີ່ຈະເປັນການພັດທະນາຂີດຄວາມສາມາດອັນແນ່ນອນໃນການແກ້ບັນຫາໂດຍຊາວກະສິກອນເອົາເອງ. ໂດຍວິທີການດັ່ງກ່າວ, ການ ບໍລິການດ້ານທີ່ປຶກສາແມ່ນ ສາມາດ ສ້າງຜົນຮັບໃນທາງປະຕິບັດຂື້ນ ໃນຮູບການ '*ຂື້ນກັບ*' ລະວ່າງຊາວກະສິກອນກັບທີ່ປຶກສາຈາກພາຍນອກ,ໂດຍສະເພາະຊາວກະສິກອນທີ່ເປັນລູກຄ້າແລ້ວນັ້ນແທນທີ່ເຂົາເຈົ້າຈະກາຍເປັນຜູ້ຊ່ຽວຊານເອົາເອງໄດ້.

### 1.2.5 *ຮູບການ ແບບ ຝຶກອົບຮົມ ແລະ ຢ້ຽມຢາມ(T&V)t*

ເລີ່ມເກີດຂື້ນໃນປີ 1975, ຮູບແບບນີ້ໄດ້ກາຍເປັນຍຸດທະສາດສຳຄັນສຳລັບການສົ່ງເສີມກະສິກຳ ໃນພາກ ພື້ນອາຊີໄຕ້ ແລະອາຊີຕາເວັນອອກສ່ຽງໄຕ້. ມັນໄດ້ຖືກອອກແບບທີ່ເນັ້ນໃສ່ເພື່ອແກ້ໄຂຈຸດບົກພ່ອງໃນການໃຫ້ບໍລິການທີ່ມີໃນຊ່ວງເວລານັ້ນຄື:

- ມີການແຍກເປັນພາກສ່ວນໃຫ້ການບໍລິການ(ມີຫຼາຍອົງກອນທີ່ເຮັດວຽກສົ່ງເສີມ)
- ສາລະພັດໜ້າວຽກ(ພະນັກງານສົ່ງເສີມເຮັດຫຼາຍໜ້າທີ່)
- ບໍ່ມີການວາງແຜນແລະຄຸ້ມຄອງທີ່ເປັນລະບົບ(ກິດຈະກຳສ່ວນຫຼາຍເຮັດເພື່ອແກ້ໄຂສະເພາະໜ້າ)

- ຂອບເຂດພື້ນທີ່ວຽກສົ່ງເສີມທີ່ກວມເອົາໄດ້ມີຈຳກັດ(ພະນັກງານສະໜາມບໍ່ພຽງພໍແລະການຕິດຕາມກວດກາມີນ້ອຍ)
- ລະດັບແລະປະສິບການຂອງພະນັກງານສະໜາມຕໍ່າ(ບໍ່ໄດ້ຮັບການຝຶກທີ່ດີມາກ່ອນຮວມທັງບໍ່ໄດ້ຍົກລະດັບຄວາມຮັບຮູ້ອັນໃໝ່)

ໂດຍມີການສະໜອງງົບປະມານຈາກທານະຄານໂລກ,ລະບົບໃໝ່ໄດ້ສ້າງຂື້ນ,ໄດ້ມີການເຕົ້າໂຮມເອົາຫຼາຍພາກສ່ວນການສົ່ງເສີມເຂົ້າກັນ,ເພີ່ມຈຳນວນພະນັກງານ,ປະກອບອຸປະກອນການຝຶກອົບຮົມຫຼາຍຂື້ນ ແລະ ນຳໃຊ້ແບບຄຳພີຕາຍຕົວ"ແບບພິມຂຽວ"ສຳລັບວຽກພາກສະໜາມ

ແບບພິມຂຽວນີ້ປະກອບມີຕາຕະລາງປະຕິບັດວຽກພາຍໃນ ສອງອາທິດຂອງພະນັກງານສະໜາມ. ໂດຍເລີ່ມຈາກກິດຈະກຳເຂົ້າຮັບການຝຶກຈາກວິຊາການສະເພາະດ້ານແລະນຳເອົາຂໍ້ແນະນຳໄປຈັດຕັ້ງປະຕິບັດທັນທີໂລດ. ວັນເຫຼືອຕໍ່ໄປພະນັກງານສະໜາມຕ້ອງລົງໄປຫາຄອບຄົວຊາວກະສິກອນ 6-8 ກຸ່ມເປົ້າໝາຍເພື່ອໃຫ້ຂໍ້ແນະນຳໃໝ່ທີ່ຫາກໍ່ໄດ້ຝຶກມາ. ແຕ່ລະກຸ່ມຊາວກະສິກອນຈະມີປະມານ 10 ຄົນ,ໂດຍຄາດວ່າຈະເປັນຕົວແທນເພື່ອກະຈ່າຍບົດຮຽນແລະຂໍ້ແນະນຳຕໍ່ໃຫ້ຄົນອື່ນໃນຊຸມຊົນ.

ຕໍ່ມາໄດ້ມີຂໍ້ໂຕ້ຖຽງ ກ່ຽວກັບຈຸດດີ ແລະ ຈຸດອ່ອນຂອງຮູບການສົ່ງເສີມແບບຝຶກ-ຢ້ຽມຢາມ ດັ່ງກ່າວ. ທານະຄານໂລກຢືນຢັນວ່າເປັນລະບົບທີ່ມີປະສິດຕິຜົນກ່ວາຮູບແບບອື່ນໆທີ່ມີມາກ່ອນແລະກໍ່ໄດ້ຊ່ວຍໃນການຍົກຜະລິດຕະພາບການຜະລິດພືດຂື້ນໄດ້ໃນຫຼາຍສ່ວນຂອງອາຊີ. ແຕ່ໃນຕົວຈິງຜູ້ໄດ້ຮັບປະໂຫຍດແມ່ນມີພຽງຊາວກະສິກອນຮັ່ງມີ,ຊື່ງເປັນຜູ້ທີ່ສາມາດໃຊ້ຈ່າຍຄ່າປັດໃຈຕ່າງໆເພື່ອນຳໃຊ້ເຕັກໂນໂລຢີຕາມທັດສະນະ"ການປະຕິວັດຂຽວ"(ໂດຍສະເພາະການ ໃຊ້ແນວພັນພືດທາດແປ້ງໃໝ່ແລະຝຸ່ນ/ຢາເຄມີຕ່າງໆ). ຈຸດສຳຄັນນີ້ງແມ່ນຄ່າໃຊ້ຈ່າຍສຳລັບດຳເນີນການຕາມຮູບແບບນັ້ນແມ່ນບໍ່ມີຄວາມຍືນນານໄດ້. ເວລາທີ່ທານະຄານຖອນຕົວ,ຢຸດໃຫ້ການຊ່ວຍເຫຼືອຮູບແບບດັ່ງກ່າວກໍ່ມີການດັດປັບ ແລະ ລົ້ມສະຫຼາຍໃນທີ່ສຸດ. ໃນຂໍ້ 1.3.1 ຈະໄດ້ເບີ່ງແຈ້ງ ປະເດັນບັນຫາທີ່ກ່ຽວກັບຮູບການສົ່ງເສີມແບບຝຶກ-ຢ້ຽມຢາມ(T&V)

### *1.2.6 ການພັດທະນາຊຸມຊົນ*

ການພັດທະນາຊຸມຊົນແຕກຕ່າງໄປຈາກຍຸດທະສາດທີ່ໄດ້ກ່າວໄປແລ້ວນັ້ນຢູ່ບ່ອນມັນເປັນການດືງເອົາຊາວຊົນນະບົດໃຫ້ເປັນຜູ້ຕັດສິນໃຈແລະເປັນຜູ້ຈັດຕັ້ງປະຕິບັດກິດຈະກຳເອົາເອງ.ການຖືເອົາຄວາມເປັນເຈົ້າການທີ່ບໍ່ເພີ່ງພາຊ່ວຍຊານຈາກພາຍນອກ,ເບີ່ງແລ້ວຈະເປັນເປົ້າໝາຍທົ່ວໄປຂອງແຜນງານດັ່ງກ່າວ, ຍັງມີຈຸດພິເສດຫຼາຍຢ່າງຂອງຍຸດທະສາດນີ້ທີ່ຈະໄດ້ກ່າວເຖີງເຊັ່ນ:

- ບັນດາໜ້າວຽກປົກກະຕິຈະເກີດຈາກສາມະຊິກຂອງຊຸມຊົນທັງຍິງແລະຊາຍ, ຜູ້ໜຸ່ມແລະເຖົ້າ ຮວມທັງ ເຈົ້າຂອງ ແລະ ຜູ້ເຊົ່າດິນ

- ຄວາມຕ້ອງການຂອງຊຸມຊົນແມ່ນຖືກກຳນົດໂດຍຜ່ານການວິເຄາະຢ່າງຮອບດ້ານ,ຜົນການສົ່ງເສີມກິດຈະກຳການຜະລິດກະສິກຳອາດມີການປະສົມປະສານກັບໜ້າວຽກການລົບລ້າງຄວາມທຸກຍາກ, ການປັບປຸງໂຄງລ່າງພື້ນຖານ,ແກ້ໄຂບັນຫາສຸຂະພາບຕ່າງໆ.
- ການຈັດຕັ້ງພາກລັດ,ຄະນະກຳມະການພັດທະນາໝູ່ບ້ານ ແລະ ກຸ່ມບ້ານເປັນຫົວໜ່ວຍສຳຄັນໃນການປະຕິບັດພາລະກິດການພັດທະນາຊຸມຊົນ. ຄະນະກຳມະການດັ່ງກ່າວຈະໄດ້ຮັບການປຶກສາຜ່ານເກືອບທຸກຍຸດທະສາດການພັດທະນາຂອງບ້ານ.

ໃນຖານະເປັນສ່ວນນຶ່ງຂອງແຜນງານພັດທະນາຊຸມຊົນ,ກິດຈະກຳການສົ່ງເສີມມີສາມລັກສະນະພິເສດປະກົດຂຶ້ນ. ອັນທີນຶ່ງເລື່ອງ/ສິ່ງທີ່ຈະສົ່ງເສີມແມ່ນຕ້ອງສອດຄ່ອງກັບຄວາມຕ້ອງການຂອງຊຸມຊົນທີ່ໄດ້ກຳນົດໄວ້ໂດຍຊຸມຊົນ. ອັນທີສອງ,ວິທີການສົ່ງເສີມເນັ້ນໃສ່ການເສີມສ້າງຂີດຄວາມສາມາດ(ທັກສະການຝຶກ,ການຂົນຂວາຍ)ແທນທີ່ຈະເປັນການສົ່ງຂໍ້ມູນຂ່າວສານ. ອັນທີສາມ, ເນັ້ນໃສ່ຊຸກຍູ້ການສ້າງໜໍ່ແໜງລວມໝູ່ຫຼາຍກ່ວາການຊ່ວຍການແກ້ບັນຫາເປັນລາຍບຸກຄົນ. ຍຸດທະສາດດັ່ງກ່າວສາມາດສ້າງໃຫ້ເກີດມີຜົນຮັບທີ່ຍືນນານຕໍ່ຊີວິດການເປັນຢູ່ຂອງຊາວຊົນນະບົດ ແລະ ເປັນກຸ່ມຜູ້ໄດ້ຮັບປະໂຫຍດ,ຊຶ່ງຍຸດທະສາດອື່ນບໍ່ໄດ້ລົງເລິກໃຫ້ຄວາມສົນໃຈຜ່ານມາ.

ແຕ່ຢ່າງໃດກໍດີ,ຍັງມີຈຸດອ່ອນຕົ້ນຕໍຢູ່ທີ່ການບໍ່ມີຄວາມສາມາດໃນການຂະຫຍາຍສູ່ວົງກ້ວາງໄດ້. ຜົນສຳເລັດຈະມີຈຳກັດຢູ່ພຽງບາງບ້ານ ແລະ ເມືອງໃດນຶ່ງເທົ່ານັ້ນ. ທັງນີ້ກໍ່ເນື່ອງຈາກວ່າການພັດທະນາຊຸມຊົນມີຄວາມຈຳເປັນທີ່ຕ້ອງມີພະນັກງານທີ່ມີປະສົບການ,ຄວາມອົດທົນຢູ່ໃກ້ຊິດຕິດແທດກັບພື້ນຖານນັ້ນໆໃນໄລຍະເວລາໃດນຶ່ງທີ່ຍາວສົມຄວນ. ພະນັກງານຮາກຖານດັ່ງກ່າວຕ້ອງປະຕິບັດພາລະກິດດ້ວຍຄວາມຮັບຜິດຊອບສູງແລະຕ້ອງມີວິຊາການສະເພາະດ້ານຄອຍໃຫ້ການແນະນຳເຕັກນິກເພີ່ມເຕີມຕາມຈຳເປັນ. ແຕ່ລະບົບບໍລິຫານເກື້ອກູນຂອງພາກລັດແລະອົງການສາກົນທີ່ໃຫ້ການຊ່ວຍເຫຼືອປົກກະຕິຈະເປັນອັນທ່ວງດຶງແລະເປັນອຸປະສັກໃນການສ້າງຄວາມຢືດຢຸ່ນໃນເວລາທີ່ຈຳເປັນສະເໝີ.

### 1.2.7 *ການສົ່ງເສີມໃນຮູບແບບຄົ້ນຄ້ວາທົດລອງ* Research-based extension

ໃນຫຼາຍປະເທດການຄົ້ນຄ້ວາທົດລອງ ແລະສົ່ງເສີມໄດ້ແຍກເປັນພາກສ່ວນໃຜມັນ. ຊຶ່ງໄດ້ມີບັນຫາໃນການປະສານສົມທົບບໍ່ນ້ອຍເຊັ່ນ:

- ຂາດການຮວມສູນໃນການຈັດບຸລິມະສິດການພັດທະນາກະສິກຳ
- ການໄຫຼວຽນຂອງຂໍ້ມູນທາງເຕັກນິກຊັກຊ້າ,ໂດຍສະເພາະສິ່ງທີ່ເປັນຄຳຕອບໃຫ່ແກ່ບັນຫາໃນຮາກຖານການຜະລິດ
- ຂໍ້ແນະນຳໃຫ້ແກ່ຊາວກະສິກອນບໍ່ກົມກຽວກັນ

- ເຕັກໂນໂລຢີທີ່ພັດທະນາຂຶ້ນໃນສະຖານີອາດມີປະສິດຕິຜົນແຕ່ພັດບໍ່ແທດເໝາະກັບເງື່ອນໄຂປົກກະຕິຂອງຮາກຖານການຜະລິດ.
- ຂໍ້ສະເໜີແນະຈາກພາກສ່ວນສົ່ງເສີມບໍ່ໄດ້ຖືກທົດສອບຢ່າງເໝາະສົມ

ໄດ້ມີຫຼາຍໆຮູບແບບທີ່ໄດ້ນຳໃຊ້ເພື່ອແກ້ໄຂບັນຫາທີ່ໄດ້ກ່າວມານັ້ນ. ໃນບາງບ່ອນ/ກໍລະນີໄດ້ຕັ້ງ ຄະນະກຳມະການ ແລະ ນ່ວຍປະສານລະວ່າງການຄົ້ນຄ້ວາທົດລອງ ແລະ ສົ່ງເສີມຂຶ້ນເພື່ອຮັດໜ້າທີ່ດັ່ງກ່າວ. ໃນອີກບາງບ່ອນ/ກໍລະນີ ກົມສົ່ງເສີມກໍ່ໄດ້ດຳເນີນການຄົ້ນຄ້ວາເພື່ອທົດສອບຄວາມເໝາະສົມຂອງເຕັກໂນໂລຢີເອງ, ແລະ ອີກບາງບ່ອນ/ກໍລະນີພາກສ່ວນຄົ້ນຄ້ວາທົດລອງກໍ່ໄດ້ເຮັດວຽກສົ່ງເສີມໃນຮູບແຜນງານກະຈ່າຍເຕັກນິກຕ່າງໆຂອງຕົນ.

ສິ່ງທີ່ຮູບແບບການສົ່ງເສີມດັ່ງກ່າວຈັດຕັ້ງປະຕິບັດກໍ່ແມ່ນມີ ສາມວິທີການທີ່ນຳໃຊ້ຄື: ການໃຊ້ເອກະສານສິ່ງພິມ, ການຢັ້ງມຢາມສະໜາມ ແລະ ເຮັດແປງສາທິດ. ແຕ່ຢ່າງໃດກໍ່ດີ, ວິທີການທີ່ໄດ້ນຳໃຊ້ນັ້ນເຫັນວ່າຂໍ້ມູນທີ່ກະຈ່າຍໄປສູ່ຊາວກະສິກອນມີລັກສະນະທາງເຕັກນິກສູງເກີນໄປ ແລະ ເນັ້ນໃສ່ເປັນແຕ່ລະເລື່ອງສະເພາະ(ເຊັ່ນ: ການສົມທຽບສະມັດຕະພາບຂອງແນວພັນໃໝ່, ວິທີປ້ອງກັນກຳຈັດພະຍາດແມງໄມ້..). ນັກທົດລອງໃນສະໄໝກ່ອນມັກຈະບໍ່ໄດ້ສົນໃຈໃນເລື່ອງສັງຄົມ, ເສດຖະກິດ ແລະ ປະເດັນສະພາບແວດລ້ອມ. ຕໍ່ມາໄດ້ເກີດການປ່ຽນແປງບໍ່ນ້ອຍຂະນະທີ່ເກີດມີການຄົ້ນຄ້ວາທົດລອງລະບົບການທຳຟາມແລະ ການສົ່ງເສີມ (FSR/E)

### 1.2.8 *ການສົ່ງເສີມແບບກະຈ່າຍຈາກມະຫາວິທະຍາໄລ* University-based extension

ຍຸດທະສາດດັ່ງກ່າວໄດ້ນຳໃຊ້ໃນຢູໂຣບ ແລະ ອາເມຣິກາເໜືອມາຫຼາຍກ່ວາ 100 ປີ ແລະ ໄດ້ດັດປັບໃຊ້ໃນບາງສະຖາບັນການສຶກສາໃນປະເທດ ອາຊີ. ຕົວຢ່າງ:ມີຫຼາຍມະຫາວິທະຍາໄລໃນອິນເດຍໂດຍຮ່ວມມືກັບສູນຝຶກອົບຮົມໄດ້ມີການຈັດຝຶກໄລຍະສັ້ນໃຫ້ແກ່ຊາວໜຸ່ມ/ຊາວກະສິກອນພາຍໃນຂອບເຂດພື້ນທີຮັບຜິດຊອບຂອງມະຫາວິທະຍາໄລ.

ມີຕົວຢ່າງທີ່ພົ້ນເດັ່ນນື່ງຂອງຮູບແບບການສົ່ງເສີມດັ່ງກ່າວ ແມ່ນລະບົບການສົ່ງເຄາະທີ່ດິນໃຫ້ເຮັດການຜະລິດຈາກມະຫາວິທະຍາໄລໃນສະຫາລັດອາເມຣິກາ. ລະບົບນີ້ໄດ້ປະຕິບັດກັນມາຢູ່ກ່ວາ 100 ແຫ່ງໃນທຸກໆ ລັດຂອງສະຫາລັດ. ລັດຖະບານໄດ້ໃຫ້ເງິນສະໜັບສະໜູນອົງການຈັດຕັ້ງເລົ່ານັ້ນເພື່ອຈຸດປະສົງສ້າງກິດຈະກຳການ ສຶກສາແກ່ຜູ້ທີ່ເຮັດການຜະລິດໃຫ້ແກ່ສັງຄົມ ແລະໃນເລື່ອງການກະສິກຳເປັນເປົ້າໝາຍອັນສຳຄັນ ທີ່ຕ້ອງເອົາໃຈໃສ່. ມີຫຼາຍບັນດາມະຫາວິທະຍາໄລຫຼາຍແຫ່ງໃນທົ່ວໂລກ, ທີ່ມີສະຖາບັນດຳເນີນ ການສົງເຄາະເນື້ອທີ່ການຜະລິດແມ່ນໄດ້ເປັນຜູ້ດຳເນີນການຈັດຕັ້ງຍົກລະດັບການສຶກສາຂອງ ປະຊາຊົນພາຍໃນຂອບເຂດພື້ນທີ່ຮັບຜິດຊອບຮວມທັງຄຸ້ມຄອງໃຫ້ບໍລິການ ສົ່ງເສີມເໝືອນ ກັນກັບໃນ ປະເທດອາເມຣິກາ.

ລັດຖະບານສາມາດສະສົມທຶນໄວ້ໄດ້ດ້ວຍການມີເຄື່ອງມືຮັບໃຊ້ວຽກຢູ່ແລ້ວບວກກັບ ບຸກຄະລາກອນ ທີ່ມີໜ້າທີ່ຮັບຜິດຊອບວຽກເພີ່ມລະດັບການສຶກສາທີ່ສູງໃຫ້ປະຊາຊົນ ແລະ ທັງໃຫ້ບໍລິການການສົ່ງເສີມອີກດ້ວຍ . ແຕ່ມີອຸປະສັກບໍ່ນ້ອຍໃນຍຸດທະສາດດັ່ງກ່າວນັ້ນຄືການກຳນົດເປົ້າໝາຍລວມແລະຈຸດປະສົງໃນການສ້າງແຜນງານພັດທະນາກະສິກຳຈະແມ່ນກະຊວງສຶກສາ ຫຼື ກະຊວງກະສິກຳເປັນຜູ້ຕັດສິນ ຫຼື ຈະແມ່ນ ມະຫາວິທະຍາໄລທີ່ຕ້ອງກຳນົດເພື່ອວຽກຕົນເອງ?

ຈຸດບົກພ່ອງອີກຢ່າງນຶ່ງຂອງຮູບແບບການສົ່ງເສີມດັ່ງກ່າວແມ່ນບາງກໍລະນີ,ຫົວຂໍ້ ໃນວິຊາ ແລະວິທີການທີ່ສອນນັກສຶກສາ ປຣິນຍາ ກັບ ຊາວຊົນນະບົດແມ່ນຄ້າຍຄືກັນ,ຊຶ່ງບໍ່ເປັນອັນສອດຄ່ອງກັບ ຄວາມຕ້ອງການຕົວຈິງຂອງຊາວກະສິກອນແຕ່ຢ່າງໃດ.

### *1.2.9 ໂຄງການສົ່ງເສີມ Extension projects*

ດັ່ງທີ່ໄດ້ກ່າວໄວ້ແລ້ວວ່າໂຄງການແມ່ນ" ການສັງຮວມບັນດາກິດຈະກຳທີ່ມີຈຸດປະສົງແລະກອບເວລາການປະຕິບັດສະເພາະໂດຍໄດ້ຮັບການອະນຸມັດເປັນທາງການ". ໂຄງການໂດຍປົກກະຕິຈະນຳໃຊ້ຍຸດທະສາດຕ່າງໆເຂົ້າໃນການປະຕິບັດກິດຈະກຳ. ເຊັ່ນວ່າ:.ລັດຖະບານມັກຈະນຳໃຊ້ຊັບພະຍາກອນທີ່ມີຢູ່ ເພື່ອປະຕິບັດໂຄງການຕ່າງໆໃນການສະໜັບສະໜູນວຽກງານ ກະສິກຳ. ສ່ວນໃຫຍ່ NGOs ຈະມັກນຳໃຊ້ຍຸດ ທະສາດການພັດທະນາຊຸມຊົນເພື່ອປະຕິບັດໂຄງການ.

ຂໍ້ດີໃນການປະຕິບັດວຽກສົ່ງເສີມໃນຮູບແບບເປັນໂຄງການ,ແມ່ນຍຸດທະສາດນີ້ໄດ້ເນັ້ນໃສ່ການແກ້ບັນຫາສະເພາະ,ກັບກຸ່ມບຸກຄົນໃດນຶ່ງ ຫຼື/ແລະໃນພື້ນທີ່ສະເພາະ. ຖ້າມີການກຳນົດຈຸດປະສົງທີ່ຊັດເຈນ ແລະເອົາໃຈໃສ່ໃນການກຳນົດໜ້າວຽກເພື່ອໃຫ້ບັນລຸຈຸດປະສົງໃຫ້ຊັດເຈນນັ້ນກໍ່ເຫັນໄດ້ວ່າ ອົງການຈັດຕັ້ງສົ່ງເສີມໄດ້ສ້າງປະໂຫຍດສູງໄວ້ແລ້ວແຕ່ກອ່ນຍັງບໍ່ທັນໄດ້ດັດປັບໃນເວລາປະຕິບັດຕົວຈິງດ້ວຍຊ້ຳ. ແຕ່ຢ່າງໃດກໍດີຂໍ້ບົກພ່ອງຂອງມັນມີຢູ່ວ່າປະໂຫຍດທີ່ເກີດຂື້ນແມ່ນຈຳກັດຢູ່ໃນພຽງພື້ນທີ່ແລະ ກຸ່ມເປົ້າໝາຍໂຄງການເທົ່ານັ້ນແລະກໍ່ບໍ່ເປັນກິດຈະກຳທີ່ຍືນນານໄດ້ສ່ວນໃຫຍ່ຈະຢຸດສະງັກໃນເວລາທີ່ໂຄງການໝົດໄປ.

ບາງປະເພດໂຄງການທີ່ຕ້ອງນຳມາສະເໜີນີ້ປະກອບມີ: ການແຈ້ງຂ່າວໂຄສະນາເພື່ອການສົ່ງເສີມ,ຊຶ່ງປະກອບມີຫຼາກຫຼາຍວິທີການເພື່ອກະຈ່າຍຂໍ້ມູນໃຫ້ເຈາະຈົງກັບກຸ່ມເປົ້າໝາຍທີ່ຟັງ/ເບິ່ງ . ວິທີການດັ່ງກ່າວແມ່ນນຶ່ງໃນແນວຄວາມຄິດໃນການກະຈ່າຍເຕັກໂນໂລຢີທີ່ໄດ້ນຳໃຊ້ເຕັກນິກການຕະລາດແລະການຊວນເຊື່ອ. ມັນໄດ້ມີການວິເຄາະຄວາມຮັບຮູ້,ທັດສະນະ ແລະ ພາກປະຕິບັດຂອງກຸ່ມເປົ້າໝາຍ, ມີການທົດສອບການນຳໃຊ້ອຸປະກອນເບື້ອງຕົ້ນ ຮວມທັງລະດັບການຍອມຮັບ.

## 1.3 ທ່າອ່ຽງສຳຄັນຂອງການສົ່ງເສີມໃນຊ່ວງໄລຍະ 25 ປີຜ່ານມາ

### *1.3.1 ການກຳເນີດ ແລະ ລົ້ມສະຫຼາຍ ຂອງຮູບການສົ່ງເສີມແບບ ຝຶກ-ຢ້ຽມຢາມ (T&V)*

ຕົ້ນກຳເນີດຂອງມັນໄດ້ຖືກອອກແບບໂດຍຊ່ຽວຊານອິດສະຣາແອນຊື່ ດາແນລ ເບນໍ ແລະ ໄດ້ເລີ່ມການນຳໃຊ້ໃນປະເທດ ຕວກກີ 1967. ສິບປີຕໍ່ມາທະນາຄານໂລກໄດ້ດຳເນີນ ການນຳໃຊ້ຮູບແບບດັ່ງກ່ວາເຂົ້າໃນໂຄງການໃຫຍ່ໃນ ອິນເດຍ ແລະໄດ້ຈັດພິມເປັນເອກະ ສານແນະນຳລະບົບເປັນທາງການ. ຕົກຮອດ 1984 ລະບົບດັ່ງກ່າວໄດ້ນຳໃຊ້ ໃນ 40 ປະເທດ ແລະ ຮອດປີ 1992 ທານະຄານໂລກໄດ້ໃຊ້ຈ່າຍເງິນເຖິງ 3 ຕື້ໂດລາສະຫາລັດໄປກັບ 512 ໂຄງການ(T&V), ລະອຽດຈຸດພິເສດຂອງລະບົບໄດ້ໃຫ້ລາຍລະອຽດໃນ ຂໍ້ 1.2.5 ຂ້າງເທິງແລ້ວ.

ຄວາມຈິງລະບົບ T&V ມີ ຂອດວິກິດຂອງມັນມາແຕ່ເລີ່ມຕົ້ນ, ແຕ່ຈົນຕົກມາຮອດ ກາງຊຸມປີ 90 ສະຖາບັນການສຶກສາທີ່ນຳໜ້າໄດ້ມີໂອກາດຂຽນໄວ້ໃນບົດຄວາມວິຊາການ"ບໍ່ເປັນທີ່ຕ້ອງສົງໃສເລີຍວ່າ ລະບົບ T&V ທີ່ໃຊ້ມາເຖິງປະຈຸບັນແມ່ນຂາດປະສິດຕິຜົນ"[11] ຫຼາຍປີທີ່ທານະຄານໂລກພະຍາຍາມຢືນຢັນຕອບໂຕ້ວ່າລະບົບດັ່ງກ່າວໄດ້ສ້າງປະໂຫຍດສູງ,ເຖິງວ່າຄວນໃຫ້ມີການດັດປັບໄຊ້ ຫຼື ສືບຕໍ່ພັດທະນາການ[12] . ຮອດຊ່ວງທ້າຍຊູມປີ 90 ພະນັກງານທານະຄານໂລກໄດ້ກວດສອບໂຄງການທີ່ນຳໃຊ້ ລະບົບ T&V ທີ່ຖືວ່າມີຜົນສຳເລັດຄືນໃໝ່ແລະກໍ່ໄດ້ຂໍ້ສະຫຼຸບວ່າເປັນລະບົບທີ່ຂາດປະສິດຕິພາບ,ບໍ່ມີປະສິດຕິຜົນ,ບໍ່ມີຄວາມຍືນນານ"[13]
ການເກີດ ແລະ ລົ້ມສະຫຼາຍຂອງລະບົບນີ້ແມ່ນໄດ້ຖືກລະບຸໄວ້ໃນກະໂຕຫຼັກປັດສະຍາຂອງລະບົບມັນເອງ,ໂດຍເປັນສ່ວນສ້າງຮາກເຫງົ້າຂອງຄວາມຄິດທີ່"ເນັ້ນການກະຈ່າຍເຕັກໂນໂລຢີ" ຮວມ ທັງການຈັດຕັ້ງປະຕິບັດຕາມລະບົບກໍ່ມີຄວາມຫຍຸ້ງຍາກບໍ່ນ້ອຍ.

ໃນຊ່ວງປີ 1960-70 ມີຫຼາຍປະເທດທີ່ລັດຖະບານ ແລະ ຜູ້ໃຫ້ທຶນຄິດວ່າການພັດທະນາກະສິກຳຈະນຳມາຊຶ່ງຜົນສຳເລັດໄດ້ໂດຍມີການວາງແຜນນຳໃຊ້ເຕັກນິກທີ່ມາຈາກສູນກາງຈຶ່ງຈະນຳໄປສູ່ການປ່ຽນແປງໄດ້ພຶດຕິກຳການຜະລິດຂອງຊາວຊົນນະບົດ. ໄດ້ມີການເຊື່ອວ່າຊາວກະສິກອນຜູ້ທ້າວທັນຈະເປັນຜູ້ນຳໜ້າໄດ້ ແລະ ການສົ່ງເສີມຄວນຈະເນັ້ນ ໜັກໃສ່ການກະຈ່າຍຂໍ້ແນະນຳທາງເຕັກນິກຕ່າງໆໄປສູ່ກຸ່ມເປົ້າໝາຍເລົ່ານັ້ນ. ປັດສະຍາດັ້ງກ່າວ ໄດ້ຫາຍຈາກ ແຟຊັນ ຫຼື ຄ່ານິຍົມຂອງຫຼາຍປະເທດ ເມື່ອຕົກຮອດຊ່ວງຊຸມປີ 1980 ແລະ ຊຸມປີ 90 ,ໂດຍສະເພາະມີຫຼາຍ ອົງກອນຜູ້ໃຫ້ທຶນລາຍສຳຄັນໄດ້ຫັນປ່ຽນມາໃຊ້ຮູບແບບຜູກພັນກັບ ຫຼາຍພາກສ່ວນເຂົ້າໃນການພັດທະນາກະສິກຳ ຮວມທັງການປະສານພາກສ່ວນເອກະຊົນ ເຂົ້າ ໃນການລຶບລ້າງຄວາມທຸກຍາກແຫ່ງຊາດ.

ພາຍໄຕ້ການປະຕິບັດທີ່ພົບຄວາມຫຍູ້ງຍາກໃນລະບົບ T&V ແມ່ນບັນຫາການສະໜອງຂໍ້ມູນແກ່ຊາວກະສິກອນທີ່ເປັນລັກສະນະຄຳສັ່ງເດັດຖານ. ເນື່ອງຈາກມັນເປັນລະບົບທີ່ປະຕິບັດ ແບບ

ເທິງ ຫາ ລຸ່ມການໃຫ້ຂໍ້ແນະນຳຈິ່ງເປັນແບບລວມໆ(ຕົວຢ່າງ: "ການປູກເຂົ້າພັນ IR36", "ຕ້ອງໃຊ້ຝຸ່ນໄນໂຕຣເຢນ 50 ກິໂລຕໍ່ 1 ແຮັກຕາ", "ສີດຢາເມຕົນ ພາຣາທອນ ເພື່ອປ້ອງກັນ ດ້ວງກໍ"). ຄວາມຕໍ່ເນື່ອງໃນການໃຫ້ຂໍ້ແນະນຳແບບດັ່ງກ່າວບໍ່ພຽງແຕ່ບໍ່ເໝາະສົມຍັງແພງອີກ, ມີວິທີການທີ່ບໍ່ຕ້ອງໃຊ້ຈ່າຍຫຼາຍຢ່າງເຊັ່ນຜ່ານລາຍການວິທະຍຸ ແລະອີກຢ່າງນຶ່ງບັນດາຊາວກະສິກອນທີ່ໄດ້ຮັບການແນະນຳແລະມີການນຳໃຊ້ຕາມຂໍ້ແນະນຳໄປແລ້ວຈະບໍ່ໄດ້ມີການທົບທວນແລະຢ້ຳຕື່ມອີກ. ທັງໆທີ່ໃນບາງບ່ອນມີຄວາມຈຳເປັນຕ້ອງມີການປະສົມປະສານຫຼາຍຢ່າງເພື່ອນຳໃຊ້(ເຊັ່ນ: ມູນ ສັດ, ການປັບປຸງດິນ,ການກະເສດປ່າໄມ້,ການປ້ອງກັນພືດແບບປະສົມປະສານ) ແຕ່ລະບົບ T&V ບໍ່ໄດ້ອອກແບບມາເພື່ອສະໜອງຄວາມຕ້ອງຄືດັ່ງກ່າວນັ້ນ.

ລະບົບ T&V ໄດ້ຖືກຕຳນິວິຈານວ່າເປັນແບບແມ່ພິມຊຽວທີ່ປະຕິເສດລະບົບພູມປັນຍາຊາວບ້ານ ແລະ ຄວາມເປັນຈິງຂອງສັງຄົມ,ຮວມທັງການມີບົດບາດສຳຄັນຂອງເພດຍິງ,ກຸ່ມຊາວກະສິກອນ ທີ່ຂາດເນື້ອທີ່ຜະລິດ ແລະ ບັນຫາຊົນເຜົ່າ. ການຜະລິດແບບສັນຍາຜູກພັນໃນລະບົບດັ່ງກ່າວສ່ວນໃຫຍ່ເປັນເພດຊາຍຊຶ່ງເປັນຜູ້ທີ່ຄອບຄອງເນື້ອທີ່ຊົນລະປະທານ,ມີໂອກາດເຂົ້າເຖິງສິນເຊື່ອແລະປັດໃຈການຜະລິດ. ລະບົບດັ່ງກ່າວບໍ່ໄດ້ສະໜັບສະໜູນການລວມໝູ່ ຊຶ່ງເປັນປະຖົມປັດໃຈໃນການແກ້ໄຂບັນຫາການຜະລິດກະສິກຳ,ແລະຍັງສາມາດເວົ້າໄດ້ວ່າມີສິ່ງຢືນຢັນນ້ອຍທີ່ສຸດທີ່ບົ່ງບອກໄດ້ວ່າຊາວກະສິກອນທີ່ໄດ້ຮັບການແນະນຳແລ້ວນັ້ນໄດ້ກະຈ່າຍຄວາມຮູ້ໄປສູ່ຄອບຄົວອື່ນນອກຈາກສາມະຊິກຂອງຄອບຄົວເຂົາເອງ.ຜົນຕາມມາກໍ່ຄືລະບົບ T&V ກໍ່ເໝືອນກັບຮູບການສົ່ງເສີມອື່ນໆກ່ອນໜ້ານັ້ນ,ຊຶ່ງເປັນພຽງການເລັ່ງການສ້າງຄວາມເລື່ອມລ້ຳຂອງສັງຄົມຊົນນະບົດຂຶ້ນແລະກໍ່ໃຫ້ເກີດຄວາມທຸກຈົນເພີ່ມຂື້ນ

### 1.3.2 *ພັດທະນາການຂອງຮູບແບບການມີສ່ວນຮ່ວມ*

ເຖິງແມ່ນວ່າຮູບແບບການມີສ່ວນຮ່ວມມີຢູ່ໃນການສົ່ງເສີມກ່ອນການກຳເນີດຂຶ້ນຂອງລະບົບ T&V ,ແລະຄວາມລົ້ມເຫຼວທາງດ້ານປັດສະຍາ ແລະ ພາກປະຕິບັດຂອງບັນດາໂຄງການທານະຄານໂລກໃນຊ່ວງຊຸມປີ 70 ແລະ 80 ໄດ້ເປັນແຮງຜັກດັນໃຫ້ບັນດາຜູ້ຊ່ຽວຊານຫຼາຍທ່ານພັດທະນາຮູບແບບອັນໃໝ່ທີ່ໃຫ້ເກີດຄວາມແຕກຕ່າງກັບແນວຄວາມຄິດທີ່ເນັ້ນແຕ່ການກະຈ່າຍເຕັກໂນໂລຢີຜ່ານມາ. ສາມຮູບແບບທີ່ໄດ້ມີການນຳໃຊ້ຢູ່ຫຼາຍປະເທດໃນ ອາຊີ ຕະລອດຊ່ວງທົດສະວັດຜ່ານມາສາມາດສັງຮວມໄດ້ດັ່ງຕໍ່ໄປນີ້:

ກ) <u>ການປະເມີນສະພາບຊົນນະບົດແບບເລັ່ງດ່ວນ (RRA)ແລະເຕັກນິກທີ່ກ່ຽວຂ້ອງ</u>

ໃນຊ່ວງຕົ້ນຊຸມປີ 80 ມີບັນດາຜູ້ຊ່ຽວຊານໄດ້ພະຍາຍາມຊອກຫາວິທີການເກັບກຳຂໍ້ມູນສະພາບຊົນນະບົດໂດຍຍຶດໝັ້ນການລົດຮູບການສຳຫຼວດທີ່ເປັນທາງການແລະຮັບປະກັນໃຫ້ຂໍ້ມູນມີການບ່ຽງເບນນ້ອຍທີ່ສຸດຈາກການໄດ້ລົງຢ້ຽມຢາມພາກສະໜາມ. ໃນປີ 1983 ທ່ານ Robert

Chambers ໄດ້ຮຽກວິທີການນີ້ວ່າ"ການປະເມີນສະພາບຊົນນະບົດແບບເລັ່ງດ່ວນ". ສອງສາມປີຕໍ່ມາ ໃນປີ 1987 ໄດ້ມີກອງປະຊຸມນາໆຊາດເພື່ອແລກປ່ຽນບົດຮຽນກ່ຽວຂ້ອງກັບວິທີການດັ່ງກ່າວຈັດຂຶ້ນທີ່ ປະເທດໄທ. ຕໍ່ຈາກນັ້ນ, ໂດຍການເຕີບໂຕທີ່ໄວຂອງການພັດທະນາ ແລະ ໃນກະໂຕວິທີການ, ຈື່ງເກີດມີອັນເພີ່ມເຕີມ ຫຼາຍຢ່າງທີ່ກ່ຽວຂ້ອງກັບການປະເມີນຊາວຊົນນະບົດໃນການກຳນົດ ບັນຫາ ຂອງເຂົາເຈົ້າ,ການກຳນົດເປົ້າໝາຍແລະການຕິດຕາມຊຸກຍູ້ ໃຫ້ເກີດຜົນສຳເລັດ. ຕົກຮອດກາງ ຊຸມປີ 90 ຊື່ ວິທີການ"ການປະເມີນສະພາບຊົນນະບົດແບບເລັ່ງດ່ວນ" (RRA) ໄດ້ມີການປ່ຽນ ແທນດ້ວຍ ຊື່ວິທີການໃໝ່ເຊັ່ນ "ການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມ" (PRA) ແລະ "ການຮຽນຮູ້ແລະປະຕິບັດແບບມີສ່ວນຮ່ວມ"(PLA)

ມີຫຼາຍຮ້ອຍເຕັກນິກທີ່ກ່ຽວຂ້ອງກັບການມີສ່ວນຮ່ວມແລະໄດ້ຂຽນອະທິບາຍໃນປື້ມຄູ່ມື,ບົດຝຶກ/ສອນ, ວາລະສານຕ່າງໆໃນທົ່ວໂລກ[11,12] . ບັນດາເຕັກນິກເລົ່ານັ້ນສາມາດແບ່ງອອກເປັນສີ່ໝວດ ດັ່ງຕໍ່ໄປນີ້

- *ການສ້າງພະລັງເຕີບໂຕຂອງກຸ່ມ ເຊັ່ນ: ສ້າງການຮຽນຮູ້ແບບຜູກພັນ,ການຫຼິ້ນບົດບາດທີ່ກົງກັນຂ້າມ,ການຕຳນິສິ່ງຂ່າວ*
- *ການສຸ່ມຕົວຢ່າງວຽກເຊັ່ນ: ການເດີນສັງເກດຕາມແນວຕັດຂວາງ,ການຈັດລະດັບຖານະຄອບຄົວ,ການສ້າງແຜນທີ່ທາງສັງຄົມ*
- *ການສຳພາດເຊັ່ນ: ການສົນທະນາເປັນກຸ່ມ,ການສຳພາດແບບເຄິ່ງໂຄງສ້າງ,ການສົນທະນາແບບສາມເສົ້າ*
- *ການສ້າງສິ່ງປະຈັກຕາເຊັ່ນ: ສາງເສັ້ນສະແດງ,ໃຫ້ຄະແນນຕາມຈຸດຕັດ,ການວາງຕາຕະລາງເວລາ*

ຄວາມຄິດຕົ້ນຕໍໃນການສ້າງເຕັກນິກການປະເມີນສະພາບຊົນນະບົດແບບມີສ່ວນຮ່ວມແມ່ນໄດ້ມາຈາກກອບຄວາມຄິດອັນໃໝ່,ເພື່ອໃຫ້ເກີດການມີສ່ວນຮ່ວມ ບວກກັບ ໃຫ້ການສຶກ ສາໄປພ້ອມ, ຊື່ງທ່ານ Robert Chambers ໄດ້ອະທິບາຍໄວ້ວາ:

"ເຫງົ້າພະລັງຂອງແນວຄວາມຄິດແລະຄວາມເຊື່ອອັນໃໝ່ນີ້ .. . ແມ່ນການຫັນລົງສູ່ຮາກຖານ ແລະ ການເຊີດຊູສິດເປັນເຈົ້າ. ການຫັນລົງສູ່ຮາກຖານ ໝາຍວ່າ ການຫັນກັບເອົາບັນດາຊັບພະຍາກອນ ແລະ ສັດທາທີ່ມີໃນຄວາມຮັບຜິດຊອບນັ້ນ ໄປສູ່ປະຊາຊົນທັງໃນລວງຕັ້ງແລະລວງຂວາງ. ການເຊີດຊູສິດເປັນເຈົ້າໝາຍວ່າ ການເຮັດໃຫ້ປະຊາຊົນ,ໂດຍສະເພາະຜູ້ທຸກຍາກມີຄວາມສາມາດປັບປຸງຊີວິດການເປັນຢູ່ຕົນເອງໃຫ້ມີຄວາມໝັ້ນທ່ຽງ ຢ່າງເປັນເຈົ້າການແນໃສ່ໃຫ້ສາມາດ ຄຸ້ມຄອງນຳໄຊ້ຊັບສິນທີ່ມີຢູ່ໃຫ້ເກີດປະສິດຕິຜົນສູງທີ່ສຸດ. ມີພຽງແຕ່ການຫັນລົງສູ່

ຮາກຖານ ແລະ ການເຊີດຊູສິດເປັນເຈົ້າ,ຈຶ່ງຈະເຮັດໃຫ້ພື້ນຖານປະຊາຊົນສາມາດນຳໃຊ້ໄດ້ທຸກເງື່ອນໄຂ ແລະທ່າແຮງອັນສະຫຼັບສັບຊ້ອນຂອງເຂົາເຈົ້າໃຫ້ເຂົ້າກັບການປ່ຽນແປງທີ່ໄວນັ້ນໄດ້"[11]

ຂ) ການພັດທະນາເຕັກໂນໂລຢີແບບມີສ່ວນຮ່ວມ (PTD)

ຈາກການພັດທະນາເຕັກນິກການມີສ່ວນຮ່ວມຫຼາຍໆຢ່າງໃນຊ່ວງຊຸມປີ 1980 ໄດ້ມີຂະບວນການນຶ່ງເກີດຂື້ນທີ່ຮຽກກັນວ່າການພັດທະນາເຕັກໂນໂລຢີແບບມີສ່ວນຮ່ວມ(PTD). ນຶ່ງໃນເຈົ້າຕຳລາຂະບວນການດັ່ງກ່າວແມ່ນສະຖາບັນຄົ້ນຄ້ວາເພື່ອ ລົດປັດໃຈການຜະລິດກະສິກຳຈາກພາຍນອກ ທີ່ຕັ້ງຢູ່ໃນປະເທດ ໂຮນລັງ(ILEIA).

ສະຖາບັນດັ່ງກ່າວ(ILEIA) ໄດ້ໃຫ້ຄຳອະທິບາຍກ່ຽວກັບເລື່ອງນີ້ວ່າ"ມັນເປັນຂະບວນການທີ່ຄົນໃນຊຸມຊົນແລະຜູ້ເອື້ອອຳນວຍຈາກພາຍນອກມີສ່ວນຮ່ວມນຳກັນ"ໃນ:

- ການສ້າງຄວາມເຂົ້າໃຈຕໍ່ລັກສະນະສະເພາະສຳຄັນແລະ ການປ່ຽນແປງຂອງລະບົບນິເວດກະສິກຳ"
- ການກຳນົດບັນຫາຕົ້ນຕໍ
- ການທົດສອບບັນດາທາງເລືອກທີ່ໄດ້ມາຈາກພູມປັນຍາຊາວບ້ານແລະຈາກຫຼັກການທາງວິທະຍາສາດ
- ການເສີມສ້າງຂີດຄວາມສາມາດຂອງຊາວກະສິກອນໃນການທົດສອບແລະແລກປ່ຽນບົດຮຽນແລະຄວາມຄິດເຫັນ"[11]

ຜູ້ເອື້ອອຳນວຍຈາກພາຍນອກທີ່ເຂົ້າຮ່ວມໃນຂະບວນການ PTD ປົກກະຕິຈະແມ່ນນັກຄົ້ນຄ້ວາທົດລອງ ຫຼືອາດເປັນທີມນັກວິຊາການກະສິກຳ ແລະ ສັງຄົມສາດ. ເນື່ອງຈາກ PTD ມີຄວາມຄ້າຍຄືກັບການຄົ້ນຄ້ວາທົດລອງແຕ່ມັນກໍ່ມີຂອບເຂດທີ່ຕິດຈອດກັບການສິ່ງເສີມທັງນີ້ກໍ່ເນື່ອງຈາກວ່າມັນເປັນກິດຈະກຳສ້າງການຮຽນຮູ້ໃຫ້ແກ່ຊາວກະສິກອນ. ແລະ ສິ່ງນີ້ເອງທີ່ເຮັດໃຫ້ຫຼາຍອົງກອນ ແລະ ຫຼາຍຂະແໜງການວິຊາສະເພາະບໍ່ເປັນທີ່ຈະແຈ້ງວ່າມັນເປັນລັກສະນະຢ່າງນຶ່ງຂອງ ຮູບແບບການມີສ່ວນຮ່ວມ ຫຼືບໍ່.

ຄ) ໂຮງຮຽນຊາວນາ

ໂຮງຮຽນຊາວນາ (FFS)ແມ່ນຂະບວນການຮຽນຮູ້ເປັນກຸ່ມຢ່າງນຶ່ງ.ມັນໄດ້ອອກແບບຂື້ນໃນປີ 1989 ໂດຍຜູ້ຊ່ຽວຊານທີ່ເຮັດວຽກໃນອົງການອາຫານໂລກ(FAO)ໃນປະເທດອິນໂດເນເຊຍ .ເປົ້າໝາຍຕົ້ຕໍແມ່ນເພື່ອຊ່ວຍຊາວກະສິກອນພັດທະນາຂີດຄວາມສາມາດໃນການດຳເນີນການປ້ອງກັນແມງໄມ້ແບບປະສົມປະສານ(IPM),ຊຶ່ງຖືວ່າເປັນທາງອອກນຶ່ງໃນການລຶບລ້າງການໄຊ້ຢາເຄມີ. ຜົນສຳເລັດຂອງໂຮງຮຽນຊາວນາໃນ ອິນໂດເນເຊຍນຳໄປສູ່ການກະຈ່າຍບົດຮຽນອອກ

ສູ່ປະເທດອື່ນໆ. ຕົກຮອດຊ່ວງທ້າຍຂອງຊຸມປີ 90 ມີກ່ວາສອງລ້ານຄອບຄົວຊາວກະສິກອນໃນອາຊີໄດ້ເຂົ້າຮ່ວມກິດຈະກຳດັ່ງກ່າວ.ແຜນງານດັ່ງກ່າວໄດ້ມີການຈັດຕັ້ງຄຸ້ມຄອງໂດຍ ຫຼາຍຂະແໜງການຂອງລັດ(ກົມສົ່ງເສີມກະສິກຳ,ພາກສ່ວນປ້ອງກັນພືດ,ພາກສ່ວນການສຶກສານອກລະບົບ..)ໂດຍມີການສະໜັບສະໜູນທາງການເງິນຈາກຫຼາຍອົງກອນຜູ້ໃຫ້ທຶນຮວມທັງທຶນຂອງລັດຖະບານເອງ ແລະ ບາງກໍລະນີຊາວກະສິກອນໄດ້ລົງທຶນເອົາເອງ.[11]

ຕະລອດຊ່ວງການເປີດໂຮງຮຽນ, ຊາວກະສິກອນໄດ້ເຂົ້າຮ່ວມໃນຂະບວນການທົດສອບການຮຽນຮູ້ ທີ່ຊ່ວຍໃຫ້ເຂົາເຈົ້າເຂົ້າໃຈເຖິງລະບົບນິເວດຂອງນາເຂົ້າ. ຂະບວນການດັ່ງກ່າວໄດ້ເນັ້ນການເຮັດແປງທົດລອງ, ການຕິດຕາມສັງເກດ ແລະ ການໃຈ້ແຍກວິເຄາະຮ່ວມກັນ. ແຕ່ລະອາທິດມີການພົບປະກັນຕະລອດຮອບລະດູການຜະລິດ(ຈາກປູກ ເຖິງເກັບກ່ຽວ). ຕາມທຳມະດາຜູ້ເອື້ອອຳນວຍການຮຽນຮູ້ແມ່ນພະນັກງານວິຊາການລັດທີ່ໄດ້ຜ່ານການຝຶກ/ທົດສອບຢ່າງຄົບທຸກຂັ້ນຕອນມາແລ້ວ, ແຕ່ເມື່ອຕົກຮອດ ຊ່ວງກາງຊຸມປີ 90 ເນື່ອງຈາກໂຮງຮຽນຊາວນາແຜ່ຫຼາຍການເອື້ອອຳນວຍຈຶ່ງດຳເນີນໂດຍຊາວນາເອງ.

ເຖິງແມ່ນວ່າໂຮງຮຽນຊາວນາເປັນການອອກແບບເພື່ອຊຸກຍູ້ການປ້ອງກັນພືດແບບປະສົມປະສານກໍ່ຕາມ, ແຕ່ເປົ້າໝາຍໃນການເຊີດຊູສິດເປັນເຈົ້າແມ່ນໄດ້ຖືກຍົກຄວາມສຳຄັນຂຶ້ນບໍ່ນ້ອຍ. ທັງນີ້ກໍ່ເນື່ອງຈາກມັນສະແດງຄວາມເປັນໄປໄດ້ ອອກຢູ່ບ່ອນວ່າ, ,ຫຼັກສູດຂອງໂຮງຮຽນຊາວນາໄດ້ສ້າງຂຶ້ນໂດຍມີຂໍ້ສົມມຸດຖານວ່າ ເມື່ອຊາວນາສາມາດນຳໃຊ້ຫຼັກການການປ້ອງກັນພືດແບບປະສົມປະ ສານໄດ້ແລ້ວຂີດຄວາມສາມາດໃນການວິເຄາະຂອງເຂົາເຈົ້າກໍ່ຈະຊ່ວຍໃນການຕັດສິນໃຈໃນການຈັດຕັ້ງເຄື່ອນໄຫວກິດຈະກຳເອົາເອງໄດ້. ມີຫຼາຍຄອບຄົວຊາວກະສິກອນໄດ້ສືບຕໍ່ການປະຊຸມພົບປະຫຼັງຈາກໂຮງຮຽນປິດແລ້ວ ແລະ ກໍ່ມີບາງຈຳພວກໄດ້ເຂົ້າຮ່ວມໃນການແລກປ່ຽນກະຈ່າຍຂໍ້ມູນຄວາມຮັບຮູ້ໄປໃນຊຸມຊົນຂອງຕົນ

## ໆ) ປະເພດການມີສ່ວນຮ່ວມ

ສາມຮູບແບບທີ່ໄດ້ອະທິບາຍໄປແລ້ວນັ້ນເຊັ່ນ: RRA,  PTD & FFSໄດ້ມີເປົ້າໝາຍ ຄ້າຍຄຽງກັນ ແລະ ມີເຕັກນິກເໝືອນໆກັນ.  ຍິ່ງໄປກ່ວານັ້ນ, ໃນຊື່ ຫຼື ຄຳສັບທີ່ວ່າ "ການມີສ່ວນຮ່ວມ" ຍັງໄດ້ ສືບຕໍ່ມີແຫຼ່ງກຳເນີດຂອງຄວາມເຂົ້າໃຈຜິດໆຢູ່ໃນແຜນງານການສົ່ງເສີມ. ມີບາງນັກສົ່ງເສີມເຊື່ອ ວ່າການມີສ່ວນຮ່ວມໃນກອງປະຊຸມຂອງຊາວບ້ານກໍ່ຄືພຽງການມີໜ້າ ເຂົ້າຮ່ວມ, ຂະນະອີກພວກນຶ່ງພັດເຊື່ອວ່າມີຄວາມຈຳເປັນຕ້ອງໃຫ້ຊາວບ້ານວາງຕາຕະລາງເຮັດວຽກ ແລະ ຕັດສິນໃຈກ່ອນຈະໄຊ້ຄຳສັບໃດນຶ່ງ ຈຶ່ງຈະເໝາະສົມ.

ຖ້າໃນຖານະທີ່ເປັນສ່ວນນຶ່ງຂອງການຄຸ້ມຄອງການມີສ່ວນຮ່ວມ,ມີຄວາມຈຳເປັນຕ້ອງໃຈ້ແຍກໃຫ້ເຫັນໄດ້ຊັດເຈນເຖິງລະດັບຄວາມແຕກຕ່າງ ຫຼື "ປະເພດການມີສ່ວນຮ່ວມ" ດັ່ງທີ່ທ່ານJules Pretty ໄດ້ພັດທະນາການຈັດປະເພດ ດັ່ງກ່າວ:

### *ປະເພດການມີສ່ວນຮ່ວມ* (after Pretty, 1994[11])

| *ປະເພດ* | *ລັກສະນະສະເພາະ* |
|---|---|
| 1. ການເຂົ້າຮ່ວມ ແບບລະເລີຍ(passive) | ຊາວບ້ານ/ຜູ້ເຂົ້າຮ່ວມ,ພຽງແຕ່ໄດ້ບອກເລົ່າວ່າມີຫຍັງເກີດຂື້ນແລ້ວ ແລະຈະມີຫຍັງເກີດຂື້ນອີກ. |
| 2. ການເຂົ້າຮ່ວມ ເພື່ອໃຫ້ຂໍ້ມູນ | ຊາວບ້ານ/ຜູ້ເຂົ້າຮ່ວມພຽງແຕ່ຕອບຕາມທີ່ຄຳຖາມໄດ້ວາງໄວ້, ໂດຍໄດ້ຄົ້ນຄ້ວາຄັດຈ້ອນອອກມາເປັນແບບຟອມສອບຖາມ ຫຼື ສິ່ງອື່ນໆທີ່ຄ້າຍຄຽງ. |
| 3. ການເຂົ້າຮ່ວມ ເພື່ອໄດ້ການປຶກສາ | ຊາວບ້ານ/ຜູ້ເຂົ້າຮ່ວມໃຫ້ຄຳປຶກສາຫາລືຊີ້ແຈງໂດຍຄົນນອກເປັນຜູ້ຮັບຟັງ. ແລ້ວມີການກຳນົດວ່າສິ່ງໃດເປັນບັນຫາ ແລະ ທາງແກ້ໄຂຢ່າງໃດ ຫຼື ອາດມີການດັດປັບໃຫ້ເຂົ້າກັບຄວາມຕ້ອງການຊາວບ້ານ |
| 4. ການເຂົ້າຮ່ວມເພື່ອ ໄດ້ວັດຖຸ | ຊາວບ້ານ/ຜູ້ເຂົ້າຮ່ວມໂດຍມີການສະໜອງຊັບພະຍາກອນເຊັ່ນປະກອບສ່ວນດ້ານແຮງງານ,ເພື່ອໄດ້ອາຫານ,ເງິນ,ວັດຖຸຕອບແທນອື່ນໆ. ສ່ວນໃຫຍ່ມີໃນການເຮັດທົດລອງລະດັບຟາມ. |
| 5. ການເຂົ້າຮ່ວມໃນໜ້າທີ່ | ຊາວບ້ານ/ຜູ້ເຂົ້າຮ່ວມໂດຍຮູບການຈັດຕັ້ງເປັນກຸ່ມເພື່ອໃຫ້ສອດຄ່ອງກັບເງື່ອນໄຂເບື້ອງຕົ້ນແລະຈຸດປະສົງໂຄງການ,ຊຶ່ງເປັນການກ່ຽວຂ້ອງກັບການພັດທະນາແລະການຊຸກຍູ້ຕໍ່ການຈັດຕັ້ງສັງຄົມຈາກພາຍນອກ |
| 6. ການເຂົ້າຮ່ວມ ແບບປະຕິສຳພັນ | ຊາວບ້ານ/ຜູ້ເຂົ້າຮ່ວມໄດ້ຮ່ວມໃນການວິເຄາະວິໃຈ,ຊຶ່ງຈະນຳໄປສູ່ການສ້າງເປັນແຜນປະຕິບັດແລະການຈັດຕັ້ງອີງກອນທ້ອງຖິ່ນຂື້ນໃໝ່ ຫຼື ການປັບປຸງສິ່ງທີ່ມີຢູ່ແລ້ວ. |
| 7. ການເຂົ້າຮ່ວມແບບ ຕື່ນຕົວຮັບຜິດຊອບ | ຊາວບ້ານ/ຜູ້ເຂົ້າຮ່ວມມີການລິເລີ່ມນຳເອົາຄວາມຄິດໃໝ່ໄປຈັດຕັ້ງປະຕິບັດປ່ຽນແປງລະບົບໃໝ່ເອົາເອງ. ມີການພັດທະນາລະບົບປະສານສົມທົບກັບພາຍນອກເພື່ອໄດ້ການສະໜັບສະໜຸນດ້ານຊັບພະຍາກອນແລະຂໍ້ແນະນຳທີ່ຈຳເປັນ,ແຕ່ກໍ່ຍັງມີການຄວບຄຸມການນຳໃຊ້ຊັບພະຍາກອນເລົ່ານັ້ນຢູ່. |

ຮູບແບບການມີສ່ວນຮ່ວມທີ່ໄດ້ອະທິບາຍໄປນັ້ນ ເປົ້າໝາຍແມ່ນເລັ່ງໃຫ້ເກີດຜົນໄດ້ເຖິງສອງລະດັບ ການມີສ່ວນຮ່ວມສຸດທ້າຍດັ່ງໃນຕາຕະລາງການຈັດປະເພດ. ດ້ວຍເຫດດັ່ງກ່າວ,ທັດສະນະ "ເຊີດຊູ ສິດເປັນເຈົ້າ"ຈື່ງຈະຖືກຍົກສູງເພີ່ມຂື້ນເລື້ອຍໆ,ເພື່ອໃຫ້ເຫັນໄດ້ເຖິງລະດັບຄວາມແຕກຕ່າງໃນ ການມີສ່ວນຮ່ວມຂອງແຕ່ລະປະເພດ ແລະ ອື່ນໆ

ຈ) ການມີສ່ວນຮ່ວມຂອງເພດຍິງ

ການມີສ່ວນຮ່ວມຂອງເພດຍິງໃນກິດຈະກຳການສົ່ງເສີມໄດ້ກາຍມາເປັນປະເດັນທີ່ມີຄວາມເປັນຫ່ວງເປັນໃຍພິເສດມາກ່ວາ 25 ປີແລ້ວ, ທັງນີ້ກໍ່ເພາະເກີດມີການຮັບຮູ້ວ່າ:

- ເພດຍິງປົກກະຕິເປັນຜູ້ສຳຄັນໃນການຕັດສິນໃຈໃນຊີວິດຄອບຄົວຊາວຊົນນະບົດ ແລະ ເຂົາເຈົ້າກໍ່ໄດ້ປະກອບສ່ວນອັນໃຫຍ່ຫຼວງດ້ານແຮງງານເຂົ້າໃນວຽກການຜະລິດກະສິກຳ ແລະ
- ຜົນກະທົບຂອງເຕັກໂນໂລຢີໃໝ່ ຫຼື ວິທີການຜະລິດໃໝ່ຕໍ່ເພດຍິງ ແລະເພດຊາຍຍ່ອມແຕກຕ່າງກັນໂດຍສະເພາະການມີວຽກໜັກໜ່ວງຂື້ນ ແລະ ການມີລາຍຮັບ.

ເພດຍິງໄດ້ຖືກປະລະອອກຈາກກິດຈະກຳການສົ່ງເສີມຫຼາຍໃນຊ່ວງຜ່ານມາໂດຍມີເຫດຜົນຫຼາຍຢ່າງຄື: ກ.) ນະໂຍບາຍການສົ່ງເສີມບໍ່ໄດ້ລະບຸເຈາະຈົງເຖິງການປະກອບສ່ວນຂອງເພດຍິງ , ຂ.) ຫົວຂໍ້ ແລະ ວິທີການທີ່ນຳໄຊ້ໃນແຜນງານການສົ່ງເສີມບໍ່ໄດ້ດັດປັບໃຫ້ສອດຄ່ອງກັບສະພາບ ແລະຄວາມຕ້ອງການຂອງເພດຍິງ, ຄ.) ການປະສານສົມທົບກັບພະນັກງານລັດສ່ວນໃຫຍ່ເປັນຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ, ງ.) ນັກສົ່ງເສີມສ່ວນໃຫຍ່ເປັນເພດຊາຍ,ຊື່ງໂດຍວັດທະນະທຳໃນບາງປະເທດ/ບ່ອນເຂົາຈະບໍ່ຢາກພົບປືກສາກັບເພດຍິງໃນເລື່ອງວຽກທາງການ.

ໃນຊ່ວງສອງທົດສະວັດຜ່ານມາການວິເຄາະຫາບົດບາດຍິງຊາຍໄດ້ກາຍເປັນເຄື່ອງມືສຳຄັນໃນການເພີ່ມການມີສ່ວນຮ່ວມຂອງເພດຍິງ[12]I. ວິທີການວິເຄາະນີ້ໄດ້ຊ່ວຍສຶກສານັກສົ່ງເສີມເຫັນໄດ້ ການແບ່ງງານ ແລະ ຄວາມຮັບຜິດຊອບໃນການຕັດສິນໃຈຂອງຊາວຊົນນະບົດ ຮວມທັງການ ປະກອບສ່ວນໃນການວາງແຜນກິດຈະກຳສົ່ງເສີມເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງ ເພດຍິງ.ໂດຍສະເພາະແລ້ວ, ການວິເຄາະບົດບາດຍິງຊາຍສະແດງໃຫ້ເຫັນວ່າການລ້ຽງສັດປີກ ແລະ ປູກຜັກ,ເປັນວຽກຜູ່ຍິງຫຼາຍກ່ວາເພາະເປັນວຽກຢູ່ໃກ້ຄອບຄົວແລະບໍໄດ້ໄຊ້ແຮງງານໜັກ .ຂະນະທີ່ເພດຊາຍຮັບຜິດຊອບໃນການລ້ຽງສັດໃຫຍ່ແລະການປູກເຂົ້າ(ຍົກເວັ້ນແຕ່ໃນຊ່ວງປັກດຳແລະເກັບກ່ຽວທີ່ທຸກຄົນເຮັດຮ່ວມກັນ)

ສິ່ງອື່ນທີ່ຕ້ອງເພີ່ມການມີສ່ວນຮ່ວມຂອງເພດຍິງແມ່ນ:

- ຮັບເອົາຜູ້ຍິງ ແລະໃຫ້ໄດ້ຮັບການຝຶກດ້ານການສົ່ງເສີມຫຼາຍຂື້ນ
- ລະບຸເຂດເປົ້າໝາຍສຳລັບເພດຍິງໄດ້ຮ່ວມປະຕິບັດແລະສ້າງຜົນງານ
- ໃຫ້ມີການເຮັດວຽກກັບກຸ່ມຜູ້ຍິງສະເພາະເຊັ່ນກຸ່ມອອມຊັບແລະສິນເຊື່ອ ຫຼື ການປະຊາສຶກສາ
- ມີການປະສົມປະສານການສົ່ງເສີມເຕັກນິກການຜະລິດກະສິກຳກັບການສຶກສາດ້ານໂພສະນາການແລະການຮັກສາສຸກຂະພາບໃຫ້ແກ່ເດັກເປັນຕົ້ນ
- ນຳໄຊ້ຂະບວນການມີສ່ວນຮ່ວມທີ່ກ່ຽວຂ້ອງກັບການນຳໄຊ້ພູມປັນຍາຊາວບ້ານໂດຍໃຫ້ເພດຍິງດຳເນີນການເຊັ່ນ:ການນຳໄຊ້ຖົງຢາພື້ນເມືອງ

- ເນັ້ນໜັກໃສ່ການແກ້ບັນຫາພະລັງງານ ແລະ ນ້ຳດື່ມນ້ຳໃຊ້ໃນຄົວເຮືອນຊຶ່ງເປັນສິ່ງທີ່ຕ້ອງການສູງຂອງເພດຍິງໃນບາງປະເທດ
- ປັບປຸງແປງເວລານຳສະເໜີກິດຈະກຳການສົ່ງເສີມທີ່ເອື້ອອຳນວຍໃຫ້ເພດຍິງເຂົ້າຮ່ວມໄດ້
- ດຳເນີນການຝຶກແບບປະຕິບັດຕົວຈິງໃນບ້ານ,ຫາກບໍ່ແມ່ນຢູ່ໃນສູນຝຶກຫຼືສະຖານີທົດລອງທີ່ມີຄວາມຈຳເປັນຕ້ອງໄດ້ເດີນທາງໄປ ແລະ ນອນຄ້າງຄືນ

### *1.3.3 ການຊຸກຍູ້ພາກເອກະຊົນເຂົ້າຮ່ວມແລະຄວາມພະຍາຍາມໄລ່ລຽງເສດຖະກິດ*

ການຫຼຸ້ມເທທຶນຮອນມະຫາສານແລະບໍ່ເກີດປະສິດຕິຜົນຂອງລະບົບ T&V ໄດ້ເປັນແຮງຜັກດັນໃຫ້ພາກລັດແລະອົງກອນຜູ້ໃຫ້ທຶນຊອກສະແຫວງຫາທາງອອກອັນໃໝ່ໃນການໃຫ້ທຶນແກ່ແຜນງານການສົ່ງເສີມ. ໃນຂະນະດຽວກັນກໍ່ໄດ້ມີຄວາມຮຽກຮ້ອງໃຫ້ມີການບໍລິການການສົ່ງເສີມທີ່ມີຄວາມຮັບຜິດຊອບແລະເອົາໃຈໃສ່ຕໍ່ຄວາມຕ້ອງການຂອງຊາວຊົນນະບົດ ແລະຄວາມຕ້ອງການດັ່ງກ່າວກໍ່ເພີ່ມຄວາມສະຫຼັບສັບຊ້ອນຂື້ນເລື້ອຍໆ. ດັ່ງນັ້ນຈຶ່ງເປັນຜົນໃຫ້ພິຈາລະນາຕ້ອງ ຊຸກຍູ້ພາກສ່ວນເອກະຊົນໄດ້ມີສ່ວນຮ່ວມເຂົ້າຫຼີ້ນບົດບາດໃນວຽກງານການສົ່ງເສີມ.

ເຖິງແມ່ນວ່າມີຄວາມເອກະພາບໃນການນຳໃຊ້ຮູບແບບການມີສ່ວນຮ່ວມ, ແຕ່ກໍ່ຍັງມີຂໍ້ຂ້ອງໃຈແລະຄວາມເພິ່ງພໍໃຈຂອງພາກສ່ວນເອກະຊົນໃນການເຂົ້າມາມີບົດບາດໃນວຽກສົ່ງເສີມກະສິກຳ. ເພາະມີບາງກຸ່ມຄົນຍັງເຫັນວ່າການໃຫ້ຄວາມຮູ້ທາງດ້ານກະສິກຳ ແມ່ນ ພາກລັດເປັນຝ່າຍນຳໜ້າພາທາງ ແລະ ບໍ່ມີຄວາມຈຳເປັນຕ້ອງຫັນໄປສູ່ຮູບການການຄ້າ. ມີອີກບາງກຸ່ມພັດເຫັນວ່າວິທີການໃຫ້ບໍລິການແກ່ຊາວກະສິກອນທີ່ຍືນນານແມ່ນຕ້ອງຜ່ານກົນໄກການລົງທຶນຮ່ວມກັນ

ມີສອງ ປະເພດການເຂົ້າມີບົດບາດໃນວຽກສົ່ງເສີມຂອງພາກສ່ວນເອກະຊົນ:
ການໃຫ້ບໍລິການ ໂດຍຜູກພັນສັນຍາກັບ ລັດຖະບານ ແລະ ຜູ້ໃຫ້ທຶນ ແລະການໃຫ້ບໍລິການໂດຍຊາວກະສິກອນເປັນຜູ້ຈ່າຍໃຫ້. ເຖິງວ່າປະເພດສອງເປັນທີ່ຄິດກັນວ່າເປັນວິທີການເໝາະສົມດີ, ເພາະຈະເປັນສ່ວນນຶ່ງໃນການສ້າງ***ຕະລາດຄວາມຮູ້ຂື້ນ***, ແຕ່ການຜູກພັນສັນຍາ ໂດຍພາກລັດຖະບານ ບາງເທື່ອກໍ່ເໝືອນເປັນສິ່ງຈຳປັນເພື່ອກ້າວໄປເຖິງການສ້າງຕະລາດດັ່ງກ່າວ

ມີຂໍ້ຄິດພິຈາລະນາລວມບາງຢ່າງທີ່ກ່ຽວຂ້ອງກັບການສັນຍາຜູກພັນ,ການປ່ຽນໄປສູ່ຮູບການໄລ່ລຽງເຊັ່ນ:

- ລັກສະນະສະເພາະ ລະວ່າງ ສອງເລື່ອງທີ່ຄວນໄດ້ລະບຸກໍ່ຄື: ກ.) ການປ່ຽນແທນນັກສົ່ງເສີມຂອງລັດມາເປັນທີ່ປຶກສາຈາກພາກເອກະຊົນ ແລະ ຂ.) ການຂະຫຍາຍ ການບໍລິການຂອງລັດເຂົ້າໃສ່ການສະໜັບສະໜູນການແລກປ່ຽນບົດຮຽນລະວ່າງຊາວກະສິກອນ.

ທັງສອງຮູບແບບສາມາດລຶດຄ່າໃຊ້ຈ່າຍຂອງລັດຖະບານໄດ້, ແຕ່ມັນມີຄວາມແຕກຕ່າງໄປຈາກແນວຄວາມຄິດຂອງການສົ່ງເສີມທີ່ກຳລັງໃຊ້ກັນຢູ່.

- ຜູ້ສະໜອງປັດໃຈການຜະລິດເຊັ່ນບໍລິສັດຢາຂ້າແມງໄມ້ ແລະ ຜູ້ຂາຍອຸປະກອນການສີດພົ່ນ,ປົກກະຕິຈະມີການໃຫ້ຄຳແນະນຳຊາວກະສິກອນຢູ່ດ້ວຍ. ເຖິງແມ່ນວ່າກິດຈະກຳເລົ່ານັ້ນ ແມ່ນລະບົບການໃຫ້ຄວາມຮູ້ດ້ານກະສິກຳ,ແຕ່ມັນກໍ່ຍັງບໍ່ທັນແມ່ນແກ່ນແທ້ຂອງການສົ່ງ ເສີມ. ການປະກອບສ່ວນສ້າງຜົນສຳເລັດຂອງ ນະໂຍບາຍການພັດທະນາ ແມ່ນມໍລະດົກ ຕົກທອດໃຫ້ແກ່ການສ້າງກອບຄວາມຄິດໃນການສົ່ງເສີມ(ເບິ່ງ ຂໍ້ 1.1.1). ກິດຈະກຳການສື່ສານສຳພັນທີ່ສະໜັບສະໜູນໃຫ້ແກ່ການບັນລຸເປົ້າໝາຍທາງການຄ້າ ແມ່ນໄດ້ອະທິບາຍດ້ວຍຄຳສັບຫຍໍ້ວ່າ "ການຕະລາດ"
- ຊາວກະສິກອນໃນ ອາຊີ ໄດ້ມີການຈ່າຍເພື່ອມີຄວາມຮັບຮູ້ມາຕັ້ງຫຼາຍປີແລ້ວ. ບັນດາວາລະສານແລະປື້ມຂໍ້ແນະນຳທີ່ມີຂໍ້ມູນດ້ານກະສິກຳ,ໂດຍສ່ວນໃຫຍ່ແມ່ນບໍລິສັດເອະຊົນເປັນຜູ້ຜະລິດແລະກໍ່ເປັນທີ່ນິຍົມຂອງຊາວກະສິກອນທີ່ຮູ້ໜັງສື, ບາງຈຳນວນຍັງໄດ້ຈ່າຍຄ່າ ເປັນສາມະຊິກສາມະຄົມເພື່ອເຮັດໃຫ້ມີໂອກາດເຂົ້າເຖິງຂໍ້ມູນແລະການບໍລິການ. ສາມາດໃຫ້ຂໍ້ສັງເກດໄດ້ວ່າການໃຊ້ຈ່າຍບໍ່ແມ່ນຈະດ້ວຍການໃຫ້ເປັນເງິນສົດພຽງຢ່າງດຽວ. ມູນຄ່າທາງດ້ານໂອກາດເຊັ່ນການເຂົ້າຮ່ວມປະຊຸມປົກກະຕິ ຫຼືການຝຶກອົບຮົມກໍ່ສາມາດຕີອອກເປັນມູນຄ່າໄດ້, ແມ່ນແຕ່ການດຳເນີນການທົດລອງໃຊ້ວິທີການໃໝ່ທີ່ມີຄວາມສ່ຽງສູງ ແລະ ການໃຊ້ແຮງງານເພີ່ມຂຶ້ນກໍ່ຕີມູນຄ່າໄດ້ເໝືອນກັນ.

ມາເຖິງປີ 2000 ແມ່ນໄດ້ມີຄວາມພະຍາຍາມສັງຮວມແລະກວດສອບຄືນປະສົບການຂອງທົ່ວໂລກ ເພື່ອສັນຫາທາງເລືອກ ໃນການໃຫ້ທຶນ ແກ່ ການສົ່ງເສີມກະສິກຳທີ່ຫຼາກຫຼາຍ[12,13,14], ດັ່ງຈະໄດ້ສະແດງໃຫ້ເຫັນໃນຕົວຢ່າງຂອງຮູບແບບຕ່າງໆຕໍ່ໄປນີ້:

<u>ໃນປະເທດຈີເລ(Chile):</u> ການໃຫ້ບໍລິການດ້ານທີ່ປຶກສາໄດ້ເຂົ້າເຖິງຊາວກະສິກອນເຖິງ 50,000 ຄົນ. ການບໍລິການຄຸ້ມຄອງໂດຍລັດຖະບານກາງ ເມື່ອ ຕົກຮອດ 1983 ໄດ້ມີການໃຊ້ຍຸດທະສາດຫັນໄປສູ່ພາກເອກະຊົນໂດຍຮຽກວ່າ "ການກະຈ່າຍເຕັກໂນໂລຢີຈາກພາກເອກະຊົນ" . ສິ່ງນີ້ມັນໄດ້ ເປັນການໃຫ້ລາງວັນທີ່ໃຫຍ່ໂຕພໍສົມຄົນໃຫ້ແກພາກເອກະຊົນ ຫຼື NGOs. ລະບົບດັ່ງກ່າວໄດ້ ອອກແບບໂດຍໃຫ້ຊາວກະສິກອນຮ່ວມລົງທຶນ, ແຕ່ລັດຖະບານທ້ອງຖິ່ນຈະໃຫ້ໃບສະເໜີລາຄາແກ່ຄອບຄົວທີ່ທຸກຍາກ, ຊຶ່ງເຂົາສາມາດເລືອກຊື້ ເອົາການບໍລິການ.ຜ່ານໄປບໍ່ເທົ່າໃດປີ,ການຈັດຕັ້ງຂອງຊາວ ກະສິກອນໄດ້ມີສິດເລືອກວ່າຈະຊື້ບໍລິການຈາກບໍລິສັດທີ່ປຶກສາໃດກໍໄດ້.

<u>ໃນປະເທດໄທ(Thailand).</u> ການສົ່ງເສີມອຸດສະຫະກຳລ້ຽງສັດປີກໄດ້ປະສົມປະສານເຂົ້າກັບການຜະລິດ ແບບສັນຍາ ຜູກພັນ ມາກ່ອາທົດສະວັດແລ້ວ. ການແນະນຳທາງເຕັກນິກ

ແລະການຈັດການຕ່າງໆແກ່ຜູ້ລ້ຽງ ລາຍຍ່ອຍ ແມ່ນມາຈາກບໍລິສັດແມ່ໂດຍຄ່າໄຊ້ຈ່າຍ ຄ່າບໍລິການດັ່ງກ່ວາແມ່ນຄິດເຂົ້າໃນຄ່າອາຫານ,ຢາສັກ,ການເຮັດຄອກແລະອື່ນໆ. ແຕ່ກໍ່ໄດ້ມີລາຍງານວ່າຜູ້ປະກອບການລ້ຽງບໍ່ໄດ້ຮັບຮູ້ມູນຄ່າຕົວຈິງຂອງປັດໃຈເລົ່ານັ້ນ ແລະການຂາຍຜະລິດຕະພັນໃນຕະລາດຕົວຈິງແຕ່ຢ່າງໃດ. ເວລາ ໃດທີ່ຜູ້ປະກອບການລາຍຍ່ອຍຮວມກຸ່ມເປັນສະຫາກອນບໍລິສັດແມ່ກໍ່ຈະປະຕິເສດການສະ ໜອງປັດໃຈແລະການບໍລິການທຸກຢ່າງ ແລະ ຈະຊື້ໄກ່ຈາກສະຫາກອນນັ້ນໂດຍມີການວາງມາດຕາຖານຈັດເຂັ້ມງວດຄຸນນະພາບທີ່ເຄັ່ງຄັດ

<u>ໃນປະເທດອິນເດຍ(India)</u> ກະຊວງກະສິກໍາ ແລະ ທານະຄານກະສິກອນໄດ້ມີການເລີ່ມດໍາເນີນໂຄງການ ແລະ ຝຶກອົບຮົມນັກສົ່ງເສີມພາກເອກະຊົນ ທີ່ຮຽກວ່າ " ຜູ້ປະກອບການກະສິກໍາ". ຜູ້ປະກອບການດັ່ງກ່າວແມ່ນນັກສຶກສາຈົບການກະສິກໍາ, ຜູ້ໃດທີ່ປະກອບການສ້າງເປັນ "ຄລີນິກກະສິກໍາ" ຈະມີການຍົກເວັ້ນພາສີ. ຊາວກະສິກອນຈະຈ່າຍຄ່າການຊ່ວຍຊຸກຍູ້ທຸລະກິດໃຫ້ດໍາເນີນການໄປໄດ້ດີ ແລະມີຄ່າການບໍລິການ. ປະຈຸບັນມີຮອດ 112 ຫົວນ່ວຍຜູ້ປະກອບການກະສິກໍາໃນ10 ລັດ ທີ່ສາມາດດໍາເນີນການຢ່າງຄ່ອງຕົວ.ສ່ວນໃຫຍ່ເຂົາເຈົ້າດໍາເນີນການທົດສອບວິໃຈດິນ, ການຄຸ້ມຄອງສວນກ້າເບັ້ຍ ແລະ ຊ່ວຍຊາວກະສິກອນລິເລີ່ມທຸລະກິດເຊັ່ນ:ການຜະລິດທີ່ປອດ ສານເຄມີແລະ ການປຸງແຕ່ງ

<u>ໃນປະເທດຊີລີລັງກາ(Sri lanka)</u> ເປັນ NGO ຮຽກວ່າ "ສາໂວດາຢາ-Sarvodaya" ທີ່ມີການຄິດໄລ່ ຄ່າໄຊ້ຈ່າຍຈາກຊາວກະສິກອນ ປະມານ 20 ໂດລາສະຫາລັດເພື່ອເຂົ້າຮັບການຝຶກອົບຮົມໃນໂຮງຮຽນຊາວນາ ຊຶ່ງເຂົາເຈົ້າຈະໄດ້ຮຽນຮູ້ວິທີການປ້ອງກັນພືດແບບປະສົມປະສານ ການຈ່າຍ ແມ່ນໃນຊ່ວງທ້າຍຂອງເດືອນທີສີ່ ຫຼັງຈາກ ມີການເກັບກ່ຽວເຂົ້າ ແລະ ຂາຍແລ້ວຄ່າໄຊ້ຈ່າຍ ແມ່ນ ໄດ້ຄິດໄລ່ ທີ່ ຮວມມີຄ່າດໍາເນີນການຝຶກ ແລະ ມູນຄ່າສະສົມ ຈາກ ການ ທີ່ຊາວກະສິກອນບໍ່ໄດ້ຈ່າຍຄ່າສານເຄມີຕ່າງໆ

<u>ໃນປະເທດວຽດນາມ(Vietnam) </u>ເພດຍິງໃນເຂດຫ່າງໄກສອກຫຼີກຂອງພາກເໜືອວຽດນາມໄດ້ຈ່າຍ ໃຫ້ແກ່ສັດຕະວະແພດທີ່ໄດ້ລົງໄປສັກຢາໃຫ້ໝູນ້ອຍຂອງເຂົາເຈົ້າທຸກໆຄັ້ງ. ເຂົາເຈົ້າໄດ້ ມີການຕໍ່ລອງ ຂໍຈ່າຍເປັນວັດຖຸໂດຍຂຶ້ນກັບຜົນໄດ້ຮັບຈາກການໃຫ້ບໍລິການ. ຈາກການລ້ຽງໝູນ້ອຍ 6 ໂຕ ເມື່ອຮອດອາຍຸຂາຍໄດ້ໃຫ້ສັດຕະວະແພດ ເອົາ 1 ໂຕ ສໍາລັບເປັນຄ່າຕອບແທນ.

ບາງບົດຮຽນທີ່ສາມາດສັງຮວມອອກຈາກກໍລະນີທີ່ໄດ້ກ່າວຂ້າງເທິງນີ້ຄື:

- ການຕັດສິນໃຈວ່າຈະໃຫ້ພາກສ່ວນເອກະຊົນເຂົ້າໄປມີບົດບາດໃນວຽກສົ່ງເສີມປະເພດແລະລະດັບໃດນັ້ນຕ້ອງມີການໃຈ້ແຍກຖີ່ຖ້ວນເປັນກໍລະນີໄປຫາກບໍ່ແມ່ນຈະເດີນຕາມຮູບການ ຫຼືທິດສະດີແບບ"ພິມຂຽວ"
- ມາດຕາການດ້ານກົດໝາຍແລະການຄໍ້າຊູອາດຄວນມີການກໍານົດແຈ້ງເພື່ອປ້ອງກັນຊາວກະສິກອນທີ່ທຸກຍາກຊຶ່ງບໍ່ສາມາດ ໄຊ້ຈ່າຍຄ່າບໍລິການ

- ຊາວບ້ານ(ຫຼື ລູກຄ້າ)ຕ້ອງໄດ້ເປັນຜູ້ຕັດສິນວ່າການບໍລິການນັ້ນສອດຄ່ອງແລະມີປະສິດຕິຜົນ. ຖ້າອີງການຈັດຕັ້ງພາກລັດຖະບານຫາກຫັນການບໍລິການຜູກພັນໃຫ້ພາກສ່ວນເອກະຊົນ ຫຼື NGOs ໂດຍຂາດການປຶກສາຫາລືກຕອງດີພໍ, ການບໍລິການກໍ່ອາດບໍ່ມີຫຍັງດີໄປກ່ວາເວລາ ແລະ ສິ່ງທີ່ພະນັກງານພາກລັດໄດ້ປະຕິບັດມາກ່ອນ.
- ຊາວບ້ານພ້ອມທີ່ຈະຈ່າຍຄ່າຂໍ້ມູນຂ່າວສານ ແລະ ການບໍລິການຕ່າງໆຖ້າເຂົາເຈົ້າຫາກເຫັນວ່າຈະໄດ້ຮັບປະໂຫຍດ,ມີລາຍຮັບແທ້
- ອີງການຈັດຕັ້ງຂອງຊາວບ້ານເປັນສິ່ງສາມາດສ້າງປະສິດຕິຜົນໄດ້ໃນການຕໍ່ລອງກັບຜູ້ໃຫ້ບໍລິການ ແລະ ການຕິດຕາມຄວບຄຸມຄຸນນະພາບຂອງການບໍລິການ

## 1.4 ວິທີໃນການສົ່ງເສີມ

### *1.4.1 ພາບລວມ*

ຫຼາຍໆແຜນງານການສົ່ງເສີມໄດ້ມີການສັງຮວມນຳໃຊ້ຫຼາຍວິທີປະສົມປະສານກັນ ແຕ່ມັກຈະ ມີນຶ່ງຫາສອງວິທີການທີ່ເປັນແກນກາງສຳຄັນໃນກິດຈະກຳ. ຕົວຢ່າງໃນລະບົບ T&V “ການປະຊຸມກຸ່ມ” ເປັນວິທີການຫຼັກຂອງກິດຈະກຳ ແຕ່ກໍ່ຕາມດ້ວຍການໃຊ້ວິທີການສາທິດແລະແຈກຈ່າຍເອກະສານທາງເຕັກນິກ

ມີຫຼາຍປັດໃຈທີ່ກ່ຽວພັນກັບການເລືອກວິທີການສົ່ງເສີມເຊັ່ນ:

- ຈຳນວນຄອບຄົວທີ່ຕ້ອງເຂົ້າຫາ;
- ອັດຕາສ່ວນລະວ່າງພະນັກງານສົ່ງເສີມກັບຈຳນວນຄອບຄົວຊາວກະສິກອນ
- ຄວາມຫຼາກຫຼາຍຂອງລະບົບການປູກພືດ
- ປະເພດບັນຫາທີ່ຊາວກະສິກອນປະເຊີນ ແລະ ຄວາມຮູ້ຄວາມສາມາດທີ່ຕ້ອງມີ ເພື່ອແກ້ໄຂ
- ຄວາມແຕກຕ່າງດ້ານວັດທະນະທຳແລະພາສາທີ່ໃຊ້
- ອັດຕາການຮູ້ໜັງສື
- ລັກສະນະຂອງທີ່ຕັ້ງພູມສັນຖານ
- ຄວາມສະດວກດ້ານໂຄງລ່າງພື້ນຖານ
- ທຶນທີ່ມີຢູ່.

ແຕ່ແນ່ນອນສິ່ງສຳຄັນໄປກ່ວານັ້ນແມ່ນກອບຄວາມຄິດໃນການສົ່ງເສີມ. ຖ້າຫາກການສົ່ງເສີມມຸ້ງເນັ້ນພຽງການກະຈ່າຍເຕັກໂນໂລຢີ,ກໍ່ໝາຍວ່າເປັນພຽງການນຳເອົາຮູບການສື່ສານແບບທາງດຽວໄປໃຊ້, ເຊັ່ນການກະຈ່າຍຂ່າວທາງວິທະຍຸ ແລະ ການເຮັດແປງສາທິດ. ແຕ່ຖ້າຫາກມຸ້ງເນັ້ນໃສ່ການຍົກສູງແລະເຊີດຊູສິດເປັນເຈົ້າ ການບໍລິການກໍ່ຈະມີການໃຊ້ວິທີການແບບປະຕິສຳພັນເຊັ່ນໃຫ້ການທົດສອບເພື່ອການຮຽນຮູ້ ແລະ ການຈັດການແລກປ່ຽນບົດຮຽນລະວ່າງ ຊາວກະສິກອນດ້ວຍກັນ

### *1.4.2 ສື່ມວນຊົນ*

ບັນດາວາລະສານ,ປື້ມອ່ານ,ວິທະຍຸ,ໂທລະພາບ,ທັງໝົດນອນໃນຮູບແບບສື່ສານມວນຊົນ. ແຕ່ມັນກໍ່ເປັນຮູບການນຳສົ່ງຂໍ້ມູນແບບທາງດຽວຊື່ງອອກຈາກກຸ່ມຜູ້ສົ່ງຈຳນວນນ້ອຍໄປສູ່ຜູ້ຮັບທີ່ມີຈຳນວນຫຼວງຫຼາຍ. ຜູ້ຮັບນັ້ນມັກຈະຮຽກວ່າຜູ້ຮັບຟັງແລະຊົມ, ແລະ ຖືໄດ້ວ່າເປັນຜູ້ທີ່ມີບົດບາດນ້ອຍ,ເປັນພຽງສ່ວນນື່ງໃນຂະບວນການສື່ສານສຳພັນແບບນີ້

ການສື່ສານມວນຊົນມີຂໍ້ດີຢູ່ທີ່ຂໍ້ມູນສາມາດກະຈ່າຍສູ່ຜູ້ຮັບໄດ້ຈຳນວນຫຼາຍໂດຍມີຄ່າໃຊ້ຈ່າຍນ້ອຍ ຖ້າທຽບໃສ່ວິທີການສົ່ງເສີມອື່ນ. ປື້ມອ່ານແລະສິ່ງພິມສາມາດແຈກສົ່ງຂໍ້ມູນເຖີງຫຼາຍພັນແຫ່ງ ຢູ່ໃນຮູບແບບ ແລະ ມາດຖານເນື້ອໃນເດີມຂອງມັນ. ການອອກອາກາດເຊັ່ນວິທະຍຸປົກກະຕິຈະກະຈ່າຍຂໍ້ມູນທີ່ເຂົ້າໃຈໄດ້ງ່າຍດ້ວຍຄຳເວົ້າທີ່ງ່າຍຊວນຟັງ ແລະສາມາດໄປເຖີງເຂດຫ່າງໄກສອກຫຼີກປົກກະຕິ. ວິທີການນີ້ຈະມີປະໂຫຍດສູງໃນການໃຫ້ທັດສະນະ,ຄວາມກະຈ່າງແຈ້ງຂອງນະໂຍບາຍ,ດ້ານບັນຫາ ແລະ ຂໍ້ຄິດເຫັນ ແຕ່ມັນອາດຈະບໍ່ເຫັນໄດ້ຄວາມບໍ່ແນ່ນອນໃນການ ດຳເນີນການຂອງຜູ້ປະຕິບັດ. ວິທະຍຸກະຈ່າຍສຽງບໍ່ສາມາດໃຊ້ເພື່ອຕໍ່ລອງຫາທາງອອກໃນການແກ້ບັນຫາ ແລະ ປື້ມອ່ານກໍ່ບໍ່ສາມາດສ້າງທັກສະທີ່ຈຳເປັນໃນການນຳໃຊ້ເຕັກນິກໃໝ່ໄດ້

ເຖີງແມ່ນສື່ມວນຊົນອາດບໍ່ສາມາດກະຈ່າຍຂໍ້ມູນທີ່ເຈາະຈົງສະເພາະດ້ານກໍ່ຕາມ ແຕ່ມັນກໍ່ສາມາດນຳໃຊ້ເຂົ້າໃນການສຶກສາທາງໄກໃຫ້ແກ່ປະຊາຊົນໃນເຂດຫ່າງໄກສອກຫຼີກເພື່ອປັບປຸງຄວາມເຂົ້າໃຈຂອງເຂົາເຈົ້າໃຫ້ມີແນວຄິດໃໝ່ຖືກຕ້ອງ ແລະເຂົາອາດສາມາດວິເຄາະບັນຫາ ແລະ ທ່າແຮງທີ່ມີຂອງເຂົາໄດ້. ສື່ສານມວນຊົນສາມາດໃຊ້ປະສົມປະສານກັບວິທີການອື່ນເພື່ອໃຫ້ເກີດປະສິດຕິຜົນໃນການຮຽນທາງໄກໄດ້ເຊັ່ນ: ການຈັດສົນທະນາກຸ່ມເວລາທີ່ເຂົາໄດ້ຟັງຈາກວິທະຍຸ ຫຼືຈາກການອ່ານປື້ມ

ພາສາແລະວັດທະນະທຳກໍ່ອາດເປັນສິ່ງກີດກັນຢ່າງນື່ງແກ່ການນຳໃຊ້ສື່ມວນຊົນ. ຊາວຊົນນະບົດ ມັກຈະມີຄວາມເຊື່ອທີ່ແຕກຕ່າງແລະ ກໍ່ມັກເວົ້າສຳນຽງແລະຄຳສັບທ້ອງຖິ່ນຕໍ່ ນັກຊ່ຽວຊານແລະພະນັກງານລັດທີ່ເປັນຜູ້ຜະລິດອຸປະກອນຕ່າງໆ. ທາງອອກທີ່ດີຢ່າງນື່ງຄືການ ເອົາເຂົາເຈົ້າເຂົ້າມາມີສ່ວນຮ່ວມໃນຂະບວນການຜະລິດສື່. ຕົວຢ່າງ: ສາມາດຈັດກອງປະຊຸມ ຊາວບ້ານເພື່ອ

ສັງຮວມເອົາທຸກພູມປັນຍາທີ່ມີເຂົ້າຮ່ວມ, ແລະ ທົດສອບສິ່ງທີ່ສ້າງນັ້ນກ່ອນຈະນຳ ເຂົ້າສູ່ການເຮັດສະບັບສົມບູນ ແລະ ສາມາດສຳພາດທາງວິທະຍຸກັບເຂົາເຈົ້າໄດ້ໃນທີ່ນັ້ນເລີຍ.

ເມື່ອລະບົບຄອມພິວເຕີແລະອິນເຕີເນັດເກີດມີຂື້ນ, ວິທີການກະຈ່າຍຂໍ້ມູນແບບໃໝ່ກໍ່ເກີດຂື້ນ ແລະ ຂະຫຍາຍທັນທີ. ແຜ່ນອັດ, Website ແລະຈົດໝາຍເອເລັກໂທຣນິກໄດ້ມີການນຳໄຊ້ຢ່າງແຜ່ຫຼາຍໃນໝູ່ຊາວກະສິກອນໃນຢູໂຣບ ແລະ ອາເມຣິກາເໜືອ ແລະ ປະຈຸບັນກໍ່ມີໂຄງການຊຸກຍູ້ເຕັກໂນໂລຢີດັ່ງກ່າວໃນບາງສ່ວນຂອງທະວີບອາຊີ ແຕ່ຢ່າງໃດກໍດີຍັງບໍ່ທັນສາມາດເວົ້າໄດ້ວ່ານີ້ມັນເປັນຂໍ້ສະຫຼຸບວ່າວິທີການນີ້ມີປະສິດຕະຜົນສູງສຸດແລ້ວ ເພາະມັນກໍ່ຍັງເປັນພຽງສ່ວນນື່ງຂອງ ແນວຄວາມຄິດໃນການສົ່ງເສີມ

### *1.4.3 ການຕິດຕໍ່ສ່ວນບຸກຄົນ Inter-personal*

ຄຳວາ"ຕິດຕໍ່ສ່ວນບຸກຄົນ" ໂດຍການບົ່ງບອກແລ້ວກໍ່ບໍ່ຄືກັບ ການໄຊ້ສື່ມວນຊົນ -ມັນໄດ້ມີການແລກປ່ຽນຂໍ້ມູນຂ່າວສານແລະຂໍ້ຄິດເຫັນລະວ່າງຊາວບ້ານກັບນັກສົ່ງເສີມ.ທັງສອງຝ່າຍມີໂອກາດ ທັງຕັ້ງ ແລະ ຕອບຄຳຖາມ.
ມີ ສອງວິທີການທີ່ມັກໄຊ້ໃນການຕິດຕໍ່ສ່ວນບຸກຄົນ:

<u>ຢ້ຽມຢາມເປັນລາຍຄອບຄົວ:</u> ວິທີການນີ້ໄດ້ມີການໄຊ້ແຜ່ຫຼາຍ ໃນເວລາທີ່ການສົ່ງເສີມເນັ້ນໃສ່ການສ້າງຄອບຄົວແບບຢ່າງ ຊື່ງຮຽກວ່າ "ຜູ້ຫ້າວຫັນ". ນັກສົ່ງເສີມຈະດຳເນີນການຢ້ຽມຢາມຢ່າງເປັນປົກກະຕິເພື່ອຕິດຕາມກວດກາ ພືດປູກ ແລະ ສັດລ້ຽງ,ໃຫ້ຄຳແນະນຳ ເພື່ອ ກະກຽມປັດໃຈຕ່າງໆຕ້ອງໄຊ້. ວິທີການນີ້ຍັງສາມາດໄຊ້ການໄດ້ຖ້າຫາກຊາວກະສິກອນຍັງຈ່າຍຄ່າບໍລິການແກ່ນັກສົ່ງເສີມ,ຊື່ງຍັງມີຢູ່ໃນບາງບ່ອນຂອງຢູໂຣບ ແລະ ອາເມຣິກາເໜືອ, ແຕ່ກໍ່ເຫັນວ່າຍາກທີ່ຈະປັບເຮັດໃຫ້ການລົງຢ້ຽມຢາມເປັນລາຍຄອບຄົວໃຫ້ກາຍເປັນອົງປະກອບສຳຄັນໃນການຜັນຂະຫຍາຍສູ່ວົງກ້ວາງ ທີ່ວປວງຊົນໄດ້ , ຖ້າຫາກເປົ້າໝາຍການສົ່ງເສີມຍັງເນັ້ນໃສ່ການຮັບໄຊ້ວຽກການລົບລ້າງຄວາມທຸກຍາກ ແລະ ສ້າງຄວາມສະເໝີພາບທາງສັງຄົມ. ສິ່ງທີ່ເຫັນໄດ້ງ່າຍທີ່ສຸດກໍ່ຄືນັກສົ່ງເສີມບໍ່ພຽງພໍທີ່ຈະປະຕິບັດຕາມວິທີການນີ້ຢ່າງມີປະສິດຕິພາບ. ຢ່າງໃດກໍດີມັນກໍຍັງຈະມີປະໂຫຍດສຳລັບນັກສົ່ງເສີມທີ່ຕ້ອງໄດ້ຮັບຮູ້ບັນຫາ ແລະ ທ່າແຮງຂອງບາງຄອບຄົວທີ່ກຳລັງປະເຊີນຢູ່ນັ້ນເພື່ອຊ່ວຍໃຫ້ຄວາມຮູ້ໃນການແກ້ໄຂບັນຫາແລະມັນກໍ່ຍັງມີປະໂຫຍດຕໍ່ວຽກພັດທະນາຊຸມຊົນໂດຍທົ່ວໄປ

<u>ການປະຊຸມກຸ່ມ</u>: ວິທີການນີ້ມີປະສິດຕິຜົນ ແລະ ເໝາະສົມກ່ວາ ວິທີກ່ອນ ເຖີງວ່າມັນຈະຂື້ນກັບສ່ວນປະກອບຂອງສາມະຊິກກຸ່ມກໍຕາມ. ຫຼາຍປະເພດກຸ່ມທີ່ມີຢູ່ໃນຊົນນະບົດ:ສະຫະກອນ, ກຸ່ມຜູ້ໄຊ້ນ້ຳ, ສະໂມສອນຊາວນຸ່ມ ແລະ ອື່ນໆ ແລະ ໃນບາງປະເທດການສົ່ງເສີມກໍ່ເຂົ້າໄປຕາມ

ກຸ່ມທີ່ມີຢູ່ ແລະ ບາງກໍລະນີກໍ່ອາດຈຳເປັນຕ້ອງໄດ້ຈັດຕັ້ງຂື້ນໃນຮູບແບບໃໝ່. ທັງສອງປະເພດກຸ່ມແມ່ນຖືກຈັດຕັ້ງຂື້ນໂດຍພະນັກງານລັດ ແລະ ສ່ວນໃຫຍ່ຈະເປັນສາມະຊິກເພດຊາຍທີ່ມາຈາກຄອບຄົວຂ້ອນຂ້າງທີ່ມີຖານະດີ, ຊື່ງໃນບາງກໍລະນີມີຄວາມຈຳເປັນຕ້ອງເນັ້ນໃສ່ຄອບຄົວທຸກຍາກ ແລະ ເພດຍິງໄດ້ມີໂອກາດເຂົ້າຮ່ວມນຳ. ຍັງສາມາດໃຫ້ຂໍ້ສັງເກດໄດ້ອີກວ່າມີສອງປະເພດກຸ່ມໃຫຍ່ໃນການສົ່ງເສີມເຊັ່ນ: ກຸ່ມທີ່ຕັ້ງຂື້ນເພື່ອໃຫ້ດຳເນີນການໃຫ້ບັນລຸຕາມຄວາມຕ້ອງການຂອງນັກສົ່ງເສີມ ແລະ ກຸ່ມທີ່ຕັ້ງຂື້ນບົນພື້ນຖານທີ່ຊາວບ້ານກຳນົດເອງ. ກຸ່ມທີ່ຈັດຕັ້ງຂື້ນບົນພື້ນຖານທີ່ເຂົາມີບັນຫາ ແລະ ຢາກປະສານຜົນປະໂຫຍດ ແລະ ການຮຽນຮູ້ຮ່ວມກັນນັ້ນຈະໄດ້ຮັບປະໂຫຍດຈາກການສົ່ງເສີມສູງກ່ວາ ກຸ່ມທີ່ມີສາມະຊິກຖືກບັງຄັບໃຫ້ເຂົ້າຮ່ວມ.

### 1.4.4 *ການສາທິດ Demonstrations*

ມີຢູ່ສອງຢ່າງໃນວຽກການສາທິດທີ່ຖືກນຳໃຊ້ໃນຖານະເປັນສ່ວນນື່ງຂອງແຜນງານການສົ່ງເສີມ:

<u>ສາທິດວິທີການ.</u>

ປະເພດການສາທິດນີ້ແມ່ນຖືກນຳໃຊ້ເພື່ອການສອນໃຫ້ຮູ້ກິດຈະກຳສະເພາະຢ່າງໃນການຜະລິດເຊັ່ນ ການຕັດແຕ່ງຊື່ງພຸ່ມຕົ້ນໄມ້ໃຫ້ໝາກ, ການສັກຢາວັກຊິນສັດປີກເປັນຕົ້ນ ຫຼື ການສ້ອມແປງລົດໄຖເດີນຕາມ. ໃນຊ່ວງການສາທິດວິທີການນັ້ນຊາວກະສິກອນຈະຖືກສະແດງໃຫ້ເຫັນເປັນຂັ້ນຕອນລະອຽດຂອງແຕ່ລະກິດຈະກຳທີ່ຕ້ອງປະຕິບັດ ແລະຈະມີການອະທິບາຍເຖິງຜົນທີ່ຈະໄດ້ຮັບຈາກການປະຕິບັດນັ້ນ.ມັກຈະເຮັດຊ້ຳໆຄືນຫຼາຍໆເທື່ອຊື່ງຕ້ອງໃຊ້ເວລາລົມຄວນ. ໃນຕົວຂອງວິທີການແລ້ວແມ່ນເປັນພຽງການໄດ້ຂໍ້ມູນ,ເຫັນໄດ້ ການສະເໜີທຸກກິດຈະກຳ , ແຕ່ຖ້າຫາກຊາວກະສິ ກອນຢາກມີທັກສະ/ຄວາມສາມາດແທ້ຕ້ອງໄດ້ມີໂອກາດປະຕິດ້ວຍຕົນເອງແຕ່ອາດຕ້ອງເພີ່ມເວລາໃນຊ່ວງນຳໄປປະຕິບັດເອງເຂົ້າເປັນສ່ວນນື່ງຂອງວິທີການ,ຖ້າແມ່ນກໍລະນີທີ່ມີສຳມະນາກອນບໍ່ຫຼາຍແລະອຸປະກອນສາທິດເພື່ອປະຕິບັດມີພຽງພໍ.

<u>ສາທິດ ຜົນໄດ້ຮັບ.</u>

ການສາທິດແບບນີ້ເປັນການສະແດງຜົນໄດ້ຮັບຂອງການໃຊ້ເຕັກໂນໂລຢີໃດນື່ງເຊັ່ນ: ການປູກເຂົ້າທີ່ໃຊ້ແນວພັນປັບປຸງ, ຫຼື ການນຳໃຊ້ອັດຕາຝຸ່ນໃດນື່ງ. ເຕັກໂນໂລຢີນັ້ນໄດ້ນຳໃຊ້ໃນແປງສາທິດທີ່ນອນໃນພື້ນທີ່ການຜະລິດທີ່ຊາວກະສິກອນສາມາດເຫັນໄດ້ງ່າຍ. ໃນຜ່ານມາ ຈົນຮອດປະຈຸບັນໄດ້ມີການເຮັດແປງສາທິດ ໂດຍໃຫ້ມີການສົມທຽບກັບແນວພັນພື້ນເມືອງ ແລະເຕັກນິກອັນໃໝ່,ທັງນີ້ກໍ່ເພື່ອໃຫ້ຊາວກະສິກອນຕັດສິນໃຈຈາກການໄດ້ເຫັນວ່າຈະເລືອກໃຊ້ສິ່ງໃດຈື່ງຈະເໝາະ ກັບສະພາບທີ່ມີຂອງຕົນ. ສ່ວນໃຫຍ່ຊາວກະສິກອນຈະເຫັນວ່າສະພາບເງື່ອນໄຂໃນບ່ອນສາທິດ ແລະ ໃນພື້ນທີ່ຂອງເຂົາເຈົ້າມີຄວາມແຕກຕ່າງກັນ.

ຫຼັກການລວມໃນການເຮັດສາທິດທັງສອງແບບມີຄື:[12]:

- ສິ່ງທີ່ສາທິດ: ຕ້ອງແມ່ນເຕັກໂນໂລຢີທີ່ຜ່ານການຮັບຮອງແລ້ວ ຖ້າບໍ່ດັ່ງນັ້ນກໍ່ຍັງຈະຮຽກວ່າ (“ການທົດລອງ” ຫາກບໍ່ ແມ່ນ “ການສາທິດ”);
- ການກະກຽມ: ຜູ້ເອື້ອອຳນວຍການຮຽນຮູ້ຕ້ອງມີການກະກຽມຢ່າງມີແຜນການ,ເຮັດເປັນຂັ້ນຕອນຕໍ່ເນື່ອງ, ຫາກບໍ່ແມ່ນພໍແລ້ວຮີດ
- ການມີສ່ວນຮ່ວມ: ການສາທິດຕ້ອງດຳເນີນການໃນພື້ນທີ່ການຜະລິດຂອງຊາວກະສິກອນໂດຍມີສ່ວນຮ່ວມຂອງເຂົາເຈົ້າ, ຫາກບໍ່ແມ່ນຢູ່ໃນແປງຂອງສູນສົ່ງເສີມຫຼືໃນແປງສະຖານີ ທົດລອງ
- ຄວາມງ່າຍດາຍ: ຕ້ອງເປັນການສາທິດທີ່ງ່າຍ ໄຊ້ວິທີການ ຫຼື ສິ່ງໃໝ່ບໍ່ສັບສົນ, ຫາກບໍ່ແມ່ນສາທິດແນວສັບສົນມີຫຼາຍໆຢ່າງຮວມກັນ ແລະ ຕ້ອງໄຊ້ແຮງງານຊາວບ້ານຫຼາຍໂພດ.
- ການຮຽນຮູ້: ການສາທິດແມ່ນຕ້ອງສ້າງໃຫ້ມີບັນຍາກາດການຮຽນຮູ້,ຜູ້ເອື້ອອຳນວຍຕ້ອງຄຳນຶງເຖິງຄວາມ ເໝາະສົມດ້ານສະຖານທີ່, ເວລາ, ເຄື່ອງມື ແລະ ເຕັກນິກ.
- ການຕິດຕາມ: ການສາທິດຕ້ອງເປັນສ່ວນນື່ງຂອງຂະບວນການ, ຕ້ອງມີການສືບຕໍ່ຮ່ວມປະຊຸມ,ຕິດຕາມແປງສາທິດຢ່າງໃກ້ຊິດຕໍ່ເນື່ອງເພື່ອໃຫ້ຂໍ້ແນະນຳໃນການແກ້ບັນຫາ ຢ່າງທັນການ

### 1.4.5 *ການຈັດຝຶກອົບຮົມ*

ການຈັດຝຶກອົບຮົມ,ຕົວບົ່ງຊີ້ທີ່ເດັ່ນຂອງແຜນງານການສົ່ງເສີມຕ່າງໆອາດມີການຈັດຝຶກແບບໄລຍະສັ້ນໃນຮູບການປະຊຸມ , ອາດຈັດເປັນຊຸດຝຶກທີ່ໄຊ້ເວລາໃດນື່ງ ຫຼື ແມ່ນແຕ່ເປັນ ຫຼາຍອາທິດ. ໂດຍທຳມະຊາດຂອງການຝຶກອົບຮົມໃນວຽກສົ່ງເສີມທີ່ຮູ້ກັນຢ່າງແຜ່ກ້ວາງນັ້ນ ແມ່ນຫົວຂໍ້/ເນື້ອໃນການຝຶກຕ້ອງໄດ້ເລືອກຢ່າງເຈາະຈົງກັບສິ່ງທີ່ສຳມະນາກອນຕ້ອງການ, ມີການກຽມອຸປະກອນເຄື່ອງມືມາກ່ອນ, ຖາມຢ້ຳຄວາມເຂົ້າໃຈໃນສິ່ງທີ່ຢາກໃຫ້ເກີດການຮຽນຮູ້.

ພື້ນຖານຢ່າງນີ້ຍັງສືບຕໍ່ນຳໄຊ້ຢ່າງແຜ່ຫຼາຍໃນທົ່ວໂລກ, ແຕ່ໃນຊ່ວງ 20 ປີ ຜ່ານມາ ໄດ້ມີການປ່ຽນແປງພໍສົມຄວນໃນການຈັດຝຶກອົບຮົມ ຊື່ງເປັນສ່ວນສຳຄັນນື່ງຂອງພາລະກິດການສົ່ງເສີມ

- ແຕ່ກ່ອນການຝຶກອົບຮົມແມ່ນມີການລົງທຶນສົມຄວນ.ເພາະຕ້ອງມີຫ້ອງຝຶກໃນສູນ ເພື່ອໃຫ້ນັກສົ່ງເສີມ ຫຼື ຊາວກະສິກອນເຂົ້າຮ່ວມ. ເມື່ອຕົດຮອດໄລຍະນີ້ການຝຶກໄດ້ດັດປັບຕົວ,ມີການ ນຳໄຊ້ສິ່ງປຸກສ້າງທີ່ມີຢູ່ເຊັ່ນ: ຫໍປະຊຸມບ້ານ, ໂຮງຮຽນ, ວັດ ແມ່ນແຕ່ກ້ອງລ່າງເຮືອນ.

- ແຕ່ກ່ອນການຝຶກມັກມີພຽງແຕ່ການບັນລະຍາຍ,ສາທິດ, ແຕ່ປະຈຸບັນຈະເນັ້ນການຝຶກແບບ ທັງຮຽນທັງເຮັດ ແລະ ອຸປະກອນການຝຶກກໍ່ງ່າຍດາຍກວ່າ.ແທນທີ່ຈະໄຊ້ແຕ່ເຄື່ອງ ,ອຸປະກອນການຝຶກທີ່ທັນສະໃໝ
- ການຝຶກສະໃໝນີ້ບໍ່ໄດ້ໃຫ້ສຳມະນາກອນນັ່ງລຽນຖຽວຕະລອດ, ນັກສົ່ງເສີມໄດ້ປັບປຸ່ງວິທີໃຫ້ ,ໂດຍໄດ້ມີການແບ່ງກຸ່ມຍ່ອຍຄົ້ນຄ້ວາແລກປ່ຽນສິ່ງທີ່ຮຽນຮູ້ເພື່ອແກ້ໄຂບັນຫາທີ່ມີ
- ການຝຶກບໍ່ໄດ້ເນັ້ນໃສ່ແຕ່ຫົວຂໍ້ທາງເຕັກນິກວິທະຍາສາດ, ແຕ່ຍັງກວມເອົາທັງເລື່ອງການຄຸ້ມຄອງ ແລະ ການຈັດຕັ້ງຕ່າງໆ.ເນື້ອໃນກໍ່ບໍ່ແມ່ນແຕ່ກ່ຽວຂ້ອງກັບວິຊາດຽວ,ແຕ່ກວມຫຼາຍປະເດັນເພື່ອຊີ່ສະແດງໃຫ້ເຫັນເຖີງກອບຄວາມຄິດໃນການຜະລິດ ແລະ ແກ້ໄຂ ຊີວິດການເປັນຢູ່.
- ນັກສົ່ງເສີມລັດ ແລະ NGOs ບໍ່ຈຳເປັນຕ້ອງເປັນຜູ້ຄວບຄຸມການຝຶກແຕ່ຕົ້ນເຖີງ ປາຍ. ຊາວຊົນນະບົດເອງກໍ່ສາມາດເປັນວິທະຍາກອນເສີມ ແລະ ຜູ້ເອື້ອອຳນວຍການຮຽນຮູ້ໄດ້ເໝືອນກັນ.

### 1.4.6 *ການຮຽນຮູ້ຈາກປະສົບການ*

ໃນວຽກງານການສົ່ງເສີມ,ວິທີການຮຽນຮູ້ຈາກປະສົບການຖືກນຳໄຊ້ ເພື່ອສ້າງການມີສ່ວນຮ່ວມ ແລະ ໃຫ້ການສຶກສາໄປພ້ອມໆກັນ ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ. ວິທີນີ້ເລີ່ມຈາກການວິເຄາະບັນຫາໃນພາກປະຕິບັດທີ່ໄດ້ເຮັດຜ່ານມາ. ໃນຮູບການສົ່ງເສີມແລ້ວການວິເຄາະບັນຫາແມ່ນເນັ້ນໃສ່ໃຫ້ຊາວບ້ານເປັນເຈົ້າການໂດຍມີພະນັກງານເອື້ອອຳນວຍການວິເຄາະ. ຈາກຜົນການວິເຄາະໄດ້ນັ້ນຈຶ່ງຕໍ່ດ້ວຍການຕັ້ງຂໍ້ສົມມຸດຕິຖານ ແລ້ວວາງແຜນປະຕິບັດເພື່ອພິສູດແນວຄວາມຄິດໃນການແກ້ໄຂຂອງເຂົາເຈົ້າ.. ວິທີການຮຽນຮູ້ອັນນີ້ສາມາດດຳເນີນກັບການເຮັດວຽກປົກກະຕິ ໂດຍເລີ່ມຈາກການວິເຄາະຜົນໄດ້ຮັບ ແລະ ວາງແຜນປະຕິບັດຕໍ່ໄປ. ວົງຈອນ/ວິທີການນີ້ສາມາດສັງຮວມໄດ້ໃນແຜ່ນວາດລຸ່ມນີ້:

ວົງຈອນການຮຽນຮູ້
ຈາກປະສົບການ:



ການຮຽນຮູ້ຈາກປະສົບການແມ່ນເປັນສ່ວນສຳຄັນໃນການໃຊ້ຮູບການແບບ "ໂຮງຮຽນຊາວນາ " ແລະ ຮູບແບບການພັດທະນາເຕັກໂນໂລຢີແບບມີສ່ວນຮ່ວມ. ສ່ວນ "ການທົດລອງໃນຮູບປະຕິບັດ" ກໍ່ສາມາດເວົ້າໄດ້ວ່າເປັນສ່ວນນື່ງຂອງວິທີການສົ່ງເສີມເໝືອນກັນ. ຢ່າງໃດກໍດີມີສີ່ງນື່ງທີ່ສາມາດເວົ້າໄດ້ວ່າພື້ນຖານຂອງວິທີການຮຽນຮູ້ຈາກປະສົບການມີຄວາມແຕກຕ່າງໄປຈາກລັກສະນະການສົ່ງເສີມແບບ"ປູ່ສອນຫຼານ"ຢູ່. ເພາະວິທີການທີ່ວ່ານັ້ນ,ບໍ່ວ່າການບັນລະຍາຍແລະການສາທິດແມ່ນຜູ້ຊ່ຽວຊານເປັນຜູ້ດຳເນີນການສະເໜີຕໍ່ຊາວບ້ານ,ຮວມທັງການສ້າງຂໍ້ສົມມຸດຕິຖານ ແລະ ການກຳນົດເຕັກນິກວິທີແກ້ໄຂທາງວິທະຍາສາດຕ່າງໆຕໍ່ບັນຫາທີ່ວິເຄາະໄດ້.

ໃນກໍລະນີຂອງໂຮງຮຽນຊາວນາ,ຊາວນາບໍ່ໄດ້ຮັບການຟັງການບັນລະຍາຍໃດໆ,ກ່ຽວກັບແມງໄມ້ສັດຕູພືດ ແລະ ແມງໄມ້ທີ່ໃຫ້ປະໂຫຍດ. ກົງກັນຂ້າມເຂົາເຈົ້າຈະຮຽນຮູ້ດ້ວຍການສັງເກດເຫັນວ່າມີຫຍັງເກີດຂື້ນໃນເນື້ອທີ່ປູກຂອງເຂົາ. ຈາກການສັງເກດໄດ້ນັ້ນເຂົາເຈົ້າຈະກຳນົດແນວວິທີການທົດສອບຄວາມຄິດແລະວິທີປ້ອງກັນຂື້ນມາເອງ.

ບັນດາຈຸດດີຂອງວິທີການນີ້:

- ມັນໄດ້ສ້າງຄວາມໝັ້ນໃຈໃນລະດັບສູງວ່າກິດຈະກຳການສົ່ງເສີມມີຄວາມສອດຄ່ອງກັບຄວາມຕ້ອງການ ແລະ ຜົນປະໂຫຍດຂອງຊາວຊົນນະບົດ.
- ມັນເປັນວິທີທີ່ມີການຜັກດັນໃຫ້ເກີດການໃຊ້ພູມປັນຍາຊາວບ້ານເຂົ້າສູ່ການວິເຄາະ
- ມັນເປັນວິທີທີ່ສ້າງຄວາມເປັນເຈົ້າການສູງຕໍ່ການຊອກຫາທາງອອກໃນການແກ້ໄຂສີ່ງທີ່ເຫັນວ່າເປັນບັນຫາ.
- ມັນເປັນວິທີທີ່ພັດທະນາຂີດຄວາມສາມາດໃນການຄົ້ນຄິດເພື່ອກ້າວໄປສູ່ການສືບຕໍ່ ແລະ ຮຽນຮູ້ໄດ້ດ້ວຍຕົນເອງ.

### 1.4.7 *ການຈັດການແລກປ່ຽນບົດຮຽນລະວ່າງຊາວກະສິກອນ*

ຊາວກະສິກອນມີການຮຽນຮູ້ຈາກກັນແລະກັນມາແລ້ວຫຼາຍພັນປີ, ແຕ່ການຮັບຮອງເອົາເປັນນື່ງໃນວິທີການສົ່ງເສີມແມ່ນບໍ່ດົນພໍເທົ່າໃດ, ມີບາງຕົວຢ່າງດັ່ງນີ້:

<u>ການຈັດປະຊຸມລະວ່າງຄອບຄົວຜູ້ຜະລິດເກັ່ງ:</u> ໃນຫຼາຍໆຊຸມຊົນຊົນນະບົດ ມີຫຼາຍຄົນທີ່ໄດ້ມີການຮັບຮູ້ວ່າເປັນຜູ້ທີ່ມີຄວາມຮູ້ ແລະ ສຳນິສຳນານໃນເລື່ອງໃດນື່ງ. ອາດເປັນຜູ້ທີ່ຊ່ຽວຊານໃນເລື່ອງການໃຊ້ຢາພື້ນເມືອງ, ຫຼືຊ່າງເຫຼັກ,ຊ່າງໄມ້. ການໄດ້ເອົາບັນດາຊາວບ້ານທີ່ເກັ່ງເລົ່ານີ້ເຂົ້າຮ່ວມປະຊຸມກັນສາມາດສ້າງໄດ້ໂອກາດໃນການປະກອບສ່ວນໃຫຍ່ຫຼວງທັງໃນການວາງແຜນ ແລະ ການຈັດຕັ້ງແຜນງານການສົ່ງເສີມ. ຜູ້ທີ່ເຂົ້າຮ່ວມໃນກອງປະຊຸມດັ່ງກ່າວອາດສາ

ມາດໃຈ້ແຍກບັນຫາ ແລະ ທ່າແຮງຮວມທັງການປະເມີນຂໍ້ສະເໜີແນະຈາກຊ່ຽວຊານພາຍນອກ ແລະ ເຂົາເຈົ້າຍັງສາມາດເປັນຜູ້ສິດສອນໃຫ້ແກ່ຄົນອື່ນໃນຊຸມຊົນອີກດ້ວຍ.

ໝູນວຽນການຢັ້ງມຢາມ: ການດໍາເນີນການຜະລິດແມ່ນມີຄວາມແຕກຕ່າງຫຼາຍໃນແຕ່ລະບ່ອນ. ຕົວຢ່າງການເກັບຮັກສາເມັດພັນ, ການປົວພະຍາດສັດທີ່ປ່ວຍຈະມີຄວາມແຕກຕ່າງລະວ່າງ ບ້ານນີ້ກັບບ້ານອື່ນໃນເຂດນຶ່ງອີກ.ການຈັດໃຫ້ມີການຢັ້ງມຢາມກັນລະວ່າງຊາວບ້ານຈະເປັນວິທີ ການທີ່ຍູ້ແຮງໃນການຂະຫຍາຍວິທີປະຕິບັດອອກໃຫ້ກ້ວາງຂວາງໄວ ຫຼື ແມ່ນແຕ່ເພື່ອຂະຫຍາຍ ການທົດສອບອອກ. ການມີຜູ້ສັງເກດ ແລະ ຊ່ວຍເອື້ອອໍານວຍໃນການສົນທະນາເພື່ອ ໃຫ້ເຫັນ ປະເດັນ ທີ່ເລິກເຊິ່ງອາດມີຄວາມສໍາຄັນຫຼາຍ ແຕ່ກໍ່ບໍ່ຄວນເປັນຜູ້ຄວບຄຸມໄປໝົດຂະບວນການ

ທີ່ປຶກສາຊຸມຊົນ: ເປັນຊາວຊົນນະບົດທີ່ເປັນຜູ້ເອື້ອອໍານວຍການຝຶກອົບຮົມ, ໃຫ້ການແນະນໍາ ແລະ / ຫຼືເປັນຕົວປະສານລະວ່າງຊຸມຊົນກັບພາຍນອກ. ເຂົາອາດຖືກເຊີນໃຫ້ປະຕິບັດບາງໜ້າ ວຽກຫຼືອາດຖືກແຕ່ງຕັ້ງໃຫ້ເປັນຜູ້ໃຫ້ບໍລິການແກ່ສະມະຊິກຂອງຊຸມຊົນກໍ່ໄດ້. ມີຫຼາຍຄໍາຮຽກຕໍ່ ການປຶກສາແບບນີ້ເຊັ່ນ “ ວິຊາການບ້ານ”, “ຄູຝຶກຊາວບ້ານ” ຫຼື “ ຕົວແບບ”. ແຕ່ມີສອງຢ່າງທີ່ ຕ້ອງແຍກແຍະກ່ຽວກັບທີ່ປຶກສາຊຸມຊົນ: ພວກທີ່ດໍາເນີນການຕາມການວາງ ແຜນຂອງວິຊາ ການ/ຊ່ຽວຊານຈາກພາຍນອກ ຫຼື NGOs, ແລະ ພວກທີ່ດໍາເນີນການຕາມແຜນການຂອງສາ ມະຊິກຊຸມຊົນພ້ອມກັນວາງໄວ້. ທັງສອງວິທີແມ່ນໄຊ້ວິທີການແບບການມີສ່ວນຮ່ວມທັງນັ້ນ, ພຽງແຕ່ວ່າປະເພດໃດໃນຍາວນານຈະກໍ່ໃຫ້ເກີດ ການເພິ່ງຕົນເອງໄດ້.  ໃນຫຼາຍ ໂຄງການສົ່ງ ເສີມ,ມີຫຼາຍໂຄງການໄດ້ມີການຈ່າຍເງິນໃຫ້ທີ່ປຶກສາຊຸມຊົນເພື່ອ ເປັນການຕອບແທນ ຄ່າບໍ ລິການຂອງເຂົາ. ແຕ່ກໍ່ມີຫຼາຍໆບ່ອນເຮັດຕາມຄວາມສະໝັກໃຈແລະ ອາດໄດ້ຮັບການ ຕອບ ແທນ ເປັນວັດຖຸ (ເຊັ່ນ: ຊ່ວຍຄືນໃນຮູບແຮງງານ, ຫຼື ຕອບແທນເປັນຜະລິດ ຕະພັນໃນຮູບ ຂອງຕ້ອນ ຂອງຝາກ)

ຈັດວັນຢັ້ງມຢາມສະໜາມ: ຕາມປະເພນີແລ້ວ,ວັນຢັ້ງມຢາມສະໜາມຈະຖືກຈັດຕັ້ງຂຶ້ນໂດຍ ພະ ນັກງານສົ່ງເສີມຂອງລັດ ຊຶ່ງ ເປັນສ່ວນນຶ່ງໃນແນວຄວາມຄິດຂອງການກະຈ່າຍເຕັກໂນໂລຢີແຕ່ ມັນກໍ່ເປັນໄປໄດ້ທີ່ຊາວກະສິກອນສາມາດຈັດການເອົາເອງ. ໂດຍສະເພາະແລ້ວມັນເປັນປະ ໂຫຍດສູງເວລາໃດທີ່ກຸ່ມຊາວບ້ານເລົ່ານັ້ນຫາກຈົບການຝຶກຫຼືໄດ້ຜ່ານການທົດສອບວິທີການອັນ ໃດນຶ່ງມາແລ້ວ. ຫາກແມ່ນກໍລະນີດັ່ງກ່ວານີ້ ມັນຈະເປັນການເສີມສ້າງໂອກາດໃນການແລກ ປ່ຽນ ຄວາມຄິດເຫັນຕໍ່ຜົນທີ່ໄດ້ຮັບ, ທັງເປັນການກະຕຸກຊຸກຍູ້ຊາວກະສິກອນຄົນອື່ນໆອີກດ້ວຍ. ໂດຍສະຫຼຸບແລ້ວ,ການຍູ້ໜູນ ຊາວກະສິກອນ ໃຫ້ເປັນຜູ້ມີບົດບາດເປັນຕົວສະແດງໃນຂະບວນ ການສົ່ງເສີມ ແທນທີ່ຈະເປັນພຽງຜູ້ຮັບຟັງ/ຊົມແມ່ນໄດ້ເກີດມີຫຼາຍຂຶ້ນໃນວຽກສົ່ງເສີມ.  ມີໂຄງ ການຈໍານວນບໍ່ນ້ອຍຜ່ານມາຢູ່ໃນທົ່ວໂລກໄດ້ສະແດງໃຫ້ເຫັນແລ້ວວ່າ ວິທີການຈັດການ ແລກ ປ່ຽນລະວ່າງຊາວກະສິກອນດ້ວຍກັນມີຄ່າຊື້ນເປືອງນ້ອຍ ແຕ່ປະສິດຕິຜົນ ສູງ ແລະ ອະນາຄົດ ການພັດທະນາໃນເລື້ອງນີ້ ກໍ່ສາມາດຄາດຫວັງໄດ້.

# ພາກທີ 2: ພັດທະນາການຂອງວຽກສົ່ງເສີມໃນລາວ

## 2.1 ອຸປະສັກໃນການພັດທະນາວຽກງານກະສິກຳ

ການສົ່ງເສີມກະສິກຳໄດ້ກາຍເປັນວຽກຮີບດ່ວນທີ່ຕ້ອງໄດ້ຮັບການພັດທະນາ ເພາະໃນຄວາມເປັນຈິງປະຊາຊົນທີ່ຍຶດຖືອາຊີບການຜະລິກກະສິກຳໃນ ສ ປ ປາວ ມີເກືອບ 80 % ຂອງ ພົນລະເມືອງ ແລະ ລາຍໄດ້ແຫ່ງຊາດເກີນກ່ວາເຄິ່ງນຶ່ງແມ່ນມາຈາກການຜະລິດກະສິກຳ. ຊາວຊົນນະບົດແມ່ນມີບົດບາດສຳຄັນສູງສຸດໃນການຄຸ້ມຄອງຊັບພະຍາກອນທຳມະຊາດຂອງປະເທດ ໃນນັ້ນຮວມທັງ 47% ເນື້ອທີ່ປ່າໄມ້ທີ່ເຫຼືອຢູ່ຂອງ ສ ປ ປລາວ. ແຕ່ປະຊາຊົນແມ່ນຍັງດຳລົງຊີວິດພາຍໃຕ້ສະພາບຄວາມທຸກຈົນ. ເພາະສະນັ້ນການທີ່ຈະເຮັດໃຫ້ຊາວກະສິກອນຫຼຸດພົ້ນອອກຈາກຄວາມທຸກຍາກໄດ້ກໍ່ມີພຽງແຕ່ການເສີມສ້າງຄວາມຮູ້ຄວາມສາມາດຂອງເຂົາເຈົ້າໃນການແກ້ໄຂບັນຫາຢ່າງມີລະບົບ. ທີ່ຈິງແລ້ວພາກລັດ ແລະໂຄງການຊ່ວຍເຫຼືອມີບົດບາດພໍສົມຄວນເພື່ອເຂົ້າຊ່ວຍໃນຂະບວນການແກ້ໄຂ,ແຕ່ກໍ່ຄວນນອນໃນຮູບການທີ່ເປັນທີ່ປຶກສາເພື່ອເສີມສ້າງຂີດຄວາມສາມາດຂອງປະຊາຊົນໃນການວິເຄາະບັນຫາ ຫາທາງອອກແກ້ໄຂບັນຫາການຜະລິດ,ແນໃສ່ໃຫ້ຫຼຸດພົ້ນໄດ້ຈາກຄວາມທຸກຍາກ.

ມີຫຼາຍບັນຫາແລະຂໍ້ຈຳກັດທີ່ລັດຖະບານໄດ້ກຳນົດໄວ້ເພື່ອແກ້ໄຂຢູ່ໃນວິໃສທັດການພັດທະນາຂະແໜງການກະສິກຳ ແລະປ່າໄມ້ຕາມແຕ່ລະຂົງເຂດນິເວດກະສິກຳເຊັ່ນ:

| ອຸປະສັກໃນການພັດທະນາກສິກຳໃນ ສປປລາວ | |
|---|---|
| *ເຂດທົ່ງພຽງ* | *ເຂດພູດອຍ* |
| 1. ຂາດຂໍ້ມູນດ້ານການຕະລາດ ຮວມທັງການປະສານສົມທົບ<br>2. ຂາດການກຳນົດເງູດແລະມານຕາຖານສິນຄ້າ<br>3. ເງື່ອນໄຂເອື້ອອຳນວຍດ້ານສິນເຊື່ອທາງການຄ້າບໍ່ພຽງພໍ<br>4. ເຕັກໂນໂລຢີທີ່ເໝາະສົມເພື່ອຍົກຜະລິດຕະພາບການປູກພືດເປັນສິນຄ້າຍັງມີນ້ອຍ | 1. ຂາດຕະລາດແລະຂໍ້ມູນດ້ານການຕະລາດ<br>2. ເສັ້ນທາງຄົມມະນາຄົມເຊື່ອມຕໍ່ຫຍຸ້ງຍາກ<br>3. ທຶນສະສົມຊາວບ້ານມີນ້ອຍທີ່ສຸດ<br>4. ຍັງຂາດເຕັກໂນໂລຢີເພື່ອຍົກຜະລິດຕະພາບ<br>5. ການຈັດຕັ້ງປະຕິບັດວຽກມອບດິນມອບປ່າຊ້າ<br>6. ຂາດລະບົບຊົນລະປະທານເພື່ອຢູ້ການຜະລິດເປັນສິນຄ້າ |

ໃນທັງສອງເຂດເຫັນໄດ້ວ່າການສົ່ງເສີມກະສິກຳຕ້ອງໄດ້ເໜັ້ນໜັກໃສ່ການແກ້ໄຂອຸປະສັກຕົ້ນຕໍ, ຊຶ່ງແມ່ນການໄຫຼວຽນຂອງເຕັກໂນໂລຢີເຂົ້າໄປສູ່ນັ້ນມີນ້ອຍ,ຕໍ່ມາຈຶ່ງແມ່ນການຊຸກຍູ້ສ້າງເງື່ອນໄຂດ້ານໂຄງລ່າງພື້ນຖານ, ກົນໄກ ແລະ ເງື່ອນໄຂທາງລະບຽບການ.ຖ້າເຮັດໄດ້ແນວນັ້ນການສົ່ງເສີມຈຶ່ງຈະສາມາດຊ່ວຍຊາວກະສິກອນນຳໃຊ້ໄດ້ທຸກທ່າແຮງທີ່ມີ.

ບັນຫາຕ່າງໆທີ່ກ່ຽວຂ້ອງກັບການສົ່ງເສີມແລະເປັນສິ່ງທີ່ຄວນໄດ້ເນັ້ນໜັກໃສ່ແກ້ໄຂມີຄື:

- ການຂາດລະດັບການສຶກສາຂອງຊາວບ້ານແລະຄວາມຮັບຮູ້ທາງວິທະຍາສາດທີ່ກ່ຽວຂ້ອງກັບການຜະລິດກະສິກຳ
- ໂອກາດເຂົ້າເຖິງເຕັກໂນໂລຢີມີຈຳກັດ,ຮວມທັງຄວາມຮູ້ຄວາມສາມາດໃນການນຳໃຊ້ວິທີການຜະລິດແບບໃໝ່ມີຈຳກັດ
- ຍັງຂາດການຊອກຄົ້ນຫາຕົວແບບທີ່ເດັ່ນ,ເປັນບ່ອນຖອດຖອນບົດຮຽນເພື່ອຫັນສູ່ການປ່ຽນແປງໄດ້ຢ່າງໝັ້ນໃຈ
- ຍັງຂາດການພັດທະນາກົນໄກການຄຸ້ມຄອງຂອງຊາວບ້ານເອງ,ໂດຍສະເພາະການສ້າງໜ່ແໜງລວມໝູ່
- ຂາດຂໍ້ມູນດ້ານການຕະລາດ, ລາຄາ ແລະ ມາດຖານຂອງສິນຄ້າ.
- ການເຊື່ອມຊຶມແນວທາງນະໂຍບາຍ ກະສິກຳ ແລະ ບັນດາລະບຽບການຍັງບໍ່ເລິກເຊິ່ງ

ແນ່ນອນບັນຫາທັງໝົດແມ່ນເປັນໄປບໍ່ໄດ້ທີ່ຈະແກ້ໄຂດ້ວຍການສົ່ງເສີມພຽງຝ່າຍດຽວ,ການສົ່ງເສີມຈະບໍ່ສາມາດປັບປຸງຖະໜົນຫົນທາງ ຫຼື ດັດແປງລາຄາໃນທ້ອງຕະລາດໄດ້. ແຕ່ການສົ່ງເສີມກະສິກຳສາ ມາດ ຊ່ວຍຊາວບ້ານໃນການວິເຄາະວິໃຈໃຫ້ເຫັນບັນຫາ,ເພື່ອເຫັນໄດ້ທາງອອກທີ່ດີໃນການຄຸ້ມຄອງນຳໃຊ້ຊັບພະຍາກອນທີ່ມີຢູ່ຂອງເຂົາເຈົ້າໃຫ້ສອດຄ່ອງ ກັບສະ ພາບການທີ່ປ່ຽນແປງນັ້ນໆ

## 2.2 ປະຫວັດເບື້ອງຕົ້ນຂອງການສົ່ງເສີມໃນລາວ[12]

ໄລຍະກ່ອນການປະຕິວັດ,ພະແນກສົ່ງເສີມພາຍໃຕ້ກົມກະສິກຳໄດ້ສ້າງຕັ້ງຂຶ້ນໃນປີ 1957 ໂດຍໄດ້ປະກອບທີມພະນັກງານຢູ່ໃນ 6 ແຂວງພາກໄຕ້ ແລະ ໃນແຂວງຫຼວງພະບາງ,ທາງພາກເໜືອ. ຮູບແບບການສົ່ງເສີມທີ່ໃຊ້ກໍ່ຄ້າຍຄືກັບລະບົບ T&V ທີ່ເຄີຍນຳໃຊ້ ໃນຊ່ວງຊຸມປີ 60 ໂດຍຖືເອົາການສາທິດວິທີການປະຕິບັດທີ່ໄດ້ຮັບໝາກຜົນດີ ເປັນໃຈກາງໃນການປະຕິບັດ. ຕໍ່ມາອົງການພັດທະນາກະສິກຳ(ADO ຂອງ USAID)ໄດ້ປະກອບສ່ວນສະໜັບສະໜູນການສົ່ງເສີມເຕັກໂນໂລຢີໃໝ່ດ້ວຍການໃຫ້ປັດໃຈການຜະລິດແກ່ຊາວບ້ານ ແລະ ດຳເນີນການເປັນຫົວໜ່ວຍການຕະລາດໃຫ້.

ຫຼັງຈາກປະເທດໄດ້ຮັບການປົດປ່ອຍ, ການປັບປຸງແບບແຜນການຜະລິດກະສິກຳທົ່ວປະເທດແມ່ນໄຊ້ຮູບການ"ສະຫາກອນ"ຮວມທັງການຜະລິດນ້ອຍ ແລະ ການຜະລິດວັດຖຸດິບເພື່ອປ້ອນໂຮງ ງານປຸງແຕ່ງຂອງລັດ.ໃນທົ່ວປະເທດຈຳນວນສະຫາກອນເພີ່ມຂຶ້ນສູງເຖິງ 200 ຮອດ 1984. ໃນເວລານັ້ນ ແມ່ນເນັ້ນໃສ່ການປູກເຂົ້າ ແລະ ການນຳໄຊ້ຝຸ່ນອົງຄະທາດເພື່ອປັບປຸງດິນໄປພ້ອມ. ການສົ່ງເສີມທີ່ເຂົ້າໄປຊຸກຍູ "ສະຫະກອນ" ທີ່ເນັ້ນໃສ່ການຜະລິດແບບ"ມອບເໝົາ"ໃນເວລານັ້ນ ແມ່ນສົ່ງພະນັກງານຂອງກະຊວງກະສິກຳລົງສູ່ພື້ນຖານການຜະລິດຢູ່ຕາມບ້ານ,ເຮັດວຽກ ກັບຊາວໄຮ່/ນາໂດຍກົງເພື່ອແນະນຳເຕັກນິກການຜະລິດ,ເຕັກໂນໂລຢີໃໝ່. ມີບາງບ່ອນໄດ້ຮັບໝາກຮັບຜົນ ແຕ່ໜ້າເສັຍດາຍຜົນສຳເລັດນັ້ນຍັງເກີດມີນ້ອຍ ແລະ ຮູບແບບດັ່ງກ່າວກໍ່ຖືກປ່ອຍປະລະເລີຍໄປ.

ຕົກຮອດປີ 1986 ໄດ້ມີກົນໄກເສດຖະກິດໃໝ່, ຫັນການຜະລິດໄປສູ່ຫົວໜ່ວຍຄອບຄົວ,ຜະລິດໄປຕາມກົນໄກການຕະລາດ. ຫັນນະໂຍບາຍເປີດປະຕູສູ່ພາຍນອກ ແລະ ການຊ່ວຍເຫຼືອຈາກບັນດາປະເທດຕາເວັນຕົກກໍ່ໄດ້ເລີ່ມເຂົ້າສູ ສປປ ລາວ. ມີຫຼາຍໂຄງການຍົກຜະລິດຕະພາບການຜະລິດກະສິກຳເກີດຂຶ້ນ. ບັນດາໂຄງການເລົ່ານັ້ນໄດ້ນຳໄຊ້ພະນັກງານລັດເປັນຕົ້ນຕໍ,ແຕ່ຮູບແບບ/ວິທີການປະຕິບັດບໍ່ລວມສູນ,ຂຶ້ນກັບການອອກແບບແລະການຕັດສິນໃຈຂອງບັນດາຊ່ຽວຊານທີ່ຖືກແຕ່ງຕັ້ງເຂົ້າປະຕິບັດໂຄງການນັ້ນ. ເປົ້າໝາຍຂອງໂຄງການກໍ່ເລັ່ງໃສ່ແຕ່ການຍົກສະມັດຕະພາບການຜະລິດ ແລະອ້ອມກອດເອົາແຕ່ພຽງເຂດເປົ້າໝາຍໂຄງການ,ບໍ່ໄດ້ສະໜອງຕອບຕໍ່ການ ສ້າງລະບົບ-ຮູບແບບການສົ່ງເສີມແຕ່ຢ່າງໃດ.

ຕະລອດຊ່ວງການປ່ຽນແປງນັ້ນໂຄງສ້າງການຄຸ້ມຄອງວຽກສົ່ງເສີມແຫ່ງຊາດແມ່ນຖືເອົາພະແນກ ກະສິກຳ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກຳແລະ ປ່າໄມ້ເມືອງເປັນຫົວໜ່ວຍການຄຸ້ມຄອງ. ໃນໂຄງຮ່າງການຈັດຕັ້ງແລ້ວແມ່ນແບ່ງເປັນຂະແໜງການວິຊາສະເພາະ ແລະໜ້າວຽກສ່ວນໃຫຍ່ແມ່ນການລົງຊຸກຍູ້ແລະເກັບກຳຂໍ້ມູນສະຖິຕິການຜະລິດ, ສ່ວນໜ້າວຽກທີ່ເປັນ ຄວາມພະຍາຍາມປັບປຸງຮູບແບບການຜະລິດຂອງຊາວກະສິກອນມີນ້ອຍທີ່ສຸດໃນພາກປະຕິບັດຕົວຈິງ.

ຕໍ່ການປ່ຽນແປງໃໝ່ນັ້ນ ຕົກຮອດປີ 1992 ໄດ້ມີການສ້າງຕ້ອງສູນສົ່ງເສີມກະສິກຳພາຍໃຕ້ການຄຸ້ມຄອງຂອງກົມປູກຝັງຂຶ້ນ. ກິດຈະກຳການສົ່ງເສີມແມ່ນເລັ່ງສ້າງ "ຄອບຄົວຕົວແບບ" ໂດຍສະເພາະໃນການຜະລິດເຂົ້າແລະພືດສິນຄ້າອື່ນໆ. ພະນັກງານຫ້ອງການກະສິກຳເມືອງໄດ້ລົງຂົນຂວາຍຄອບຄົວຊາວກະສິກອນຜູ້ຫ້າວຫັນເພື່ອໃຫ້ເຂົາເຈົ້ານຳໄຊ້ເຕັກໂນໂລຢີໃໝ່ໂດຍມີການສະໜອງຝຸ່ນ, ແນວພັນໃຫ້ໃນປີທຳອິດ. ພະນັກງານສູນສົ່ງເສີມ ແລະ ພະນັກງານ ກະສິ ກຳເມືອງ ຖືກສົ່ງລົງແນະນຳຄອບຄົວຕົວແບບນັ້ນເປັນປະຈຳ. ຮອດປີ 1994 ເພື່ອໃຫ້ຍຸດທະສາດຖືກ ປະຕິບັດໄວຂຶ້ນໄດ້ມີການຊຸກຍູ້ໃຫ້"ຄອບຄົວຕົວແບບ" ກາຍເປັນວິຊາການອາສາສະມັກ

ປະຈຳບ້ານ. ໂດຍຖືເອົາຂະບວນການຮັບຮູ້/ແຕ່ງຕັ້ງຈາກນາຍບ້ານ. ເຂົາເຈົ້າໄດ້ເຂົ້າຮັບການຝຶກຈາກພະນັກ ງານກະສິກຳເມືອງ/ ສູນ 1-2ວັນ. ແຕ່ຮູບການປະຕິບັດດັ່ງທີ່ກ່າວນັ້ນບໍ່ເກີດມີຜົນໃນ ທາງບວກຕໍ່ການຜະລິດລວມຫຼາຍເທົ່າໃດ, ເພາະການຄັດເລືອກຄອບຄົວຕົວແບບ ຫຼື/ແລະ ອາສາສະມັກບ້ານບາງຄົນກໍ່ບໍ່ເໝາະສົມ ແລະ ທັງໝົດບໍ່ໄດ້ຕິດພັນກັບບັນດາໂຄງການ, ແຜນງານທີ່ກຳລັງດຳເນີນການຜັນຂະຫຍາຍຢູ່ໃນບ່ອນນັ້ນແລະໃນຂະນະນັ້ນດ້ວຍ.

ໃນປີ 1995 "ສູນສົ່ງເສີມລະດັບພາກ" ຢູ່ໃນສາມພາກ: ໄຕ້,ກາງ ແລະ ເໜືອໄດ້ຕັ້ງຂຶ້ນ. ແລະຕົ້ນປີ 1996 ກໍ່ໄດ້ເປີດກອງປະຊຸມຄັ້ງທຳອິດຂຶ້ນໂດຍມີ ຍັດຕິອອກມາ ເຊັ່ນ:

- ຖືເອົາຄອບຄົວເປັນຫົວໜ່ວຍການຜະລິດພື້ນຖານ
- ຫ້ອງການກະສິກຳ ແລະ ປ່າໄມ້ເມືອງເປັນຫົວໜ່ວຍການຈັດຕັ້ງລັດທີ່ລົງຊຸກຍູ້ປັບປຸງການຜະລິດຂອງຫົວໜ່ວຍຄອບຄົວ
- ກອງສົ່ງເສີມກະສິກຳເປັນຜູ້ສະໜັບສະໜູນຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ

ຂໍ້ຕົກລົງນີ້ໄດ້ເປັນການເປີດປະຕູສູ່ການສ້າງຕັ້ງລະບົບການສົ່ງເສີມແຫ່ງຊາດຂຶ້ນ

## 2.3 ໂຄງການສົ່ງເສີມທີ່ສຳຄັນໃນຊ່ວງ 10 ປີ

### *2.3.1ໂຄງການທົດສອບການສົ່ງເສີມ* *(PEP)*[13]

ໂຄງການດັ່ງກ່າວໄດ້ເລີ່ມຈັດຕັ້ງປະຕິບັດ 1996 ກຳນົດ 3 ປີ. ຄວາມຮັບຜິດຊອບໃນການປະຕິບັດກິດຈະກຳຂອງໂຄງການແມ່ນພະນັກງານສູນສົ່ງເສີມ,ນັກວິຊາການຢູ່ແຂວງ ແລະ ເມືອງເປົ້າໝາຍຂອງໂຄງການ ແລະ ມີ IRRI ຊ່ວຍໃນດ້ານວິຊາການ. ໂຄງການດັ່ງກ່າວໄດ້ຮັບທຶນຊ່ວຍເຫຼືອຈາກມູນລະນິທິ ນໍວາຕິສ(ບໍລິສັດຢານື່ງຂອງປະເທດ ສະວິສ).

ຈຸດປະສົງຂອງໂຄງການ PEP ແມ່ນເພື່ອ: " ພັດທະນາຮູບແບບການສົ່ງເສີມໃນລະດັບສູນກາງ, ແຂວງ ແລະ ລະດັບເມືອງ". ເພື່ອໃຫ້ເກີດເປັນໂຄງການຕົວຢ່າງ,ທີມໂຄງການໄດ້ເນັ້ນໃສ່ການພັດທະນາແລະທົດສອບວິທີການສົ່ງເສີມຢູ່ໃນລະດັບເມືອງກ່ອນ,ແລ້ວຈື່ງເນັ້ນການຂະຫຍາຍຂຶ້ນສູ່ການສ້າງລະບົບສົ່ງເສີມລະດັບຊາດ.

ໂຄງການເລືອກເອົາສອງແຂວງແລະໃນແຕ່ລະແຂວງເອົາສອງເມືອງຄື:

- ແຂວງຈຳປາສັກ: ເມືອງສຸຂຸມາ ແລະ ໂພນທອງ
- ແຂວງສາລະວັນ: ເມືອງ ຄົງເຊໂດນ ແລະ ເມືອງ ວາປີ

ວິທີການຂອງໂຄງການ PEP ໄດ້ມີຫຼາຍຫຼັກການຊຶ່ງປະກອບມີ:

- ຖືເອົາຫົວໜ່ວຍຊຸມຊົນຂອງບ້ານເປັນຫົວໜ່ວຍໃນການປະຕິບັດ ແລະ ການປ່ຽນແປງ
- ເນັ້ນການພັດທະນາຂີດຄວາມສາມາດຂອງຊາວບ້ານໃນການວິເຄາະສະພາບຕົນເອງ
- ເຕັກໂນໂລຢີໃໝ່ຕ້ອງຜ່ານການທົດລອງເພື່ອໃຫ້ຊາວບ້ານປະເມີນດ້ວຍເຂົາເຈົ້າເອງກ່ອນ
- ບໍ່ຕ້ອງສະໜອງປັດໃຈການຜະລິດໃຫ້ຊາວບ້ານ, ນອກຈາກ ເພື່ອການທົດລອງນ້ອຍໆສໍາລັບການສະເໜີ ເຕັກໂນໂລຢີອັນໃໝ່

ມີ ສີ່ຂັ້ນຕອນການປະຕິບັດໃນວິທີການສົ່ງເສີມຂອງໂຄງການ:

ການກະກຽມ → ຝຶກ ແລະ ຈັດຕັ້ງປະຕິບັດ → ຕິດຕາມ → ຊາວບ້ານປະເມີນ ແລະວາງແຜນ

ເພື່ອໃຫ້ການທົດສອບນໍາໃຊ້ວິທີການແລະການຈັດຝຶກຕົວຈິງໄດ້ດີນັ້ນ,ພະນັກງານເມືອງໄດ້ຖືກສະໜັບສະໜູນໃຫ້ລົງປະຕິບັດຕົວຈິງໃນກຸ່ມບ້ານເປົ້າໝາຍໂດຍໃຫ້ມີການໄຊ້ເຄື່ອງມື ເຊັ່ນ ແບບ 'ເອກະສານແນະນໍາ', ຮວມທັງ 'ວິທີການນໍາໄຊ້ຕົວຈິງ',ໂດຍສະເພາະໃນເລື່ອງການປູກເຂົ້າ,ພືດລະດູແລ້ງ,ການລ້ຽງປາ ແລະ ການລ້ຽງສັດປີກ

ພາຍໃນ 3 ປີ, 40 % ຂອງຄອບຄົວຊາວກະສິກອນໃນ 46 ບ້ານເປົ້າໝາຍຂອງໂຄງການໄດ້ປ່ຽນໄປນໍາໄຊ້ເຕັກໂນໂລຢີໃໝ່ ກວມເອົາ20%ຂອງເນື້ອທີ່ປູກເຂົ້າທັງໝົດແລະສະມັດຕະພາບສະເລັ່ຍເພີ່ມຂຶ້ນເຖິງ 50 %. ສ່ວນກິດຈະກໍາອື່ນແມ່ນປ່ຽນແປງນ້ອຍແລະພຽງແຕ່ຢູ່ໃນພື້ນທີ່ຂອງໂຄງການເທົ່ານັ້ນ.

ໂດຍກ່ຽວຂອງກັບວິທີການສົ່ງເສີມນັ້ນ, PEPຍັງໄດ້ສະແດງໃຫ້ເຫັນທ່າອ່ຽງການຜັນຂະຫຍາຍທິດການຫັນລົງສູ່ຮາກຖານ ແລະ ຮູບການມີສ່ວນຮ່ວມຊຶ່ງມີສິ່ງສະແດງອອກຄື:

- ການສ້າງນັກສົ່ງເສີມຮອບດ້ານ;
- ການຈັດຕັ້ງກິດຈະກໍາໄປຕາມກຸ່ມບ້ານ
- ເນັ້ນໃສ່ການຝຶກແບບປະຕິບັດແລະການແລກປ່ຽນບົດຮຽນຂອງຊາວບ້ານ

ໃນໄລຍະຕົ້ນຂອງໂຄງການ,ແນວຄິດກ່ຽວກັບ "ທົດສອບ-Pilot" ບໍ່ເປັນທີ່ເຂົ້າໃຈກ້ວາງຂວາງພໍເທົ່າໃດ,ພະແນກກະສິກໍາ ແລະ ຫ້ອງການ ກະສິກໍາເມືອງຄິດວ່າໂຄງການດັ່ງກ່າວເປັນໂຄງການ 'ພັດທະນາ-ເນື້ອທີ່'. ຈາກນັ້ນຈຶ່ງມີຄວາມພະຍາຍາມແກ້ໄຂຂໍ້ຂ້ອງໃຈເລົ່ານັ້ນໂດຍໄດ້ມີການປຶກສາໃນການປະເມີນຜົນໄລຍະກາງຂອງໂຄງການ.ຢ່າງໃດກໍດີໃນຊ່ວງທ້າຍຂອງໂຄງການມີພຽງ

ແຕ່ ນີ້ງເມືອງທີ່ຢາກສືບຕໍ່ນຳໃຊ້ວິທີການ. ນອກນັ້ນແລ້ວ,ການວາງແຜນ ແລະ ລະບົບການຄຸ້ມຄອງທີ່ຈຳເປັນເພື່ອຂະຫຍາຍແມ່ນບໍ່ໄດ້ຖືກພັດທະນາຂື້ນເລີຍ.

ສ່ວນນື້ງໃນການຕີລາຄາຊ່ວງທ້າຍລະດູການ ທີມໂຄງການຍັງເຫັນວ່າມີຄວາມຈຳເປັນຕ້ອງໄດ້ກຳນົດນິດບາດໃໝ່ຫຼາຍຢ່າງເພື່ອສືບຕໍ່ພັດທະນາລະບົບການສົ່ງເສີມໃຫ້ມີການຂະຫຍາຍສູ່ວົງກ້ວາງໃນທົ່ວປະເທດ ເຊັ່ນ:

- ການຝຶກເພື່ອສ້າງນັກສົ່ງເສີມແບບທັງຮຽນທັງເຮັດ
- ສ້າງຕັ້ງນ່ວຍປະສານງານໃນລະດັບກະຊວງເພື່ອປະສານການຝຶກແລະການສ້າງນັກສົ່ງເສີມ
- ສຶກສາພາລະບົດບາດຂອງຫ້ອງການກະສິກຳເມືອງຄືນໃໝ່ເພື່ອໃຫ້ວຽກສົ່ງເສີມດຳເນີນໄດ້ຢ່າງ ຄ່ອງຕົວ
- ກຳນົດວິທີການຄຸ້ມຄອງວຽກສົ່ງເສີມ ໂດຍມີການທົດສອບນຳໃຊ້
- ຈັດຕັ້ງຄະນະຊີ້ນຳວຽກສົ່ງເສີມໃນລະດັບກະຊວງ

ຜົນງານຂອງໂຄງການທີ່ໄດ້ແມ່ນມີຫຼາຍເອກະສານທາງເຕັກນິກທີ່ກ່ຽວກັບ"ວິທີການສົ່ງເສີມໃນຊຸມຊົນ" ແລະ "ການປັບປຸງກົນໄກຄຸ້ມຄອງວຽກສົ່ງເສີມໃນລະດັບຫ້ອງການ ກ ປ ເມືອງ". ປະສົບການຂອງໂຄງການ PEP ແລະ ບັນດາເອກະສານທີ່ໂຄງການຜະລິດອອກນັ້ນໄດ້ມີຜົນໃນການນຳໃຊ້ ແລະ ການອ້າງອີງຂອງບັນດາໂຄງການອື່ນໆຕໍ່ມາ

### *2.3.2 ໂຄງການຝຶກອົບຮົມຊາວນາ* (FIAT)[14]

ໃນຊ່ວງ 20 ປີ ຫຼັງຈາກປະເທດຊາດໄດ້ຮັບການປົດປ່ອຍ,ການລົງທຶນໃສ່ການສ້າງຊົນລະປະທານ ແມ່ນມີເຖີງ 18 ລ້ານໂດລາສະຫາລັດ, ແຕ່ໃນບ້ວງເງິນດັ່ງກ່ວາແມ່ນລົງໃສ່ແຕ່ການສ້າງໂຄງລ່າງ,ສວນສຳລັບການສົ່ງເສີມວຽກຄຸ້ມຄອງນຳໃຊ້ແມ່ນມີນ້ອຍທີ່ສຸດຈື່ງເຮັດໃຫ້ການນຳໃຊ້ລະບົບຊົນລະປະທານບໍ່ມີປະສິດິພາບ.ໃນຊ່ວງຊຸມປີ 90 ນະໂຍບາຍຂອງລັດຖະບານໄດ້ມີການຫັນການຄຸ້ມຄອງນຳໃຊ້ຊົນລະປະທານໃຫ້ແກ່ຊາວກະສິກອນ,ແຕ່ກໍ່ຍັງບໍ່ທັນມີວິທີການທີ່ໄດ້ຜ່ານການທົດສອບມາກ່ອນ, ໂຄງການຝຶກອົບຮົມຊາວນາຈື່ງຖືກສ້າງຂື້ນເພື່ອຮັບໄຊ້ວຽກງານດັ່ງກ່າວ ແລະ ໄດ້ຮັບການສະໜັບສະໜູນງົບປະມານຈາກອົງການສະຫາປະຊາຊາດເພື່ອການພັດທະນາ(UNDP)ໃນໄລຍະແຕ່ປີ 1994 -1999

ເປົ້າໝາຍໄລຍະຍາວຂອງໂຄງການແມ່ນເພື່ອ: " ປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນໃນເຂດຊົນລະປະທານດ້ວຍການຍົກຜົນຜະລິດກະສິກຳຂື້ນໂດຍຖືເອົາ ການ ພັດທະນາ ຊັບພະຍາກອນມະນຸດແລະການປັບປຸງກົນໄກການຄຸ້ມຄອງຂອງພາກລັດ ແລະ ຂອງປະຊາຊົນເປັນສຳຄັນ

FIAT ມີຈຸດປະສົງສະເພາະຢູ່ ສີ່ຢ່າງ:

- ພັດທະນາແລະປັບປຸງຂີດຄວາມສາມາດຂອງ i) ພະນັກງານປູກຝັງແລະຊົນລະປະທານ ii) ພະນັກງານຄູສອນໃນໂຮງຮຽນຊັ້ນກາງດ້ວຍຮູບການຝຶກອົບຮົມ,ໃຫ້ຄຳແນະນຳ ແລະ ຕິດຕາມຊຸກຍູ້ປະຈຳ.
- ໃຫ້ການຝຶກແລະພັດທະນາຜູ້ນຳກຸ່ມຜູ້ນຳໃຊ້ນ້ຳ ແລະ ວິຊາການປະຈຳບ້ານ
- ປັບປຸງໜ່ວຍຝຶກອົບຮົມທີ່ມີໃນໂຮງຮຽນກະສິກຳ ຊົນລະປະທານຊັ້ນກາງ ດ້ວຍການປະກອບອຸປະກອນ ແລະເງື່ອນໄຂຄວາມສະດວກ,ຮ່ວມໃນການສ້າງເອກະສານການຝຶກອົບຮົມ.
- i) ຟື້ນຟູໂຄງການຊົນລະປະທານຫຼັງນ້ຳຖ້ວມ(ກໍລະນີສະເພາະ), ແລະ ii) ປະສານສົມທົບກັບໜ່ວຍງານສົ່ງເສີມທີ່ມີຂອງກະຊວງກະສິກຳ ແລະ ບັນດາໂຄງການ UN ຊ່ວຍເຫຼືອຮວມທັງ NGOs ທີ່ກ່ຽວຂ້ອງ.

ໂຄງການ FIAT ໄດ້ດຳເນີນການຢູ່ 3 ໄລຍະ,ໃນໄລະທຳອິດບັນດາຄູຝຶກສູນກາງໄດ້ຖືກຝຶກຢ່າງເຂັ້ມຂຸ້ນແລະໃຫ້ມີການຈັດຕັ້ງປະຕິບັດກິດຈະກຳຢູ່ໃນສອງແຂວງ. ໃນໄລຍະທີ 1 ແລະ 2 ຂອງໂຄງການ, ການຝຶກ ແລະ ກິດຈະກຳພາກສະ ໜາມຮວມທັງການຟື້ນຟູລະບົບຊົນລະປະທານໄດ້ກວມເອົາເຖິງ 13 ແຂວງ. ລະບົບການຝຶກອົບ ຮົມໄດ້ມີການຈັດສັນຢ່າງສອດຄ່ອງ: ສ້າງຄູຝຶກສູນກາງໄດ້ 35 ຄົນ,ຄູຝຶກແຂວງໄດ້ 90 ຄົນ ແລະ ຄູຝຶກເມືອງໄດ້209 ຄົນ. ສ້າງເອກະສານຄູ່ມືປະກອບການຝຶກທີ່ສຳຄັນໄດ້ 10 ຫົວຂໍ້ຮວມທັງຂໍ້ ແນະນຳໃນ "ການຈັດການລະບົບຊົນລະປະທານ" , "ວິທີການເຮັດວຽກກັບຊາວກະສິກອນ" ແລະ "ເພດຍິງກັບການພັດທະນາ".

ກິດຈະກຳທີ່ປະຕິບັດຂອງໂຄງການ FIAT ແມ່ນໄປຕາມວົງຈອນການຝຶກອົບຮົມແລະປະສົມປະສານກັບພາກປະຕິບັດຕົວຈິງໃນການຈັດການລະບົບຊົນລະປະທານ ແລະ ການປູກພືດດັ່ງຈະໄດ້ສະແດງໃນແຜນວາດລຸ່ມນີ້:



ຜົນທີ່ໄດ້ຮັບຈາກລະບົບການຝຶກແລະຊຸກຍູ້ຂອງໂຄງການຕາມທີ່ໄດ້ສະແດງໃນແຜນວາດເທິງນີ້ ມີ 66 ກຸ່ມຜູ້ນຳໄຊ້ນຳ້ໄດ້ຈັດຕັ້ງຂື້ນ ມີ ຊາວກະສິກອນ 6,200 ຄົນໄດ້ຮັບການຝຶກ.ຕະລອດຊ່ວງໄລຍະໂຄງການປະຕິບັດຢູ່ນັ້ນ.ຜົນຜະລິດເຂົ້າຂອງຊາວກະສິກອນໃນບ້ານເປົ້າໝາຍໂຄງການທີ່ໄດ້ມີການປັບປຸງວິທີການຜະລິດແລະ ການນຳໄຊ້ນຳ້ ຊ ປ ທ ໄດ້ເພີ່ມຂື້ນ ເຖີງ 37,000 ໂຕນ ຕົວບົ່ງຊີ້ອີກອັນນື່ງທີ່ສຳຄັນໃນຜົນສຳເລັດຂອງລະບົບການຝຶກ-ສົ່ງເສີມຂອງໂຄງການ FIAT ກໍ່ຄື ມີຫຼາຍອົງການຜູ້ໃຫ້ທຶນ, ໂຄງການຕ່າງໆ ຕ້ອງການໄຊ້ບໍລິການຄູຝຶກຂອງໂຄງການ. ຈາກພາບລວມຜົນສຳເລັດຂອງໂຄງການ, ໃນລາຍງານຜົນການປະເມີນຜົນຄັ້ງສຸດທ້າຍ ຂອງໂຄງການໄດ້ມີຂໍ້ສະເໜີແນະໃນທາງຍຸດທະສາດຄື:

- ກະຊວງກະສິກຳຄວນໄດ້ນຳໄຊ້ຂະບວນການຝຶກອົບຮົມຂອງ FIAT ເຂົ້າໃນການສົ່ງເສີມທົ່ວໄປຂອງບັນດາກົມກອງທີ່ຂື້ນກັບສາຍຕັ້ງຂອງກະຊວງ,ຖືສຳຄັນວຽກການຝຶກອົບຮົມ.
- ອົງກອນຜູ້ໃຫ້ທຶນທີ່ກ່ຽວຂ້ອງຕ້ອງສະໜັບສະໜູນການສືບຕໍ່ພັດທະນາລະບົບດັ່ງກ່າວ
- ອົງການສະຫະປະຊາຊາດເພື່ອການພັດທະນາ(UNDP)ຕ້ອງໄດ້ວາງກອບການສະໜັບສະໜູນເພື່ອຍູ້ໜູນການສືບຕໍ່,ໂດຍສະເພາະໃນເລື່ອງການປະສານການຝຶກການສົ່ງເສີມທົ່ວໄປ ແລະຕິດຕາມຊຸກຍູ້ການນຳໄຊ້ຮູບແບບການຝຶກ/ສົ່ງເສີມຂອງ FIAT ໃນຂະແໜງການຊົນລະປະທານ

ເນື່ອງຈາກວ່າ UNDPໄດ້ມີການປ່ຽນແປງບຸລິມະສິດໃຫ້ການຊ່ວຍເຫຼືອ ແລະ ທຶນໄປສູ່ການປັບປຸງການຈັດຕັ້ງຄຸ້ມຄອງຈື່ງເຮັດໃຫ້ຫຼາຍໆຮູບແບບລັກສະນະ ຂອງໂຄງການFIATຖືກປະກອບເຂົ້າໃນການອອກແບບໂຄງການຊ່ວຍເຫຼືອໃນວຽກງານສົ່ງເສີມຂອງປະເທດສະວິດສະແລນໃຫ້ແກ່ລາວ,ໂດຍສະເພາະ ໂຄງການສົ່ງເສີມກະສິກຳ (LEAP).

### *2.3.3 ໂຄງການປ້ອງກັນພືດແບບປະສົມປະສານ IPM (ຮູບແບບການຝຶກຂອງ* ***FAO)***[15]

ກ່ວາ 20 ປີ ທີ່ອົງການອາຫານໂລກໄດ້ໃຫ້ການສະໜັບສະໜູນແຜນງານການຝຶກອົບຮົມ ເກືອບທົ່ວທະວີບອາຊີບົນຫຼັກການ"ການປ້ອງກັນພືດແບບປະສົມປະສານ IPM".ແຜນງານ ດັ່ງກ່າວໄດ້ຮັບການສະໜັບສະໜູນຈາກລັດຖະບານອົສຕຣາລີ, ໂຮນລັງ,ນອກແວ ແລະ ສະວິດສະແລນ. ກິດຈະກຳດັ່ງກ່າວໄດ້ດຳເນີນໃນ 12 ປະເທດ ແລະ ສປປລາວ ກໍ່ເປັນສ່ວນນື່ງເລີ່ມແຕ່ 1996. ຈຸດປະສົງຂອງໂຄງການ IP{M ໃນ ສປປ ລາວແມ່ນ:

- ເພື່ອໃຫ້ຊາວກະສິກອນພັດທະນາຂີດຄວາມສາມາດໃນການຍົກຜົນຜະລິດກະສິກຳ ແລະແກ້ໄຂດ້ານສະບຽງອາຫານໂດຍໃຫ້ມີຄວາມຍືນນານແລະຮັກສາໄດ້ສະພາບແວດລ້ອມ
- ຊ່ວຍລັດຖະບານໃນການເສີມສ້າງຄວາມສາມາດໃນການອອກແບບ,ຄຸ້ມຄອງແລະສະໜັບສະໜູນການຝຶກອົບຮົມ, ການສຶກສາຊາວກະສິກອນ ແລະ ກິດຈະກຳຄົ້ນຄ້ວາທົດລອງ

- ເພີ່ມຄວາມເປັນເຈົ້າການຂອງອົງການຈັດຕັ້ງທ້ອງຖິ່ນແລະອົງການຈັດຕັ້ງກ່ຽວຂ້ອງອື່ນໆໃນການສະໜັບສະໜູນງົບປະມານ, ສ້າງໃຫ້ເປັນແຜນງານປະຕິບັດກິດຈະກຳດັ່ງກ່າວໃນລະດັບທ້ອງຖິ່ນ.
- ຂະຫຍາຍກິດຈະກຳພາກສະໜາມອອກສູ່ວົງກ້ວາງໂດຍຊາວກະສິກອນທີ່ມີຢູ່ໃນເຂດເປົ້າໝາຍໂຄງການ ຮວມທັງແຂວງອື່ນແລະລະບົບການປູກພືດອື່ນ.

ການຝຶກໃນໂຄງການ IPM ທີ່ FAO ສະໜັບສະໜູນໃນລາວ ໄດ້ດຳເນີນການໂດຍຜ່ານການສ້າງ ໂຮງຮຽນຊາວນາ,ນຳໃຊ້ ຮູບແບບການມີສ່ວນຮ່ວມດັ່ງທີ່ໄດ້ອະທິບາຍໄປແລ້ວໃນຂໍ້ 1.3.2. ສາມະຊິກກຸ່ມຊາວນາຈະພົບກັນແຕ່ລະອາທິດຕະລອດຊ່ວງລະດູການຜະລິດ. ຕະລອດຊ່ວງການມາພົບປະກັນ ນີ້ຜູ້ເຂົ້າຮ່ວມຈະສັງເກດພືດປູກໃນເນື້ອທີ່, ທຳການສຶກສາຢ່າງໃກ້ຊິດແລ້ວຈົດແຕ້ມສິ່ງທີ່ເຂົາເຈົ້າພົບເຫັນຮວມທັງຂໍ້ສະຫຼຸບທີ່ເຂົາເຈົ້າຕ້ອງຈັດການຕໍ່ໄປ. ວິທີການນີ້ຮຽກກັນວ່າ "ຮຽນຮູ້ຈາກປະສົບການ" ແລະຜົນທີ່ໄດ້ກໍ່ຄືມີຄວາມເຂົ້າໃຈໃນທາງປະຕິບັດ ກ່ຽວກັບລະບົບນິເວດຂອງທົ່ງນາ ແລະເກີດມີຄວາມສາມາດໃນການແກ້ໄຂບັນຫາເອົາເອງໄດ້

ການສະໜັບສະໜູນສ້າງໂຮງຮຽນຊາວນາໃນລາວຂອງ FAO ແມ່ນມີຢູ່ 9 ແຂວງ: ອັດຕະປື, ຈຳປາສັກ,ສາລະວັນ,ສະຫວັນນະເຂດ,ຄຳມ່ວນ,ບໍລິຄຳໄຊ,ນະຄອນຫຼວງ ແລະ ແຂວງຫຼວງພະບາງ. ມີປະມານ 400 ແຫ່ງເປັນໂຮງຮຽນຊາວນາ'ການປູກເຂົ້າ', 180 ແຫ່ງ 'ການປູກຜັກ'ມີສະມະຊິກປະມານ 14,500 ຄົນທີ່ໄດ້ຮ່ວມ. ໂຄງການໄດ້ໃຫ້ການຝຶກຜູ້ທີ່ຈະເປັນຄູຝຶກໂຮງຮຽນຊາວນາ ໄລຍະ 4 ເດືອນ ມີປະມານ 100 ຄົນທີ່ເປັນພະນັກງານວິຊາການຂອງລັດ.

ການສະໜັບສະໜູນໂຮງຮຽນຊາວນາ ຂອງ FAO ມີຫຼາຍໂຄງການໃນລາວໄດ້ມີການນຳໃຊ້ຮູບແບບວິທີການດັ່ງກ່າວເຊັ່ນ: Danida, Oxfam-Belgium, BUCAP, CIDSE ແລະ ILO. ໝາກຜົນທີ່ໄດ້ຈາກການເຂົ້າຮ່ວມໂຮງຮຽນຊາວນາ, ສະມັດຕະພາບຂອງເຂົ້າເພີ່ມຂຶ້ນສະເລັ່ຍປະມານ 25% ໂດຍມີຂອບເຂດລາຍຮັບເພີ່ມກວມປະມານ 37%.ຫຼັງຈາກຈົບການຝຶກ,ຊາວກະສິກອນບາງຄົນຍັງໄດ້ສືບຕໍ່ນຳໃຊ້ບົດຮຽນທີ່ໄດ້ຮັບໄປສຶກສາເບິ່ງລະບົບນິເວດຂອງດິນເພື່ອປ້ອງກັນພະຍາດເຫັ້ງາເນົ່າຮວມທັງການປູກໝາກເລັ່ນລະດູຝົນ. ຈາກການນຳໃຊ້ບົດຮຽນການປູກໝາກເລັ່ນລະດູຝົນຂອງຊາວສວນທີ່ໄດ້ຜ່ານຫຼັກສູດ IPM ໃນ(ກຳແພງ) ນະຄອນຫຼວງສາມາດຂາຍໄດ້ລາຄາສູງກ່ວາປົກກະຕິ 2 ຫາ 4 ເທົ່າຕົວ.

ໂຄງການ IPM ໄດ້ຖືກຕຳນິວ່າ ມີພຽງແຕ່ການຝຶກພະນັກງານແລະຊາວນາໃຊ້ເວລາຫຼາຍເກີນໄປແຕ່ພາກປະຕິບັດຈິງໆພັດມີນ້ອຍດຽວ. ຕໍ່ມາກໍ່ມີການດັດປັບໃຫ້ສັ້ນສີ່-ຫ້າວັນ ເພື່ອເປັນຄູຝຶກບວກກັບຝຶກຫຼັກສູດ ໂຮງຮຽນຊາວນາ ແລະ IPM ຕ່າງໆ. ນັກວິຊາການຂອງ FAO ໃນລາວໄດ້ຊີ້ແຈງ ວ່າ"ການຕັດທອນຫຼັກສູດຈະພາທ່ານໄປບໍ່ຮອດຈຸດໝາຍ"ໂດຍໃຫ້ການອະທິບາຍເຊັ່ນ: *"ຖ້າຫາກມີເປົ້າໝາຍເພື່ອຮຽນຮູ້ການປູກພືດ, ພືດກໍ່ຕ້ອງຖືກປູກ.ແລະຈະຮີບຮ້ອນເກັບຜົນບໍ່ໄດ້ ຖ້າບໍ່ຄົບລະດູການຂອງມັນ. ຖ້າຫາກຜ່ານທຸກຂັ້ນຕອນ,ໃຫ້ໄດ້ມີການສັງເກດແລະວິເຄາະວິໃຈ, ສຳມະນາກອນບໍ່ພຽງແຕ່ໄດ້ຮຽນຮູ້ສິ່ງໃໝ່,ເຂົາເຈົ້າຍັງມີຄວາມເຊື່ອຖື ແລະ ໃນທີ່ສຸດກໍ່ຈະມີຂີດ*

*ຄວາມສາມາດແລະຄວາມໝັ້ນໃຈທີ່ຈະນຳໃຊ້ວິທີການ ແລະ ທີ່ສຳຄັນເຂົາເຈົ້າໄດ້ເພີ່ມຄວາມສາມາດໃນການທົດລອງ,ວິເຄາະເພື່ອການຮຽນຮູ້ສິ່ງໃໝ່ຕໍ່ໆໄປຫຼັງຈາກໄດ້ເຮັດກິດຈະກຳສຳເລັດຜ່ານມານັ້ນ*

### *2.3.4 ໂຄງການປ່າໄມ້ລາວ-ຊູແອດ* (LSFP)[16]

ລັດຖະບານຊູແອດໄດ້ໃຫ້ການຊ່ວຍເຫຼືອລັດຖະບານລາວໂດຍສະເພະໃຫ້ແກ່ ກົມປ່າໄມ້ເລີ່ມແຕ່ 1980 ເປັນຕົ້ນມາຊຶ່ງໃນນັ້ນລວມມີທັງການຝຶກວິຊາການປ່າໄມ້. ໄລຍະທີ ສີ່ຂອງໂຄງການຊ່ວຍ ເຫຼືອ ແມ່ນເລີ່ມຈາກປີ 1996 ມີໄລຍະເວລາ ຂອງໂຄງການ 5 ປີ ໂດຍມີເປົ້າໝາຍຄື: *ປັບປຸງການນຳໃຊ້ປ່າໄມ້ແລະດິນກະສິກຳທີ່ເປັນເປົ້າໝາຍໃຫ້ເກີດປະສິດຕິຜົນແລະມີຄວາມຍືນນານ,ດ້ວຍຮູບການປະສົມປະສານລະວ່າງການຮັກສາແລະການປ້ອງກັນ..*
ໂຄງການໄລຍະສີ່ນີ້ມີອົງປະກອບສຳຄັນຢູ່ 6 ຢ່າງແລະໃນນັ້ນມີ"ວຽກສົ່ງເສີມແລະການຝຶກອົບຮົມ" ຈຸດປະສົງລະອຽດຂອງວຽກດັ່ງກ່າວແມ່ນ:

- ພັດທະນາຂະບວນການສົ່ງເສີມແບບມີສ່ວນຮ່ວມແລະວິທີການຕ່າງໆທີ່ສາມາດຊຸກຍູ້ການເສີມສ້າງຄວາມເປັນເຈົ້າການຂອງຊາວບ້ານໃນການເຮັດໃຫ້ຊີວິດການເປັນຢູ່ມີຄວາມໝັ້ນຄົງແລະມີການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ເກີດມີຄວາມຍືນນານ
- ປະສົມປະສານການມີບົດບາດຂອງເພດຍິງເຂົ້າໃນການພັດທະນາ ແລະ ຂະບວນການສົ່ງເສີມຢູ່ໃນຊຸມຊົນຊົນນະບົດແນໃສ່ໃຫ້ເກີດມີຄວາມເທົ່າທຽມໃນສັງຄົມ ແລະ ຕ່າງຝ່າຍໄດ້ຮັບປະໂຫຍດ ຈາກຂະບວນການພັດທະນາຮ່ວມກັນ.

ການຊ່ວຍເຫຼືອຂອງໂຄງການດັ່ງກ່າວ ໃນໄລຍະທີສີ່ ໄດ້ມີບໍລິສັດທີ່ປຶກສາທາງວິຊາການຈາກຊູແອດເປັນຝ່າຍຮ່ວມຈັດຕັ້ງປະຕິບັດ. ວຽກສົ່ງເສີມໃນໄລຍະສີ່ຂອງໂຄງການແມ່ນເນັ້ນໃສ່ການສ້າງຄູຝຶກ ແລະ ສູນຝຶກປະຈຳພາກໂດຍສະເພາະແມ່ນສູນຝຶກຊຽງເງິນ, ສູນຝຶກເຊໂປນ. ຕໍ່ຈາກນັ້ນຈຶ່ງແມ່ນການສ້າງວິທີການສົ່ງເສີມສຳລັບພະນັກງານຂັ້ນເມືອງ. ໂດຍອີງໃສ່ນະໂຍບາຍຂອງລັດຖະບານເຊັ່ນ"ວິໃສທັດໃນການພັດທະນາຂະແໜງການກະສິກຳ", ໂຄງການດັ່ງກ່າວໄດ້ຖືສຳຄັນຫ້ອງການກະສິກຳເມືອງແມ່ນຫົວໜ່ວຍຈັດຕັ້ງປະຕິບັດກິດຈະກຳ ຕົວຈິງກັບຊາວບ້ານ, ໂດຍປະສານງານຜ່ານຂະແໜງຢູ່ແຂວງ.
ການທົດສອບວິທີການສົ່ງເສີມໄດ້ດຳເນີນໃນສາມເມືອງໃນແຂວງສະຫວັນນະເຂດເຊັ່ນ(ອາດສະພັງທອງ,ພະລານໄຊ ແລະເມືອງພີນ)ແລະນຶ່ງເມືອງຢູ່ເລົ່າງາມແຂວງສາລະວັນ. ໃນແຕ່ລະເມືອງໄດ້ເອົານຶ່ງບ້ານເປັນບ່ອນກວດສອບແລະດັດສົມວິທີການສົ່ງເສີມຂອງໂຄງການ. ຮູບແບບການມີ



ສ່ວນຮ່ວມທີ່ນຳໃຊ້ໃນໂຄງການມີຢູ່ໃນສອງວຽກໃຫຍ່ຄື: ອັນທີນຶ່ງແມ່ນຂະບວນການ ພັດທະ ນາບ້ານ(VDP), ຊຶ່ງປະກອບມີ ບາດກ້າວທີ່ສະແດງໃນແຜນວາດລຸ່ມນີ້. ມີການຊຸກ ຍູ້ຢ່າງ ໃກ້ຊິດຈາກວຽກສົ່ງເສີມເຂົ້າໃນຂະບວນການພັດທະນາບ້ານ, ໂດຍທີ່ວຽກສົ່ງເສີມແມ່ນໄດ້ມາຈາກຄວາມຕ້ອງການຂອງຊາວບ້ານໃນພື້ນຖານຊຸມຊົນເປັນບ້ານໆໄປດັ່ງໃນຮູບສະແດງ:

**ຂະບວນການພັດທະນາບ້ານ (VDP)**

- ຊີ້ແຈງ/ກະກຽມ
- ວາງແຜນລະດັບຄອບຄົວ
- ປະຕິບັດກິດຈະກຳ
- ຕິດຕາມ
- ປະເມີນ, ລາຍງານ

**ການສະໜັບສະໜູນຂອງການສົ່ງເສີມ (ESR)**

- ພັດທະນາເຕັກໂນໂລຢີ
- ຄົ້ນຄ້ວາທົດລອງແລະ ປະສານກັບອົງກອນອື່ນໆ
- ກະຈ່າຍເຕັກໂນໂລຢີ
- ພັດທະນາການເງິນຂອາບ້ານ

ເຖິງຈະແຍກສະແດງຢູ່ຕ່າງຫ້ອງແຕ່ຈະເຫັນໄດ້ວ່າຂະວນການພັດທະນາບ້ານ ແລະການສະໜັບສະໜູນຂອງວຽກສົ່ງເສີມມີການປະສານກົມກຽວກັນສະໜິດແໜ້ນໂດຍຜ່ານການມີສ່ວນຮ່ວມ. ແຕ່ລະຝ່າຍແມ່ນໄດ້ມີການໃຫ້ຄວາມຮູ້ແລະປະສົບການຢູ່ແຕ່ລະຂັ້ນຕອນໃນວົງຈອນ,ໂດຍເນັ້ນໃຫ້ຊາວບ້ານມີຄວາມຮັບຜິດຊອບຢ່າງເປັນເຈົ້າການຕໍ່ ແຜນການແລະກິດຈະກຳການພັດທະນາບ້ານຂອງຕົນ.

ການພັດທະນາຮູບແບບການເງິນຈຸລະພາກ ຫຼືການເງິນຂອງບ້ານເປັນສ່ວນນຶ່ງທີ່ສຳຄັນໃນການສົ່ງເສີມຂອງໂຄງການ LSFP IV. ກຸ່ມອອມຊັບ,ແລະ ການປ່ອຍທຶນໝູນວຽນສິນເຊື່ອແມ່ນຖືກສ້າງຂຶ້ນໃນບ້ານເປົ້າໝາຍ ແລະ ຂັ້ນຕອນລະບຽບການໃນການຄຸ້ມຄອງກອງທຶນເລົ່ານັ້ນໄດ້ຖືກສ້າງຂຶ້ນເປັນຮູບເປັນຮ່າງ.

ບົດຮຽນໃນວຽກສົ່ງເສີມທີ່ຖອດຖອນໄດ້ຈາກການປະຕິບັດຂອງໂຄງການໄດ້ຂຽນອອກໃນລາຍງານ ປີ 2001 ຊຶ່ງມີອັນສຳຄັນດັ່ງນີ້:

- ເພື່ອໃຫ້ການຄົ້ນຄ້ວາທົດລອງມີປະສິດຕິຜົນຕ້ອງໄດ້ຊ້ອນສອດເຂົ້າກັບແຜນພັດທະນາແລະສົ່ງເສີມຂອງບ້ານ,ແທນທີ່ຈະມີແຕ່ການທົດລອງໃນສະຖານີ
- ການໃຫ້ຄຳປຶກສາລະວ່າງແຂວງ,ເມືອງ ແລະ ບ້ານເປັນສິ່ງສຳຄັນອັນໃຫຍ່ຫຼວງຖ້າຢາກໃຫ້ວຽກຖືກຈັດຕັ້ງປະຕິບັດຢ່າງມີປະສິດຕິພາບ
- ການບໍລິການສົ່ງເສີມຕ້ອງເນັ້ນໃຫ້ການແນະນຳແກ່ຊາວບ້ານເປັນປະຈຳ,ຫາກບໍ່ແມ່ນ ການໄປກວດກາເຂົາເຈົ້າເປັນປະຈຳ.
- ຮູບແບບການສ້າງ"ຄອບຄົວຕົວແບບ", "ບ້ານແບບຢ່າງ"ເຮັດໄດ້ນ້ອຍເພາະບໍ່ມີການກະຈ່າຍ ແລະ ມີບັນຫາໃນວິທີການຜັນຂະຫຍາຍອອກສູ່ວົງກ້ວາງ;

- ວຽກການສົ່ງເສີມສາມາດເຮັດໄດ້ໂດຍບໍ່ຈຳເປັນຕ້ອງມີຊັບພະຍາກອນຫຼາຍ,ພຽງແຕ່ມີການສະໜອງເງື່ອນໄຂພື້ນຖານໃນການເດີນທາງລົງໄປວຽກຂອງນັກສົ່ງເສີມກໍ່ສາມາດປະຕິບັດໄດ້ໂດຍພື້ນຖານ
- ການສືບຕໍ່ນຳໃຊ້ຮູບແບບການມີສ່ວນຮ່ວມຢ່າງເຕັມຮູບແບບແມ່ນຍັງຫຍຸ້ງຍາກບໍ່ນ້ອຍ
- ກົນໄກການຄຸ້ມຄອງການເງິນຈຸລະພາກໂດຍຍຶດຖືຫຼັກການໃຫ້ຄວາມເປັນເຈົ້າການແກ່ບ້ານແມ່ນມີທ່າແຮງໃຫຍ່ຫຼວງເພື່ອເສີມສ້າງທັດສະນະເພິ່ງຕົນເອງແລະທັງເປັນການເພີ່ມອັດຕາເລັ່ງໃນການພັດທະນາອີກດ້ວຍ

ໂຄງການ LSFP IVໄດ້ມີການສືບຕໍ່ດຳເນີນການພາຍໃຕ້ການຮ່ວມມືລາວ-ຊູແອດອີກໂຄງການນີ້ງ- (LSUAFRP, 2002-2005). ໂດຍໄດ້ສຸມໃສ່ການພັດທະນາເຕັກໂນໂລຢີການຜະລິດໃນເຂດເນີນສູງ ແລະ ການຊ່ວຍສ້າງຄວາມເຂັ້ມແຂງ ແກ່ NAFRI.
ຮູບແບບການມີສ່ວນຮ່ວມໄດ້ນຳໃຊ້ຢ່າງປະສົມປະສານເຂົ້າໃນການຄົ້ນຄ້ວາ ແລະ ສົ່ງເສີມລະບົບການທຳຟາມ (FSR/E) . LSUAFRP ໂດຍສະເພາະໃນ 2 ເມືອງເຊັ່ນ: ເມືອງນາໝໍ້ ແຂວງອຸດົມໄຊ, ເມືອງໂພນໄຊ ແຂວງ ຫຼວງພະບາງ

ບົດຮຽນຂອງໂຄງການ LSFP ຍັງຖືກນຳໃຊ້ເຂົ້າໃນກິດຈະກຳການຄຸ້ມຄອງປ່າໄມ້ໂດຍຊາວບ້ານ ຂອງໂຄງການ (FORCOM), ຊຶ່ງຈະໄດ້ມີການປະຕິບັດຢູ່ 6 ແຂວງພາກເໜືອ ໂດຍການສະໜັບສະໜູນງົບປະມານຈາກ JICA. FORCOM, ເລີ່ມການປະຕິບັດແຕ່ 2003 ອັນປະກອບມີການຝຶກພະນັກງານແຂວງ,ເມືອງໃນວຽກ ແລະ ເຕັກນິກການສົ່ງເສີມ.

## 2.4 ສະພາບລວມຂອງຮູບແບບການສົ່ງເສີມຜ່ານມາໃນລາວ[17]

ໃນປີ 2002 ໂຄງການສົ່ງເສີມກະສິກຳ (LEAP)ໄດ້ດຳເນີນການສຳຫຼວດສຶກສາເບິ່ງຮູບແບບວິທີການສົ່ງເສີມໃນລາວ. ມີ 46 ໂຄງໃນທົ່ວປະເທດໄດ້ຈັດສົ່ງແບບຟອມສອບຖາມໃຫ້ ແລະໃນນັ້ນ 38 ໂຄງການໄດ້ຕອບສະໜອງຂໍ້ມູນໃຫ້. ໂຄງການເລົ່ານັ້ນແມ່ນໄດ້ຮັບການສະໜັບສະ ໜູນງົບປະມານຈາກ:

- ອົງການຈັດຕັ້ງສາກົນເພື່ອການຊ່ວຍເຫຼືອດ້ານວິຊາການເຊັ່ນ (FAO, UNDCP, IUCN, IRRI and CIAT);
- ອົງການຜູ້ໃຫ້ທຶນຮ່ວມມືສອງຝ່າຍແລະ ຫຼາຍຝ່າຍເຊັ່ນ: (World Bank, EU, German, Swedish and Danish);
- ອົງກອນທົ່ວໄປ(secular NGOs) (CARE, Community Action Abroad, Oxfam-Belgium, Save the Children, Concern WorldWide, German Agro Action);
- ອົງກອນສາດສະໜາ(faith-based NGOs) (Quaker Services, Norwegian Church Aid, ADRA, CIDSE and ZOA)

- ອົງກອນອາສາສະມັກ (CUSO)

ສິ່ງທີ່ໜ້າສົນໃຈຢ່າງນຶ່ງໃນການສຳຫຼວດແມ່ນກ່ຽວຂ້ອງກັບການເຮັດໜ້າທີ່ສົ່ງເສີມຂອງບັນດາໂຄງການ. ສ່ວນໃຫຍ່ແມ່ນເນັ້ນໃສ່ "ການປັບປຸງຂີດຄວາມສາມາດຂອງຊາວກະສິກອນ" ມີເຖິງ (79%) ຊຶ່ງເປັນການຢັ້ງຢືນໄດ້ວ່າ,ການເຮັດໜ້າທີ່ດັ່ງກ່າວມີຄວາມສຳຄັນກ່ວາໝູ່,"ການເພີ່ມສະມັດຕະພາບຜົນຜະລິດ" ມີຢູ່(74%), "ການຖ່າຍທອດເຕັກໂນໂລຢີ"ມີ(66%) ສ່ວນດ້ານອື່ນຊຶ່ງລວມມີທັງ"ການພັດທະນາຊັບພະຍາກອນມະນຸດມີ(16%) ແລະ ການລົກຜ່ອນຄວາມຍາກຈົນມີຢູ່(15%). ຂໍ້ສະຫຼຸບສຳຄັນສາມາດສັງຮວມໄດ້ດັ່ງລຸ່ມນີ້:

### *2.4.1 ຂອບເຂດຂອງວຽກສົ່ງເສີມປະຕິບັດ*

ໃນດ້ານພື້ນທີ່ແລ້ວເຫັນວ່າໂຄງການສົ່ງເສີມທີ່ປະຕິບັດແມ່ນບໍ່ກຳນົດຂອບເຂດແນ່ນອນ,ບາງໂຄງການກໍຈະກຳດຽວກັນປະຕິບັດໃນຫຼາຍພື້ນທີ່ ແລະໃນທີ່ສຸດກໍ່ໄດ້ມີການແຍກເປັນໂຄງການຍ່ອຍໆອອກ,ໃນບາງແຂວງມີ 6-7ໂຄງການຍ່ອຍແລະອີກບາງແຂວງມີ 1-2 ໂຄງການຍ່ອຍ.ໂດຍສະເພາະແລ້ວຮູບການນີ້ຈະເນັ້ນຢູ່ໃນເຂດພາກເໜືອ.ສະເລັ່ຍແລ້ວເກືອບເຄິ່ງນຶ່ງຂອງໂຄງການຍ່ອຍແມ່ນດຳເນີນການໃນ 1-2 ເມືອງຊຶ່ງອາດ ກວມເອົາ ເກືອບເຖິງ 20 ບ້ານ

*ຂອບເຂດໂຄງການສົ່ງເສີມປະຕິບັດຕາມສະພາບພື້ນທີ່*

| ລ/ດ. | ຊື່ ແຂວງ | ຈຳນວນ ໂຄງການຍ່ອຍ | ເປີເຊັນ |
|---|---|---|---|
| 1 | ຫຼວງນ້ຳທາ | 6 | 8.33% |
| 2 | ອຸດົມໄຊ | 5 | 6.94% |
| 3 | ຜົ້ງສາລີ | 1 | 1.39% |
| 4 | ໄຊຍະບູລີ | 7 | 9.72% |
| 5 | ຫຼວງພະບາງ | 7 | 9.72% |
| 6 | ຊຽງຂວາງ | 6 | 8.33% |
| 7 | ຫົວພັນ | 4 | 5.56% |
| 8 | ບໍ່ແກ້ວ | 3 | 4.17% |
| | *ເຂດພາກເໜືອ* | **39** | ***54.17%*** |
| 9 | ນະຄອນຫຼວງ | 5 | 6.94% |
| 10 | ວຽງຈັນ | 7 | 9.72% |
| 11 | ເຂດພິເສດໄຊສົມບູນ | 1 | 1.39% |
| 12 | ບໍລິຄຳໄຊ | 2 | 2.78% |
| 13 | ຄຳມ່ວນ | 2 | 2.78% |
| | *ເຂດພາກກາງ* | ***17*** | ***23.61%*** |
| 14 | ສະຫວັນນະເຂດ | 6 | 8.33% |
| 15 | ສາລະວັນ | 5 | 6.94% |
| 16 | ເຊກອງ | 2 | 2.78% |
| 17 | ອັດຕະປື | 1 | 1.39% |
| 18 | ຈຳປາສັກ | 2 | 2.78% |
| | *ເຂດພາກໃຕ້* | ***16*** | ***22.22%*** |
| | ລວມ | **128** | **100.00%** |

ຖ້າເບິ່ງໃນເລື່ອງຂອງປະເພດດິນໂຄງການສົ່ງເສີມໄດ້ກວມເອົາດິນເຂດເນີນສູງ,ດິນນານ້ຳຝົນແລະດິນປ່າໄມ້. ມີຈຳນວນນ້ອຍທີ່ໂຄງການດຳເນີນການໃນດິນເຂດມີຊົນລະປະທານ. ກ່ຽວຂ້ອງໃນເລື່ອງຊົນເຜົ່າເກືອບ 40% ຂອງໂຄງການແມ່ນ ນອນ ໃນເຂດອາໃສຂອງເຜົ່າລາວລຸ່ມໂດຍສະເພາະເຜົ່າລື້. ແຕ່ກໍ່ມີບາງຈຳນວນ

ດຳເນີນໃນເຂດ ເຜົ່າລາວເທິງ ເຊັ່ນເຜົ່າຂະມຸ, ສ່ວນໃນເຂດເຜົ່າລາວສູງ ແມ່ນ ເຜົ່າມົ້ງລາຍ.

*ໂຄງການທີ່ເນັ້ນເລື່ອງຊົນເຜົ່າ*

| ລ/ດ | ຊົນເຜົ່າ | ຈຳນວນໂຄງການຍ່ອຍ | ເປີເຊັນ |
|---|---|---|---|
| 1 | ລາວລຸ່ມ | 33 | 42% |
| 3 | ລາວສູງ | 24 | 31% |
| 2 | ລາວເທິງ | 21 | 27% |
| | ລວມ | **78** | **100%** |

## *2.4.2 ຫົວຂໍ້ການສົ່ງເສີມ*

ຄຳຖາມທີ່ສຳຄັນໃນການສຶກສາທີ່ຊາວຊົນນະບົດປະສົບຢູ່ນັ້ນ ແລະ ບັນດາໂຄງການສົ່ງເສີມສ່ວນໃຫຍ່ດຳເນີນການປະຕິບັດເພື່ອຫວັງເຂົ້າຊ່ວຍເຫຼືອແມ່ນການຂາດຄວາມຮູ້,ດິນບໍ່ດີ ແລະ ຂາດການເຂົ້າເຖິງຕະລາດ

*ອຸປະສັກສຳຄັນໃນດ້ານກະສິກຳທີ່ມີໃນພື້ນທີ່ໂຄງການ*

| ລ/ດ | ບັນຫາ | ຈຳນວນ ໂຄງການ | ເປີເຊັນ (ຈາກ 38 ໂຄງການ) |
|---|---|---|---|
| 1 | ການຂາດຄວາມຮູ້ | 27 | 71.10% |
| 2 | ດິນບໍ່ດີ | 24 | 63.20% |
| 3 | ຂາດການເຂົ້າເຖິງຕະລາດ | 23 | 60.50% |
| 4 | ສັດລ້ຽງເກີດພະຍາດ | 20 | 52.70% |
| 5 | ແມງໄມ້ສັດຕູພືດ | 18 | 47.40% |
| 6 | ດິນເຊາະເຈື່ອນ | 17 | 44.70% |
| 7 | ວັດສະພືດ | 15 | 39.50% |
| 8 | ແຫ້ງແລ້ງ | 14 | 36.80% |
| 9 | ພືດປູກເກີດພະຍາດ | 13 | 34.20% |
| 10 | ຂາດແນວພັນປັບປຸງ ພືດປູກ | 12 | 31.60% |
| 11 | ບັນຫາກະສິກຳອື່ນໆ | 12 | 31.60% |
| 12 | ນ້ຳຖ້ວມ | 6 | 15.80% |

ການປູກເຂົ້າເປັນກິດຈະກຳທາງດ້ານເສດຖະກິດສຳຄັນຂອງເກືອບທັງໝົດທຸກບ້ານແລະກໍ່ເປັນຫົວຂໍ້ສົ່ງເສີມທີ່ໂຄງການໄດ້ຄັດເລືອກເອົາ. ຈາກ 38 ໂຄງການສົ່ງເສີມທີ່ໄດ້ທຳການສຶກສານັ້ນມີ 12 ໂຄງການໄດ້ຊຸກຍູ້ການນຳໃຊ້ແນວພັນປັບປຸງໃໝ່ ແລະ ເຕັກນິກການປູກໃໝ່ຮວມທັງ ມີບາງໂຄງການຊຸກຍູ້ການປະສົມປະສານການປູກພືດເສດຖະກິດ ແລະ 10 ໂຄງການແມ່ນກ່ຽວຂ້ອງ

ກັບການຊຸກຍູ້ການປູກໄມ້ໃຫ້ໝາກ, ຂະນະດຽວນັ້ນກໍ່ໃຫ້ຄວາມສຳຄັນກັບການຊຸກຍູ້ປູກຜັກ ແລະ ປູກຫຍ້າອາຫານສັດ.

*ຫົວຂໍ້ໂຄງການສົ່ງເສີມທີ່ເນັ້ນໃສ່ການປັບປຸງພືດປູກທີ່ມີຢູ່*

| ລ/ດ | ຊະນິດພືດ | ປັບປຸງແນວພັນປູກ | | ປັບປຸງວິທີການປູກ | |
|---|---|---|---|---|---|
| | | ຈຳນວນໂຄງການ | % | ຈຳນວນໂຄງການ | % |
| 1 | ເຂົ້າ | 12 | 26% | 6 | 19% |
| 2 | ໄມ້ໃຫ້ໝາກ | 10 | 21% | 3 | 9% |
| 3 | ຜັກ | 5 | 11% | 5 | 16% |
| 4 | ຕົ້ນມອນ | 4 | 9% | 4 | 13% |
| 5 | ພືດສິນຄ້າ | 1 | 2% | 4 | 13% |
| 6 | ສາລີ | 4 | 9% | 0 | 0% |
| 7 | ພືດອື່ນໆ | 2 | 4% | 2 | 6% |
| 8 | ຝຸ່ນ ແລະ ນ້ຳສະກັດຊີວະພາບ | 0 | 0% | 2 | 6% |
| 9 | ເຂົ້າລະດູຝົນ | 1 | 2% | 1 | 3% |
| 10 | ພືດລະດູແລ້ງ | 1 | 2% | 1 | 3% |
| 11 | ຫຍ້າອາຫານສັດ | 1 | 2% | 1 | 3% |
| 12 | ກະທຽມ | 1 | 2% | 1 | 3% |
| 13 | ໝາກແຕງກວາ, ກະລຳປີ | 0 | 0% | 1 | 3% |
| 14 | ການປູກພືດສະຫຼັບຕົ້ນໄມ້ | 0 | 0% | 1 | 3% |
| 15 | ມັນຕົ້ນ | 1 | 2% | 0 | 0% |
| 16 | ໝາກແໜ່ງ | 1 | 2% | 0 | 0% |
| 17 | ຝ້າຍ | 1 | 2% | 0 | 0% |
| 18 | ໝາກງາ | 1 | 2% | 0 | 0% |
| 19 | ເຂົ້າບາເລ | 1 | 2% | 0 | 0% |
| | ລວມ | **47** | **100%** | **32** | **100%** |

*ຫົວຂໍ້ການສົ່ງເສີມທີ່ໂຄງການເນັ້ນໃສ່ການສະເໜີຊະນິດພືດໃໝ່*

| ລ/ດ | ຊະນິດພືດ | ຈຳນວນໂຄງການ | % | ເຫດຜົນ |
|---|---|---|---|---|
| 1 | ໄມ້ໃຫ້ໝາກ | 10 | 20% | ມີລາຍຮັບ,ນຳໃຊ້ດິນແບບຍືນນານ,ລຶດຜ່ອນການຖາງປ່າ,ໄດ້ຂາຍແລະບໍລິໂພກເອງ |
| 2 | ຜັກ | 4 | 8% | ມີໄວ້ກິນເພື່ອສຸກກະພາບ,ຂາຍ,ຕະລາດຕ້ອງການ |
| 3 | ຫຍ້າອາຫານສັດ(ເຊັ່ນ ສະຕາຍໂລ) | 4 | 8% | ມີຫຍ້າລະດູແລ້ງ,ປັບປຸງດິນແລະເພີ່ມທາດອາຫານ |
| 4 | ພືດອື່ນໆໂດຍບໍ່ໄດ້ລະບຸຊື່ | 4 | 8% | ບໍ່ໄດ້ປະຕິບັດ |

| | | | | |
|---|---|---|---|---|
| 5 | ເຂົ້າ | 3 | 6% | ມີແນວພັນໃຫ້ສະມັດຕະພາບສູງ |
| 6 | ໜໍ່ໄມ້ຝຣັ່ງ | 3 | 6% | ມີຕະລາດ,ລາຄາດີ |
| 7 | ມັນຝຣັ່ງ | 2 | 4% | ບໍ່ໄດ້ປະຕິບັດ |
| 8 | ພືດສິນຄ້າໂດຍບໍ່ໄດ້ລະບຸຊື່ | 2 | 4% | ມີລາຍໄດ້ປົກກະຕິ |
| 9 | ໝາກແໜ່ງ | 2 | 4% | ຕະລາດຕ້ອງການ |
| 10 | Artichokes | 2 | 4% | ມີຕະລາດ,ລາຄາສູງ |
| 11 | ພືດຕະກຸນຖົ່ວ(ຕົ້ນ/ພຸ່ມ) | 2 | 4% | ປັບປຸງການຜະລິດໃນເຂດເນີນສູງ |
| 12 | ຖົ່ວເຫຼືອງ | 1 | 2% | ຕະລາດຕ້ອງການ |
| 13 | ເຂົ້າບາເລ | 1 | 2% | ເປັນການນຳໃຊ້ດິນ ຫຼັງເກັບກ່ຽວ |
| 14 | ເຂົ້າຝ່າງ | 1 | 2% | ປ່ຽນແທນເຂົ້າເພື່ອເຮັດເຫຼົ້າ |
| 15 | ໝາກເດືອຍ | 1 | 2% | ບໍ່ໄດ້ປະຕິບັດ |
| 16 | ຕົ້ນມອນ | 1 | 2% | ເໝາະໃນສະພາບແວດລ້ອມຄ້າຍຄຽງກັນ |
| 17 | ພືດເປັນເຄືອເພື່ອເປັນຢາ | 1 | 2% | ບໍລິໂພກເອງໃນແຕ່ລະປີ |
| 18 | ໝາກເລັ່ນນອກລະດູ | 1 | 2% | ຊາວບ້ານຕ້ອງການ |
| 19 | ຖົ່ວປີ | 1 | 2% | ການປັບປຸງດິນ |
| 20 | ຊະນິດພືດອື່ນໆ | 1 | 2% | ບໍ່ໄດ້ປະຕິບັດ |
| 21 | ໄມ້ອຸດສະຫະກຳ | 1 | 2% | ມີທ່າແຮງ |
| 22 | ເຄື່ອງປ່າຂອງດົງເຊັ່ນ ຫວາຍ | 1 | 2% | ເພີ່ມລາຍໄດ້,ຕະລາດທ້ອງຖິ່ນ ແລະການອະນຸລັກ |
| 23 | ກົບ ແລະ ປາ | 1 | 2% | ຊອກລາຍຮັບເພີ່ມ |
| 24 | ປູກພືດເປັນຄູ່ກັນເຈື່ອນ | 1 | 2% | ລົດຜ່ອນການຖາງປ່າເຮັດໄຮ່ |
| | **ລວມ** | **29** | **57%** | |

ເກືອບສອງໃນສາມສ່ວນຂອງໂຄງການເລົ່ານັ້ນແມ່ນກ່ຽວຂ້ອງກັບການສົ່ງເສີມເຕັກນິກໃໝ່ໃນການລ້ຽງສັດ,ຊຶ່ງ ບຸລຸມະສິດເນັ້ນໃສ່ການສັກຢາປ້ອງກັນ(ສັດໃຫຍ່,ໝູ,ສັດປີກເພື່ອລົດຜ່ອນການຕາຍຂອງສັດຍ້ອນພະຍາດ ແຕ່ກໍ່ມີບາງສ່ວນໄດ້ເນັ້ນໃສ່ການປັບປຸງອາຫານ ແລະ ຄອກສັດ. ມີປະມານ (10)ໂຄງການໄດ້ເນັ້ນໃສ່ການສົ່ງເສີມລ້ຽງປາ.

*<u>ຫົວຂໍ້ການສົ່ງເສີມການລ້ຽງສັດທີ່ໂຄງການໄດ້ເນັ້ນໜັກໃສ່</u>*

| ລ/ດ | ກິດຈະກຳ | ຈຳນວນ ໂຄງການ | ເປີເຊັນ (ຈາກ 38 ໂຄງການ) |
|---|---|---|---|
| | *ສັດປີກ* | | |
| 1 | ການນຳໃຊ້ວັກຊິນແລະ ຢາປິ່ນປົວແບບພື້ນບ້ານ | 24 | 63.20% |
| 2 | ການນຳໃຊ້ສູດອາຫານປະສົມແບບພື້ນບ້ານ | 18 | 47.40% |
| 3 | ການປັບປຸງກຸ່ມລ້ຽງໄກ່ | 15 | 39.50% |
| 4 | ຝຶກອົບຮົມ | 11 | 28.90% |
| 5 | ການກັກກັນສັດ | 8 | 21.10% |

| | | | |
|---|---|---|---|
| | *ໝູ* | | |
| 6 | ການສັກວັກຊີນໝູ | 25 | 65.80% |
| 7 | ການໄຊ້ສູດປະສົມອາຫານແບບພື້ນບ້ານ | 18 | 47.40% |
| 8 | ການທອນໝູ | 17 | 44.70% |
| 9 | ຝຶກອົບຮົມການລ້ຽງໝູ | 11 | 28.90% |
| 10 | ສົ່ງເສີມການລ້ຽງໝູລາດ | 4 | 10.50% |
| | *ປາ* | | |
| 11 | ສະໜອງປານ້ອຍ | 10 | 26.30% |
| 12 | ສູດອາຫານປະສົມແບບພື້ນບ້ານ | 10 | 26.30% |
| 13 | ຊຸກຍູ້ການຮັກສານ້ຳໃຫ້ສະອາດພຽງພໍໃນໜອງລ້ຽງປາ | 10 | 26.30% |
| 14 | ຝຶກອົບຮົມວິທີການລ້ຽງປາ | 10 | 26.30% |
| 15 | ການລ້ຽງປາໃນນາເຂົ້າ | 5 | 13.20% |
| | *ງົວ,ຄວາຍ* | | |
| 16 | ການສັກວັກຊີນສັດໃຫຍ່ | 21 | 55.30% |
| 17 | ການປັບປຸງທົ່ງຫຍ້າລ້ຽງສັດ | 9 | 23.70% |
| 18 | ການເຮັດຄອກສັດ | 6 | 15.80% |
| 19 | ຝຶກອົບຮົມວິທີການລ້ຽງສັດໃຫຍ່ | 6 | 15.80% |
| 20 | ການກັກກັນສັດ | 4 | 10.50% |

### *2.4.3 ວິທີສົ່ງເສີມທີ່ໃຊ້*

ກິດຈະກຳການສົ່ງເສີມຂອງບັນດາໂຄງການທີ່ໄດ້ເຮັດການສຶກສາໄປນັ້ນແມ່ນປະຕິບັດ ໄປຕາມກຸ່ມບ້ານ,ຊຶ່ງບໍ່ເກີນ 10 ບ້ານ, ໂດຍສ່ວນໃຫຍ່ການເຮັດວຽກຂອງພະນັກງານສົ່ງເສີມແມ່ນເຮັດເປັນທີມ ແລະ ມີໃນຫຼາຍໂຄງການແມ່ນເຮັດວຽກແບບ ເປັນລາຍບຸກຄົນ.ມີຫຼາຍກິດຈະກຳໄດ້ປະຕິບັດຜ່ານອຳນາດການປົກຄອງບ້ານໂດຍສະເພາະ ແມ່ນກຸ່ມອອມຊັບ ແລະ ກຸ່ມສິນເຊື່ອ.

*<u>ປະຕິບັດຜ່ານການຈັດຕັ້ງພື້ນຖານທີ່ມີຢູ່ຂອງບ້ານ</u>*

| ລ/ດ | ກຸ່ມ | ຈຳນວນ ໂຄງການ | ເປີເຊັນ (ຈາກ 38 ໂຄງການ) |
|---|---|---|---|
| 1 | ອອມຊັບ ແລະ ສິນເຊື່ອ | 24 | 63.2% |
| 2 | ທານະຄານເຂົ້າ ແລະ ທານະຄານຄວາຍ | 20 | 52.6% |
| 3 | ກຸ່ມຜູ້ໃຊ້ນ້ຳ | 18 | 47.4% |

ເກືອບທຸກໂຄງການນຳໃຊ້ຮູບແບບການມີສ່ວນຮ່ວມໃນການວິເຄາະບັນຫາ,ສ່ວນຫົວຂໍ້ສົ່ງເສີມທາງເຕັກນິກແມ່ນຂຶ້ນກັບພະນັກງານໂຄງການເປັນຜູ້ກຳນົດ. ເຖິງຈະມີຫຼາຍໂຄງການໄດ້ຢຶດຖື

ການກຳນົດຄວາມຕ້ອງການຈາກຊາວບ້ານອັນປະກອບມີຫຼາຍໆທາງອອກ, ສ່ວນການກຳນົດວ່າຈະສົ່ງເສີມເລື່ອງໃດນັ້ນກໍ່ມັກຈະຖືກກຳນົດໂດຍໂຄງການໄວ້ກ່ອນສະເໜີ.

*<u>ຮູບແບບທີ່ໃຊ້ສຳລັບການກຳນົດສິ່ງຈະນຳໄປສົ່ງເສີມຈາກໂຄງການ</u>*

| ລ/ດ | ກິດຈະກຳ | ຈຳນວນ ໂຄງການ | ເປີເຊັນ (ຈາກ 38 ໂຄງການ) |
|---|---|---|---|
| 1 | ການວິນິໃສບັນຫາແບບມີສ່ວນຮ່ວມ | 37 | 97.3% |
| 2 | ພະນັກງານກຳນົດທາງອອກແລະຫົວຂໍ້ເຕັກນິກ | 24 | 63.2% |
| 3 | ໂຄງການໃຫ້ຊາວບ້ານເລືອກເອົາທາງອອກທີ່ເໝາະສົມກ່ວາໝູ່ | 20 | 52.6% |
| 4 | ໂຄງການໄດ້ກຳນົດເຕັກໂນໂລຢີຫຼືກິດຈະກຳສະເພາະໃຫ້ | 9 | 23.7% |
| 5 | ພະນັກງານນຳສະເໜີເຕັກໂນໂລຢີໃໝ່ | 3 | 7.9% |
| 6 | ***ຮູບແບບ ອື່ນໆ*** | | |
| | - ຈັດທັດສະນະສຶກສາ/ແລກປ່ຽນບົດຮຽນ | 3 | 7.8% |
| | ຈັດຝຶກອົບຮົມ | 2 | 5.3% |
| | ປະເມີນຄວາມຕ້ອງການຂອງບ້ານ | 2 | 5.3% |
| | - ສ້າງຕັ້ງຄະນະກຳມະການພັດທະນາບ້ານ | 2 | 5.3% |
| | ວິທີການວາງແຜນພັດທະນາບ້ານ | 1 | 2.6% |

ການນຳໃຊ້ວິທີຈັດຕັ້ງກຸ່ມເຫັນວ່າມີສູງເຖິງ 23 ໂຄງການ"ມີກຸ່ມ", ທຽບໃສ່ການລົ້ງໃສ່ສ້າງ ຄອບຄົວຕົວແບບ ແມ່ນມີໃນ 20 ໂຄງການ. ວິທີສົ່ງເສີມທີ່ນິຍົມໃຊ້ກ່ວາໝູ່ໃນນີ້ແມ່ນການຈັດ ຝຶກອົບຮົມ,ທັດສະນະສຶກສາ, ຢ້ຽມຢາມພາກສະໜາມ, ເຮັດແປງສາທິດ ແລະ ຈັດພິມເອກະສານແຈກຢາຍແມ່ນຫຼາຍກ່ວາໝູ່

*<u>ວິທີການນຳສະເໜີເຕັກໂນໂລຢີໃໝ່</u>*

| ລ/ດ | ວິທີການ | ຈ/ນ ໂຄງການ | ເປີເຊັນ (ຈາກ 38 ໂຄງການ) |
|---|---|---|---|
| 1 | ຈັດຝຶກອົບຮົມ | 36 | 94.70% |
| 2 | ຈັດທັດສະນະແລກປ່ຽນບົດຮຽນ | 33 | 86.80% |
| 3 | ເຮັດການທົດລອງແບບງ່າຍດາຍ | 28 | 73.70% |
| 4 | ນັກສົ່ງເສີມເຮັດວຽກກັບຊາວນາໂດຍກົງ | 27 | 71.10% |
| 5 | ເຮັດແປງສາທິດ | 23 | 60.50% |
| 6 | ແຈກຄູ່ມື,ແຜ່ນພັບແລະໂປສະເຕີ, VDO | 23 | 60.50% |

ນອກເໜືອຈາກນັ້ນກ່ຽວກັບການພັດທະນາອົງກອນ ແລະ ກິດຈະກຳການສຶກສາ ວຽກສົ່ງເສີມຍັງໄດ້ໃຫ້ປັດໃຈການສະນັບສະໜູນ,ໂດຍສ່ວນໃຫຍ່ເງິນແລະອຸປະກອນຈະຊ່ວຍໃນຊ່ວງເລີ່ມການສ້າງກອງທຶນໝູນວຽນຫຼືການທົດລອງ. ມີຈຳນວນນຶ່ງສະໜັບສະໜູນການຜະລິດໂດຍກົງ. ມີພຽງສອງກໍລະນີເທົ່ານັ້ນທີ່ໄດ້ໃຫ້ແບບເກື້ອກູນເຖິງ 100 %

*<u>ການສະໜອງອຸປະກອນ</u>*

| ລ/ດ | ວິທີການ | ຈຳນວນ ໂຄງການ | ເປີເຊັນ (ຈາກ 38 ໂຄງການ) |
|---|---|---|---|
| 1 | ສະໜອງເງິນ,ອຸປະກອນເພື່ອເລີ່ມຈັດຕັ້ງກອງທຶນໝູນວຽນ | 28 | 73.7% |
| 2 | ໃຫ້ວັດຖຸອຸປະກອນຈຳນວນນຶ່ງເພື່ອການທົດລອງ | 23 | 60.5% |
| 3 | ຖົມຊຸມໃຫ້ | 6 | 15.8% |

ຫຼັງຈາກມີການຈັດຕັ້ງກຸ່ມ ແລະ ຝຶກອົບຮົມແລ້ວໂຄງການມັກຈະມີການຕິດຕາມຊຸກຍູ້ປະຈຳ. ເກືອບເຄິ່ງນຶ່ງຂອງຈຳນວນໂຄງການໄດ້ເຮັດການລົງຕິດຕາມປະຈຳ(ໃນແຕ່ລະ ສອງ ຫາ ສີ່ ອາທິດ). ຂະນະດຽວກໍ່ມີບາງໂຄງການໄດ້ລົງຕິດຕາມ,ຕາມການຮຽກຮ້ອງຂຶ້ນໄປຫາ. ເປົ້າໝາຍການລົງ ຕິດຕາມກໍ່ແມ່ນການຊຸກຍູ້, ແລກປ່ຽນບົດຮຽນແລະໃຫ້ຂໍ້ແນະນຳໃນການແກ້ບັນຫາທີ່ເກີດຂື້ນ.

## 2.5 ບົດຮຽນທີ່ຖອດຖອນໄດ້ຈາກອາດີດ

ປະຈຸບັນມີຫຼາຍສິ່ງສຳຄັນໄດ້ມີການຫັນປ່ຽນເກີດຂື້ນໃນກະຊວງກະສິກຳ ແລະ ປ່າໄມ້. ໃນໄລຍະຜ່ານມາກິດຈະກຳສ່ວນໃຫຍ່ທີ່ກ່ຽວຂ້ອງກັບການສົ່ງເສີມຂອງກະຊວງກະສິກຳແມ່ນມີລັກສະນະເປັນຂະແໜງການແລະເປັນມະຕິຄຳສັ່ງຈາກສູນກາງເປັນສ່ວນໃຫຍ່. ພະນັກງານແຂວງມັກຈະລໍຖ້າຄຳສັ່ງແນະນຳຈາກຂັ້ນເທິງແທນທີ່ຈະມີການວາງແຜນການແລະຈັດຕັ້ງຄຸ້ມຄອງໜ້າວຽກຂອງຕົນຢ່າງເປັນເຈົ້າການ. ຄຳສັ່ງຫຼືຂໍ້ແນະນຳມັກຈະກ່ຽວກັບການເນັ້ນໜັກມາດຕາການແລະວິທີການໃນການປູກ,ປົກປັກຮັກສາພືດສະເພາະ. ຜົນໄດ້ຮັບຈາກບັນດາສາຍໃຍຂອງໜ້າວຽກໃນລະບົບ ດັ່ງກ່າວມີຄື:

- ການລົງປະສານສົມທົບຂອງພະນັກງານລັດຫາຊາວກະສິກອນຈະມີຂື້ນແບບບໍ່ເປັນຕ່ອງໂສ້ພຽງແຕ່ເປັນການລົງລະດົມຊຸກຍູ້ບາງຄັ້ງຄາວທີ່ຈຳເປັນ
- ຫຼາຍເຕັກໂນໂລຢີທີ່ຊຸກຍູ້ໃຫ້ນຳໄຊ້,ບໍ່ສອດຄ່ອງກັບເງື່ອນໄຂຂອງທ້ອງຖິ່ນ
- ການຈັດບຸລິມະສິດກິດຈະກຳສົ່ງເສີມບໍ່ໄດ້ອີງໃສ່ຄວາມຕ້ອງການຂອງຊາວກະສິກອນ
- ຂໍ້ແນະນຳທາງເຕັກນິກໃຫ້ແກ່ຊາວກະສິກອນມີລັກສະນະກວມລວມ/ບໍ່ເຈາະຈົງ
- ຄວາມເປັນເຈົ້າການແລະຄວາມກະຕືລືລົ້ນຂອງພະນັກງານແຂວງ ແລະ ເມືອງໃນຂະແໜງການ ກະສິກຳບໍ່ສູງ

- ການປະສານສົມທົບລະວ່າງຂະແໜງການດ້ວຍກັນອ່ອນ. ຄວາມຄືບໜ້າແລະຜົນສຳເລັດແມ່ນຂື້ນກັບວ່າຂະແໜງການໃດໄດ້ຮັບງົບປະມານຫຼາຍ/ນ້ອຍສ່ຳໃດ!.

ບັນດາໂຄງການທີ່ໄດ້ອະທິບາຍໃນຂໍ້ 2.3ໄດ້ສະແດງໃຫ້ເຫັນແຈ້ງເຖິງຮູບແບບທີ່ມີປະສິດຕິພາບໃນການປະຕິບັດວຽກງານການສົ່ງເສີມໃນ ສ ປປ ລາວ. ມັນໄດ້ຜ່ານການທົດສອບ ແລະ ໄດ້ເກີດມີບົດຮຽນສຳຄັນຫຼາຍໆຢ່າງດັ່ງຈະໄດ້ສັງຮວມລຸ່ມນີ້:

ກ) ປະສົບການໄດ້ສະແດງໃຫ້ເຫັນວ່າຄວາມຕ້ອງການທີ່ຫຼາກຫຼາຍຂອງຊາວກະສິກອນໃນສປປ ລາວສາມາດຕອບສະໜອງໃຫ້ບັນລຸໄດ້ກໍ່ຕໍ່ເມື່ອລະບົບ-ຮູບແບບການສົ່ງເສີມມີລັກສະນະສັງຮວມຮອບດ້ານ, ຊຶ່ງມັນຕ້ອງກວມເອົາຫຼາຍຂະແໜງການເຂົ້າຮ່ວມທັງພາກລັດ ແລະ ເອກະຊົນ, ໂດຍໃຫ້ມີຫຼາຍໆວິທີການສົ່ງເສີມຕ້ອງນຳໃຊ້ເພື່ອກະຈ່າຍບັນດາເຕັກໂນໂລຢີທີ່ແຕກຕ່າງກັນ. ເອກະວິທີການສົ່ງເສີມ ຫຼື ພຽງໝວດໃດນື່ງຂອງຂໍ້ມູນຈະບໍ່ສາມາດສ້າງປະໂຫຍດໃຫ້ແກ່ການ ຜະລິດ ຂອງປວງຊົນສ່ວນໃຫຍ່ໄດ້.

ຂ) ມີຫຼາຍໂຄງການ ຜົນໄດ້ຮັບສະແດງໃຫ້ເຫັນວ່າການຫັນທິດລົງສູ່ຮາກຖານສາມາດ ເຮັດໄດ້. ນະໂຍບາຍຂອງລັດຖະບານໄດ້ຊີ້ບອກແຈ້ງໃຫ້ຄອບຄົວຜູ້ຜະລິດຕັດສິນໃຈເລືອກເອົາການຜະລິດເອງ ແລະ ໃຫ້ພະນັກງານຂັ້ນເມືອງເປັນຜູ້ຮັບຜິດຊອບໃນກິດຈະກຳສົ່ງເສີມເພື່ອຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າ. ແຕ່ສິ່ງທີ່ໄດ້ປະຕິບັດແລະຍັງກຳລັງປະຕິບັດນັ້ນໄດ້ສະແດງໃຫ້ເຫັນວ່າຂີດຄວາມສາມາດຕົວຈິງທີ່ມີ ຫຼື ທີ່ໄດ້ພັດທະນານັ້ນບໍ່ທັນສອດຄ່ອງກັບສະພາວະຄວາມເປັນຈິງພໍເທົ່າໃດ. ການວາງແຜນໃນລະດັບບ້ານຮ່ວມກັບອຳນາດການປົກຄອງທີ່ໄດ້ມີບົດບາດເປັນຝ່າຍປະສານງານນັ້ນສໍ່ສະແດງໃຫ້ເຫັນແລ້ວວ່າມັນເປັນຂໍກຸນແຈ ແຫ່ງຄວາມສຳເລັດຂອງກິດຈະກຳໂຄງການ ແລະ ອີກຢ່າງນື່ງ,ບັນດາຄອບຄົວຜູ້ຜະລິດໃນແຕ່ລະບ້ານໄດ້ມີພູມປັນຍາທີ່ຫຼວງຫຼາຍໃນການນຳໃຊ້ຊັບພະຍາກອນທ້ອງຖິ່ນແລະພາກປະຕິບັດໃນການຜະລິດແຕ່ດັ້ງເດີມມາ, ພຽງແຕ່ເຂົາເຈົ້າຍັງຂາດທັກສະໃນການວິເຄາະວິໃຈ ແລະ ຂາດຄວາມຮູ້ໃນວິທີການໃໝ່ໆເທົ່ານັ້ນ

ຄ) ໃນໄລຍະຜ່ານມາ 10 ປີ ເກືອບທຸກໂຄງການໄດ້ໃຫ້ຄວາມສຳຄັນຕໍ່<u>ການຝຶກອົບຮົມ</u>ນີ້ມັນໄດ້ບົ່ງບອກຢ່າງຈະແຈ້ງວ່າກິດຈະກຳທີ່ໃຫ້ການສຶກສາ ແມ່ນເປັນສ່ວນປະກອບອັນສຳຄັນຕົ້ນຕໍໃນຮູບແບບການສົ່ງເສີມທີ່ຍຶດໝັ້ນໃນທັດສະນະ"ສັງຮວມຮອບດ້ານ ແລະ ການຫັນທິດລົງສູ່ຮາກຖານ". ມີພຽງແຕ່ການຝຶກແບບ ທັງຮຽນ ທັງ ເຮັດ ເທົ່ານັ້ນ ຊາວກະສິກອນ ແລະ ພະນັກງານສົ່ງເສີມຂອງລັດຈະສາມາດພັດທະນາຂີດຄວາມສາມາດໃນການວິເຄາະວິໃຈບັນຫາທີ່ມີໃນຮາກຖານການຜະລິດ ແລະ ວາງແຜນກິດຈະກຳ ແກ້ໄຂເປັນຂອງຕົນເອງໄດ້. ເພື່ອໃຫ້ເກີດຜົນສຳເລັດທີ່ແທ້ຈິງ 'ການຝຶກອົບຮົມ' ຕ້ອງໄດ້ຖືກອອກແບບຢ່າງສອດຄ່ອງກັບບັນຫາທີ່ແທ້ຈິງທີ່ສຳມະນາກອນກຳລັງປະເຊີນໜ້າຢູ່ນັ້ນ ແລະ ກໍ່ຕ້ອງກ່ຽວຂ້ອງກັບການເພີ່ມທັກສະໃນ

ການປະຕິບັດຢູ່ໃນເງື່ອນໄຂຂອງທ້ອງຖິ່ນນັ້ນໆ. ສິ່ງສຳຄັນຕ້ອງໄດ້ຍົກຂຶ້ນອີກຢ່າງນຶ່ງແມ່ນ 'ການຝຶກອົບຮົມແບບນີ້' ຕ້ອງໄດ້ໃຫ້ເວລາແກ່ມັນ. ຝຶກເພື່ອໃຫ້ຄົນເກີດມີ ທັກສະ ນັ້ນ,ອາດໄຊ້ເວລາເປັນອາທິດ, ເປັນເດືອນ ແຕ່ ຫາກບໍ່ແມ່ນໄຊ້ພຽງມື້ນຶ່ງຍາມດຽວ.

ງ) ມີຫຼາຍໂຄງການທີ່ປະຕິບັດໃນ ລາວ ໄດ້ສະແດງໃຫ້ເຫັນເຖິງປະໂຫຍດຂອງ<u>ການພັດທະນາເຕັກໂນໂລຢີແບບມີສ່ວນຮ່ວມ(PTD)</u> ,ຊຶ່ງເປັນການຍົກການທົດລອງໃນສະຖານີໄປສູ່ພື້ນທີ່ການຜະລິດຂອງບ້ານ. ນີ້ເປັນສິ່ງສຳຄັນສຳລັບກິດຈະກຳການສົ່ງເສີມຢູ່ບໍ່ນ້ອຍ, ທັງນີ້ກໍ່ເນື່ອງຈາກວ່າ ຊາວບ້ານ ແລະ ພະນັກງານສົ່ງເສີມເມືອງ ໄດ້ເປັນສ່ວນນຶ່ງໃນຂະບວນການກຳນົດ ແລະ ທົດສອບ ແນວພັນ ແລະ ວິທີການໃໝ່ໆ

ຈ) ວິທີການແບບມີສ່ວນຮ່ວມເຊັ່ນ(PTD) ແລະ PRA ຍັງໄດ້ປະກອບສ່ວນທີ່ສຳຄັນໃນການສ້າງຄວາມເປັນເຈົ້າການໃນວຽກສົ່ງເສີມຢູ່ລະດັບບ້ານ, ໂດຍມີຜົນກ່ຽວພັນກ້າວໄປສູ່ການສ້າງ<u>ຄວາມຍືນນານ</u> ໃຫ້ແກ່ຂະບວນການຮວມທັງຜົນປະໂຫຍດອີກດ້ວຍ. ເຖິງແມ່ນວ່າຄວາມຍືນນານນັ້ນຈະບັນລຸໄດ້ຍາກ ໃນ ສປປ ລາວ, ກໍ່ເນື່ອງຈາກວ່າທຳມະຊາດຂອງໂຄງການແມ່ນມີອາຍຸດຳເນີນການສັ້ນຫຼືຈຳກັດຮວມທັງມີການໃຫ້ສິ່ງຈູງໃຈສ່ວນນ້ອຍນຶ່ງໃນເວລາປະຕິບັດ,ສະນັ້ນເມື່ອໂຄງການໝົດໄປສິ່ງດັ່ງກ່າວກໍ່ເສື່ອມຖອຍລົງໄປດ້ວຍ.

ສ) ຍັງມີຫຼາຍຮູບແບບທີ່ແຕກຕ່າງກັນໃນການທົດລອງ ສ້າງ<u>ແຫຼ່ງການເງິນ</u>ໃນວຽກສົ່ງເສີມ. ເຖິງແມ່ນໄດ້ມີການສືບຕໍ່ສະໜອງທຶນສ່ວນໃດນຶ່ງໃຫ້ແກ່ວຽກດັ່ງກ່າວເພື່ອໃຫ້ຊາວກະສິກອນມີສ່ວນຮ່ວມ, ແຕ່ມັນໄດ້ບົ່ງບອກວ່າຊາວບ້ານສ່ວນຫຼາຍຈະເກີດມີທັດສະນະລໍຄອຍ, ຫາກປັດສະຈາກການມີຄ່າຈ້າງ. ແຕ່ໃນບາງກໍລະນີຊາວບ້ານພ້ອມທີ່ຈະຈ່າຍຄ່າຕອບແທນແກ່ການໃຫ້ບໍລິການ ແນະນຳ ແລະ ການຝຶກ ຈາກສະມາຊິກຊຸມຊົນຄົນອື່ນ,ຊຶ່ງສິ່ງນີ້ຈະກ້າວໄປສູ່ການສ້າງປະໂຫຍດ ດ້ານການເງິນໃນການສົ່ງເສີມຂຶ້ນມາໄດ້. ຊາວບ້ານຈະມີຄວາມກະຕືລືລົ້ນຖ້າເຂົາເຈົ້າຫາກໄດ້ ເຂົ້າຮ່ວມໃນຂະບວນການວາງແຜນກິດຈະກຳເພື່ອການຮຽນຮູ້ ເພາະເຂົາ ເຂົ້າໃຈໄດ້ເຖິງປະໂຫຍດ ທີ່ຈະໄດ້ຮັບ. ສ່ວນການເລີ່ມຕົ້ນສ້າງປະໂຫຍດແກ່ການຜະລິດນັ້ນ, ແຫຼ່ງທຶນສຳຄັນ ອາດມາຈາກ "ການອອມຊັບ" ແລະ "ກອງທຶນໝູນວຽນ" ແມ່ນສາມາດດຳເນີນການໄດ້.

ຊ) ຍັງມີຫຼາຍປະສົບການກ່ຽວກັບ<u>ການສ້າງຄວາມເຂັ້ມແຂງຂອງອົງກອນ</u> ໃນລະດັບເມືອງ ແລະ ແຂວງ. ມັນໄດ້ສໍ່ສະແດງໃຫ້ເຫັນວ່າປະສິດຕິພາບຂອງໂຄງການສົ່ງເສີມ ບໍ່ຈຳເປັນຕ້ອງມີການລົງທຶນກ້ອນໃຫຍ່ໂຕແຕ່ຢ່າງໃດເພື່ອການກໍ່ສ້າງແລະ ປະກອບເຄື່ອງອຸປະກອນທັນສະໃໝ. ແຕ່ເນື່ອງຈາກລະດັບອັດຕາເງິນເດືອນພະນັກງານຕ່ຳແລະການຄົມມະນາຄົມຫຍຸ້ງຍາກຈຶ່ງເປັນຜົນກະທົບສຳຄັນຕໍ່ຄວາມກະຕືລືລົ້ນໃຫ້ແກ່ພະນັກງານໃນການລົງພາກສະໜາມ.. ອີກຢ່າງນຶ່ງ,ການຮັກສາບົດບາດໃນການວາງແຜນ ແລະ ການຈັດການບໍລິຫານຂອງຊ່ຽວຊານຕ່າງປະເທດໃນໂຄງການກໍ່ເປັນສ່ວນນຶ່ງທີ່ເຮັດໃຫ້ຄວາມຫ້າວຫັນຮ່ວມວຽກຂອງພະນັກງານລັດ

ລິດລົງ.. ແລະ ຍັງມີຄວາມເຂົ້າໃຈທີ່ສັບສົນຕໍ່ເປົ້າໝາຍຂອງໂຄງການເຊັ່ນ " ເປັນການທົດສອບ" ແລະ ເພື່ອ "ສ້າງ ຄວາມເຂັ້ມແຂງ" ຈິ່ງບໍ່ໄດ້ເກີດມີການຜັນຂະຫຍາຍຜົນອອກສູ່ວົງກ້ວາງ.

໑) ບ່ອນໃດທີ່ການຂະຫຍາຍຜົນອອກສູ່ວົງກ້ວາງໄດ້,ກໍ່ຕໍ່ເມື່ອມີການປະສົມປະສານ ລະວ່າງປັດໃຈ 1) ມີຄວາມເອກະພາບສູງໃນດ້ານຂະບວນການປະຕິບັດສຳລັບການສົ່ງເສີມທີ່ ຍຶດຖືການສ້າງກຸ່ມອັນໄດ້ທົດສອບ ແລະ ມີເອກະສານເປັນທາງການແລ້ວ, 2) ມີລະບົບການຝຶກທີ່ເປັນລຳດັບຂັ້ນທີ່ສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ລະດັບແຂວງລົງສູ່ເມືອງ ແລະ ເມືອງລົງສູ່ບ້ານເປັນຕົ້ນ, 3) ເຕັກໂນໂລຢີການຜະລິດ ຫຼື ວິທີການປະຕິບັດທີ່ກໍ່ໃຫ້ເກີດຜົນປະໂຫຍດທາງການເງິນໄດ້ກັບການຜະລິດທີ່ມີຢູ່ຢ່າງຮູບປະທຳ. ແຕ່ກົງກັນຂ້າມ,ຖ້າເປັນຮູບແບບການສົ່ງເສີມທີ່ ເນັ້ນໃສ່ແຕ່ ການຝຶກ ສ້າງເປັນ"ຄອບຄົວຕົວແບບ" ດ້ວຍຮູບການທັງລະດົມ ແລະສະໜອງນັ້ນ ຫຼື ຍູ້ໃຫ້ນຳໃຊ້ ລະດັບເຕັກໂນໂລຢີສະເພາະໃດນຶ່ງ ແມ່ນບໍ່ເກີດຜົນສຳເລັດໄດ້ໃນທາງກ້ວາງ, ຫາກເປັນ ພຽງແຕ່ການສ້າງແປງສາທິດເພື່ອເປັນຕົວຢ່າງໃນພື້ນທີ່ການຜະລິດໃດນຶ່ງເທົ່ານັ້ນ.

໓) ໃນທີ່ສຸດຈາກການປະເມີນຜົນໂຄງການສົ່ງເສີມຕ່າງໆໄດ້ມີຂໍ້ສະຫຼຸບອອກມາວ່າ ຂອດການປະສານສົມທົບລະວ່າງຂະແໜງການໃນລະດັບສູນກາງມີຄວາມຈຳເປັນສູງສຸດ, ຖ້າຢາກໃຫ້ການບໍລິການວຽກສົ່ງເສີມມີການປັບປຸງໃນຂອບເຂດທົ່ວປະເທດໄດ້. ແລະ ຖ້າຢາກໃຫ້ຂະບວນການປັບປຸງດຳເນີນການຢ່າງມີປະສິດຕິພາບ,ເປັນລະບົບ,ການຈັດຕັ້ງ ແລະພາລະບົດບາດໃນການຊີ້ນຳ/ນຳພາຂອງພາກລັດຖະບານໃນວຽກດັ່ງກ່າວຕ້ອງມີຄວາມກະຈ່າງແຈ້ງໃນທຸກລະດັບ. ໂຄງການຊ່ວຍເຫຼືອຕ່າງປະເທດສາມາດທົດສອບ ຮູບແບບໃໝ່ໆ ແລະ ຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ອົງກອນລັດດັ່ງກ່າວ, ແຕ່ຈະບໍ່ແມ່ນຜູ້ກຳນົດທິດທາງໃດໆສຳລັບການກໍ່ໃຫ້ເກີດການ ບໍລິການວຽກສົ່ງເສີມທີ່ເຂັ້ມແຂງ ແທນການຈັດຕັ້ງຂອງກອງສົ່ງເສີມແຫ່ງຊາດ. ຂໍ້ສະຫຼຸບ ແລະ ທິດນຳດັ່ງກ່າວໄດ້ນຳສະເໜີໃນກອງປະຊຸມລາຍງານການສຶກສາວຽກສົ່ງເສີມທີ່ຈັດຂຶ້ນໃນເດືອນ ຕຸລາ ປີ 2002 ແລະກໍ່ໄດ້ມີຂໍ້ສະຫຼຸບເຖິງຄວາມຈຳເປັນຕ້ອງມີທິດການປັບປຸງທີ່ຈະແຈ້ງໃນທຸກ ລະດັບຂັ້ນການຄຸ້ມຄອງ, ຊຶ່ງກອງປະຊຸມດັ່ງກ່າວແມ່ນເປັນເຈົ້າການຈັດຂຶ້ນໂດຍກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ(NAFES) ແລະມີຕົວແທນຈາກໂຄງການສົ່ງເສີມຕ່າງໆທີ່ຂຶ້ນກັບອີກ 8 ໂຄງການເຂົ້າຮ່ວມ. ກອງປະຊຸມໄດ້ໃຫ້ຂໍ້ສະເໜີວ່າຕ້ອງມີການພັດທະນາເປັນເອກະສານແນະນຳທາງການ ໂດຍມີການອະນຸມັດແລະມີການແຈກຢາຍໃຫ້ພະນັກງານສົ່ງເສີມໃນຂອບເຂດທົ່ວປະເທດ[18].

## 2.6 LEAP ແລະ ການດັດສົມບັນດາປະສົບການສົ່ງເສີມໃນລາວ

ໂຄງການສົ່ງເສີມກະສິກຳ (LEAP) ເປັນໂຄງການທີ່ເນັ້ນສ້າງຄວາມເຂັ້ມແຂງອົງກອນ ທີ່ຂຶ້ນກັບກອງສົ່ງເສີມແຫ່ງຊາດ. ໃນໄລຍະທີ 1 ຂອງການດຳເນີນການແມ່ນ ເລີ່ມແຕ່ ເດືອນ ພະຈິກ

2001 ເຖິງ ເດືອນ ທັນວາ 2004. ໄດ້ມີການສືບຕໍ່ໄລຍະດໍາເນີນການຊ່ວງທີ 2 ເລີ່ມແຕ່ 2005 ຫາ 2007. ເປົ້າໝາຍຂອງໂຄງການ ແມ່ນ:

*ເພື່ອສະໜັບສະໜູນການພັດທະນາລະບົບສົ່ງເສີມ ທີ່ຍູ້ແຮງການຫັນລົງສູ່ພື້ນຖານການຜະລິດ, ມີສ່ວນຮ່ວມ,ຜູກພັນຫຼາຍພາກສ່ວນ ແລະ ມີຄວາມຍືນນານເຂົ້າເຖິງທຸກເພດທຸກໄວຢ່າງສະເໝີພາບ.*

ຍຸດທະສາດຂອງໂຄງການແມ່ນການຮັບໄຊ້ການຜັນຂະຫຍາຍນະໂຍບາຍຂອງລັດຖະບານທີ່ໄດ້ກໍານົດໃນດໍາລັດ 01 ຂອງນາຍົກລັກຖະມົນຕີ ແລະ ວິໄສທັດໃນການພັດທະນາຂະແໜງການຂອງກະຊວງກະສິກໍາ ແລະ ປ່າໄມ້. ໂຄງການສົ່ງເສີມກະສິກໍາໄດ້ພັດທະນາຂື້ນບົນພື້ນຖານປະສົບການໃນວຽກສົ່ງເສີມຜ່ານມາຂອບັນດາໂຄງການສໍາຄັນເຊັ່ນ: FIAT, PEP LSFP ແລະ FAO-IPM. ແລະໃນທີ່ສຸດໂຄງການກໍ່ໄດ້ດັດສົມບົດຮຽນທີ່ມີຈາກ ກະຊວງກະສິກໍາ ແລະ ປ່າໄມ້ ແລະ ຈາກບັນດາອົງການຈັດຕັ້ງສາກົນຕ່າງໆໃນຊ່ວງ 10 ປີຜ່ານມາ

ອົງປະກອບໜ້າວຽກທີ່ສໍາຄັນຂອງໂຄງການມີ ສີ່ຢ່າງສໍາຄັນຄື:

- ພັດທະນາວິທີການສົ່ງເສີມບົນພື້ນຖານຄວາມຕ້ອງການຈາກພື້ນຖານ ແລະ ຈາກກົນໃກການ ຄຸ້ມຄອງ
- ເສີມສ້າງຄວາມເຂັ້ມແຂງຂອງອົງກອນເພື່ອຈັດຕັ້ງປະຕິບັດລະບົບການສົ່ງເສີມທີ່ເນັ້ນການຫັນລົງສູ່ຮາກຖານ
- ຈັດຕັ້ງລະບົບການຝຶກ ແລະ ຕິດຕາມຊຸກຍູ້ໂດຍຖືເອົາພາກສ່ວນສູນກາງ ແລະ ແຂວງເປັນຫົວໜ່ວຍສໍາຄັນ
- ສ້າງລະບົບການປະເມີນຜົນເພື່ອກໍານົດໄດ້ປະສິດຕິພາບຂອງການສົ່ງເສີມ

ໃນຊ່ວງໄລຍະທີ 1 ການຊ່ວຍສະໜັບສະໜູນຈາກຊ່ຽວຊານຕ່າງປະເທດທັງໄລຍສັ້ນ ແລະ ຍາວແມ່ນເນັ້ນໃສ່ການສ້າງຄວາມເຂັ້ມແຂງຂອງໜ່ວຍຝຶກອົບຮົມ ແລະ ສົ່ງເສີມຂັ້ນສູນກາງຮວມທັງການ ຝຶກຊາວກະສິກອນ ເພື່ອເປົ້າໝາຍເປັນຈຸດທົດລອງຕົວຢ່າງໃນ 98 ບ້ານ. ໃນໄລຍະຊ່ວງທີ 2 ຂອງໂຄງການຈະໄດ້ໃຫ້ການສະໜັບສະໜຸນການກະຈ່າຍລະບົບການຝຶກອົບຮົມອອກສູ່ວົງກ້ວາງໃຫ້ຄົບ 18 ແຂວງໃນທົ່ວປະເທດ ແລະ ໃຫ້ການສະໜັບສະໜຸນການສ້າງ"ພັນທະພາບວຽກສົ່ງເສີມ" ໜ່ວຍປະຕິບັດງານດັ່ງກ່າວຈະຖືກຄຸ້ມຄອງໂດຍກົງຈາກກອງສົ່ງເສີມແຫ່ງຊາດ/ກະຊວງ ກ ປ ແລະ ດໍາເນີນການເປັນຫົວໜ່ວຍແລກປ່ຽນຂໍ້ມູນຂ່າວສານ, ປະສານງານລະວ່າງອົງການຈັດຕັ້ງພາຍໃນແລະ ຕ່າງປະເທດທີ່ມີຄວາມສົນໃຈຢາກຊ່ວຍສືບຕໍ່ການພັດທະນາລະບົບສົ່ງເສີມຂອງ ສ ປ ປ ລາວ

LEAP ໄດ້ຮັບການຊ່ວຍເຫຼືອດ້ານງົບປະມານຈາກອົງການ SDC ປະເທດ ສະວິດສະແລນໂດຍຜູ້ຈັດຕັ້ງປະຕິບັດແມ່ນ ອົງກອນ Helvetas, ສິ່ງສຳຄັນກ່ວາໝູ່ແມ່ນຮູບແບບການສົ່ງເສີມທີ່ກຳລັງດຳເນີນການຈັດຕັ້ງປະຕິບັດໂດຍມີໂຄງການສະໜັບສະໜູນຢູ່ນີ້ບໍ່ແມ່ນເປັນລະບົບຂອງ ປະເທດສະວິດສະແລນ ຫຼື ຂອງ ໂຄງການ LEAP ແຕ່ມັນຫາກແມ່ນລະບົບສົ່ງເສີມກະສິກຳແລະປ່າໄມ້ ລວມຂອງທົ່ວປະເທດ ຊຶ່ງຮຽກໄດ້ວ່າເປັນ " ຮູບແບບການສົ່ງເສີມຂອງລາວ ຫຼື L E A- ***Lao Extension Approach"***.

ກຳນົດໄລຍະດຳເນີນການຂອງ LEAP ແມ່ນ:

<u>2001</u>

- ເລີ່ມໂຄງການ ໃນເດືອນ ພະຈິກ
- ທົດລອງນຳໃຊ້ໃນແຂວງ ຈຳປາສັກ, ສາລະວັນ ແລະ ຫຼວງພະບາງ
- ຈັດກອງປະຊຸມຕີລາຄາຜົນໄດ້ຮັບໃນເຂດທົດລອງ

<u>2002</u>

- ດຳເນີນການຝຶກຄູຝຶກສູນກາງຄັ້ງທີ່ 1
- ເລີ່ມຈັດຕັ້ງຂະບວນການຝຶກ ໃຫ້ແຂວງ ແລະ ເມືອງ
- ສຶກສາຮູບແບບການສົ່ງເສີມທີ່ມີໃນ ລາວ ແລະ ຈັດກອງປະຊຸມທົບທວນຜົນໄດ້ຮັບ

<u>2003</u>

- ຈັດຕັ້ງໂຄງການຮຽນຮູ້ໃນລະດັບບ້ານຢູ່ໃນ 9 ເມືອງ
- ຈັດຕັ້ງກອງປະຊຸມສົ່ງເສີມທົ່ວປະເທດ ໂດຍ ກອງສົ່ງເສີມ ແຫ່ງຊາດ
- ຈັດຝຶກອົບຮົມດ້ານບົດບາດຍິງຊາຍໃນວຽກສົ່ງເສີມໃຫ້ພະນັກງານ NAFES

<u>2004</u>

- ຈັດພິມເອກະສານແນະນຳ ການຝຶກຕ່າງໆ ທີ່ໄດ້ທົດສອບນຳໃຊ້ມາແລ້ວ
- ດັດສົມ ຮູບແບບການສົ່ງເສີມ
- ວາງແຜນສຳລັບຊ່ວງໄລຍະທີ່ ສອງຂອງ LEAP

ຕົກຮອດປີ 2004 ຊາວກະສິກອນຫຼາຍກ່ວາ ພັນຄົນໄດ້ເຂົ້າຮ່ວມກິດຈະກຳການຝຶກອົບຮົມຂອງໂຄງການ. ຊາວກະສິກອນທີ່ໄດ້ຮ່ວມນັ້ນໄດ້ໃຫ້ການລາຍງານວ່າຜົນຜະລິດລວມເຂົ້າໄດ້ເພີ່ມຂຶ້ນເຖິງທົບຕົວ(100%) ແລະ ຜົນການລ້ຽງສັດ ແມ່ນນອນໃນ 40-50%ເພີ່ມຂຶ້ນຈາກເດີມ.

ການມີຜົນຜະລິດເພີ່ມຂຶ້ນແມ່ນເປັນສິ່ງທີ່ຢັ້ງຢືນຜົນສຳເລັດ. ແຕ່ເປົ້າໝາຍສຳຄັນຂອງໂຄງການແມ່ນເນັ້ນໃສ່ການຊ່ວຍພັດທະນາລະບົບ-ຮູບແບບການສົ່ງເສີມແຫ່ງຊາດ. ໂດຍມີການທົດສອບໃນບັນດາກຸ່ມບ້ານທີ່ ມີລັກສະນະທາງກາຍະພາບແຕກຕ່າງກັນທັງໃນພາກເໜືອ ແລະ ພາກໄຕ້

ຂອງປະເທດ ແລະ ໂດຍມີການເຮັດວຽກກັບຫຼາຍລະດັບການຄຸ້ມຄອງຂອງລັດ ແຕ່ຂັ້ນສູນກາງ, ແຂວງ ແລະ ເມືອງນັ້ນ, ໂຄງການໄດ້ສະແດງໃຫ້ເຫັນເຖິງຄວາມເປັນໄປໄດ້ ແລະ ຄວາມມີປະສິດຕິພາບໃນຮູບແບບການສົ່ງເສີມທີ່ໄດ້ດັດສົມນີ້,ອັນປະກອບມີ ສອງພາກສ່ວນທີ່ກົມກຽວກັນຄື:

- ພາກ ບໍລິການສົ່ງເສີມຂອງລັດ,ອັນປະກອບມີນັກສົ່ງເສີມຮອບດ້ານໃນລະດັບເມືອງ, ໂດຍມີການສະໜັບສະໜູນທາງວິຊາການສະເພາະດ້ານຈາກພະນັກງານໃນຂັ້ນແຂວງ
- ພາກ ລະບົບການສົ່ງເສີມຂັ້ນບ້ານ,ອັນປະກອບມີ"ການສ້າງໂຄງການຮຽນຮູ້"ທີ່ດຳເນີນການເປັນກຸ່ມຜະລິດ,ຜູ້ເອື້ອອຳນວຍການຮຽນຮູ້ແມ່ນວິຊາການບ້ານ ໂດຍນັກສົ່ງເສີມເມືອງຄອຍໃຫ້ການສະໜັບສະໜູນ

ຮູບແບບການສົ່ງເສີມທີ່ດັດສົມນີ້ໄດ້ຮັບການທົດສອບມາແລ້ວໂດຍກອງສົ່ງເສີມພາຍໃຕ້ການສະໜັບສະໜູນຂອງໂຄງການ LEAP ແລະ ໄດ້ໃຫ້ຊື່ວ່າ " ***ຮູບແບບການສົ່ງເສີມຂອງລາວ***" ຫຼື ***Lao Extension Approach*** ດັ່ງຈະໄດ້ອະທິບາຍລະອຽດໃນພາກທີ 3 ຂອງເອກະສານນີ້

ໂຄງການ LEAP ບໍ່ໄດ້ມີຊັບພະຍາກອນພຽງພໍເພື່ອສະໜັບສະໜູນກິດຈະກຳການສົ່ງເສີມໄດ້ໃນທຸກສ່ວນຂອງປະເທດ. ດ້ວຍເຫດນັ້ນການຂະຫຍາຍການນຳໄຊ້ຈິ່ງຂຶ້ນຢູ່ກັບການປະກອບສ່ວນຂອງບັນດາອົງກອນຜູ້ໃຫ້ທຶນແລະ ໂຄງການຕ່າງໆ. ແຕ່ກໍ່ບໍ່ໄດ້ໝາຍວ່າຕ້ອງໄດ້ໃຫ້ທຶນສະໜັບສະໜູນແກ່ໂຄງການ LEAP ແຕ່ຢ່າງໃດ, ນອກຈາກຢາກໃຫ້ມີການນຳໄຊ້ຫຼັກການ ແລະ ຂະບວນການຂອງຮູບແບບການສົ່ງເສີມຂອງລາວບົນພື້ນຖານການສັນຫາ ແລະ ນຳໄຊ້ຊັບພະຍາກອນມະນຸດ ທີ່ຫຼາຍໂຄງການໄດ້ພັດທະນາມາແລ້ວນັ້ນເຊັ່ນ: ຄູຝຶກຂອງໂຄງການ FIAT, PEP ຊຶ່ງເປັນໂຄງການທີ່ມີວິທີການຝຶກ ແລະ ສົ່ງເສີມຄ້າຍຄຽງກັນນີ້

# ພາກທີ 3 ອະທິບາຍຮູບ"ແບບການສົ່ງເສີມຂອງລາວ"

## 3.1 ເຫດຜົນໃນການດັດສົມຮູບແບບຕ່າງໆເພື່ອການສົ່ງເສີມ

### *3.1.1 ນະໂຍບາຍຂອງລັດຖະບານ*

ນະໂຍບາຍການສົ່ງເສີມກະສິກຳ ແລະປ່າໄມ້ທີ່ໄດ້ລະບຸອອກໃນ"ວິໄສທັດໃນການພັດທະນາຂະແໜງການກະສິກຳ" 1999. ສ່ວນທີ່ສຳຄັນຄັດອອກຈາກເອກະສານດັ່ງກ່າວຈະໄດ້ລະບຸ ດັ່ງຕໍ່ໄປນີ້:

*"ທຸກການບໍລິການຕ້ອງມາຈາກຄວາມຕ້ອງການຂອງຊາວກະສິກອນ" (ໜ້າ* xi)

*"ສະໜັບສະໜູນໃຫ້ມີການປັບປຸງໂຄງສ້າງການຈັດຕັ້ງໃຫ້ກະທັດລັດ,ເພື່ອຍົກປະສິດຕິພາບຂອງກະຊວງກະສິກຳ ແລະປ່າໄມ້ໃນການຕອບສະໜອງບໍລິການຊາວກະສິກອນໄດ້ຢ່າງທັນສະພາບ ແລະຍົກສູງຂອດການປະສານສົມທົບລະວ່າງຂະແໜງການໃຫ້ມີຄວາມໜັກແໜ້ນ. ນຳໃຊ້ຮູບແບບການກຳນົດບັນຫາມາ"ຈາກພື້ນຖານ"ໂດຍການມີສ່ວນຮ່ວມຢ່າງເປັນເຈົ້າການ ຂອງອຳນາດການປົກຄອງບ້ານ (ໜ້າ* xii)

*"ຮູບແບບດັ່ງກ່າວໄດ້ເນັ້ນໜັກ 1) ຊຸກຍູ້ໃຫ້ພື້ນຖານການຜະລິດໄດ້ມີການກຳນົດແຈ້ງ ບັນຫາຂອງຕົນເອງ, 2) ຊ່ວຍເຫຼືອພື້ນຖານການຜະລິດໃນການຊອກຫາທາງອອກເພື່ອແກ້ບັນຫາ ແລະ 3) ສ້າງໂອກາດແລະເງື່ອນໄຂໃຫ້ແກ່ເຂົາເຈົ້າໄດ້ເຂົ້າເຖິງແລ່ງຊັບພະຍາກອນເພື່ອແກ້ບັນຫາຂອງຕົນເອງໃຫ້ໄດ້ ( ໜ້າ* 49)

*"ພະນັກງານ ກ ປ ເມືອງທີ່ມີໃນແຕ່ລະຂະແໜງການຕ້ອງໄດ້ຮັບການຝຶກໃຫ້ເປັນນັກສົ່ງເສີມການຜະລິດຮອບດ້ານ (as FSEW) ໂດຍໃຫ້ຮູ້ຈັກຫຼາຍໆໜ້າວຽກ..ຄວາມສາມາດ( ທັກສະ) ແລະ ກິດຈະກຳທີ່ຕ້ອງປະຕິບັດຕ້ອງສ້າງໃຫ້ສອດຄ່ອງກັບລັກສະນະສະເພາະຂອງແຕ່ລະເຂດການຜະລິດ (ໜ້າ* 49)

ຄວາມພະຍາຍາມຂອງລັດຖະບານໃນການປັບປຸງລະບົບການສົ່ງເສີມກໍ່ໄດ້ລະບຸແຈ້ງໃນຍຸດທະສາດການລຶດຜ່ອນຄວາມທຸກຍາກຂອງປະເທດ(NGPES ,2004). ໃນຍຸດທະສາດດັ່ງກ່າວແມ່ນໄດ້ໃຫ້ບູລິມະສິດກັບວຽກຂະແໜງການກະສິກຳ ແລະ ປ່າໄມ້

*"ຕ້ອງທັບການວາງແຜນໃຫ້ມີສ່ວນຮ່ວມແລະມາຈາກຮາກຖານຢ່າງຂາດຕົວ.. (ໜ້າ* 60)

*"ເສີມສ້າງຂີດຄວາມສາມາດຂອງ ພະແນກກະສິກຳ ແລະ ໄມ້ແຂວງ ແລະ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ"* (ໜ້າ 60)

*"ພັດທະນາລະບົບການສົ່ງເສີມແບບປະສົມປະສານເພື່ອກະຈ່າຍເຕັກໂນໂລຢີໃຫ້ໄປເຖິງຄອບຄົວປະຊາຊົນທີ່ທຸກຍາກ, ໂດຍສະເພາະໃນເຂດພູດອຍ ແລະ ປັບປຸງຄວາມສາມາດຂອງກອງສົ່ງເສີມແຫ່ງຊາດ(NAFES)"* (ໜ້າ 61)

*"ເຮັດໃຫ້ການຄົ້ນຄ້ວາທົດລອງ(NAFRI) ແລະ ວຽກງານການສົ່ງເສີມ(NAFES)ຮັບໄຊ້ຄວາມຕ້ອງການ ຂອງພື້ນຖານການຜະລິດ"* (ໜ້າ 61)

ຍຸດທະສາດການລຶດຜ່ອນຄວາມທຸກຍາກແຫ່ງຊາດ(NGPES)ຍັງໄດ້ຍົກປະເດັນບົດບາດຍິງຊາຍຂຶ້ນຊຶ່ງປະກອບມີ: *"ການຈັດຕັ້ງ,ສັບຊ້ອນພະນັກງານໃນລະດັບແຂວງ,ເມືອງ ແລະ ພະນັກງານສົ່ງເສີມ"ຕ້ອງເຫັນ ຄວາມສຳຄັນຕໍ່ບົດບາດຂອງເພດຍິງ"ໃນການຊຸກຍູ້ໃຫ້ເກີດ ການປັບປຸງແບບແຜນການຜະລິດ"* (ໜ້າ 114)

ອີກຢ່າງນື່ງທີ່ NGPES ໄດ້ໃຫ້ຄວາມສຳຄັນກັບການຮັກສາສະພາບແວດລ້ອມຊຶ່ງປະກອບມີ: *"ຊຸກຍູ້ໃຫ້ເກີດການມີສ່ວນຮ່ວມຂອງຊາວບ້ານ, ໂດຍສະເພາະຜູ້ທຸກຍາກໃນການກະກຽມ ແລະ ຈັດຕັ້ງປະຕິບັດແຜນງານທັງໃນລະດັບຊາດ ແລະແຜນລະດັບ ທ້ອງຖິ່ນ,ຮວມທັງ ນະໂຍບາຍ, "ຍຸດທະສາດ"ແລະ"ຊຸກຍູ້ໃຫ້ເກີດການມີສ່ວນຮ່ວມຂອງຜູ້ທຸກຍາກໃນການຄຸ້ມຄອງຊັບພະຍາກອນທຳມະຊາດໂດຍຜ່ານການເສີມສ້າງຄວາມເຂັ້ມແຂງຂອງຊຸມຊົນເຂົ້າໃນການຄຸ້ມຄອງຊັບພະ ຍາກອນດັ່ງກ່າວ"* (ໜ້າ 117).

### *3.1.2 ສິ່ງທ້າທ້າຍສຳລັບການສົ່ງເສີມໃນຕໍ່ໜ້າ*

ລະບົບການສົ່ງເສີມກະສິກຳ ແລະ ປ່າໄມ້ຂອງ ສປປ ລາວໃນຕໍ່ໜ້າຈະຕ້ອງດຳເນີນການໂດຍອີງໃສ່ກອບນະໂຍບາຍຂອງລັດຖະບານແລະຕ້ອງຍຶດຖືບົດຮຽນທີ່ໄດ້ຮັບຈາກອາດີດ. ບັນຫາທີ່ໄດ້ເກີດຂຶ້ນຈາກການລໍຄອຍປະຕິບັດຕາມແຜນຈາກສູນກາງ ແລະ ຮູບການສົ່ງເສີມໄປຕາມຂະແໜງການນັ້ນບໍ່ຄວນໃຫ້ເກີດລົ້ມຄືນອີກ. ພະລະບົດບາດ ຂອງກະຊວງ ກະສິກຳໃນຖານະຜູ້ຮັບຜິດຊອບທົ່ວປະເທດຄວນໄດ້ຮັບການປະສົມປະສານບັນດາບົດຮຽນທີ່ດີໆຈາກຜົນສຳເລັດຂອງ

ບັນດາໂຄງການທີ່ໄດ້ຮັບການສະໜັບສະໜູນຈາກຜູ້ໃຫ້ທຶນຕ່າງໆນັ້ນ.ສິ່ງທ້າທາຍກໍ່ຄືການສ້າງລະບົບການສົ່ງເສີມ *ທີ່ຍູ້ແຮງການຫັນລົງສູ່ພື້ນຖານການຜະລິດ, ມີສ່ວນຮ່ວມ,ຜູກພັນຫຼາຍພາກສ່ວນ ແລະ ມີຄວາມຍືນຍາວ.* ລະບົບດັ່ງກ່າວຕ້ອງສ້າງປະໂຫຍດໃຫ້ທັງເພດຍິງແລະຊາຍຈາກທຸກຊົນຊາດຊົນເຜົ່າໃນຂອບເຂດທົ່ວປະເທດ.

ສິ່ງທີ່ຕ້ອງໄດ້ພະຍາຍາມເພື່ອຜ່ານຜ່າສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກຕ່າງໆກໍ່ຄືການເຫັນໄດ້ບັນຫາຕ້ອງແກ້ໄຂເພື່ອກ້າວເດີນຕໍ່ໄປນັ້ນປະກອບມີ:

- *ການຂາດຂໍ້ແນະນໍາລະອຽດໃນການຈັດຕັ້ງປະຕິບັດລະບົບການສົ່ງເສີມ,ອັນເປັນຂໍ້ຫຍຸ້ງຍາກບໍ່ນ້ອຍ ແລະ ເອກະສານສະບັບນີ້ແມ່ນໄດ້ພະຍາຍາມເລັ່ງໃສ່ການແກ້ໄຂສິ່ງດັ່ງກ່າວ.*

- *ຄວາມຮູ້ ແລະ ປະສົບການຂອງນັກສົ່ງເສີມໃນການໃຫ້ບໍລິການໃນວຽກນີ້ມີຈໍາກັດ, ແຕ່ມີບາງໂຄງການທີ່ໄດ້ຊ່ວຍໃນການປະຕິບັດພາລະກິດດັ່ງກ່າວມາແລ້ວເຊັ່ນ* FIAT, PEP, LSFP ແລະ LEAP .

- *ຂາດງົບປະມານ ແລະ ອຸປະກອນທີ່ຈໍາເປັນພື້ນຖານເພື່ອຈັດຕັ້ງປະຕິບັດວຽກສົ່ງເສີມຖ້າທຽບໃສ່ບົດບາດແລະຂອບເຂດຄວາມຮັບຜິດຊອບທີ່ຕ້ອງໄດ້ປະຕິບັດ. ສະນັ້ນຈຶ່ງມີຄວາມຈໍາເປັນຕ້ອງໄດ້ໃຫ້ການສະໜັບສະນູນຢ່າງຈິງຈັງຈາກພາກລັດ ແລະ ໂຄງການຊ່ວຍເຫຼືອຂອງຕ່າງປະເທດ.*

- *ການປະສານສົມທົບໃນການວາງແຜນ ແລະ ປະຕິບັດລະວ່າງພາກສ່ວນກ່ຽວຂ້ອງແລະບັນດາໂຄງການຍັງມີຈໍາກັດ. ແລະ ເອກະສານສະບັບນີ້ຈະສາມາດຊ່ວຍໃຫ້ຈຸດເລີ່ມຕົ້ນສໍາລັບວຽກງານດັ່ງກ່າວ*

ໃນໄລຍະນີ້ຄວາມສ່ຽງສໍາຄັນ ຕໍ່ຜົນສໍາເລັດໃນການສ້າງລະບົບການສົ່ງເສີມນີ້ກໍ່ຄື ຫຼາຍໆອົງການຈັດຕັ້ງ/ພາກສ່ວນກ່ຽວຂ້ອງມີການລໍຄອຍຊຶ່ງກັນແລະກັນໃນການຈັດຕັ້ງປະຕິບັດຕົວຈິງ. ເມືອງອາດລໍຖ້າແຂວງເຮັດກ່ອນ, ແລະ ແຂວງລໍຖ້າຄໍາສັ່ງຈາກສູນກາງ. ອົງກອນຜູ້ໃຫ້ທຶນລໍຄອຍການຕັດສິນໃຈຂອງລັດຖະບານ ,ຂະນະທີ່ຝ່າຍລັດຖະບານກໍ່ເບິ່ງທ່າອ່ຽງຂອງຜູ້ໃຫ້ທຶນ. ສ່ວນນັກສົ່ງເສີມພາກສະໜາມ,ອໍານາດການປົກຄອງບ້ານ,ກຸ່ມຜະລິດ ແລະ ຄອບຄົວຊາວກະສິກອນກໍ່ໄດ້ແຕ່ລໍຄອຍວ່າໃຜຈະເປັນຜູ້ເລີ່ມຕົ້ນເຮັດກ່ອນໝູ່.ຈາກການລໍຄອຍອັນດົນນານຂອງເຂົາເຈົ້າເລົ່ານັ້ນອາດເກີດຄວາມເບື່ອນ່າຍເຊື່ອມສັດທາຕໍ່ການປະຕິບັດວຽກສົ່ງເສີມໃນທີ່ສຸດ.

ໃນຖານະເປັນສ່ວນນຶ່ງຂອງລະບົບການສົ່ງເສີມແບບມີສ່ວນຮ່ວມ,ທັງໝົດທຸກກຸ່ມແລະການຈັດຕັ້ງເລົ່ານັ້ນແມ່ນມີບົດບາດສໍາຄັນຕ້ອງໄດ້ປະຕິບັດ. ການເລີ່ມຕົ້ນສາມາດດໍາເນີນໄດ້ຈາກທຸກ

ຈຸດ ໃນລະບົບ. ທຸກພາກສ່ວນຄວນມີການວາງແຜນແລະປະຕິບັດກິດຈະກຳຂອງຕົນໄປໂດຍມີການປະສານກັບພາກສ່ວນອື່ນແຕ່ຫົວທີ. ເຖິງເວລາແລ້ວທີ່ພວກເຮົາຕ້ອງໄດ້ຈັບມືຖືແຂນແລະພ້ອມກັນປະຕິບັດຮູບແບບການສົ່ງເສີມ ອັນຈະເປັນການຊ່ວຍປົດປ່ອຍ ສ ປປ ລາວ ໃຫ້ອອກຈາກຄວາມດ້ອຍພັດທະນາ.

## 3.2 ຍຸດທະສາດການສົ່ງເສີມ

### *3.2.1 ຫຼັກການລວມສຳຫຼັບການສົ່ງເສີມໃນ ສ ປປ ລາວ*

ຮູບແບບການສົ່ງເສີມຂອງລາວ(LEA)ຖືກສ້າງຂຶ້ນບົນພື້ນຖານກອບຄວາມຄິດ"ຊາວກະສິກອນເຂົາເຈົ້າຮຽນຮູ້ວິທີການແກ້ໄຂບັນຫາຢ່າງໃດ" ແລະ ຈະມີວິທີສະໜັບສະໜູນໃນຂະບວນການແກ້ບັນຫາຂອງເຂົາເຈົ້າຢ່າງໃດ?. ດັ່ງນັ້ນ,ຈື່ງມີຫຼັກການລວມລຸ່ມນີ້:

<u>ການຫັນລົງສູ່ຮາກຖານ:</u> ມີຫຼາຍແນວຄວາມຄິດທີ່ກ່ຽວຂ້ອງ: ອັນທີນື່ງ,ການຫັນລົງສູ່ຮາກຖານໃນທັດສະນະການສົ່ງເສີມແລ້ວໝາຍວ່າສ້າງການບໍລິການໂດຍປະຊາຊົນດ້ວຍຄວາມເປັນເຈົ້າການໃນທຸກຂັ້ນຕອນຂອງຂະບວນການຮຽນຮູ້ແລະການແກ້ບັນຫາ. ອັນທີສອງ,ການຫັນລົງສູ່ຮາກຖານໃນທັດສະນະການສົ່ງເສີມ ແມ່ນ ບັນດາ ເນື້ອໃນທາງເຕັກນິກການຜະລິດທີ່ນຳສະເໜີຕ້ອງ ກ່ຽວພັນກັບການແກ້ໄຂອຸປະສັກແລະການນຳໄຊ້ທ່າແຮງທີ່ມີໃນທ້ອງຖິ່ນ, ອັນທີສາມແມ່ນການຊ່ວຍເຫຼືອຈາກພາກລັດໃຫ້ແກ່ຊາວກະສິກອນຕ້ອງບົນພື້ນຖານແຜນການມາຈາກຮາກຖານການຜະລິດ ໂດຍມີພະນັກງານເມືອງເປັນຜູ້ເອື້ອອຳນວຍການກຳນົດຄວາມຕ້ອງການຕ່າງໆຢູ່ໃນລະດັບບ້ານ, ພະນັກງານແຂວງຊ່ວຍສະໜັບສະໜູນທີມງານເມືອງ ແລະ ພາກສ່ວນສູນກາງເຮັດໜ້າທີ່ປະສານຍູ້ໜູນຊ່ວຍໃຫ້ການແນະນຳ

<u>ຜູກພັນຫຼາຍພາກສ່ວນ</u> ສິ່ງນີ້ບໍ່ແມ່ນຂັ້ນຕອນຕໍ່ເນື່ອງຈາກການຫັນລົງສູ່ຮາກຖານແຕ່ຢ່າງໃດ. ການຜູກພັນຫຼາຍພາກສ່ວນໝາຍວ່າ ກິດຈະກຳການສົ່ງເສີມທີ່ແຕກຕ່າງກັນຍ່ອມຈະປະຕິບັດໃນພື້ນທີ່ສະເພາະຂອງມັນ ແລະ ກິດຈະກຳເລົ່ານັ້ນຍ່ອມມີການປ່ຽນແປງໃນແຕ່ລະປີ. ສະນັ້ນຍ່ອມຕ້ອງມີຫຼາຍພາກສ່ວນປະຕິບັດ, ດ້ວຍຫຼາຍວິທີ ແລະ ຫຼາຍເນື້ອໃນ/ຫົວຂໍ້. ສິ່ງທີ່ແຕກຕ່າງກັບການຫັນລົງສູ່ຮາກຖານອີກຢ່າງນື່ງກໍ່ຄື ການຜູກພັນຫຼາຍພາກສ່ວນໃນວຽກສົ່ງເສີມ ແມ່ນມັນກວມເອົາຫຼາຍໜ້າວຽກແລະ ຫຼາຍກ່ວານື່ງອົງການຈັດຕັ້ງທີ່ຈະປະຕິບັດໄດ້. ເຖິງແມ່ນວ່າ ກະຊວງ ກະສິກຳ ແລະ ປ່າໄມ້ ມີພາລະບົດບາດ ແລະ ເປັນຜູ້ຮັບຜິດຊອບສຳຄັນໃນວຽກສົ່ງເສີມກະສິກຳ ແລະ ປ່າໄມ້, ແຕ່ກໍ່ມີຄວາມຈຳເປັນຕ້ອງໄດ້ມີການປະກອບສ່ວນຈາກພາກສ່ວນການຈັດຕັ້ງອື່ນ, ທັງພາຍໃນ ແລະ ສາກົນ ຮວມທັງຈາກພາກເອະຊົນ.

<u>ການມີສ່ວນຮ່ວມ:</u> ເປັນສ່ວນປະກອບສຳຄັນຂອງຄວາມເປັນເຈົ້າການໃນພື້ນຖານການຜະລິດ. ປົກກະຕິຈະມີຄວາມເຂົ້າໃຈທີ່ບໍ່ເລິກເຊິ່ງຕໍ່ກອບຄວາມຄິດຂອງການມີສ່ວນຮ່ວມ,ເນື່ອງຈາກວ່າ

ມັນມີຫຼາຍປະເພດ/ລະດັບຂອງການມີສ່ວນຮ່ວມ. ຊາວກະສິກອນອາດຈະມີສ່ວນຮ່ວມໃນວຽກສົ່ງເສີມແບບພໍແລ້ວຮີດບໍ່ກະຕືລືລົ້ນໃນບາງວຽກ, ຕົວຢ່າງໃນການນັ່ງຟັງຜູ້ບັນລະຍາຍບົດຮຽນ, ແຕ່ ເຂົາພັດຫ້າວຫັນໃຫ້ການປະກອບສ່ວນໃນວຽກການເຮັດແປງສາທິດ. ແຕ່ທັງສອງກໍລະນີ ທີ່ກ່າວນີ້ເກີດໄດ້ອາດແມ່ນການວາງແຜນ ແລະ ຈັດຕັ້ງປະຕິບັດຈາກໃຜຄົນນື່ງຕ່າງຫາກ. ແຕ່ລະບົບການສົ່ງເສີມ-ໂດຍປະຊາຊົນຂອງລາວ ອັນໃໝ່ນີ້ ແມ່ນເກີດຂຶ້ນບົນພື້ນຖານການປະສານຮ່ວມແນວຄວາມຄິດຈາກຫຼາຍໆຝ່າຍ.ຊາວບ້ານ ແລະ ອຳນາດການປົກຄອງເປັນຜູ້ມີບົດບາດສູງສຸດໃນການ ວິເຄາະວິໃຈບັນຫາ ແລະ ຕັດສິນໃຈກຳນົດທາງເລືອກເພື່ອແກ້ໄຂ.

<u>ສະໜອງຕາມຄວາມຕ້ອງການ:</u> ມັນເປັນສິ່ງເຊື່ອມໂຍງກັບການມີສ່ວນຮ່ວມ. ຖ້າຊາວກະສິກອນຫາກໄດ້ມີສ່ວນຮ່ວມແນ່ນອນກິດຈະກຳການສົ່ງເສີມກໍ່ເປັນອັນຕອບສະໜອງຄວາມຕ້ອງການຂອງພື້ນຖານການຜະລິດ. ບັນຫາທີ່ແທ້ຈິງກໍ່ເປັນສິ່ງທີ່ຊາວບ້ານຕ້ອງເລັ່ງລັດ ວິເຄາະໃຫ້ອອກ, ຊອກວິທີແກ້ໃຫ້ເຫັນ. ໃນທີ່ສຸດຫຼາຍໆກິດຈະກຳການສົ່ງເສີມກໍ່ຈະເກີດເປັນ "ຮູບແບບການຮຽນຮູ້ ດ້ວຍການທົດລອງ" ໝາຍວ່າເຂົາເຈົ້າໄດ້ເລີ່ມກິດຈະກຳດ້ວຍການທົດສອບປະສົບການທີ່ມີ. ມັນມີຄວາມແຕກຕ່າງກັບວິທີການສົ່ງເສີມທີ່ເນັ້ນເປົ້າໝາຍສະເພາະລາຍບຸກຄົນ,ຊຶ່ງອາດເກີດເປັນພຽງຮູບການລະດົມ,ໝາຍວ່າ ເຂົາເຈົ້າເລີ່ມກິດຈະກຳເພາະຖືກລະດົມໂດຍມີຂໍ້ມູນແບບ ລວມໆ.

<u>ປະສົມປະສານ:</u> ເນື່ອງຈາກວ່າຄວາມຕ້ອງການຂອງຊາວກະສິກອນມີຫຼາຍໆດ້ານພ້ອມກັນ ແລະ ໃນຖານະເປັນສ່ວນນື່ງໃນລະບົບຜູກພັນຫຼາຍພາກສ່ວນ ແລະ ສະໜອງຕາມຄວາມຕ້ອງການ, ກິດຈະກຳການສົ່ງເສີມຕ້ອງເບິ່ງຫຼາຍປະເດັນໄປພ້ອມກັນ. ໃນບ້ານນື່ງຊາວບ້ານກຸ່ມນື່ງອາດຕ້ອງການປັບປຸງການປູກເຂົ້າ, ກຸ່ມນື່ງພັດເປັນການປູກຜັກຂາຍ, ກຸ່ມນື່ງພັດແມ່ນການຈັດການນ້ຳ ແລະ ປ້ອງກັນດິນເຊາະເຈື່ອນ, ອີກກຸ່ມນື່ງພັດແມ່ນການລ້ຽງສັດ, ປູກໄມ້ປ່ອງ.. ໃນທີ່ສຸດມີຄວາມຈຳເປັນທີ່ນັກສົ່ງເສີມຕ້ອງໄດ້ຮັບການຝຶກຕື່ມເພື່ອໃຫ້ມີຄວາມຮູ້ທີ່ເປັນພື້ນຖານຢ່າງຮອບດ້ານເພື່ອຕອບສະໜອງຄວາມຕ້ອງການດັ່ງກ່າວນັ້ນໄດ້.

<u>ຕ້ອງເບິ່ງບົດບາດຍິງຊາຍ:</u> -ນີ້ເປັນສິ່ງສຳຄັນຂອງການມີປະສິດຕິພາບແລະສ້າງຄວາມສະເໝີພາບຂອງລະບົບສົ່ງເສີມ. ຍິງແລະຊາຍຍ່ອມມີບົດບາດຕ່າງກັນໃນການຜະລິດກະສິກຳ, ແລະເຂົາເຈົ້າກໍ່ປະເຊີນໜ້າກັບບັນຫາ, ມີຂໍ້ສະດວກທີ່ແຕກຕ່າງກັນເພື່ອເຂົ້າເຖິງແລ່ງຊັບພະຍາກອນ ແລະ ການບໍລິການຕ່າງໆ . ສະນັ້ນ,ການເອົາໃຈໃສ່ເປັນພິເສດໃນການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳການສົ່ງເສີມຈຶ່ງມີຄວາມສຳຄັນທີ່ສຸດ.ເພາະບາງເທື່ອຈະເກີດປະໂຫຍດສູງສຸດຫາກມີການແຍກໃຫ້ມີກິດຈະກຳຂອງຜູ້ຍິງສະເພາະ. ແມ່ນແຕ່ບາງເລື່ອງທີ່ນັກສົ່ງເສີມເຫັນວ່າຍັງບໍ່ທັນມີຄວາມຈຳເປັນຫຼາຍຕ້ອງໄດ້ແຍກແຕ່ກໍ່ຕ້ອງໃຫ້ແນ່ໃຈວ່າຜົນຂອງກິດຈະກຳສົ່ງເສີມເກີດ ປະໂຫຍດກັບທຸກພາກສ່ວນໃນຊຸມຊົນຊົນນະບົດນັ້ນ.

<u>ສ້າງໜໍ່ແໜງລວມໝູ່:</u> ເປັນນຶ່ງໃນສິ່ງທີ່ສຳຄັນຂອງຄວາມສອດຄ່ອງແລະປະສິດຕິພາບຂອງລະບົບ ສົ່ງເສີມ. ມັນບໍ່ມີຄວາມເໝາະສົມພໍເທົ່າໃດທີ່ການສົ່ງເສີມຕ້ອງເຂົ້າໄປສະໜັບສະໜູນພຽງຄອບຄົວໃດນຶ່ງ ແລະ ກໍ່ເປັນໄປບໍ່ໄດ້ໃນເວລາດຽວຈະສາມາດສະໜອງໄດ້ທັງໝົດທຸກຄອບຄົວໃນຊຸມຊົນ.. ທີ່ເປັນໄປໄດ້ກໍ່ຄືການເຕົ້າໂຮມຜູ້ທີ່ມີບັນຫາ/ຄວາມຕ້ອງການຄ້າຍຄຽງກັນ ແລະ ຢາກ ແລກປ່ຽນການຮຽນຮູ້ຮ່ວມກັນ. ໃນຫຼາຍກໍລະນີໄດ້ມີການຈັດຕັ້ງກຸ່ມຂຶ້ນເພື່ອເປົ້າໝາຍດັ່ງກ່າວສະເພາະ, ແຕ່ຢ່າງໃດກໍດີ, ມັນກໍ່ຍັງມີຄວາມເປັນໄປໄດ້ສູງທີ່ກິດຈະກຳເລົ່ານັ້ນຈະຖືກປະຕິບັດ/ດຳເນີນການໂດຍມີການກະກຽມໃຫ້ເກີດໜໍ່ແໜງລວມໝູ່ຂຶ້ນໄດ້.. ຈາກປະສົບການປະຕິບັດຜ່ານການເວລາໄປນັ້ນ,ຊາວກະສິກອນຜູ້ທີ່ສົນໃຈກໍ່ສາມາດກາຍເປັນສາມະຊິກຂອງກຸ່ມໄດ້..

<u>ສ້າງທັດສະນະເພິ່ງຕົນເອງ:</u> ມັນເປັນຕົວເລັ່ງ"ຮູບແບບການສົ່ງເສີມໂດຍປະຊາຊົນຂື້ນ" . ຊາວບ້ານຄວນໄດ້ເຂົ້າຮ່ວມໃນກຸ່ມກິດຈະກຳສົ່ງເສີມ,ກໍ່ຕໍ່ເມື່ອເຂົາເຈົ້າຕ້ອງການຮຽນຮູ້, ຫາກບໍ່ແມ່ນເພາະເຂົາເຈົ້າໄດ້ຮັບຄ່າຈ້າງເປັນຕົວເງິນ ຫຼື ວັດຖຸເພື່ອໃຫ້ເຂົ້າຮ່ວມກິດຈະກຳ. ແຮງຈູງໃຈດ້ານການເງິນ ຫຼື ວັດຖຸ ບໍ່ແມ່ນສິ່ງຕ້ອງຕອບສະໜອງ ໃຫ້ເປັນສ່ວນນຶ່ງໃນລະບົບສົ່ງເສີມຢ່າງເປັນທາງການ, ທັງນີ້ກໍ່ ເພາະວ່າມັນເປັນການບັ່ນທອນ "ຄວາມເປັນເຈົ້າການ"ຂອງປະຊາຊົນລົງ. ຕ້ອງຊຸກຍູ້ໃຫ້ເຂົາເຈົ້າຮວມຕົວກັນເພື່ອສ້າງປະໂຫຍດ"ຈາກການມີຄວາມຮູ້,ຄວາມສາມາດ" ແນໃສ່ແກ້ໄຂບັນຫາເອົາເອງ ແລະ ປັບປຸງແບບແຜນການຜະລິດໄດ້ໃນທີ່ສຸດ.

ສິ່ງຕ້ອງພິຈາລະນາອີກຢ່າງນຶ່ງໃນການອອກແບບລະບົບການສົ່ງເສີມສຳລັບ ສ ປປ ລາວ ແມ່ນ "<u>ການສ້າງຄວາມຍືນນານ</u>" ໃນຫຼາຍປະເທດການດຳເນີນການວຽກສົ່ງເສີມແມ່ນທຸກຢ່າງຂຶ້ນກັບການໃຫ້ທຶນຂອງໂຄງການຕ່າງປະເທດ. ເວລາໃດທີ່ໂຄງການໝົດໄປ ລັດຖະບານບໍ່ສາມາດສືບຕໍ່ສັນຫາງົບປະມານຄ່ຳຈູນພະນັກງານແລະກິດຈະກຳໄດ້ເລີຍ. ໂດຍມີການນຳໄຊ້ຫຼັກການນີ້ມາກ່ອນແລ້ວນັ້ນ,ລັດຖະບານລາວມຸ້ງໝັ້ນທີ່ຈະຕ້ອງຫຼີກເວັ້ນບັນຫາດັ່ງກ່າວ. ໂຄງການຊ່ວຍເຫຼືອຕ່າງປະເທດສາມາດສະໜັບສະໜູນການສ້າງ ແລະ ຂະຫຍາຍຜົນຂອງລະບົບການສົ່ງເສີມ, ແຕ່ຕ້ອງ ໃຫ້ນອນໃນທ່າອ່ຽງທີ່ມີຄວາມຍືນນານ, ທັງນີ້ກໍ່ເພາະວ່າມັນຕ້ອງເປັນລະບົບທີ່ເນັ້ນການຫັນລົງສູ່ຮາກຖານ,ຜູກພັນຫຼາຍພາກສ່ວນ,ມີສ່ວນຮ່ວມນຳກັນ ແລະມີລັກສະນະເພິ່ງຕົນເອງໄດ້.

### *3.2.2 ລັກສະນະສຳຄັນຂອງຮູບແບບການສົ່ງເສີມຂອງລາວ L E A*

ເພື່ອສະໜອງຕອບຕໍ່ສິ່ງທ້າທາຍດັ່ງທີ່ໄດ້ລະບຸຂ້າງເທິງນັ້ນ,ກະຊວງກະສິກຳ ແລະ ປ່າໄມ້ ກຳລັງດຳເນີນການ ດັດສົມວິທີຕ່າງໆເຂົ້າສູ່ລະບົບແລະໃຫ້ກາຍເປັນ"ຮູບແບບການສົ່ງເສີມຂອງລາວ" ຊຶ່ງປະກອບມີ ສອງພາກສ່ວນກົມກຽວກັນຄື:

- ການບໍລິການວຽກສົ່ງເສີມຂອງລັດ
- ລະບົບສົ່ງເສີມຂັ້ນບ້ານ

ການບໍລິການວຽກສົ່ງເສີມຂອງລັດ ຕົກຮອດປະຈຸບັນຍັງມີສາມລຳດັບຂັ້ນການຄຸ້ມຄອງ:

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFES), ຊື່ງສ້າງຕັ້ງຂື້ນໃນເດືອນ ສິງຫາ, 2001, ມີຖານະທຽບເທົ່າກົມນື່ງ ມີໜ້າທີ່ຈັດຕັ້ງຊີ້ນຳວຽກສົ່ງເສີມໃນຂອບເຂດທົ່ວ ສ ປປ ລາວ

ສູນສົ່ງເສີມກະສິກຳ ແລະ ປ່າໄມ້ແຂວງ (PAFEC), ທີ່ຂື້ນກັບ ພະແນກ ກ ປ ແຂວງ,ເປັນຫົວໜ່ວຍປະສານງານວິຊາການສະເພາະດ້ານໃນລະດັບແຂວງ

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (DAFO).ຊື່ງປະກອບມີພະນັກງານວິຊາການທີ່ເຮັດໜ້າທີ່ເປັນນັກສົ່ງເສີມການຜະລິດ(FSEW)ເພື່ອໃຫ້ການແນະນຳຊາວກະສິກອນ

ລະບົບການສົ່ງເສີມຂັ້ນບ້ານ ມີ ສີ່ ອົງປະກອບໃຫຍ່ຄື::

ອຳນາດການປົກຄອງບ້ານ(ຜູ້ມີບົດບາດທີ່ເປັນທາງການ,ບໍ່ທາງການ)ເປັນຜູ້ມີບົດບາດນຳໜ້າໃນການວາງແຜນ ແລະ ຈັດຕັ້ງປະຕິບັດທຸກກິດຈະກຳການພັດທະນາໃນບ້ານ

ວິຊາການສົ່ງເສີມບ້ານ (VEWs),ເປັນຜູ້ເອື້ອອຳນວຍການຮຽນຮູ້ແລະ ປະຕິບັດກິດຈະກຳສົ່ງເສີມຢູ່ໃນບ້ານ,ໂດຍໄດ້ຮັບການສະໜັບສະໜູນຈາກພະນັກງານເມືອງ,ພາຍໃຕ້ການຄຸ້ມຄອງຂອງອຳນາດການປົກຄອງບ້ານ

ການຈັດຕັ້ງກຸ່ມຜະລິດທີ່ເກີດຂື້ນມາຈາກສາມະຊິກທີ່ຢາກສ້າງປະໂຫຍດຮ່ວມກັນ

ດຳເນີນໂຄງການຮຽນຮູ້ໂດຍກຸ່ມຜະລິດແນໃສ່ແກ້ໄຂບັນຫາດ້ວຍການນຳໃຊ້ເຕັກນິກການຜະລິດທີ່ຈຳເປັນໃດນື່ງທີ່ກ່ຽວຂ້ອງຈາກການຮຽນຮູ້

### *3.2.3 ໜ້າທີ່ຂອງນັກສົ່ງເສີມ*

ການປະສານຮ່ວມມືລະວ່າງນັກສົ່ງເສີມ ແລະ ວິຊາການສົ່ງເສີມປະຈຳບ້ານ ແມ່ນຂໍ້ວຕໍ່ທີ່ສຳຄັນລະວ່າງການບໍລິການວຽກສົ່ງເສີມຂອງລັດແລະລະບົບການສົ່ງເສີມຂັ້ນບ້ານ

ຄວາມແຕກຕ່າງສຳຄັນໃນໜ້າທີ່ຂອງນັກສົ່ງເສີມເລົ່ານີ້ສາມາດສັງຮວມໃນຕາຕະລາງລຸ່ມນີ້::

| | ***ນັກສົ່ງເສີມລັດ FSEW*** | ***ວິຊາການບ້ານ VEW*** |
|---|---|---|
| ***ສະຖານະພາບ*** | ພະນັກງານ ຂອງລັດ | ກຳມະກອນ/ສາມະຊິກຊຸມຊົນ |
| ***ແຕ່ງຕັ້ງ ໂດຍ*** | ຫ້ອງການ ສົ່ງເສີມ ກ ປ ເມືອງ | ອຳນາດການປົກຄອງ,ຊາວບ້ານເລືອກເອົາ |

| | | |
|---|---|---|
| *ກິດຈະກຳສຳຄັນ* | ເອື້ອອຳນວຍການວາງແຜນແບບມີສ່ວນຮ່ວມ ແລະວຽກຂອງ VEWS | ເອື້ອອຳນວຍການຮຽນຮູ້ກຸ່ມຜະລິດ ແລະ ຂະຫຍາຍສູ່ຄອບຄົວອື່ນໆ |
| *ຈຳນວນ* | 1 ຄົນ FSEW ຕໍ່ 5 - 10 ບ້ານ (ໃນເຂດທົດລອງອາດຫຼຸດນັ້ນ) | 1 ຫາ 2 VEW ຕໍ່ ບ້ານ |
| *ຄວາມຊ່ຽວຊານ* | ຮັບຮູ້ ຫຼາຍໆວິຊາ | ເກັ່ງ ແລະ ມີປະສົບການໃນບາງສິ່ງທີ່ສົນໃຈ |
| *ປ່ອນປະສານ* | ວິຊາການໃນ PAFEC, DAFO ອຳນາດການປົກຄອງບ້ານ ແລະ VEWs | FSEW,  ອຳນາດການປົກຄອງບ້ານ,ກຸ່ມຜະລິດ ແລະ ຊາວກະສິກອນທົ່ວໄປ |
| *ການຈ້າງ* | ມີເງິນເດືອນປະຈຳ | ໂດຍການຕົກລົງກັບຊຸມຊົນເອງອາດເປັນເງິນ,ວັດຖຸ ຫຼື ແຮງງານ |

ໃນອະນາຄົດການດຳເນີນກິດຈະກຳການສົ່ງເສີມໃນບ້ານຈະແມ່ນຄວາມຮັບຜິດຊອບຂອງຊາວກະສິກອນເອງ,ພາຍໃຕ້ການຄຸ້ມຄອງຂອງອຳນາດການປົກຄອງແລະການເອື້ອອຳນວຍຂອງວິຊາການສົ່ງເສີມຂອງບ້ານ. ໜ້າທີ່ຂອງນັກສົ່ງເສີມຂັ້ນເມືອງແມ່ນມີພຽງການສະໜັບສະໜູນລະບົບຕາໜ່າງສົ່ງເສີມຂອງບ້ານຫາກບໍ່ແມ່ນໄປບໍລິຫານ/ຄຸ້ມຄອງແຕ່ຢ່າງໃດ. ໃນປະຈຸບັນນີ້ຊຶ່ງເປັນຊ່ວງ ທີ່ລະບົບການສົ່ງເສີມຂັ້ນບ້ານກຳລັງຖືກພັດທະນາໃຫ້ເກີດມີຄວາມເຂັ້ມແຂງ, ນັກສົ່ງເສີມຂອງເມືອງຕ້ອງໄດ້ເຮັດໜ້າທີ່ບຸກເບີກສ້າງ ແລະ ແນະນຳໂຄງການຮຽນຮູ້ໂດຍຍຶດຖືເອົາການ ຝຶກວິຊາການບ້ານເປັນມາດຕະການປະຕິບັດ.

## 3.3 ໂຄງສ້າງການຈັດຕັ້ງວຽກສົ່ງເສີມຂອງລັດ

### *3.3.1 ສະພາບລວມໃນການໃຫ້ບໍລິການຂອງລັດ*

ກະຊວງກະສິກຳ ແລະ ປ່າໄມ້ໄດ້ດຳເນີນການປະຕິບັດການສົ່ງເສີມຕາມທັດສະນະການຫັນລົງສູ່ຮາກຖານ ໄປຕາມ ລຳດັບຂັ້ນການຄຸ້ມຄອງຄືຈາກສູນກາງລົງສູ່ລະດັບແຂວງ ແລະ ເມືອງ,ຊຶ່ງເປັນການບໍລິການຂອງທົ່ວປະເທດອັນປະກອບມີ 18 ພະແນກ ແລະ 141 ເມືອງ.

ແຕ່ລະລຳດັບຂັ້ນການຄຸ້ມຄອງຂອງລັດແມ່ນມີເປົ້າໝາຍເລັ່ງສ້າງຂີດຄວາມສາມາດ ເພື່ອຕອບສະໜອງການບໍລິການໄດ້ຕາມຄວາມຕ້ອງການຂອງລຳດັບຂັ້ນຖັດລົງໄປ. ຢູ່ໃນລະດັບເມືອງລັດຖະບານເລັ່ງໃສ່ການສ້າງຄວາມເຂັ້ມແຂງເພື່ອໃຫ້ສາມາດດຳເນີນການສະໜັບສະໜູນການພັດທະນາຕາໜ່າງລະບົບການສົ່ງເສີມຂັ້ນບ້ານໃຫ້ເກີດຂຶ້ນໃນ 11,000 ກ່ວາ ບ້ານ ທີ່ເປັນຮາກເຫງົ້າ ຂອງ ສ ປປ ລາວ

ການບໍລິການວຽກສົ່ງເສີມຂອງລັດເນັ້ນໃສ່ການຝຶກອົບຮົມແລະການແນະນຳໃນຫຼາຍໆສາຂາຂະແໜງການວິຊາສະເພາະ:ລ້ຽງສັດ,ປູກຝັງ,ຊົນລະປະທານ ແລະ ປ່າໄມ້. ພະນັກງານວິຊາການຂັ້ນເມືອງຕ້ອງເຮັດໜ້າທີ່ນັກສົ່ງເສີມຮອບດ້ານພາຍໄຕ້ການສະນັບສະໜູນຈາກວິຊາການສະເພາະ ດ້ານຂອງແຂວງ. ນ່ວຍສົ່ງເສີມນີ້ຕ້ອງເຮັດໜ້າທີ່ກ່ຽວຂ້ອງກັບການພັດທະນາວິທີການ ແລະ ເຄື່ອງມືອຸປະກອນສົ່ງເສີມ,ຈັດຕັ້ງການຝຶກ ແລະ ການປະຊຸມ,ຕອບສະໜອງຂໍ້ມູນຕາມທີ່ມີຄວາມຕ້ອງການ, ຕິດຕາມຊຸກຍູ້ວິຊາການບ້ານ ແລະ ສ້າງຕານ່າງລະວ່າງກຸ່ມກັບພາກສ່ວນກ່ຽວຂ້ອງອື່ນໆ.

ມັນເປັນການຫຼີກເວັ້ນບໍ່ໄດ້ທີ່ຕ້ອງໄດ້ອະທິບາຍວ່າສິ່ງໃດທີ່ການສົ່ງເສີມບໍ່ຄວນປະຕິບັດ.ນັ້ນຄື: ການສົ່ງເສີມບໍ່ແມ່ນປະຕູຜ່ານຂອງການສະໜອງສິນເຊື່ອ ແລະ ປັດໃຈການຜະລິດໃຫ້ແກ່ຊາວກະສິກອນ, ແລະ ມັນກໍ່ບໍ່ແມ່ນກົນໄກສຳລັບການຄຸ້ມຄອງການຜະລິດ ແລະ ກໍ່ບໍ່ແມ່ນ ອົງກອນທີ່ຕ້ອງຮັບຊື້ ແລະ ຈຳນ່າຍຜົນຜະລິດຂອງຊາວກະສິກອນ. ການສະໜອງປັດໃຈ,ການຄຸ້ມຄອງ ແລະ ການຕະລາດເປັນປະເດັນສຳຄັນສຳລັບການຜະລິດກະສິກຳ ແລະ ປ່າໄມ້, ແຕ່ມັນເປັນຄວາມຮັບຜິດຊອບຂອງອົງການຈັດຕັ້ງອື່ນໆຂອງລັດ, ຂອງພາກສ່ວນເອກະຊົນ ແລະ ຂອງກະໂຕຊາວກະສິ ກອນເອງ. ການສົ່ງເສີມກະສິກຳໃນ ລາວ ,ສິ່ງທີ່ສຳຄັນກ່ວາໝູ່ໝົດແມ່ນການສ້າງໃຫ້ມີຂະບວນການທີ່ໃຫ້ການສຶກສາແກ່ກຳລັງການຜະລິດ, ຫາກບໍ່ແມ່ນກະໂຕຂັ້ນຕອນຂອງການຜະລິດແຕ່ຢ່າງໃດ.

### *3.3.2 ບົດບາດ,ໜ້າທີ່ການສົ່ງເສີມໃນລະດັບສູນກາງ*

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດເປັນຫົວນ່ວຍນຳພາໃນວຽກສົ່ງເສີມຂອງ ສ ປປ ລາວ. ບົດບາດໜ້າທີ່ ແມ່ນການພັດທະນາຍຸດທະສາດການສົ່ງເສີມ,ຈັດຕັ້ງການຝຶກຍົກລະດັບນັກສົ່ງເສີມແລະສະໜອງຂໍ້ມູນທາງເຕັກນິກທີ່ເຫັນວ່າສອດຄ່ອງກັບຊາວກະສິກອນຕ້ອງການເພື່ອສະນັບສະໜູນການບໍລິການວຽກສົ່ງເສີມໃນລະດັບແຂວງ ແລະ ເມືອງ.

ກອງສົ່ງເສີມແຫ່ງຊາດNAFES ມີຖານະທຽບເທົ່າກົມມະຫາພາກຂອງກະຊວງ(ຜ່ານມາ)ປະກອບມີ 3 ພະແນກໃຫຍ່ຄື:ພະແນກ ແຜນການແລະຮ່ວມມື,ວິຊາການ ແລະຈັດຕັ້ງບໍລິຫານ

ພະແນກວິຊາການແມ່ນເປັນຜູ້ຮັບຜິດຊອບການຈັດຕັ້ງປະຕິບັດການບໍລິການວຽກສົ່ງເສີມໃນລະດັບສູນກາງ. ໜ້າທີ່ຕົ້ນຕໍແມ່ນການຈັດຕັ້ງການຝຶກອົບຮົມພະນັກງານແຂວງ,ເມືອງແລະດຳເນີນລະບົບການຕິດຕາມຊຸກຍູ້ປະເມີນຜົນ. ພະແນກດັ່ງກ່າວໄດ້ມີການສ້າງຕານ່າງພົວພັນໂດຍກົງກັບສະຖາບັນການຄົ້ນຄ້ວາທົດລອງ(NAFRI),ກົມມະຫາພາກຂອງກະຊວງແລະສະຖາບັນການສຶກສາຂອງມະຫາວິທະຍາໄລ.

ຜ່ານມາມີສາມໜ່ວຍງານທີ່ຂື້ນກັບພະແນກວິຊາການຂອງ NAFES ປະກອບມີ ໜ່ວງງານຝຶກອົບຮົມ-ສົ່ງເສີມ(CETDU),ໜ່ວຍໂຄສະນາຂ່າວສານ ແລະ ໜ່ວຍຄຸ້ມຄອງນຳໄຊ້

CETDU –ເປັນໜ່ວຍງານທີ່ສຳຄັນໃນການພັດທະນາຂີດຄວາມສາມາດໃນການສົ່ງເສີມຂອງກອງ(NAFES.) ຊຶ່ງມີໜ້າທີ່ຮັບຜິດຊອບສຳຄັນຄື:

- ພັດທະນາຍຸດທະສາດການສົ່ງເສີມແລະວິທີການຕ່າງໆ ຮວມທັງການຝຶກອົບຮົມ ແລະ ການປະສານສົມທົບປະຕິບັດການທົດສອບຍຸດທະສາດ ແລະ ວິທີການຢູ່ໃນເຂດເປົ້າໝາຍ
- ພັດທະນາຂໍ້ແນະນຳທາງເຕັກນິກ,ຄູ່ມືດ້ານວິທີການສົ່ງເສີມ,ຫຼັກສູດການຝຶກດ້ານການສົ່ງເສີມ ແລະ ສື່-ອຸປະກອນປະຈັກຕາຕ່າງໆເພື່ອການນຳໄຊ້ຂອງພະນັກງານແຂວງ ແລະ ເມືອງ, ວິຊາການບ້ານ ແລະ ກຸ່ມຜະລິດ.
- ຈັດຕັ້ງການຝຶກສ້າງຄູຝຶກດ້ານສົ່ງເສີມ ເພື່ອການບໍລິການວຽກສົ່ງເສີມກະສິກຳ ແລະ ປ່າໄມ້, ທັງເປັນຜູ້ຈັດຕັ້ງການຝຶກ -ຕິດຕາມ ແຂວງ ແລະ ເມືອງຢ່າງໃກ້ຊິດ
- ປະສານສົມທົບກັບອົງການຈັດຕັ້ງຢູ່ພາຍໃນ ແລະ ສາກົນ ທີ່ກ່ຽວຂ້ອງກັບການສົ່ງເສີມກະສິກຳ ແລະ ດຳເນີນການສ້າງລະບົບຖານຂໍ້ມູນຂ່າວສານ.

ແຜນວາດລຸ່ມນີ້ສະແດງໃຫ້ເຫັນໂຄງປະກອບການຈັດຕັ້ງຂອງກອງສົ່ງເສີມແຫ່ງຊາດ,ທີ່ສະແດງ



ໃຫ້ເຫັນໜ້າທີ່ແລະສາຍພົວພັນຂອງໜ່ວຍ CETDU.

### *3.3.3 ບົດບາດໜ້າທີ່ການສົ່ງເສີມໃນລະດັບແຂວງ*

ສູນສົ່ງເສີມກະສິກຳ ແລະ ປ່າໄມ້ ແຂວງ(PAFEC)ແມ່ນຂະແໜງການນຶ່ງໃນສາຍຄຸ້ມຄອງຂອງ ພະແນກ ກະສິກຳແຂວງ,ຊຶ່ງມີຖານະທຽບເທົ່າກັບຂະແໜງການອື່ນເຊັ່ນ:ປູກຝັງ,ລ້ຽງສັດ, ຊົນລະປະທານ,ປ່າໄມ້. ຂະແໜງການວິຊາສະເພາະເລົ່ານີ້ຈະປະກອບດ້ວຍພະນັກງານວິຊາການສະເພາະດ້ານຈຳນວນນຶ່ງຕາມເໝາະສົມ

ບົດບາດໜ້າທີ່ຂອງສູນ ສົ່ງເສີມ ແຂວງ ແມ່ນປະສານເອົາການສະໜັບສະໜູນບັນດາວິຊາການ ສະເພາະດ້ານຈາກຂະແໜງວິຊາສະເພາະຕ່າງໆລົງຊ່ວຍເມືອງ, ໜ້າທີ່ສະເພາະຂອງສູນສົ່ງເສີມ ແຂວງປະກອບມີ::

- ກຳນົດຄວາມຕ້ອງການຝຶກຂອງນັກສົ່ງເສີມເມືອງ ແລະ ວາງແຜນການຝຶກອົບຮົມ.
- ພັດທະນາວິທີການສົ່ງເສີມ,ຫຼັກສູດແລະອຸປະກອນການຝຶກໃຫ້ສອດຄ່ອງກັບຄວາມ ຕ້ອງການພາຍໃນແຂວງ ຮວມທັງການຄັດເລືອກ,ດັດສົມນຳໃຊ້ ຫຼັກສູດຕ່າງໆທີ່ໄດ້ຖືກ ພັດທະນາໃນລະດັບສູນກາງ
- ຈັດຕັ້ງການຝຶກຍົກລະດັບວິຊາການໃຫ້ນັກສົ່ງເສີມຮອບດ້ານເມືອງໂດຍການ ສະໜັບສະໜູນຈາກວິຊາການສະເພາະດ້ານຂອງຂະແໜງການຕ່າງໆ
- ສະໜັບສະໜູນ,ຊຸກຍູ້ພະນັກງານສົ່ງເສີມເມືອງໃນການໃຫ້ບໍລິການວຽກສົ່ງເສີມ ແລະ ດຳເນີນການຝຶກດ້ານຮູບແບບ/ວິທີການການສົ່ງເສີມຫົວຂໍ້ວິຊາຕ່າງໆທີ່ກ່ຽວຂ້ອງ;
- ຕິດຕາມປະເມີນຜົນກິດຈະກຳການຝຶກ ແລະ ສົ່ງເສີມຮວມທັງຕີລາຄາຜົນກະທົບດ້ານ ຕ່າງໆ

### *3.3.4 ບົດບາດໜ້າທີ່ການສົ່ງເສີມໃນລະດັບເມືອງ*

ເມືອງແມ່ນຫົວໜ່ວຍການຈັດຕັ້ງບໍລິການວຽກສົ່ງເສີມຂອງລັດທີ່ປະສານໃກ້ຊິດທີ່ສຸດກັບຊາວກະສິກອນ. ພາຍໃນຫ້ອງການກະສິກຳ ແລະ ປ່າໄມ້ເມືອງໄດ້ມີການກຳນົດໃຫ້ມີ ແລະເປັນຫົວໜ່ວຍສົ່ງເສີມເຕັກໂນໂລຢີຮອບດ້ານ.ພາກສ່ວນດັ່ງກ່າວປະກອບດ້ວຍພະນັກງານສົ່ງເສີມທີ່ຮຽກໄດ້ວ່າ "ນັກສົ່ງເສີມການຜະລິດກະສິກຳຮອບດ້ານ FSEW". ສ່ວນພາກສ່ວນອື່ນໃນຫ້ອງການ ກ ປ ເມືອງ ແມ່ນການຄຸ້ມຄອງ ບໍລິຫານຫ້ອງການ.

ບົດບາດຂອງຫ້ອງການ ກ ປ ເມືອງ ແມ່ນການສະໜັບສະໜູນສ້າງຕາໜ່າງລະບົບການສົ່ງເສີມຂັ້ນບ້ານ,ຊຶ່ງແມ່ນ ສິ່ງທຳອິດທີ່ນັກສົ່ງເສີມຕ້ອງປະຕິບັດ. ນອກຈາກນັ້ນ,ແມ່ນການປະສານຊ່ວຍໃຫ້ເກີດມີການເຊື່ອມຕໍ່ລະວ່າງກຸ່ມຜະລິດກັບແລ່ງປັດໃຈການຜະລິດ.ແລ່ງຄວາມຮູ້ ແລະ ການ

ບໍລິການທີ່ມີຈາກອົງການຈັດຕັ້ງລັດ ແລະ ເອກະຊົນ. ຂໍ້ມູນດ້ານບັນຫາທີ່ບໍ່ສາມາດແກ້ໄຂໄດ້ໃນລະດັບບ້ານ ແລະ ເມືອງ ແມ່ນເປັນຜູ້ນຳສະເໜີເຖິງແຂວງ

ໜ້າທີ່ສະເພາະຂອງນັກສົ່ງເສີມຂັ້ນເມືອງມີຄື::

- ຊອກຫາຄວາມຕ້ອງການໃນການຝຶກອົບຮົມຂອງຊາວກະສິກອນ ຮ່ວມກັບອຳນາດການປົກຄອງບ້ານ
- ເອື້ອອຳນວຍໂຄງການຮຽນຮູ້ຕົວຢ່າງໃຫ້ແກ່ກຸ່ມຜະລິດ
- ຝຶກອົບຮົມ ແລະ ຕິດຕາມຊຸກຍູ້ວິຊາການບ້ານຜູ້ທີ່ຈະສືບຕໍ່ດຳເນີນພາລະກິດການສົ່ງເສີມຂອງບ້ານນັ້ນໆ
- ຕອບສະໜອງຂໍ້ແນະນຳກັບທີ່ຕໍ່ຄວາມຕ້ອງການຂອງຊາວບ້ານ ຫຼືປະສານເອົາການສະໜັບສະໜູນເພີ່ມຈາກແຂວງ PAFEC;
- ຈັດຕັ້ງຕາໜ່າງປະສານກິດຈະກຳສົ່ງເສີມລະວ່າງວິຊາການບ້ານ ແລະ ຊາວກະສິກອນດ້ວຍກັນເພື່ອສ້າງປະໂຫຍດຮ່ວມກັນ.

### 3.3.5 *ທ່າແຮງ ໃນການຈັດຕັ້ງໃຫ້ມີຫ້ອງການສົ່ງເສີມປະຈຳເຂດ*

ລະບົບການສົ່ງເສີມໃນລາວແມ່ນກຳລັງຖືກພັດທະນາຢູ່.ໂຄງສ້າງການຈັດຕັ້ງຄຸ້ມຄອງອາດສາມາດສ້າງຂຶ້ນໄດ້ໃນອະນາຄົດອັນໃກ້ ເພື່ອໃຫ້ການບໍລິການວຽກສົ່ງເສີມຂອງລັດຕອບສະໜອງໄດ້ຕາມຄວາມຕ້ອງການຂອງປະຊາຊົນດີຂຶ້ນເປັນກ້າວໆ. ນຶ່ງໃນສິ່ງທີ່ເປັນໄປໄດ້ກໍ່ຄືການຈັດຕັ້ງໃຫ້ມີ ຈຸດ ເຊື່ອມວຽກສົ່ງເສີມລະວ່າງລະດັບເມືອງ ແລະ ລະດັບບ້ານ,ອາດເປັນຫ້ອງການສົ່ງເສີມປະຈຳເຂດ ຫຼື ປະຈຳກຸ່ມບ້ານ..

ໃນຊ່ວງປະຈຸບັນຫ້ອງການກະສິກຳເມືອງນຶ່ງໆ ຈະຮັບຜິດຊອບ ສະເລັ່ຍ 70-80 ບ້ານ ແລະ ມີພະນັກງານຂອງຫ້ອງການສະເລັ່ຍ 15 ຄົນທີ່ເຮັດວຽກສົ່ງເສີມຕົວຈິງ. ເຖິງແມ່ນວ່າພະນັກງານພໍ ແຕ່ຄວາມເປັນຈິງທາງດ້ານທີ່ຕັ້ງຂອງບ້ານ ແລະ ໄລຍະການເດີນທາງຈາກ ຫ້ອງການ ກ ປ ເມືອງໄປ ແມ່ນເປັນປະເດັນໃຫຍ່ສົມຄວນ ແລະ ກໍ່ເຫັນວ່າເປັນສິ່ງທ່ວງດຶງປະສິດຕິພາບແລະຄວາມຄ່ອງຄົວໃນການບໍລິການວຽກສົ່ງເສີມຂອງລັດ ແລະຕາໜ່າງລະບົບການສົ່ງເສີມຂັ້ນບ້ານ. ແລະໃນປະຈຸບັນກໍ່ມີຄວາມຫຍຸ້ງຍາກບໍ່ນ້ອຍທີ່ນັກສົ່ງເສີມເມືອງຈະລົງຫາບ້ານແລະ ວິຊາການບ້ານຈະຂຶ້ນໄປຫາຫ້ອງການ ກ ປ ເມືອງ

ນັກສົ່ງເສີມຂອງເມືອງFSEWs ຈະມີໂອກາດໃກ້ຊິດຕິດແທດກັບຊຸມຊົນໄດ້ດີກໍ່ຕໍ່ເມື່ອເຂົາເຈົ້າແຕ່ລະຄົນຫາກໄດ້ປະຈຳໃນຈຸດຫຼືຫ້ອງການສົ່ງເສີມປະຈຳເຂດ. ຫ້ອງການອັນນີ້ອາດມີຄວາມ

ຮັບຜິດຊອບກວມ 5-10 ບ້ານ(ຕາມກຸ່ມບ້ານ) ຊຶ່ງເປັນບ່ອນທີ່ຊາວບ້ານໄປມາຫາສູ່ເພື່ອ ປຶກສາໄດ້ສະດວກແລະທັນການຂຶ້ນ

ຢ່າງໃດກໍດີ,ໃນເວລາທີ່ເຮັດເອກະສານລາຍງານສະບັບນີ້,ການບໍລິການສົ່ງເສີມຂອງລັດຍັງ ປະກອບມີພຽງ ສາມລຳດັບຂັ້ນການຄຸ້ມຄອງທີ່ຕ້ອງເຮັດໜ້າທີ່ຮ່ວມກັນໃນການສ້າງຕານ່າງ ລະບົບການສົ່ງເສີມຂັ້ນບ້ານດັ່ງສະແດງໃນແຜນວາດລຸ່ມນີ້:




## 3.4 ການດຳເນີນການຂອງລະບົບການສົ່ງເສີມຂັ້ນບ້ານ(VES)

### 3.4.1 ພາບລວມຂອງລະບົບການສົ່ງເສີມຂັ້ນບ້ານ

ເນື້ອໃນສຳຄັນຂອງການຫັນລົງສູ່ຮາກຖານ ແມ່ນການເຮັດໃຫ້ອຳນາດການປົກຄອງບ້ານໄດ້ມີ ບົດບາດໃນການນຳພາໃນການວາງແຜນແລະຈັດຕັ້ງປະຕິບັດທຸກກິດຈະກຳການພັດທະນາຂອງ ບ້ານ ຮວມທັງການຄຸ້ມຄອງລະບົບຕານ່າງ.ການສົ່ງເສີມຂັ້ນບ້ານ. ຜູ້ມີສ່ວນຮ່ວມໃນບົດບາດ ໜ້າທີ່ນີ້ກໍ່ຄື ນາຍບ້ານແລະຄະນະ,ຕາງໜ້າອົງການຈັດຕັ້ງມະຫາຊົນຂອງບ້ານແລະເຖົ້າແກ່ແນວ ໂຮມ.

ຄວາມຮັບຜິດຊອບສຳຄັນຂອງອຳນາດການປົກຄອງແມ່ນການໃຫ້ການຊີ້ນຳແກ່ວິຊາການບ້ານ ,ຊຶ່ງເປັນຜູ້ເອື້ອອຳນວຍແລະຈັດຕັ້ງປະຕິບັດກິດຈະກຳການສົ່ງເສີມຂອງບ້ານ. ວິຊາການບ້ານ ແມ່ນສາມະຊິກຂອງຊຸມຊົນ,ເປັນຜູ້ທີ່ມີຄວາມປະສົງສະຫຼະເວລາແລະມີເຈດຈຳນົງສູງໃນການ

ແລກປ່ຽນບົດຮຽນຂອງຕົນກັບບັນດາສາມະຊິກຄົນອື່ນເພື່ອໃຫ້ເກີດປະໂຫຍດຈາກກິດຈະກຳການສົ່ງເສີມ..ເວລາໃດທີ່ລະບົບການສົ່ງເສີມຂັ້ນບ້ານໄດ້ຮັບການປະຕິບັດຄົບຂັ້ນຕອນໃນບ້ານນຶ່ງໆຈະເກີດມີວິຊາການບ້ານ 1-2 ຄົນທີ່ຖືກຄັດເລືອກເອົາໂດຍຊາວບ້ານເອງ,ຂຶ້ນກັບຄວາມຕ້ອງການຂອງເຂົາເຈົ້າ.ຕົວຢ່າງ: ອາດມີວິຊາການບ້ານດ້ານຕ່າງໆໃນແຕ່ລະບ້ານອາດແມ່ນດ້ານລ້ຽງສັດ,,ການປູກເຂົ້າ, ການປູກຜັກ. ການຄັດເລືອກເອົາວິຊາການບ້ານແມ່ນຊຸມຊົນເອງ,ຜູ້ທີ່ຖືກຄັດເລືອກແມ່ນເປັນຜູ້ທີ່ມີ ຄວາມສຳນານແລະ ມີຜົນງານຕົວຈິງພໍສົມຄວນ. ເຂົາເຈົ້າອາດມີຄວາມແຕກຕ່າງດ້ານໄວອາຍຸ, ແຕ່ກໍ່ເປັນຜູ້ທີ່ໄດ້ຮັບການຝຶກມາຫຼາຍຫົວຂໍ້ສົມຄວນ.

ວິຊາການບ້ານມີສອງໜ້າທີ່ຮັບຜິດຊອບສຳຄັນຄື: ຈັດຕັ້ງໂຄງການຮຽນຮູ້,ດຳເນີນການກັບກຸ່ມຜະລິດ, ແລະ ຂະຫຍາຍຜົນການຮຽນຮູ້ອອກສູ່ວົງກ້ວາງໃນບ້ານ. ວິຊາການບ້ານອາດໃຫ້ການບໍລິການສະເພາະເຊັ່ນການສັກຢາວັກຊີນແກ່ສັດລ້ຽງຊາວບ້ານ.

ແຕ່ລະໂຄງການຮຽນຮູ້ມັນແມ່ນໝວດກິດຈະກຳນຶ່ງທີ່ດຳເນີນການປະຕິບັດໃນຊ່ວງໄລຍະເວລານຶ່ງໂດຍມີຈຸດປະສົງ/ຄາດໝາຍເຈາະຈົງແລະສອດຄ່ອງກັບຄວາມຕ້ອງການ. ໂຄງການຮຽນຮູ້ກຳນົດ/ວາງແຜນຂຶ້ນໂດຍຊາວກະສິກອນ ແລະ ອະນຸມັດໂດຍອຳນາດການປົກຄອງ. ອາດມີກ່ວານຶ່ງ ຫຼື ສອງໂຄງການເກີດຂຶ້ນໃນເວລາດຽວກັນກໍ່ໄດ້.

ກຸ່ມຜະລິດສ້າງຕັ້ງຂຶ້ນເພື່ອດຳເນີນໂຄງການຮຽນຮູ້. ເພື່ອແນ່ໃຈໃນດ້ານການຄຸ້ມຄອງ ແລະການປະຕິບັດ, ຂະໜາດຂອງກຸ່ມບໍ່ໃຫຍ່ໂຕເທົ່າໃດ ປະກອບມີ ປະມານ 10 ຄອບຄົວ,ໂດຍມີການຈັດຕັ້ງໃຫ້ມີຫົວໜ້າກຸ່ມເພື່ອເຮັດໜ້າທີ່ປະສານກັບວິຊາການຂອງບ້ານຊ່ວຍອຳນວຍການຮຽນຮູ້. ການຮວມຕົວກັນຂອງກຸ່ມນີ້ອາດໄຊ້ເວລາພຽງໄລຍະໃດນຶ່ງ. ເວລາໃດໂຄງການຮຽນຮູ້ສຳເລັດລົງ ກໍ່ຂຶ້ນກັບວ່າສາມະຊິກກຸມນັ້ນໆ ຍັງມີຄວາມປະສົງຢາກເຕົ້າໂຮມ ແລະ ເຮັດວຽກຮ່ວມກັນຕໍ່ໄປຫຼືບໍ່.

ໃນຖານະເປັນສ່ວນນຶ່ງຂອງລະບົບການສົ່ງເສີມຂັ້ນບ້ານ, ຄວາມຮູ້/ສາມາດທີ່ໄດ້ຮັບນັ້ນຈະຖືກຈັດໃຫ້ມີການແລກປ່ຽນກັບສາມະຊິກຄົນອື່ນໃນຊຸມຊົນ. ເວົ້າຢ່າງນຶ່ງແມ່ນກະຈ່າຍຂໍ້ມູນແລະເຕັກນິກຜ່ານກຸ່ມຜະລິດ. ໃນຊ່ວງເວລາດຳເນີນການປະຕິບັດໂຄງການຮຽນຮູ້,ອາດມີບາງກິດຈະກຳທີ່ຄອບຄົວອື່ນສົນໃຈຢາກຮູ້ຈາກສາມະຊິກກຸ່ມທີ່ປະຕິບັດໄປນັ້ນ. ຫຼັງຈາກໂຄງການຮຽນຮູ້ສຳເລັດລົງ ,ວິຊາການບ້ານໄດ້ມີການດຳເນີນກິດຈະກຳລົງຢ້ຽມຢາມບັນດາຄອບຄົວທີ່ສົນໃຈເພື່ອໃຫ້ການແນະນຳສະເພາະເລື່ອງນັ້ນໆ

### *3.4.2 ຂະບວນການສົ່ງເສີມໃນລະດັບບ້ານ*

ລະບົບການສົ່ງເສີມຂັ້ນບ້ານແມ່ນກ່ຽວພັນກັບວົງຈອນການປະຕິບັດກິດຈະກຳຈາກການປະຕິບັດຂັ້ນຕອນນຶ່ງແລ້ວຈຶ່ງກ້າວໄປສູ່ຂັ້ນຕອນຕໍ່ໄປໄດ້




ການຊອກຫາຄວາມຕ້ອງການໃນການຝຶກ(TNA) ແມ່ນຂັ້ນຕອນເລີ່ມຕົ້ນໃນວົງຈອນການປະຕິບັດກິດຈະກຳ. TNA ແມ່ນຖືກດຳເນີນການຊອກຫາຢ່າງນ້ອຍປີລະເທື່ອໂດຍເປັນເຈົ້າການຂອງອຳນາດການປົກຄອງພາຍໃຕ້ການສະໜັບສະໜູນຈາກ ນັກສົ່ງເສີມເມືອງ. ຕະລອດຊ່ວງການດຳເນີນການຊອກ TNA ຊາວບ້ານຈະເປັນຜູ້ວິເຄາະແລະກຳນົດບັນຫາທີ່ກຳລັງປະສົບຢູ່ນັ້ນ, ຊອກຫາສິ່ງທີ່ເປັນອຸປະສັກທີ່ພາໃຫ້ເກີດມີບັນຫານັ້ນໆ ແລະ ລະບຸຄວາມຮູ້ຄວາມສາມາດອັນໃດທີ່ຕ້ອງການເພື່ອນຳໄຊ້ເຂົ້າແກ້ໄຂ. ຂໍ້ຕົກລົງດັ່ງກ່າວຈະເປັນບ່ອນອີງໃນການກຳນົດໂຄງການຮຽນຮູ້ຂື້ນ ໃນບ້ານນຶ່ງໆ ອາດມີ ນຶ່ງ ເຖິງ ສອງໂຄງການ. ໃນນີ້ຊາວບ້ານຕ້ອງໄດ້ມີການກຳນົດຈຸດປະສົງແຈ້ງວ່າສິ່ງທີ່ເຂົາຢາກຮຽນຮູ້ແລະປັບປຸງແມ່ນອັນໃດ?ແລະມີສິ່ງໃດເປັນຕົວວັດຜົນທີ່ຕ້ອງບັນລຸໄດ້, ມີຄອບຄົວໃດແດ່ທີ່ຕ້ອງເຂົ້າຮ່ວມ. ຜູ້ທີ່ເຂົ້າຮ່ວມໃນໂຄງການຮຽນຮູ້ຮຽກວ່າ "ກຸ່ມຜະລິດ".

ການຈັດຕັ້ງປະຕິບັດໂຄງການຮຽນຮູ້ ແມ່ນຖືກດຳເນີນການເອື້ອອຳນວຍໂດຍວິຊາການບ້ານພາຍໃຕ້ການສະໜັບສະໜູນຈາກນັກສົ່ງເສີມຂອງເມືອງ. ຫົວຂໍ້/ເນື້ອໃນແລະໄລຍະເວລາຂອງໂຄງການເລົ່ານັ້ນແມ່ນແຕກຕ່າງກັນໄປຕາມແຕ່ລະກໍລະນີ, ແຕ່ສິ່ງສຳຄັນຕ້ອງແມ່ນດຳເນີນໄປຢ່າງ ສອດຄ່ອງກັບ "ຮອບລະດູການຜະລິດ",ເຊັ່ນ:ໃນກໍລະນີເປັນຫົວຂໍ້ການປູກພືດກໍ່ຕ້ອງເລີ່ມຈາກການຕຽມດິນ,ປູກ,ດູແລຮັກສາ ຈົນເຖິງຂອດການເກັບກ່ຽວມ້ຽນມັດ ແລະ ປຸງແຕ່ງ. ຕະລອດຊ່ວງໂຄງການຮຽນຮູ້ດຳເນີນຢູ່ນັ້ນ,ອາດມີຫຼາຍໆກິດຈະກຳຖືກປະຕິບັດ,ຮວມທັງການຝຶກອົບຮົມ,ການສ້າງແປງສາທິດ ແລະ ການທົດສອບກໍ່ເປັນໄດ້. ສາມະຊິກຂອງກຸ່ມຜະລິດແມ່ນຖືກກຳນົດໃຫ້ນຳເອົາຄວາມຮູ້ໄປນຳໄຊ້ເຂົ້າໃນການຜະລິດຂອງຄອບຄົວຕົນເອງໂລດ.

ການຕິດຕາມຜົນການປະຕິບັດແບບມີສ່ວນຮ່ວມແມ່ນຖືກດຳເນີນການເປັນໄລຍະໆຕະລອດຊ່ວງດຳເນີນໂຄງການຮຽນຮູ້. ການປະເມີນຜົນຈະຖືກດຳເນີນການໃນຊ່ວງທ້າຍຂອງຂະບວນການ. ເປົ້າໝາຍກໍ່ແມ່ນເພື່ອກວດຄືນການປະຕິບັດ ແລະ ຜົນໄດ້ຮັບທຽບໃສ່ຄາດໝາຍທີ່ຕົກ

ລົງໄວ້ໃນຊ່ວງການຫາ TNA. ຈຸດເລັ່ງສຳຄັນຂອງການຕິດຕາມ-ປະເມີນຜົນນັ້ນແມ່ນຢາກຮູ້ໄດ້ວ່າສາມະຊິກກຸ່ມຜະລິດໄດ້ດຳເນີນການນຳໄຊ້ບົດຮຽນຢ່າງໃດ, ເຂົາເຈົ້າໄດ້ໄຊ້ບົດຮຽນໃໝ່ຫຼືບໍ່?, ເຂົາເຈົ້າແກ້ໄຂບັນຫາທີ່ໄດ້ປະເຊີນມານັ້ນໄດ້ຫຼືບໍ່ ແລະ ແບບແຜນການຜະລິດຖືກປັບປຸງແນວໃດ?,ມີເງື່ອນໄຂອັນໃດທີ່ເຮັດໃຫ້ມີຜົນຕ່າງໆທັງດີ ແລະ ອ່ອນເກີດຂື້ນ.

ການຕິດຕາມແລະ ປະເມີນນີ້ເປັນການຊ່ວຍທັງກຸ່ມຜະລິດ, ນັກສົ່ງເສີມໄດ້ມີກອບໃນການຕັດສິນໃຈວ່າຈະດຳເນີນຕາມແຜນເດີມຫຼືຕ້ອງດັດປັບຢ່າງໃດ?

ຜົນການຕິດຕາມແລະປະເມີນຍັງເປັນອັນຊ່ວຍໃຫ້ນັກສົ່ງເສີມຕັດສິນໃຈໄດ້ວ່າຈະນຳເອົາກິດຈະກຳອັນໃດໄປເພີ່ມເຕີມໃນເວລາຂະຫຍາຍຜົນການຮຽນຮູ້ໄປສູ່ພາກສ່ວນອື່ນໆໃນຊຸມຊົນຕໍ່ໄປ. ເວລາໃດຈະເກີດມີຄວາມໝັ້ນໃຈວ່າສະມາຊິກກຸ່ມຜະລິດສາມາດແກ້ບັນຫາໄດ້,ວິຊາການບ້ານສາມາດຈັດຕັ້ງການແລກປ່ຽນບົດຮຽນລະວ່າງກຸ່ມກັບຊາວບ້ານຄອບຄົວອື່ນໆທີ່ສົນໃຈໄດ້.

ເວລາທີ່ໂຄງການຮຽນຮູ້ສິ້ນສຸດລົງ,ຜົນທີ່ໄດ້ຈາກການຮຽນຮູ້ໄດ້ນຳໄຊ້ເປັນບ່ອນອີງໃນການຫາຄວາມຕ້ອງການຝຶກອົບຮົມຕໍ່ໄປ. ແລະ ໂຄງການຮຽນຮູ້ໃນຫົວຂໍ້ດັ່ງກ່າວອາດສືບຕໍ່ໂດຍສາມະຊິກກຸ່ມໝວດອື່ນ ຫຼືແມ່ນແຕ່ສະມາຊິກກຸ່ມເກົ່າ ແລະ ເຂົາເຈົ້າຍັງສາມາດກຳນົດສິ່ງທີ່ຕ້ອງການຮຽນຮູ້ເພີ່ມເຕີມເພື່ອແກ້ໄຂບັນຫາທີ່ເຫັນໃນຊ່ວງເວລາປະຕິບັດກິດຈະກຳຜ່ານມານັ້ນ.

### 3.4.3 *ການລິເລີ່ມ ແລະ ການຂະຫຍາຍລະບົບການສົ່ງເສີມຂັ້ນບ້ານ*

ລະບົບການສົ່ງເສີມດັ່ງກ່າວໄດ້ຖືກຊຸກຍູ້ໃຫ້ມີການຈັດຕັ້ງປະຕິບັດໂດຍໜ່ວຍຝຶກອົບຮົມແລະສົ່ງເສີມຂັ້ນສູນກາງ(CETDU) ໃນ 98 ບ້ານເປົ້າໝາຍດັ່ງທີ່ໄດ້ອະທິບາຍມາກ່ອນແລ້ວນັ້ນ ແລະ ກໍ່ເປັນສ່ວນນື່ງຂອງການດຳເນີນກິດຈະກຳໃນແຜນວຽກຂອງໂຄງການສົ່ງເສີມກະສິກຳ. ບັນດາບ້ານເປົ້າໝາຍເລົ່ານັ້ນແມ່ນນອນໃນພື້ນທີ່ຂອງເຂດພູດອຍ ແລະ ທົ່ງພຽງຊື່ງມີອຸປະສັກ ແລະ ທ່າແຮງທີ່ແຕກຕ່າງກັນຫຼາຍພໍສົມຄວນ.

VES ແມ່ນຫົວໜ່ວຍຈຸລັງຂອງຮູບແບບການສົ່ງເສີມຂອງລາວ(***L E A)*** ແລະ ກະຊວງກະສິກຳ ແລະ ປ່າໄມ້ ແມ່ນມີຄວາມພະຍາຍາມຂະຫຍາຍຮູບແບບດັ່ງກ່າວອອກສູ່ວົງກ້ວາງໃນຂອບເຂດທົ່ວປະເທດ. ແນ່ນອນຈະຕ້ອງໄດ້ໄຊ້ເວລາຫຼາຍປີຈື່ງຈະສຳເລັດ. ແລະ ຕະລອດຊ່ວງເວລາການຂະຫຍາຍນີ້ລັດຖະບານມີຄວາມພະຍາຍາມບໍ່ນ້ອຍໃນການເຮັດໜ້າທີ່ປັບປຸງຂີດຄວາມສາມາດຂອງອົງກອນ. ເວລາໃດຫາກ VES ສຳເລັດໃນການຂະຫຍາຍ:ແນ່ນອນພະນັກງານໃນຫ້ອງການ ກ ປ ເມືອງ ແລະ ສູນສົ່ງເສີມຂອງ ແຂວງຈະສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການທີ່ເກີດຂື້ນໃນພື້ນຖານ.ຊື່ງໝາຍວ່ານັກສົ່ງເສີມ ແລະ ວິຊາການສະເພາະດ້ານກໍ່ຈະເປັນຜູ້ທີ່ເຮັດແຕ່ໜ້າທີ່ເອື້ອອຳນວຍ,ຫຼື ເປັນຄູຝຶກເພື່ອລິເລີ່ມ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຕໍ່ໄປ

ເວລາໃດທີ່ລະບົບຫາກຖືກນຳສະເໜີໄປສູ່ແຂວງໃໝ່,ກິດຈະກຳຕ່າງໆຈະດຳເນີນການປະຕິບັດ ໃນ ນຶ່ງ ຫາ ສອງ ເມືອງ ແລະ ໃນແຕ່ລະເມືອງ ເລືອກເອົາຫ້າ ເຖິງ ສິບ ບ້ານຕາມກຸ່ມບ້ານພັດທະນາ. ທີມນັກສົ່ງເສີມເມືອງ ແລະ ແຂວງ ຈະຖືກມອບໝາຍໃຫ້ເປັນຜູ້ເອື້ອອຳນວຍການດຳເນີນການຂອງ VES ໃນບ້ານເປົ້າໝາຍນັ້ນໆ. ທີມຄູຝຶກດັ່ງກ່າວຈໄດ້ຮັບການສະໜັບສະໜູນຈາກຄູຝຶກສູນກາງ MT ຂອງ NAFES  ແລະ ເວລາເລີ່ມກິດຈະກຳທຳອິດຂອງລະບົບ,ທີມຈາກສູນກາງຈະດຳເນີນການລົງຢ້ຽມຢາມກຸ່ມບ້ານເພື່ອຊ່ວຍຊີ້ແຈງໃຫ້ລາຍລະອຽດເຖິງຄວາມໝາຍຄວາມສຳຄັນແລະ ປະໂຫຍດ ຂອງລະບົບຕໍ່ ຊາວກະສິກອນໃນບ້ານເປົ້າໝາຍ

ການຊີ້ແຈງຂະບວນການປະຕິບັດ VES ລະອຽດແມ່ນຈະຖືກນຳສະເໜີໃນກອງປະຊຸມຢູ່ໃນແຕ່ລະບ້ານເປົ້າໝາຍ.ຕະລອດຊ່ວງດຳເນີນກິດຈະກຳໃນທຸກຂັ້ນຕອນໃນວົງຈອນ ຮອບທຳອິດທີມນັກສົ່ງເສີມເມືອງ ແລະ ແຂວງ ຈະເປັນຜູ້ເອື້ອອຳນວຍນັບແຕ່ຂັ້ນຕອນຫາຄວາມຕ້ອງການໃນການຝຶກຈົນຄົບທຸກຂັ້ນຕອນໃນໂຄງການຮຽນຮູ້. ຄູຝຶກສູນກາງຈະໃຫ້ການຕິດຕາມສະໜັບສະໜູນ. ນັກສົ່ງເສີມຄົນໃດທີ່ຜ່ານການປະຕິບັດໂຄງການໄດ້ມີຜົນສຳເລັດກໍ່ຈະຖືກຢັ້ງຢືນຈາກກອງສົ່ງເສີມແຫ່ງຊາດ ແລະໃນທີ່ສຸດນັກສົ່ງເສີມທີ່ໄດ້ຖືກຢັ້ງຢືນແລ້ວນັ້ນກໍ່ສາມາດເຮັດໜ້າທີ່ປ່ຽນແທນບົດບາດຄູຝຶກສູນກາງໃນ ແຂວງ,ເມືອງໄດ້. ແລະເຂົາເຈົ້າກໍ່ສາມາດໃຫ້ການແນະນຳສະໜັບສະໜູນນັກສົ່ງເສີມເມືອງໃນການຂະຫຍາຍລະບົບ ໃນຂອບເຂດທົ່ວແຂວງໄດ້. ແທນທີ່ຈະດຳເນີນການແລກປ່ຽນບົດຮຽນຢູ່ແຂວງອື່ນ ເຂົາເຈົ້າຈະສາມາດຈັດຢູ່ຕາມບ້ານພາຍໃນແຂວງໄດ້ໃນທີ່ສຸດ.

ໃນບ້ານເປົ້າໝາຍໃໝ່ນັ້ນ, ເວລາໃດທີ່ ໂຄງການຮຽນຮູ້ບໍ່ທັນປະຕິບັດຄົບວົງຈອນ,ວິຊາການບ້ານຈະຍັງບໍ່ທັນຢັ້ງຢືນແຕ່ງຕັ້ງເປັນທາງການໄດ້ເທື່ອ, ຈະຕ້ອງມີການຄັດເລືອກຈາກສາມະຊິກກຸ່ມ ຊຶ່ງອາດເປັນໃຜຜູ້ນຶ່ງ ຫຼືແມ່ນແຕ່ຫົວໜ້າກຸ່ມເອງກໍ່ໄດ້, ທັງນີ້ກໍ່ເພື່ອເປັນການແນ່ໃຈວ່າເຂົາຄົນນັ້ນມີປະສົບການເບື້ອງຕົ້ນແລ້ວໃນກິດຈະກຳທີ່ໄດ້ເຮັດຜ່ານມາແລະມີຄວາມເຂົ້າໃຈແລະສາມາດຈັດຕັ້ງດຳເນີນການຕໍ່ເອົາເອງໄດ້ຈາກການໄດ້ສັງເກດເຫັນນັກສົ່ງເສີມເມືອງໄດ້ທຳການເອື້ອອຳນວຍກຸ່ມຜະລິດຜ່ານມາໃນຮອບລະດູການຜະລິດນຶ່ງນັ້ນ. ໃນຮອບສອງຂອງໂຄງການຮຽນຮູ້, ວິຊາການບ້ານຈະເປັນຜູ້ສືບຕໍ່ເອື້ອອຳນວຍຫຼືຝຶກຕໍ່ໂດຍມີນັກສົ່ງເສີມເມືອງສະໜັບສະໜູນຢ່າງໃກ້ຊິດ. ຫຼັງຈາກນັ້ນ, ການສະໜັບສະໜູນຈາກເມືອງກໍ່ສາມາດລົດລົງໄປເປັນກ້າວໆ, ຂະນະທີ່ຄວາມໝັ້ນໃຈແລະຂີດຄວາມສາມາດຂອງວິຊາການບ້ານຄ່ອຍເພີ່ມຂຶ້ນເປັນກ້າວໆ.

ການສ້າງຕາໜ່າງພົວພັນລະວ່າງບ້ານກໍ່ໄດ້ຖືກຊຸກຍູ້ ແລະ ສະໜັບສະໜູນອັນເປັນສ່ວນນຶ່ງຂອງການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ VES. ນັກສົ່ງເສີມເມືອງຈະເປັນຜູ້ຈັດແຈງການພົບປະແລກປ່ຽນບົດຮຽນລະວ່າງວິຊາການບ້ານທີ່ສ້າງໄດ້ໃນກຸ່ມບ້ານເລົ່ານັ້ນ. ແລະກໍ່ອາດເປັນໄປໄດ້ທີ່ຕ້ອງມີການຈັດການພົບປະລະວ່າງກຸ່ມກັບກຸ່ມຈາກແຕ່ລະບ້ານເພື່ອຮຽນຮູ້ສິ່ງໃດນຶ່ງທີ່ຕ່າງ

ຝ່າຍມີຄວາມສົນໃຈ.ຫຼື ມີບັນຫາຄ້າຍຄຽງກັນ. ການໄດ້ຈັດຕັ້ງຕາມ່າງພົວພັນແບບນີ້ກໍ່ເປັນການປະເມີນຜົນການປະຕິບັດ ແລະ ຂໍ້ແນະນຳທີ່ໄດ້ອອກມາກໍ່ເປັນເໝືອນຜົນການປະເມີນກິດຈະກຳໃນຕົວມັນເອງ.

ແຜນວາດລຸ່ມນີ້ສະແດງເຖິງຄວາມສຳພັນລະວ່າງ VES ກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ.




### 3.4.4 *ງົບປະມານຂອງລະບົບການສົ່ງເສີມຂັ້ນບ້ານ*

ງົບປະມານປົກກະຕິຂອງລັດແມ່ນມີສະເພາະແຕ່ກອງສົ່ງເສີມແຫ່ງຊາດ, ສູນສົ່ງເສີມແຂວງ ແລະ ຫ້ອງການກະສິກຳເມືອງ ແຕ່ກໍ່ນ້ອຍ ແລະ ບໍ່ມີສຳລັບກິດຈະກຳການສົ່ງເສີມທີ່ມີການວາງແຜນແລະ ດຳເນີນການຂອງບັນດາກິດຈະກຳໂດຍຊາວກະສິກອນ. ໃນຖານະເປັນສ່ວນນຶ່ງຂອງລະບົບການສົ່ງເສີມຂັ້ນບ້ານ ອຳນາດການປົກຄອງບ້ານເປັນຜູ້ສັນຫາງົບປະມານທີ່ຈຳເປັນເພື່ອຈັດຕັ້ງດຳເນີນການ VES ໃນບ້ານຂອງຕົນ.

ສິ່ງທີ່ຈຳເປັນສຳລັບດຳເນີນການລະບົບ VES ໃນບ້ານແມ່ນມີສອງຢ່າງຄື: ຢ່າງນຶ່ງແມ່ນວັດຖຸອຸປະກອນເພື່ອດຳເນີນໂຄງການຮຽນຮູ້ ແລະ ອີກສ່ວນນຶ່ງເພື່ອເປັນຄ່າຕອບແທນແກ່ວິຊາການບ້ານ.

ອຸປະກອນທີ່ຈຳເປັນສຳລັບໂຄງການຮຽນຮູ້ອາດແມ່ນສະຖານທີ່ຝຶກ,ເນື້ອທີ່ເພື່ອເຮັດແປງສາທິດ, ແນວພັນ, ຝຸ່ນ ແລະ ຢາວັກຊິນເປັນຕົ້ນ,ແຕ່ໂດຍສ່ວນໃຫຍ່ຈະເປັນຂອງສາມະຊິກກຸ່ມຢູ່ແລ້ວ. ສະຖານທີ່ຝຶກອາດເປັນເຮືອນຂອງໃຜຜູ້ນຶ່ງໃນສາມະຊິກກຸ່ມ, ຫຼື ຫໍປະຊຸມບ້ານແລະ ອື່ນໆຕາມ ການເຫັນດີຂອງອຳນາດການປົກຄອງ. ສ່ວນແປງສາທິດແມ່ນດຳເນີນໃນເນື້ອທີ່ຜະລິດໃດ ນຶ່ງຂອງສາມະຊິກກຸ່ມໂດຍເຂົາເຈົ້າເປັນຜູ້ ອອກຄ່າຝຸ່ນ,ແນວພັນ..ເອົາເອງຕາມການຕົກລົງໃນ ຊ່ວງຫາຄວາມຕ້ອງການໃນການຝຶກເບື້ອງຕົ້ນ,ກ່ອນສະໝັກເຂົ້າເປັນສາມະຊິກກຸ່ມຜະລິດນັ້ນ.

ຖ້າຫາກເປັນປັດໃຈທີ່ຫາຍາກເຊັ່ນແນວພັນປັບປຸງໃໝ່ທີ່ບໍລິສຸດ,ຢາວັກຊິນ ,ແມ່ນນັກສົ່ງເສີມ ເມືອງ/ແຂວງນຳມາໃຫ້ເພື່ອສະໜັບສະໜູນໂຄງການຮຽນຮູ້ນັ້ນໆ, ແຕ່ກໍ່ເປັນຈຳນວນນ້ອຍ ໄຊ້ສຳລັບການທົດລອງແລະສາທິດເທົ່ານັ້ນ. ຖ້າຫາກຊາວກະສິກອນຕັດສິນໃຈຢາກນຳໄຊ້ໃນ ຈຳນວນຫຼາຍເຂົາເຈົ້າຕ້ອງຊື້ຈາກສູນ,ສະຖານີເອົາເອງ. ນັກສົ່ງເສີມລັດຈະມີການຈັດພິມເອກະ ສານແນະນຳ,ຄູ່ມືແຈກຢາຍຕາມທີ່ສາມະຊິກກຸ່ມຕ້ອງການ/ຈຳເປັນໃນເວລາຝຶກອົບຮົມ.

ການໃຫ້ຄ່າຕອບແທນແກ່ວິຊາການບ້ານແມ່ນມີການຕົກລົງແຕ່ຕົ້ນ,ໃນຕອນທີ່ມີການມອບໝາຍ ໜ້າທີ່ກ່ອນນັ້ນ. ວິຊາການບ້ານບໍ່ໄດ້ມີເງິນເດືອນຫຼືຄ່າຈ້າງໃດໆຈາກລັດ, ແຕ່ຈະຖືກຈ່າຍຄ່າ ຕອບແທນໂດຍສາມະຊິກຊຸມຊົນທີ່ໄດ້ຮັບປະໂຫຍດຈາກວຽກຂອງຜູ້ກ່ຽວ. ການຈ່າຍອາດເປັນ ເງິນ,ວັດຖຸຫຼືອາດເປັນແຮງງານ

ມີຫຼາຍຮູບການໃນການຕອບແທນແກ່ວິຊາການບ້ານຂຶ້ນກັບການຕົກລົງຂອງສາມະຊິກກຸ່ມໂຄງ ການຮຽນຮູ້ ອາດເປັນໄກ່,ເຂົ້າ,ປາ ຫຼື ໄຂ່. ອາດເປັນໄປໄດ້ທີ່ສາມະຊິກກຸ່ມຜະລິດສະຫຼະແຮງ ງານຮ່ວມກັນໄປຊ່ວຍວຽກຂອງວິຊາການບ້ານເພື່ອເປັນການຕອບແທນກໍ່ໄດ້ ຫຼື ອາດລວບລວມ ເງິນສົດຈ່າຍໃຫ້ຜູ້ກ່ຽວເນື່ອງຈາກໄດ້ຮັບຜົນຜະລິດສູງຂຶ້ນກ່ວາເດີມ.

ການຈ່າຍຄ່າຕອບແທນໃນວຽກສົ່ງເສີມລະດັບບ້ານນັ້ນແມ່ນມີລັກສະນະຄືດັ່ງທີ່ໄດ້ກ່າວມາບໍ່ວ່າ ຈະຢູ່ໃນໂຄງການຮຽນຮູ້ ແລະການບໍລິການນອກໂຄງການ ແຕ່ຂຶ້ນກັບການຈັດແຈງຂອງອຳນາດ ການປົກຄອງ, ໂດຍມີການຕົກລົງໃນເບື້ອງຕົ້ນກ່ອນຈະໃຫ້ວິຊາການບ້ານດຳເນີນກິດຈະກຳ..

ນອກໄປຈາກສິ່ງທີ່ກ່າວຂ້າງເທິງ,ວຽກການເງິນສຳລັບການຊຸກຍູ້ລະບົບການສົ່ງເສີມຂັ້ນບ້ານຍັງ ມີອີກສອງຢ່າງສຳຄັນທີ່ອຳນາດການປົກຄອງສາມາດສັນຫາໄດ້ເຊັ່ນ: ຢ່າງທີນຶ່ງ ແມ່ນກອງທຶນ ພັດທະນາບ້ານແມ່ນສາມາດນຳໄຊ້ເພື່ອສ້າງໂຄງການຮຽນຮູ້ ແລະ ໃຫ້ຄ່າຕອບແທນວິຊາການ ບ້ານໄດ້. ຢ່າງທີ່ສອງໂຄງການຊ່ວຍເຫຼືອຂອງຕ່າງປະເທດທີ່ມີໃນພື້ນທີ່ນັ້ນກໍ່ສາມາດຈ່າຍສ່ວນ ນຶ່ງສຳລັບກິດຈະກຳອັນ ທີ່ເປັນສ່ວນນຶ່ງຂອງລະບົບ VES .ແຕ່ຄວນເປັນສ່ວນ ເສີມ, ຫາກບໍ່ ແມ່ນເປັນອັນປ່ຽນແທນໃຫ້ແກ່ການທີ່ສາມະຊິກຊຸມຊົນຕ້ອງປະຕິບັດພັນທະ. ທັງນີ້ກໍ່ເພື່ອແນໃສ່

ການສ້າງລະບົບ ແລະ ທັດສະນະເພິ່ງຕົນເອງໃນລະດັບບ້ານໃຫ້ມີໃນລະດັບສູງ ແລະ ບໍ່ຄວນໃຫ້ເງິນຈາກໂຄງການຊ່ວຍເຫຼືອເຂົ້າໄປມີບົດບາດໃນການປັ່ນທອນສິ່ງເລົ່ານັ້ນລົງ

ກະຊວງກະສິກຳ ແລະ ປ່າໄມ້ຮັບຮູ້ແຈ້ງໃນສິ່ງດັ່ງກ່າວ ແນ່ນອນໃນຊ່ວງພັດທະນາແລະກຳລັງທົດສອບນຳໃຊ້. ຜົນໄດ້ຮັບຕ້ອງມີການຕິດຕາມຊຸກຍູ້ຢ່າງໃກ້ຊິດ ແລະ ຂໍ້ແນະນຳລະອຽດເພີ່ມເຕີມຈະໄດ້ມີການຈັດພິມແຈກຢາຍຕື່ມໃນອະນາຄົດໃກ້ໆນີ້.

### *3.4.5 ເຄື່ອງມືໃນຂະບວນການສົ່ງເສີມ*

ໂຄງການ (LEAP) ໄດ້ມີການພັດທະນາປຶ້ມເຄື່ອງມືສຳລັບດຳເນີນການສົ່ງເສີມຂອງພະນັກງານສົ່ງເສີມພາກສະໜາມຢ່າງເປັນຊຸດທີ່ສຳພັນຕໍ່ເນື່ອງ. ແຕ່ລະປຶ້ມເຄື່ອງມືໄດ້ມີ ຂັ້ນຕອນການປະຕິບັດລະອຽດຕໍ່ເນື່ອງສຳລັບການເອື້ອອຳນວຍໂຄງການຮຽນຮູ້ໃນການສ້າງລະບົບການສົ່ງເສີມຂັ້ນບ້ານ. ທຸກຂະບວນການນຳໃຊ້ແມ່ນໄດ້ທົດສອບຮ່ວມກັບນັກສົ່ງເສີມເມືອງ, ແຂວງ, ອຳນາດການປົກຄອງ,ກຸ່ມຜະລິດຢູ່ໃນເກືອບ 100 ບ້ານເປົ້າໝາຍຂອງໂຄງການ(ເບິ່ງ ຂໍ້2.6 ຕື່ມ).

ໃນປີ 2004 ໂຄງການ LEAP ໄດ້ຈັດພິມ ປຶ້ມຄູ່ມືການສົ່ງເສີມອອກແລ້ວມີທັງເປັນພາສາລາວ ແລະ ພາສາ ອັງກິດ, ໂດຍປະກອບມີ 6 ເຄື່ອງມືສຳຄັນບວກກັບຕົວຢ່າງຕ່າງໆຈາກການນຳໃຊ້ໃນບ້ານເປົ້າໝາຍມານັ້ນ. ລາຍລະອຽດແມ່ນ::

#1 ການນຳສະເໜີລະບົບການສົ່ງເສີມຂັ້ນບ້ານ

ເຄື່ອງມືນີ້ຈະຊ່ວຍນັກສົ່ງເສີມເມືອງອະທິບາຍລະບົບການສົ່ງເສີມຂັ້ນບ້ານໃຫ້ແກ່ອຳນາດການປົກຄອງບ້ານເປົ້າໝາຍ. ໃນເຄື່ອງມືດັ່ງກ່າວໄດ້ອະທິບາຍແຈ້ງ 6 ຂັ້ນຕອນການດຳເນີນການພາຍໃນຊ່ວງ 90 ນາທີ ໂດຍມີການນຳໃຊ້ ໂປສເຕີ ແລະ ວີດີໂອເຂົ້າເສີມ.

#2 ການປະເມີນຄວາມຕ້ອງການໃນການຝຶກແບບງ່າຍດາຍ (TNA-KISS)

ເປັນເຄື່ອງມືທີ່ຊ່ວຍນັກສົ່ງເສີມດຳເນີນການເອື້ອອຳນວຍການປະຊຸມ ປະມານ ເຄິ່ງວັນຮ່ວມກັບຊາວບ້ານ. ຕະລອດຊ່ວງການດຳເນີນການຊາວບ້ານຈະໄດ້ມີການວິເຄາະບັນຫາ, ຈັດລຽງໝວດໝູ່ ແລະ ໃຫ້ບຸລິມະສິດ,ກຳນົດຄວາມຮູ້ແລະຄວາມສາມາດອັນໃດຕ້ອງປັບປຸງເພື່ອຊ່ວຍໃນການແກ້ໄຂບັນຫາເລົ່ານັ້ນ. ໃນເຄື່ອງມືປະກອບມີຮ່າງແບບຟອມລາຍງານຜົນການຂອກ TNA ຊຶ່ງເປັນບ່ອນອີງສຳຄັນໃນການວາງແຜນດຳເນີນໂຄງການຮຽນຮູ້ຕໍ່ໄປ.

#3 ການວິເຄາະອຸປະສັກໃນຂະບວນການຜະລິດ

ເປັນເຄື່ອງມືຊ່ວຍໃນການວິເຄາະຫາ TNA , ມັນໄດ້ອະທິບາຍແຈ້ງວິທີການຈະຊ່ວຍກະຕຸ້ນໃຫ້ຊາວບ້ານໃນຊ່ວງເວລາປະມານ ນຶ່ງຊົ່ວໂມງ ສາມາດວິເຄາະເຫັນສາຍເຫດທີ່ກໍ່ໃຫ້ເກີດບັນຫາໃນຂະບວນການຜະລິດຂອງເຂົາເຈົ້ານັ້ນ, ໃນການວິເຄາະນີ້ແມ່ນຈະເຫັນໄດ້ແຈ້ງເຖິງບົດບາດຂອງ ເພດຍິງແລະຊາຍໃນຂະບວນການຜະລິດຊັດເຈນ.

#4 ການຕິດຕາມຜົນ (SIFT)

SIFT ແມ່ນການຮ່ວມຕີລາຄາຜົນທີ່ໄດ້ຮັບຈາກການດຳເນີນການນຳໃຊ້ບົດຮຽນທີ່ໄດ້ຮັບຈາກການຝຶກ ກັບ ສາມະຊິກກຸ່ມແລະອຳນາດການປົກຄອງບ້ານ. ຜູ້ເຂົ້າຮ່ວມຈະຖືກກະຕຸ້ນໃຫ້ລະບຸຜົນທີ່ເຮັດໄດ້, ບໍ່ໄດ້ ທຽບໃສ່ຄາດໝາຍທີ່ວາງໄວ້ໃນຊ່ວງເຮັດ TNA ແລະ ກຳນົດວິທີການທີ່ຕ້ອງຮີບຮ້ອນແກ້ໄຂ. ໃຊ້ເວລາດຳເນີນການ SIFT ປະມານ ແຕ່ 90 - 2 ຊົ່ວໂມງ..

#5 ການແລກປ່ຽນລະວ່າງຊາວກະສິກອນ (FEF)

FEF ຈະຊ່ວຍສາມະຊິກກຸ່ມໃນການແລກປ່ຽນຄວາມຄິດເຫັນວ່າສິ່ງໃດທີ່ເຂົາເຈົ້າຮຽນຮູ້ແລະນຳໃຊ້ໄດ້ເກີດຜົນກັບຊາວບ້ານຄົນອື່ນທີ່ສົນໃຈໃນບ້ານ. ກິດຈະກຳທີ່ດຳເນີນປະມານເຄິ່ງຄາບໃນນີ້ຜົນຈາກການຮຽນຮູ້ຂອງສາມະຊິກກຸ່ມຜະລິດຈະຖືກວິເຄາະວິໃຈ ແລະຊາວບ້ານຜູ້ທີ່ເຂົ້າ ຮ່ວມຈະໄດ້ຕັດສິນໃຈໃນການສືບຕໍ່ຮຽນຮູ້ກິດຈະກຳນັ້ນໆ ແລະ ໃນ ຮ່າງລາຍງານ FEF ໄດ້ມີ ການລະບຸຊື່ບຸກຄົນເລົ່ານັ້ນ.

#6 ການຂະຫຍາຍຕາມ່າງສົ່ງເສີມຂອງບ້ານ (EVES)

ເຄື່ອງມືອັນນີ້ ນຳໃຊ້ໃນຊ່ວງທ້າຍຂອງໂຄງການຮຽນຮູ້ຮອບທີນຶ່ງຜ່ານໄປໃນບ້ານເປົ້າໝາຍທົດລອງນັ້ນ. ຈະໃຊ້ເວລາດຳເນີນການປະມານເຄິ່ງວັນ,ຊຶ່ງຈະມີຊາວບ້ານສ່ວນໃຫຍ່ເຂົ້າຮ່ວມ. ຈະໄດ້ ມີການລາຍງານຜົນຂອງການປະເມີນໂຄງການຮຽນຮູ້ທີ່ໄດ້ລິເລີ່ມມານັ້ນ ແລະ ວິຊາການບ້ານຈະໄດ້ຖືກມອບໝາຍໜ້າທີ່ເປັນທາງການ. ຍັງມີການຕົກລົງສິ່ງທີ່ຫ້ອງການ ແລະ ນັກສົ່ງເສີມເມືອງຕ້ອງສືບຕໍ່ໃຫ້ການສະໜັບສະໜູນ.

ຂໍ້ແນະນຳ ແລະ ແບບຟອມຕ່າງໆທີ່ມີໃນປື້ມເຄື່ອງມືບໍ່ໄດ້ເປັນຂໍ້ບັງຄັບຕາຍຕົວຜູ້ໃຊ້ສາມາດດັດປັບໃຫ້ເຂົ້າກັບສະພາບຂອງພື້ນຖານໄດ້.

ນອກຈາກປື້ມເຄື່ອງມືແລ້ວໂຄງການສົ່ງເສີມກະສິກຳຍັງຜະລິດແລະພິມເອກະສານແນະນຳອື່ນຫຼາຍຫົວຂໍ້ສຳລັບນັກສົ່ງເສີມຊຶ່ງລວມມີທັງໝວດວິທີການສົ່ງເສີມ, ໝວດເຕັກນິກການຜະລິດທັງໝົດເລົ່ານັ້ນແມ່ນເລັ່ງໃສ່ຊ່ວຍພະນັກງານແຂວງ ແລະ ເມືອງ ຮວມທັງພະນັກງານຂອງອົງການຈັດຕັ້ງອື່ນໆທີ່ປະຕິບັດກິດຈະກຳການສົ່ງເສີມໃນ ສ ປປ ລາວ. ອຸປະກອນດັ່ງກ່າວຕ້ອງມີການທົບທວນແລະ ກວດແກ້ ໂຄງການສົ່ງເສີມກະສິກຳມີຄວາມຍິນດີຮັບເອົາຄຳຕິຊົມແລະຂໍ້ຄິດເຫັນຈາກທຸກໆທ່ານ

## 3.5 ກໍລະນີສຶກສາຮູບແບບການສົ່ງເສີມຂອງລາວ[19]

ໃນແມ່ນ້ຳຂອງຕອນໄຕ້ຂອງປະເທດມີດອນນຶ່ງຊື່ຮຽກວ່າ "ດອນໄຂງ" ຊຶ່ງເປັນນຶ່ງໃນ ສີ່ພັນດອນ, ມີຂະໜາດຍາວ 18 ກມ ແລະ ກ້ວາງ 8 ກມ ປະກອບດ້ວຍພົນລະເມືອງປະມານ 55,000 ຄົນທີ່ມີອາຊີບຫຼັກແມ່ນການປູກເຂົ້າແລະຫາປາ. ໃນບ້ານແສນຮາດທີ່ເປັນບ້ານ ນຶ່ງໃນດອນໄຂງ ລູງ ມັງທີ່ກຳລັງນັ່ງໃນກ້ອງລ່າງເຮືອນໄມ້ທີ່ໜ້າຮັກຂອງລາວຮ່ວມກັບສາມະຊິກ ກຸ່ມປູກເຂົ້າຄົນອື່ນໆໄດ້ສົນທະນາເຖິງລະບົບການສົ່ງເສີມຂັ້ນບ້ານທີ່ໄດ້ດຳເນີນການປະຕິບັດມາໄດ້ປະມານ 9 ເດືອນໂດຍການສະໜັບສະໜູນຈາກພະນັກງານສົ່ງເສີມເມືອງໂຂງ. ຜູ້ກ່ຽວໄດ້ໃຫ້ທັດສະນະຕໍ່ລະບົບດັ່ງກ່າວວ່າ:

*"ຜ່ານມາພວກເຮົາເຫັນພະນັກງານສົ່ງເສີມມາຫານ້ອຍເທື່ອທີ່ສຸດ, ຖ້າມາກໍ່ພຽງແຕ່ມາປະຊຸມນ້ອຍນຶ່ງກໍ່ໜີໄປ. ແຕ່ໃນປີນີ້ແມ່ນໄດ້ມາເຮັດວຽກຮ່ວມກັບພວກເຮົາ,ສາທິດແນະນຳປະຕິບັດຕົວຈິງໃຫ້ເຫັນ,ຊ່ວຍພວກເຮົານຳໃຊ້ເຕັກນິກວິທີການປູກເຂົ້າແບບໃໝ່ໃຫ້*

*"ໄດ້ເລີ່ມວຽກນຳກັນເດືອນ ມີນາ,ຊຶ່ງໄດ້ມີການປະຊຸມສົນທະນາຫາບັນຫາຂອງພວກເຮົາແລະກໍ່ໄດ້ຈົດຊື່ຜູ້ທີ່ສົນໃຈຢາກເຮັດຢາກສ້າງແບ່ງອອກເປັນສອງກຸ່ມຄື ກຸ່ມນຶ່ງມີ 11 ຄອບຄົວ ຢາກປັບປຸງການປູກເຂົ້າ ແລະ ອີກກຸ່ມນຶ່ງມີຈຳນວນນ້ອຍກ່ວາແມ່ນຢາກປັບປຸງການລ້ຽງປາ. ຈາກນັ້ນ ນັກສົ່ງເສີມກໍ່ໄດ້ລົງມາຝຶກໃຫ້ປະມານ ສີ່ ຫາ ຫ້າເທື່ອໃຫ້ແຕ່ລະກຸ່ມເປັນໄລຍະໆຮວມທັງລົງມາຕິດຕາມຕະລອດ"*

*"ເຕັກນິກທີ່ໄດ້ຮຽນສຳລັບການປູກເຂົ້າແມ່ນການກຽມຕາກ້າ ແລະໃຊ້ແນວພັນປັບປຸງ. ແລ້ວພວກເຮົາກໍ່ນຳໄປທົດ ລອງເຮັດຕົວຈິງໃນນາຕົນເອງ ແລະກໍ່ໄດ້ເຫັນຜົນການປັບປຸງ ຕົວຈິງ. ເມັຍຂ້າພະເຈົ້າບອກວ່າໃນລະ ດູການຕໍ່ໄປເຮັດຕາກ້າໃຫ້ເປັນ ໝານໝົດເພາະລາວບົວລະ ບັດງ່າຍສຳບາຍ ແລະ*



**ລູງ ມັງກຳລັງຕິດຕາມການເຕີບໂຕເຂົ້າແນວພັນໃໝ່ຂອງລາວ**
(ບ. ແສນຮາດ, ເມືອງໂຂງ ແຂວງ ຈຳປາສັກ)

*ຂ້າພະເຈົ້າກໍ່ໝັ້ນໃຈວ່າ ສະມັດຕະພາບຕ້ອງສູງກ່ວາ ເກົ່າ*

*ແນ່ນອນ.ເພາະວ່າການແຕກ ກໍໃນ ສຸມນຶ່ງມີຮອດ 10-12 ຕົ້ນທຽບໃສ່ແນວພັນທີ່ໄຊ້ແຕ່ເກົ່າມີພຽງ 4-5 ຕົ້ນຕໍ່ສຸມ, ແຕ່ເກົ່າ ໄດ້ເຂົ້າ ປະມານ 2,5 ໂຕນ/ເຮັກຕາ ແຕ່ດຽວນີ້ຄາດວ່າບໍ່ຫຼຸດ 4 ໂຕນ/ເຮັກຕາຈາກການໄຊ້ແນວ ພັນໃໝ່ ນີ້ ທັງໆທີ່ບໍ່ໄດ້ໃສ່ຝຸ່ນ/ຢາເຄມີຫຍັງໝົດນອກຈາກຂີ້ງົວຂີ້ຄວາຍທີ່ມີໃນນານັ້ນ.".*

ນີ້ເປັນສິ່ງສະແດງໃຫ້ເຫັນແຈ້ງເຖິງຄວາມເປັນນ້ຳນຶ່ງໃຈດຽວຂອງສາມະຊິກກຸ່ມແລະ ກໍ່ຮູ້ໄດ້ວ່າເຂົາເຈົ້າຈະເຮັດຫຍັງແນວໃດໃນລະດູການຕໍ່ໄປ. ນຶ່ງກິດຈະກຳທີ່ເຮັດໄດ້ດີໆ ໄດ້ເປັນການສະແດງ/ຝຶກໃຫ້ຄົນອື່ນຮຽນຮູ້ນຳໄດ້ໃນເຂດນັ້ນໆ.ເພາະມັນໄດ້ມີຂໍ້ຮຽກຮ້ອງຢາກຮຽນຈາກຫຼາຍໆຄອບຄົວຊາວກະສິກອນທີ່ໄດ້ເຫັນຜົນການປະຕິບັດຂອງສາມະຊິກກຸ່ມປູກເຂົ້ານັ້ນ. ໃນຖານະເປັນສ່ວນນຶ່ງຂອງລະບົບສິ່ງເສີມຂັ້ນບ້ານເຂົາເຈົ້າກໍ່ຈະຈັດຕັ້ງການເຜີຍແຜ່ກັນເອົາເອງ ແລະ ໃຫ້ພະນັກງານເມືອງລົງຕິດຕາມໃກ້ຊິດ. ນອກນັ້ນ ສະມາຊິກກຸ່ມປາກໍ່ບອກວ່າຊາວບ້ານຫຼາຍຄົນສົນໃຈຢາກຮຽນນຳ, ທ່ານ ເປ ບອກວ່າ.

*"ຂອ້ຍຊື້ປານ້ອຍມາປ່ອຍໃນເວລາດຽວກັບຜູ້ອື່ນໆເ ແຕ່ປາຂ້ອຍປະຈຸບັນຈະໄດ້ປະມານ 800 ກຼາມຕໍ່ໂຕ,ຂອງຜູ້ອື່ນ ປະມານ 300 ກຼາມ/ໂຕ, ທັງນີ້ກໍ່ເພາະວ່າຂ້ອຍໄດ້ຕຽມໜອງໃຫ້ເລິກ, ນ້ຳໃຫ້ມີຄຸນນະພາບ ແລະ ເກືອປາເປັນເວລາໃຫ້ພຽງພໍ ຖືກຫຼັກວິຊາການ".*

*"ປະຈຸບັນປະລິມານປາທີ່ຫາໄດ້ຈາກນ້ຳຂອງລົດລົງຫຼາຍແລະກໍ່ເປັນຍາມ/ລະດູການ,ແຕ່ຂ້າພະເຈົ້າສາມາດຂາຍ,ມີກິນຕະລອດປີ. ແຕ່ກ່ອນບໍ່ສາມາດເຮັດໜອງແບບນີ້ເພາະອີງໃສ່ແຕ່ນ້ຳຝົນ, ເວລານີ້ມີຄອງຊົນລະປະທານທີ່ສ້າງແລ້ວໃນປີ 2002ນັ້ນເປັນໂອກາດດີທີ່ສຸດກັບພວກເຮົາ"*

ການຮຽນຮູ້ເພື່ອກຳນົດສິ່ງທີ່ເປັນໂອກາດ ແລະ ວິທີແກ້ບັນຫາແມ່ນສິ່ງສຳຄັນໃນລະບົບການສິ່ງເສີມຂັ້ນບ້ານ.ແລະ ມັນຈະເກີດຂຶ້ນໄດ້ ເວລາໃດທີ່ທຸກຄົນມີສ່ວນຮ່ວມໃນລະບົບ. ທ່ານ ຈະລຸນ ນຶ່ງໃນທີມນັກສິ່ງເສີມ ທີ່ເຮັດໜ້າທີ່ສິ່ງເສີມກຸ່ມຜະລິດຕ່າງໆໃນເຂດບ້ານແສນຮາດ, ນອກຈາກນັ້ນເຂົາຍັງດຳເນີນການປະຕິບັດໜ້າທີ່ໃນສູນລ້ຽງປາຂອງເມືອງເພື່ອຜະລິດປານ້ອຍສະໜອງໃຫ້ຊາວບ້ານໄດ້ໃຫ້ຂໍ້ຄິດວ່າມີວຽກຫຼາຍຂຶ້ນສຳລັບພະນັກງານສິ່ງເສີມທີ່ຈະສ້າງໃຫ້ເກີດ ລະບົບ"

*"ແຕ່ກໍ່ບໍ່ໄດ້ໝາຍວ່າຜູ້ດຽວຈະເຮັດໝົດທຸກຢ່າງເພາະວ່າອຳນາດການປົກຄອງບ້ານເປັນຜູ້ຈັດຕັ້ງການປະຊຸມ ແລະ ສາມະຊິກກຸ່ມຜະລິດເປັນຜູ້ນຳເອົາບົດຮຽນໄປທົດລອງໃນເນື້ອທີ່ຜະລິດຂອງເຂົາເຈົ້າ ແລະ ພວກເຮົາກໍ່ມີທີມງານ ສາມຄົນ ຄື ພູນສິນ ແລະ ວິວົງກົດຊ່ວຍກັນ ລວມທັງການຈັດຕັ້ງຂອງຫ້ອງການ ກໍ່ໃຫ້ການສະໜັບສະໜູນສຸດຂີດ."*

ທ່ານ ວິລະວົງ ຊຶ່ງເປັນຫົວໜ້າສູນສິ່ງເສີມ ແຂວງຈຳປາສັກ ໃຫ້ທັດສະນະວ່າພວກເຮົາສະໜັບສະໜູນທີ່ສຸດໃນການສ້າງລະບົບການສິ່ງເສີມຂັ້ນບ້ານໃນສາມເມືອງ ໂດຍສະເພາະໃນເມືອງ

ໂຊງໄດ້ເລີ່ມຈັດຕັ້ງໃນ 9 ບ້ານຮວມທັງ ບ້ານ ແສນຮາດນ້ອຍ,ຂ້າພະເຈົ້າແມ່ນມີຄວາມເປັນຫ່ວງເປັນໃຍສູງໃນເວລາເລີ່ມຕົ້ນສະເໜີລະບົບ:

*"ໂດຍສະເພາະໃນເລື່ອງຄວາມສາມາດຂອງທີມພະນັກງານສົ່ງເສີມພວກເຮົາ,ແມ່ນແທ້ຜ່ານມາຂ້າພະເຈົ້າເຫັນໄດ້ຜົນງານໃນສູນ ເຊັ່ນ ທ່ານຈະລຸນ ແຕ່ໃນພາກສະໜາມບໍ່ທັນມີອັນເດັ່ນຊັດແຕ່ຕົກຮອດປະຈຸບັນເຫັນວ່າລະບົບມີຜົນສຳເລັດສູງ, ທີມພະນັກງານເມືອງໄດ້ເຮັດວຽກກັບຊາວກະສິກອນໂດຍກົງແນວນີ້ເຫັນວ່າຊາວບ້ານໄດ້ມີຜົນສຳເລັດສູງຫຼາຍ""*

ທ່ານ ສົມຄິດຫົວໜ້າສູນສົ່ງເສີມແຂວງສາລະວັນກໍ່ມີຄວາມເຫັນທີ່ເປັນຫ່ວງເໝືອນກັນໃນການສ້າງ ລະບົບການສົ່ງເສີມຂັ້ນບ້ານ ເພາະວ່າ

*" ໂຄງການສົ່ງເສີມນີ້ເນັ້ນໃສ່ການພັດທະນາວິທີການສົ່ງເສີມແລະ ດຳເນີນການຝຶກອົບຮົມ, ແຕ່ບໍ່ມີການຕອບສະໜອງປັດໃຈຢ່າງໃດໃຫ້ແກ່ປະຊາຊົນ, ໂຄງການອື່ນພັດມີໃຫ້,ຊຶ່ງບາງທ້ອງຖິ່ນກໍ່ເຫັນມີຄວາມຈຳເປັນ"*

ມີບ່າງບ່ອນກໍ່ບໍ່ຈຳເປັນເຊັ່ນໃນເມືອງຄົງເຊໂດນ,ຢູ່ບ້ານ ໜອງ ແຕ່ງ ຊຶ່ງມີ 60 ຄອບຄົວ ແລະເປັນ ບ້ານທີ່ໄດ້ເຂົ້າໄປສ້າງກຸ່ມລ້ຽງໄກ່ໃນຊ່ວງ ສອງປີຜ່ານມານັ້ນ. ປ້າ ເພັງໄດ້ອະທິບາຍກ່ຽວກັບການປະຕິບັດວ່າ"

*"ຜ່ານມາແຕ່ລະຄອບຄົວໃນບ້ານແມ່ນລ້ຽງໄກ່ ແລະ ປ່ອຍໃຫ້ຫາກິນເອງ,ຮອດຍາມຕາຍທ່າກໍ່ຕາຍ, ເຫຼືອເລັກໆນ້ອຍໆ, ແຕ່ກໍ່ບໍ່ໄດ້ຄິດວ່າຈະເຮັດແນວໃດໃຫ້ດີຂື້ນ. ເມື່ອໄດ້ສ້າງຕັ້ງກຸ່ມຮຽນຮູ້ຂື້ນພວກເຮົາສ້າງຄອກໄກ່, ທົດລອງໃຫ້ອາຫານທີ່ປະສົມໄດ້ຫຼາຍໆວິທີ ,ຮຽນຮູ້ການສັກຢາວັກຊິນປ້ອງກັນພະຍາດນິວຄາເຊິນແລະອື່ນໆ, ຜົນທີ່ໄດ້ກໍ່ຄືໄກ່ໃຫຍ່ໄວ, ບໍ່ຕາຍຄືແຕ່ກ່ອນ. ແຕ່ລະຄອບຄົວສາມະຊິກກຸ່ມມີໄກ່ພໍ່ແມ່ລົກໄວ້ ປະມານ 20 ໂຕແລະແມ່ຄ້າມາຊື້ໄກ່ພວກເຮົາຢູ່ກັບບ້ານ ໂຕລະ 18,000 ເຖິງ20,000 ກີບຂື້ນຕາມໂຕນ້ອຍໂຕໃຫຍ່".*

*"ທ່ານທະນູສອນນັກສົ່ງເສີມເມືອງຄົງໄດ້ບອກ ພວກເຮົາເຮັດທັງໝົດ ແຕ່ບໍ່ໄດ້ໃຫ້ຫຍັງຟຣີແກ່ພວກເຮົາ. ຄອກໄກ່ກໍ່ເຮັດດ້ວຍໄມ້ປ່ອງແບບ ງ່າຍໆ, ອາຫານ ກໍ່ນຳໃຊ້ເຂົ້າປຽນ, ຮຳ. ຢາວັກຊິນກໍ່ຊື້ເອົາຢູ່ໃນເມືອງນີ້. ມີຫຼາຍຄອບຄົວໄດ້ ຮ້ອງຂໍພວກເຮົາໃຫ້ຊ່ວຍ ສັກຢາໄກ່ເຂົາເຈົ້າ ແລະ ຍອມຈ່າຍໃຫ້500 ກີບຕໍ່ໂຕ.".*



ປ້າ ເພັງກຳລັງກວດໄຂ່ໄກ່ໃນຄອກທີ່ປຸກໃໝ່ (ບ. ໜອງແຕ່ງ,ເມືອງຄົງເຊໂດນ,ແຂວງ ສາລະວັນ)

ກຸ່ມລ້ຽງໄກ່ໃນບ້ານໜອງແຕ່ງພວກເຮົາ ໝັ້ນໃຈ ແລະ ດຳເນີນກິດຈະກຳໄດ້ໂດຍບໍ່ຈຳເປັນການ ຊ່ວຍເຫຼືອຂອງນັກສົ່ງເສີມເມືອງ ອີກ. ແຕ່ຢ່າງໃດກໍດີ ປ້າ ເພັງ

ແລະສາມະຊິກຄົນອື່ນມີຄວາມ ສົນໃຈ ຢາກຮຽນຮູ້ການປູກເຫັດເຟືອງຕົ່ມ.ເພາະມີ ເຟືອງຫຼາຍ

ແລະ ພະນັກງານເມືອງຮູ້ວ່າອາ ຈານ ສອນຢູ່ ໂຮງຮຽນກະເສດຊ່ຽວຊານໃນເລື່ອງນີ້ດີ ແລະ ຕ້ອງການໃຫ້ການຝຶກເຂົາເຈົ້າແລະ ກໍ່ ຈະ ໄດ້ມີ ການວາງແຜນລະອຽດ"

ກັບສູ່ ກອງສົ່ງເສີມແຂວງ ສາລະວັນ ທ່ານ ສົມຄິດຫົວໜ້າສູນຍັງໄດ້ໃຫ້ຂໍ້ຄິດເຫັນອີກວ່າ ລະບົບການສົ່ງເສີມຂັ້ນບ້ານມີຜົນໃນທາງບວກຫຼາຍ, ບັນດາຄວາມຮູ້ ແລະ ປະສົບການທີ່ຊາວກະສິກອນໄດ້ຮັບຈາກການຝຶກ ແລະ ທົດລອງໄຊ້ນັ້ນເຮັດໃຫ້ກຸ່ມຜະລິດເກີດການປ່ຽນແປງທີ່ແທ້ຈິງ, ເຖິງພວກເຮົາບໍ່ໄດ້ສະໜອງປັດໃຈຫຍັງໃຫ້ເຂົາເຈົ້າ. ແຕ່ສິ່ງທ້າທາຍໃຫຍ່ສຳລັບພວກເຮົາແມ່ນການຜັນຂະຫຍາຍອອກສູ່ວົງກ້ວາງຕາມທິດຊີ້ນຳຂອງທ່ານເຈົ້າແຂວງໃນກອງປະຊຸມຄື"ໃຫ້ທຸກໂຄງການພັດທະນາວຽກກະສິກຳທີ່ມີໃນແຂວງສາລະວັນມີການປະສານກິດຈະກຳນຳກັນ". ແລະ ກອງປະຊຸມນີ້ກໍ່ເປັນການເປີດໂອກາດໃຫ້ມີການປະສົມປະສານຮູບແບບການສົ່ງເສີມໃໝ່ນີ້ເຂົ້າກັບຂະແໜງວິຊາສະເພາະ ແລະ ແລ່ງການເງິນຂອງບັນດາໂຄງການຕ່າງໆ. ດັ່ງຜົນທີ່ໄດ້ຮັບຈາກ ກໍລະນີ ຂອງ ລູງ ມັງ ແລະ ປ້າເພັງ ກໍ່ຄືຂອງຫຼາຍໆ ຄົນທີ່ໄດ້ເຂົ້າຮ່ວມໂຄງການຮຽນຮູ້ນັ້ນ ມັນແມ່ນເປັນການຍົກຜົນຜະລິດ,ປັບປຸງແບບແຜນການຜະລິດ ແລະ ເພິ່ງຕົນເອງໄດ້ທີ່ແທ້ຈິງ.

## 3.6 ການເສີມສ້າງຄວາມເຂັ້ມແຂງຂອງອົງກອນ

### *3.6.1 ບົດບາດຂອງການຝຶກອົບຮົມ*

ການຝຶກອົບຮົມແມ່ນສິ່ງສຳຄັນໃຈກາງສຳລັບລະບົບການສົ່ງເສີມຂັ້ນບ້ານ ແລະ ການບໍລິການວຽກ ສົ່ງເສີມຂອງລັດ. ຜ່ານການຝຶກອົບຮົມຊາວກະສິກອນສາມາດສ້າງໄດ້ຂີດຄວາມສາມາດໃນການແກ້ບັນຫາໃນການຜະລິດ. ການຝຶກຍັງເປັນມາດຕາການສຳຄັນໃນການເສີມສ້າງຂີດຄວາມສາມາດຂອງພະນັກງານລັດໃນການສະໜັບສະໜູນຄວາມພະຍາຍາມຕ່າງໆຂອງຊາວກະສິກອນ.

ການຝຶກອົບຮົມທີ່ນຳໄຊ້ດຳເນີນການຢູ່ໃນ ຮູບແບບການສົ່ງເສີມຂອງລາວ (LEA) ແມ່ນບົນພື້ນຖານທັດສະນະ" ທັງຮຽນ ທັງ ເຮັດ". ພະນັກງານລັດມີຄວາມຮູ້ຄວາມສາມາດແມ່ນໄດ້ ຜ່ານການນຳໄຊ້ປະຕິບັດເຂົ້າໃນການເຮັດໜ້າທີ່ປົກກະຕິຂອງຕົນ ແລະ ປະຊາຊົນກໍ່ແມ່ນໄດ້ຜ່ານການດຳເນີນກິດຈະກຳການຜະລິດຕົວຈິງ"

ປະສິດຕິຜົນຂອງການຝຶກແບບນີ້ຂື້ນກັບ:

- 'ຄວາມຈິງຂອງຊີວິດ' ຫົວຂໍ້ ແລະ ວິທີການຝຶກຕ້ອງນອນໃນພື້ນຖານເງື່ອນໄຂທີ່ຜູ້ເຂົ້າຮ່ວມຈະປະເຊີນໜ້າຕົວຈິງຫຼັງຈາກຊື້ນສຸດການຝຶກໄປເຮັດໜ້າທີ່. ຈຸດເລີ່ມຕົ້ນຂອງການຮຽນຮູ້ຕ້ອງແມ່ນການແກ້ບັນຫາຕົວຈິງ ຫາກບໍ່ແມ່ນພຽງແຕ່ເປັນຫຼັກການທາງທິດສະດີ..

- 'ດູນພິນິດພິຈາລະນາ' ຂອງສຳມະນາກອນ. ຜູ້ເຂົ້າຮ່ວມການຝຶກຕ້ອງໄດ້ມີການຄົ້ນຄິດວິເຄາະຂໍ້ມູນຢ່າງເອົາຈິງເອົາຈັງ,ມີຄວາມຕັດສິນໃຈສູງໃນການປະຕິບັດໜ້າທີ່ ກ້າສະແດງອອກ. ຫາກບໍ່ແມ່ນເປັນພຽງການເຂົ້າຮ່ວມສັງເກດການຕາມພັນທະແລະແຈ້ງການ
- 'ທັກສະການເອື້ອອຳນວຍ' ຂອງຄູຝຶກ. ບົດບາດຂອງຜູ້ເປັນຄູຝຶກເພື່ອສ້າງໂອກາດໃຫ້ເກີດການຮຽນຮູ້ ບໍ່ແມ່ນເປັນພຽງການອະທິບາຍ/ສົ່ງຂໍ້ມູນ, ຄູຝຶກຕ້ອງໄດ້ກຳນົດໜ້າທີ່, ໃຫ້ໂຈດ, ໃຫ້ຂໍ້ມູນທີ່ກ່ຽວຂ້ອງ ແລະ ຊຸກຍູ້ໃຫ້ເກີດການປະເມີນຕົນເອງຂອງສຳມະນາກອນຢ່າງຈິງຈັງ

ການຝຶກໃນເຊີງປະຕິບັດການນີ້ບໍ່ໄດ້ກ່ຽວຂ້ອງກັບການໃຫ້ມາຟັງການບັນລະຍາຍໃນຫ້ອງຝຶກ ແລະ ບໍ່ແມ່ນການທີ່ຈະໃຫ້ມີຜົນດ້ານຄວາມເຂົ້າໃຈຂໍ້ມູນທາງເຕັກນິກວິຊາສະເພາະ. ກົງກັນຂ້າມ" ການຝຶກ ທັງຮຽນ ທັງ ເຮັດ" ແມ່ນມຸ້ງເນັ້ນໃສ່ການປຸ່ງນທັດສະນະ, ເສີມສ້າງຄວາມຮູ້ ແລະ ທັກສະຂື້ນ ແລະ ນີ້ມັນເປັນການສ້າງປະຖົມປັດໃຈໃຫ້ແກ່ການກຳນົດພາລະກິດ ແລະ ຄວາມຕັດສິນໃຈເລັ່ງແກ້ບັນຫາທີ່ມີ ແລະຈະເກີດຂື້ນໃໝ່

ການຈັດຕັ້ງປະຕິບັດຮູບແບບການຝຶກນີ້ແມ່ນຕ້ອງການຄູຝຶກທີ່ມີປະສົບການສູງໂດຍສະເພາະຄູຝຶກສູນກາງ. ສຳຄັນບໍ່ນ້ອຍກ່ວາກັນນັ້ນກໍ່ແມ່ນການເຮັດວຽກເປັນທິມໃນທຸກລຳດັບຂັ້ນການຄຸ້ມຄອງໃນລະບົບການຝຶກ. ການພ້ອມ ແລະ ຈິງໃຈຮຽນຮູ້ດ້ວຍກັນ ຈາກປະສົມການທີ່ມີແມ່ນປັດໃຈຕັດສິນແກ່ການສ້າງຄວາມຊ່ຽວຊານ/ສຳນານງານຂອງແຕ່ລະຄົນ

ສີ່ງສຸດທ້ານທີ່ຕ້ອງລະບຸ ແມ່ນ " ການຝຶກອົບຮົມໃນໂຕມັນແລ້ວບໍ່ແມ່ນສີ່ງສາມາດແກ້ໄດ້ທຸກບັນຫາທີ່ ກ່ຽວຂ້ອງກັບການສົ່ງເສີມ ກະສິກຳ ແລະ ປ່າໄມ້. ຜົນສຳເລັດຈະເກີດຂື້ນສົມບູນແບບນັ້ນ ແມ່ນຮຽກຮ້ອງໃຫ້ມີ ນະໂຍບາຍທີ່ສອດຄ່ອງ ແລະ ຊັບພະຍາກອນອັນຈຳເປັນພື້ນຖານເໝາະສົມ, ຖ້າບໍ່ດັ່ງນັ້ນການຝຶກ/ສົ່ງເສີມກໍ່ຈະກໍ່ໃຫ້ເກີດຜົນຕົວຈິງທີ່ເປັນລະບົບໄດ້ຍາກ.

### 3.6.2 *ການຝຶກອົບຮົມ ຂອງ ພະນັກງານສົ່ງເສີມ*

ການຜັນຂະຫຍາຍລະບົບ/ຮູບແບບການສົ່ງເສີມຂອງລາວມີສອງປະເພດການຝຶກໃຫ້ພະນັກງານສົ່ງເສີມ

ກ) ການຝຶກພະນັກງານເມືອງໃຫ້ເປັນນັກສົ່ງເສີມຮອບດ້ານ.

ພະນັກງານສ່ວນຫຼວງຫຼາຍໃນຫ້ອງການ ກ ປ ເມືອງ ແມ່ນນັກວິຊາການເຊັ່ນ: ປູກຝັງ, ລ້ຽງສັດ, ປ່າໄມ້ , ຊົນລະປະທານ ແລະ ອື່ນໆ. ສະນັ້ນ ການຝຶກອົບຮົມ,ມີຄວາມຈຳເປັນຕ້ອງໄດ້ຈັດຕັ້ງປະຕິບັດໃນແຕ່ລະແຂວງ/ເມືອງເພື່ອໃຫ້ແນ່ໃຈວ່ານັກສົ່ງເສີມສາມາດຕອບສະໜອງໃຫ້ການແນະນຳໄດ້ສອດຄ່ອງກັບຄວາມຕ້ອງການຂອງຊາວກະສິກອນ. ນັກສົ່ງເສີມຮອບດ້ານຕ້ອງສາ

ມາດ ສະໜັບສະໜູນການຈັດຕັ້ງສ້າງໂຄງການຮຽນຮູ້ທີ່ກ່ຽວກັບການປູກພືດ, ລ້ຽງສັດ, ປ້ອງກັນດິນ ເຊາະເຈື່ອນ,ການຈັດການນ້ຳ, ການກະສິກຳ-ປ່າໄມ້, ການຕະລາດ, ແລະ ອື່ນໆທີ່ກ່ຽວກັບລະບົບການຜະລິດ.

ວິຊາການສະເພາະດ້ານຈາກຂະແໜງການໃນແຂວງ, ຈະເປັນຜູ້ເຮັດໜ້າທີ່ເສີມສ້າງນັກສົ່ງເສີມຮອບດ້ານໃຫ້ແກ່ເມືອງໂດຍມີການສໜັບສະໜູນຢ່າງໃກ້ຊິດຈາກຄູຝຶກສູນກາງ. ໄລຍະເວລາການຝຶກ ປະມານ 10-15 ວັນ ຈະແບ່ງອອກຝຶກເປັນ ສອງ ຫາ ສາມຄັ້ງຕໍ່ປີນີ້ງຢູ່ໃນແຕ່ລະແຂວງ,ຊຶ່ງຂຶ້ນກັບເງື່ອນໄຂດ້ານງົບປະມານ ແລະ ຄູຝຶກຂອງແຂວງຮວມທັງຈຳນວນນັກສົ່ງເສີມເມືອງທີ່ຕ້ອງການເຂົ້າຮັບການຝຶກ

ໃນອະນາຄົດໃກ້ໆນີ້ບັນດາໂຮງຮຽນກະສິກຳຊັ້ນກາງ, ມະຫາວິທະຍາໄລກໍ່ຈະໄດ້ມີການໃຫ້ຄວາມຮູ້ແກ່ນັກສຶກສາດ້ານການສົ່ງເສີມຮອບດ້ານອັນຈະນຳໄປສູ່ການປະກອບເປັນພະນັກງານສົ່ງເສີມໃນຂັ້ນເມືອງທີ່ສາມາດເຮັດວຽກໄດ້ໄວ ແລະ ບໍ່ຈຳເປັນຕ້ອງໄຊ້ເວລາຝຶກແອບວຽກດົນ.

ຂ) ພະນັກງານແຂວງ ແລະ ເມືອງທີ່ຕ້ອງໄດ້ຮັບການຝຶກ ດ້ານວິທີການສົ່ງເສີມ.

ຂັ້ນຕອນຕ່າງໆໃນການດຳເນີນການສ້າງລະບົບສົ່ງເສີມຂັ້ນບ້ານນັ້ນໄດ້ອະທິບາຍແຈ້ງໃນຂໍ້ 3.4.3 ຂ້າງເທິງ. ຂັ້ນຕອນດັ່ງກ່າວໄດ້ມີຫຼັກສູດພື້ນຖານສະເພາະເພື່ອນຳໄປປະຕິບັດບົດບາດ, ວິທີການສົ່ງເສີມ. ຮວມທັງມີເຄື່ອງມືໃນການສົ່ງເສີມເພື່ອນຳໄຊ້ປະກອບໃນຫຼັກສູດຝຶກດັ່ງໄດ້ລະບຸໃນຂໍ້ 3.4.5 ໄປນັ້ນ

ພະນັກງານໃນສູນສົ່ງເສີມແຂວງ ຢ່າງນ້ອຍຕ້ອງມີ ນຶ່ງຄົນທີ່ສັນທັດດີກັບວິທີການສົ່ງເສີມ. ພະນັກງານຜູ້ນີ້ຈະເປັນສ່ວນນຶ່ງຂອງທີມທີ່ຮັບຜິດຊອບດຳເນີນການສ້າງ VES ໃນບ້ານເປົ້າໝາຍ ແລະ ກໍ່ເປັນຜູ້ສະໜັບສະໜູນນັກສົ່ງເສີມເມືອງດ້ວຍການໃຫ້ຄຳແນະນຳບໍ່ວ່າດ້ານການປະເມີນສະພາບຊຸມນະບົດແບບມີສ່ວນຮ່ວມ, ການສື່ສານສຳພັນ ແລະ ການຈັດຕັ້ງ/ພັດທະນາອົງກອນໃນຊຸມຊົນຕ່າງໆ.

### *3.6.3 ການຝຶກອົບຮົມ ຂອງ ຊາວກະສິກອນ*

ການຝຶກຊາວກະສິກອນແມ່ນການປະຕິບັດພາລະກິດເພື່ອສ້າງໂຄງການຮຽນຮູ້,ທີ່ມີການເອື້ອອຳນວຍໂດຍວິຊາການບ້ານ ແລະ ການສະນັບສະໜູນຈາກນັກສົ່ງເສີມເມືອງ.ການວາງແຜນ ແລະ ວິທີປະຕິບັດໂຄງການຮຽນຮູ້ລະອຽດໄດ້ອະທິບາຍໄວ້ໃນຂໍ້ 3.2.4 ແລ້ວ. ແຕ່ມີຈຸດສຳຄັນທີ່ກ່ຽວຂ້ອງກັບກິດຈະກຳນີ້ເຊັ່ນ:

- ໂຄງການຮຽນຮູ້ ແມ່ນອອກແບບໃຫ້ກວມທັງໝົດ"ຮອບລະດູການຜະລິດ" ອາດນຶ່ງເຖີງສອງລະດູການ. ກຸ່ມຜະລິດນຶ່ງປະກອບດ້ວຍ ສະມະຊິກ ປະມານ 10 ຄອບຄົວ
- ການສ້າງແລະເຂົ້າຮ່ວມໂຄງການຮຽນຮູ້ຕ້ອງຢຶດຖືຫຼັກການໃນການສົ່ງເສີມຢ່າງຈິງຈັງຄື" ຕ້ອງສອດຄ່ອງຄວາມຕ້ອງການ, ມີສ່ວນຮ່ວມ,ເບິ່ງບົດບາດເພດຍິງແລະຊາຍ ແລະມີຄວາມທ້າວທັນ"
- ຜົນທີ່ໄດ້ຈາກໂຄງການຮຽນຮູ້ບໍ່ຄວນໃຫ້ຕິດພັນພຽງແຕ່ກັບການໄດ້ຮັບຄວາມຮູ້ ແລະ ທັກສະຫຼາຍຂື້ນ, ແຕ່ຕ້ອງສ້າງທັດສະນະເພິ່ງຕົນເອງໃຫ້ໄດ້ໃນຂະບວນການແກ້ບັນຫາ ແລະເຫັນໄດ້ການສ້າງໜໍ່ແໜງລວມໝູ່ຂອງປະຊາຊົນ

ຫຼັງຈາກລະບົບການສົ່ງເສີມຂັ້ນບ້ານດຳເນີນການສຳເລັດລົງ, ວິຊາການບ້ານກໍ່ຍັງມີຄວາມຕ້ອງການໃຫ້ມີການສະໜັບສະໜູນຈາກນັກສົ່ງເສີມຢູ່ເຊັ່ນການຍົກຄວາມຮັບຮູ້ດ້ານໃໝ່ໆຊຶ່ງອາດຖືກຮຽກເຊີນເຂົ້າຮ່ວມການຝຶກນຳວິຊາການສະເພາະດ້ານໃດນຶ່ງທີ່ຈຳເປັນ ແຕ່ການຝຶກຕິດຕາມທີ່ໃກ້ຊິດກໍ່ຈະເປັນການຝຶກແບບໃຫ້ການແນະນຳກັບທີ່ໃນຂະນະທີ່ມີການປະຕິບັດກິດຈະກຳການສົ່ງເສີມໂດຍນັກສົ່ງເສີມຮອບດ້ານຂອງເມືອງ.

## 3.7 ວິທີຈັດຕັ້ງຜັນຂະຫຍາຍຂອງບັນດາໂຄງການ

### *3.7.1 ປະເພດຂອງໂຄງການ*

ໂຄງການຊ່ວຍເຫຼືອຂອງຕ່າງປະເທດເຫັນວ່າມີຄວາມສຳຄັນໃນການເຮັດໜ້າທີ່ຜັນຂະຫຍາຍ/ນຳໃຊ້**ຮູບແບບການສົ່ງເສີມຂອງລາວ** .ຫຼັກການ ,ໂຄງປະກອບ ແລະ ຂະບວນການປະຕິບັດທີ່ໄດ້ອະທິບາຍໃນເອກະສານນີ້ ແມ່ນສາມາດນຳໃຊ້ເຂົ້າໃນໜ້າວຽກປົກກະຕິຂອງສູນສົ່ງເສີມກະສິກຳ ແຂວງ ແລະ ຫ້ອງການສົ່ງເສີມ ກ ປ ເມືອງລວມທັງບັນດາໂຄງການຊ່ວຍເຫຼືອງົບປະມານຈາກອົງການຈັດຕັ້ງສາກົນ. ດັ່ງນັ້ນ,ຕ້ອງໄດ້ເຫັນແຈ້ງວ່າຮູບແບບການສົ່ງເສີມອັນນີ້ກ່ຽວຂ້ອງກັບບັນດາປະເພດໂຄງການຊຶ່ງປະກອບມີ:

<u>ກ) ການເສີມສ້າງຂີດຄວາມສາມາດຂອງອົງກອນລັດ</u>

ໂຄງການໃດທີ່ມີເປົ້າໝາຍເນັ້ນໃສ່ການເສີມສ້າງຄວາມສາມາດຂອງສາຍຕັ້ງການຄຸ້ມຄອງຂອງກະຊວງ ກະສິກຳ ແລະ ປ່າໄມ້ ຕະລອດລົງຮອດແຂວງ ແລະ ເມືອງນັ້ນຕ້ອງໄດນຳໃຊ້ລະບົບ/ຮູບແບບການສົ່ງເສີມດັ່ງທີ່ໄດ້ອະທິບາຍໃນເອກະສານນີ້,ບໍ່ມີຄວາມຈຳເປັນທີ່ຈະຕ້ອງເຂົ້າມາພັດທະນາຮູບແບບ/ທາງເລືອກ ແລະ ຍຸດທະສາດອັນໃໝ່ຕື່ມອີກ.

<u>ຂ) ການຖ່າຍທອດເຕັກໂນໂລຢີ</u>

ມີຫຼາຍໂຄງການທີ່ເນັ້ນການຊຸກຍູ້ການນຳໃຊ້ເຕັກໂນໂລຢີແລະແບບແຜນການຜະລິດໃໝ່. ຕົວຢ່າງການປູກພືດເສັ້ນໃຍ, ການປ້ອງກັນພືດແບບປະສົມປະສານ,ການປູກເຂົ້າ, ການປ້ອງກັນການເຊາະເຈື່ອນຂອງໜ້າດິນ ແລະ ການກະສິກຳ-ປ່າໄມ້. ໄລຍະຜ່ານມາໂຄງການເລົ່ານັ້ນມີການອອກແບບໂດຍຈຳກັດການມີສ່ວນຮ່ວມຂອງປະຊາຊົນແລະກໍ່ອ້ອມກອດຢູ່ກັບຂະແໜງການວິຊາສະເພາະໃດນຶ່ງ.ສະນັ້ນໃນຕໍ່ໜ້າການອອກແບບກໍ່ຕ້ອງເນັ້ນໃສ່ການສ້າງໂຄງການທີ່ຖືເອົາຄວາມຕ້ອງການຂອງຊາວກະສິກອນເປັນຫຼັກ ແລະ ປະສົມປະສານຫຼາຍສາຂາວິຊາເຂົ້າຮ່ວມນຳກັນ.

ຄ) ການພັດທະນາຊຸມຊົນ

ໂຄງການທີ່ປະຕິບັດໃນລະດັບບ້ານມັກຈະນຳໃຊ້ຮູບແບບການສົ່ງເສີມລະບົບການທຳຟາມຊຶ່ງອ້າງອີງວ່າເຕັກນິກເຂົ້າສົ່ງເສີມແມ່ນມີການກຳນົດຮ່ວມກັບຊາວກະສິກອນ. ນີ້ແມ່ນມີຄວາມສອດຄ່ອງກັບລະບົບການສົ່ງເສີມຂັ້ນບ້ານ, ແຕ່ຢ່າງໃດກໍດີ,ມີຫຼາຍໆໂຄງການພັດທະນາຊຸມຊົນໄດ້ປະສົມປະສານກິດຈະກຳການສົ່ງເສີມເຂົ້າກັບການສ້າງທົວໜ່ວຍສິນເຊື່ອແລະ ສະໜອງປັດໃຈການຜະລິດ. ຖ້າຫາກແມ່ນກໍລະນີດັ່ງກ່າວນີ້ຜູ້ວາງແຜນແລະ ຜູ້ຄຸ້ມຄອງໂຄງການຕ້ອງເຫັນຄວາມແຕກຕ່າງໃຫ້ແຈ້ງວ່າກິດຈະກຳການສົ່ງເສີມແມ່ນຕ້ອງດຳເນີນໄປຕາມຮູບແບບການສົ່ງເສີມຂອງປະເທດນີ້ ສ່ວນອົງປະກອບຫຼືໜ້າວຽກອື່ນຂອງໂຄງການແມ່ນເປັນພຽງການສະໜອງໃຫ້ທ້ອງຖິ່ນໃດນຶ່ງ ແລະ ກໍ່ຈຳກັດໃນກອບເວລາໃດນຶ່ງເທົ່ານັ້ນ.

### *3.7.2 ການສອດທ້ອຍເຂົ້າກັບຮູບແບບການສົ່ງເສີມຂອງລາວ*

ການນຳສະເໜີໂຄງການໃໝ່ ຫຼື ສືບຕໍ່ຊ່ວງໄລຍະໃໝ່ ຕ້ອງຖືກປະເມີນໂດຍລັດຖະບານເພື່ອໃຫ້ແນ່ໃຈວ່າໂຄງການເລົ່ານັ້ນສອດຄ່ອງກັບນະໂຍບາຍແລະ ແຜນງານບຸລິມະສິດ ແລະກໍ່ຕ້ອງໄປຕາມວິໄສທັດ/ຍຸດທະສາດການພັດທະນາຂອງຂະແໜງການກະສິກຳ ແລະ ປ່າໄມ້ລວມທັງ ຍຸດທະສາດການລຶດຜ່ອນຄວາມທຸກຍາກແຫ່ງຊາດ

ໃນຊ່ວງປະເມີນນັ້ນ ກະຊວງກະສິກຳ ແລະ ປ່າໄມ້ຈະໄດ້ເບິ່ງຄືນຄວາມສອດທ້ອຍວຽກໂຄງການເຂົ້າກັບຮູບແບບການສົ່ງເສີມຂອງລາວເປັນຢ່າງໃດດັ່ງທີ່ໄດ້ອະທິບາຍໃນເອກະສານນີ້. ລະບົບດັ່ງກ່າວນີ້ແມ່ນຍູ້ແຮງການຜູກພັນຫຼາຍພາກສ່ວນ,ຊຶ່ງໝາຍວ່າມັນອາດແຕກຕ່າງກັນໄປໃນແຕ່ລະໄລຍະແລະທອ້ງຖິ່ນປະຕິບັດ, ແຕ່ຕ້ອງມີທິດລວງແລະລັກສະນະອັນດຽວກັນ,ຊຶ່ງສິ່ງດັ່ງກ່າວນີ້ຕ້ອງໄດ້ສັງຮວມເຂົ້າໃນການອອກແບບແຕ່ລະອົງປະກອບໜ້າວຽກຂອງໂຄງການອັນປະກອບມີ:

- ການອອກແບບໂຄງການສົ່ງເສີມຕ້ອງນອນໃນຫຼັກການດັ່ງທີ່ໄດ້ອະທິບາຍໃນຂໍ້ 3.2.1. ໝາຍວ່າຕ້ອງສະໜັບສະໜູນການພັດທະນາລະບົບການສົ່ງເສີມທີ່ມີລັກສະນະທັນລົງສູ່

ຮາກຖານ,ຜູກພັນຫຼາຍພາກສ່ວນ,ມີສ່ວນຮ່ວມ,ຕອບສະໜອງຕາມຄວາມຕ້ອງການ, ປະ ສົມປະສານ,ເບິ່ງບົດບາດເພດຍິງແລະຊາຍ,ສ້າງໝັ້ນແໜງລວມໝູ່ ແລະ ເພິ່ງຕົນເອງໄດ້.

- ກິດຈະກຳການສົ່ງເສີມບໍ່ໃຫ້ມີລັກສະນະຈຳແນກຊັ້ນຄົນ, ບໍ່ວ່າເຊື້ອຊາດສາດສະໜາໃດ, ໜ້າທີ່ຄວນເອົາໃຈໃສ່ເປັນພິເສດກໍ່ແມ່ນຍົກສູງບົດບາດການມີສ່ວນຮ່ວມຂອງເພດຍິງ ແລະ ສາມະຊິກຊຸມຊົນທີ່ເປັນຄອບຄົວທຸກຍາກຂາດເຂີນກ່ວາໝູ່.

- ບົດບາດໜ້າທີ່ຂອງພະນັກງານສົ່ງເສີມບໍ່ແມ່ນຈະປ່ຽນແປງໄປຕາມເປົ້າໝາຍການປະຕິ ບັດກິດຈະກຳຂອງແຕ່ລະໂຄງການ. ພະນັກງານເມືອງແມ່ນນັກສົ່ງເສີມຮອບດ້ານ,ຂະນະ ທີ່ພະນັກງານໃນຂະແໜງການຕ່າງໆໃນພະແນກ ແມ່ນວິຊາການສະເພາະດ້ານ. ຢູ່ໃນ ລະດັບບ້ານກິດຈະກຳການສົ່ງເສີມຕ້ອງຖືກຈັດຕັ້ງ ແລະ ເອື້ອອຳນວຍການປະຕິບັດໂດຍ ສາມະຊິກຊຸມຊຸນເຂົາເຈົ້າເອງ

- ການປະຕິບັດວຽກສົ່ງເສີມຕ້ອງໄປຕາມວົງຈອນຂອງວຽກດັ່ງທີ່ໄດ້ອະທິບາຍໃນຂໍ້ 3.4.2 ການກຳນົດກິດຈະກຳກຸ່ມຮຽນຮູ້/ຜະລິດ ຕ້ອງບົນພື້ນຖານຄວາມຕ້ອງການທີ່ປະເມີນໄດ້ ໂດຍອຳນາດການປົກຄອງບ້ານແລະ ຊາວບ້ານ. ການຕິດຕາມ ແລະ ປະເມີນຜົນແບບ ມີສ່ວນຮ່ວມຕ້ອງໄດ້ນຳໄຊ້ເພື່ອຕີລາຄາຜົນສຳເລັດ. ນອນນັ້ນ, ກິດຈະກຳການຈັດຕັ້ງ ການແລກປ່ຽນບົດຮຽນເພື່ອໃຫ້ທຸກພາກສ່ວນຂອງຊຸມຊົນໄດ້ຮັບປະໂຫຍດຕ້ອງໄດ້ດຳ ເນີນການປະຕິບັດ.

- ເພື່ອບໍ່ໃຫ້ເກີດການສັບສົນ ຄຳສັບທີ່ຕ້ອງໄຊ້ໃນການສົ່ງເສີມນີ້ຕ້ອງເອກະພາບວ່າ" ຜູ້ ເອື້ອອຳນວຍຂອງບ້ານ ແມ່ນ "ວິຊາການບ້ານ" ແລະ ກິດຈະກຳກຸ່ມຜະລິດຮຽນຮູ້ຮ່ວມກັນ ແມ່ນ " ໂຄງການຮຽນຮູ້"

- ບໍ່ຄວນໃຫ້ຄ່າຈ້າງໃດໆແກ່ຊາວກະສິກອນທີ່ເຂົ້າຮ່ວມກິດຈະກຳການສົ່ງເສີມ. ແຕ່ທີ່ສຳ ຄັນໄປກ່ວານັ້ນ ແມ່ນ ການກຳນົດວິທີການເພື່ອໃຫ້ການຕອບແທນແກ່ວິຊາການບ້ານຕ້ອງ ແມ່ນການຕັດສິນໃຈຕົກລົງຂອງສາມະຊິກກຸ່ມຜະລິດ ແລະ ອຳນາດການປົກຄອງບ້ານ ຫາກບໍ່ແມ່ນຈາກພະນັກງານໂຄງການ

ຈຸດສຳຄັນສຸດທ້າຍເພື່ອຢໍ້າການອະທິບາຍນີ້ແມ່ນທຸກໂຄງການສົ່ງເສີມຕ້ອງຊຸກຍູ້ທັດສະນະ" ເຊື່ອໝັ້ນຕົນເອງ,ເປັນໂຕຂອງໂຕເອງ, ແລະ ມີຄວາມຍືນນານບໍ່ຂື້ນກັບແລະລໍຄອຍແຕ່ຄຳສັ່ງ ແນະນຳຈາກສູນກາງ ແລະ ການຊ່ວຍເຫຼືອຈາກຕ່າງປະເທດ. ເຖິງແມ່ນວ່າບາງຄັ້ງຄາວມີຄວາມ ຈຳເປັນທີ່ລັດ ແລະ ໂຄງການຕ່າງປະເທດຕ້ອງໄດ້ໃຫ້ການສົງເຄາະ ແຕ່ຕ້ອງເຫັນໃນທັດສະນະ ມັນເປັນມາດຕາການແກ້ໄຂໄລຍະສັ້ນ/ສະເພາະໜ້າຊຶ່ງຕ້ອງແຍກແຍະອອກຈາກວຽກການພັດ ທະນາກໍ່ຄືການສົ່ງເສີມກະສິກຳ. ພະນັກງານສົ່ງເສີມ ແຂວງ ແລະ ເມືອງສາມາດຊ່ວຍຊາວກະສິ

ກອນກຳນົດແລ່ງສິນເຊື່ອ, ແນວພັນ,ຢາວັກຊີນແລະອື່ນໆໄດ້ແຕ່ເຂົາເຈົ້າບໍ່ແມ່ນຜູ້ທີ່ຕ້ອງສະໜອງປັດໃຈເລົ່ານັ້ນ,ນອກຈາກຈະເປັນຈຳນວນໃດນຶ່ງເພື່ອເປົ້າໝາຍການທົດສອບໃນ ແປງສາທິດ ແລະ ການຝຶກ. ແລະ ວິຊາການບ້ານກໍ່ເຊັ່ນດຽວເຂົາບໍ່ແມ່ນເປັນປະຕູຜ່ານດ້ານສະໜອງປັດໃຈແລະ ການຕະລາດຜົນຜະລິດໃດໆ. ກໍລະນີທີ່ມີຄວາມຕ້ອງການເງິນເພື່ອສະໜັບສະໜູນການຜະລິດອັນໃໝ່, ການສ້າງເປັນກອງທຶນໝູນວຽນ ແລະ ອອມຊັບຄວນມີຂື້ນເພື່ອເປັນການກະຕຸກຊຸກຍູ້ ແລະ ທົດແທນສິ່ງຈຳເປັນ. ແຕ່ຫາກບໍ່ແມ່ນໄຊ້ເງິນຈ່າຍຄ່າເຂົ້າຮ່ວມປະຊຸມວຽກສົ່ງເສີມໃຫ້ແກ່ຊາວກະສິກອນ. ໃນບາງກໍລະນີອາດສະໜອງໄດ້ໃນຮູບແບບພາເຂົ້າສາມັກຄີ ຫຼືນ້ຳຮ້ອນນ້ຳຊາ ຖ້າຫາກຊາວບ້ານເຂົາເຈົ້າຫາກມີການຈັດຕັ້ງການປະຊຸມເອົາເອງ.

### *3.7.3 ຄວາມຍືດຍຸ່ນໃນຊ່ວງເວລາຈັດຕັ້ງປະຕິບັດ*

ຮູບແບບການສົ່ງເສີມຂອງລາວ LEA ແມ່ນມີຫຼາຍຢ່າງໃນດ້ານຫຼັກການ ແລະ ຂະບວນການທີ່ຕ້ອງໄດ້ປະຕິບັດຕາມ, ແຕ່ກໍ່ບໍ່ໄດ້ເປັນລະບົບທີ່ແຂງກະດ້າງຕາຍຕົວດັ່ງຈະໄດ້ກ່າວໃນຕໍ່ໄປນີ້:

- ເນື້ອໃນທາງດ້ານເຕັກນິກຂອງແຕ່ລະກິດຈະກຳການສົ່ງເສີມ ແລະ ຜົນທີ່ຕ້ອງບັນລຸໄດ້ຈາກແຕ່ລະກິດຈະກຳ;
- ໄລຍະເວລາໄຊ້ດຳເດີນການແຕ່ລະໂຄງການຮຽນຮູ້,ຄວາມຖີ່ໃນການຈັດປະຊຸມ,ສະຖານທີ່ແລະເວລາໄຊ້ແຕ່ລະຄັ້ງ;
- ສ່ວນປະກອບຂອງກຸ່ມຜະລິດ, ຈຳນວນກຸ່ມຕໍ່ບ້ານ,ການພົວພັນລະວ່າງກຸ່ມກັບການຈັດຕັ້ງອື່ນໆຂອງທ້ອງຖິ່ນ
- ປະເພດກິດຈະກຳການຕິດຕາມແລະໂຄງສ້າງການຈັດຕັ້ງຂອງຜູ້ເຂົ້າຮ່ວມທີ່ຕ້ອງເກີດມີຂື້ນໃນລະບົບ ການສົ່ງເສີມຂັ້ນບ້ານ VES

ຮູບແບບການສົ່ງເສີມຂອງລາວ ***L E A*** ບໍ່ໄດ້ກຳນົດວ່າຕ້ອງວາງຕາຕະລາງເວລາຂອງກິດຈະກຳປະຈຳອາທິດ ຫຼື ປະຈຳວັນແຕ່ຢ່າງໃດ, ລາຍຊື່ຜູ້ເຂົ້າຮ່ວມກໍ່ບໍ່ໄດ້ໝາຍວ່າເປັນບຸກຄົນທີ່ຕ້ອງປະສານສະເໝີໄປ. ບໍ່ໄດ້ວາງເງື່ອນໄຂວ່າຂໍ້ມູນທາງເຕັກນິກອັນໃດສະເພາະຕ້ອງກະຈ່າຍໄປທົ່ວທຸກບ້ານແລະກໍ່ບໍ່ໄດ້ບັງຄັບໃຫ້ຜູ້ເຂົ້າຮ່ວມຕ້ອງຈ່າຍຄ່າເປັນສາມະຊິກເພື່ອເປັນທຶນອອມຊັບ, ຄ່າພົວພັນການຕະລາດ ຫຼືເພື່ອການຈັດຕັ້ງອື່ນໆຂອງບ້ານ. ທັງນີ້ກໍ່ເພາະວ່າມັນຕ້ອງເປັນລະບົບການສົ່ງເສີມທີ່ເນັ້ນໃສ່ການຕອບສະໜອງຄວາມຕ້ອງການຂອງປະຊາຊົນ ແລະ ມີຄວາມຫຼາກຫຼາຍ, ຂື້ນກັບຊາວບ້ານເປັນຜູ້ຕັດສິນໃຈເລືອກເອົາ.

ສຸດທ້າຍນີ້ມີຄວາມຈຳເປັນຕ້ອງໄດ້ຕອບຄຳຖາມທີ່ສຳຄັນກ່ຽວກັບຫົວຂໍ້/ເນື້ອໃນທາງເຕັກນິກຂອງກິດຈະກຳການສົ່ງເສີມເຊັ່ນ: ຈະເຮັດຮູບແບບການສົ່ງເສີມທີ່ເນັ້ນໃສ່ສະໜອງຄວາມຕ້ອງການອັນນີ້ມີຄວາມສອດຄ່ອງກັບກໍລະນີທີ່ໂຄງການຕ່າງໆຢາກຊຸກຍູ້ການໄຊ້ເຕັກໂນໂລຢີສະເພາະໄດ້ຢ່າງໃດ?. ເຕັກໂນໂລຢີຂອງໂຄງການຕ່າງໆນັ້ນບໍ່ໄດ້ກຳນົດຂື້ນບົນພື້ນຖານຄວາມຕ້ອງການຂອງຊາວບ້ານສະເໝີໄປ, ແຕ່ກົງກັນຂ້າມ,ມັນຖືກກຳນົດໂດຍຜູ້ຊ່ຽວຊານທີ່ມາຈາກພາຍ ນອກຂອງຊຸມຊົນ,ຊຶ່ງອາດຈະມີ ເຫດຜົນທີ່ດີກໍ່ໄດ້.ແຕ່ຊາວບ້ານບໍ່ໄດ້ໃຫ້ຄວາມສຳຄັນທີ່ເລິກເຊີ່ງຕໍ່ໂອກາດທາງເຕັກນິກທີ່ມີຢູ່ ຫຼື ບໍ່ເຫັນໄດ້ບັນຫາທີ່ຈະເກີດຂື້ນຈາກການກຳນົດຂອງຄົນພາຍນອກ. ສະນັ້ນ, ໂຄງການລັດຖະ ບານແລະຂອງຜູ້ໃຫ້ທຶນຕ່າງໆ ແມ່ນມີບົດບາດສູງ ໃນການສ້າງສະຕິສຳນຶກໃນດ້ານດັ່ງກ່ວາ ເພື່ອນຳໄປໃຫ້ ແລະ ຂະຫຍາຍໂອກາດ,ທາງເລືອກໃຫ້ແກ່ຊາວຊົນນະບົດ. ແຕ່ນີ້ກໍ່ບໍ່ໄດ້ໝາຍ ວ່າບັນດາໂຄງການເລົ່ານັ້ນເປັນພຽງທີ່ພັກຜ່ອນໃນການນຳໄຊ້ຮູບແບບ"ການກະຈ່າຍເຕັກໂນ ໂລຢີ" ແຕ່ຢ່າງໃດ!

ໃນຖານະທີ່ເປັນສ່ວນນຶ່ງຂອງລະບົບ/ຮູບແບບການສົ່ງເສີມຂອງລາວ, ການນຳສະເໜີເຕັກໂນໂລຢີ ຕ້ອງຕິດພັນກັບຂະບວນການມີສ່ວນຮ່ວມແລະໃຫ້ການສຶກສາແກ່ປະຊາຊົນ, ຫາກບໍ່ແມ່ນເປັນພຽງລະບົບປູ່ສອນຫຼານ ຫຼືເປັນພຽງຮູບການບອກເລົ່າ(ເບີ່ງຂໍ້ 1.4.1-ການອະທິບາຍກອບແນວຄວາມຄິດໃນການສົ່ງເສີມແບບຕ່າງໆ). ຕໍ່ສີ່ງດັ່ງກ່າວມີຄວາມຈຳເປັນຄື:

- ມີຄວາມຈຳເປັນຕ້ອງໄດ້ຮ່ວມປຶກສາກັບປະຊາຊົນໃນໄລຍະການວາງແຜນສ້າງໂຄງການ/ແຜນງານການສົ່ງເສີມ
- ຜູ້ຊ່ຽວຊານຕ້ອງເລືອກເຕັກໂນໂລຢີທີ່ເປັນການຂະຫຍາຍໂອກາດໃຫ້ແກ່ຊາວກະສິກອນ, ຫາກບໍ່ແມ່ນໄປຈຳກັດມັນໃຫ້ນ້ອຍລົງ.;
- ເຕັກໂນໂລຢີໃໝ່ນັ້ນຕ້ອງຖືກນຳສະເໜີໃນຮູບການທົດສອບ/ທົດລອງກ່ອນຈະຊຸກຍູ້ການຂະຫຍາຍ/ນຳໄຊ້ສູ່ວົງກ້ວາງ
- ວິທີການສ້າງໃຫ້ເກີດການຮຽນຮູ້ໂດຍໃຫ້ເກີດການແລກປ່ຽນລະວ່າງຊາວບ້ານຄວນຖືກນຳໄຊ້ ເພື່ອໃຫ້ແນ່ໃຈວ່າຊາວບ້ານເຂົ້າໃຈຖືກຕ້ອງ ແລະ ເປັນເຈົ້າການຕໍ່ເຕັກໂນໂລຢີໃໝ່ນັ້ນພຽງໃດ!

ການຜັນຂະຫຍາຍນຳໄຊ້ລະບົບ/ຮູບແບບການສົ່ງເສີມຂອງລາວນີ້ບໍ່ແມ່ນການກີດກັ້ນໂຄງການໃດ/ນຶ່ງເພື່ອສ້າງໃຫ້ເກີດປະໂຫຍດຈາກເຕັກໂນໂລຢີອັນໃດອັນນຶ່ງແຕ່ຢ່າງໃດ, ຫາກເປັນພຽງການຢາກໃຫ້ດຳເນີນການຕາມຂໍ້ແນະນຳທີ່ງ່າຍໆດັ່ງໄດ້ສະເໜີມານັ້ນ, ຊຶ່ງເປົ້າໝາຍຕົ້ນຕໍກໍ່ແມ່ນແນໃສ່ເຫັນຄວາມສຳຄັນຂອງປະຊາຊົນທີ່ເປັນຜູ້ນຳໄຊ້ເຕັກໂນໂລຢີ ,ຫາກບໍ່ແມ່ນຕົວເຕັກໂນໂລຢີນັ້ນໆ. ນີ້ແມ່ນການສົ່ງເສີມທີ່ເນັ້ນຕອບສະໜອງຄວາມຕ້ອງການ ແລະ ເຫັນປະໂຫຍດຂອງຊາວກະສິກອນເປັນກົກ

# References

[1] 1949, Edmund Brunner and E. Hsin Pao Yang, “Rural America and the Extension Service”, Columbia University

[2] 1965, AH Saville, “Extension in Rural Communities: A Manual for Agricltural and Home Extension Workers”. Oxford University Press

[3] 1966, DJ Bradfield, “Guide to Extension Training” (1st Edition), FAO

[4] 1973, Addison Maunder, “Agricultural Extension: A Reference Manual” (1st Edition), FAO

[5] 1974, Anne van den Ban, “Inleiding tot de Voorlichtingskunde”, (Dutch edition first published by Boom, later quoted in English editions: 1988, van den Ban and Hawkins, and 2004, Leeuwis and van den Ban)

[6] 1982, Martin Adams, “Agricultural Extension in Developing Countries”, Longman

[7] 1988, Niels Roling, “Extension Science: Information Systems in Agricultural Development”, Cambridge University Press

[8] 1997, Uwe Jens Nagel, *Alternative Approaches to Organizing Extension,* in Swanson “Improving Agricultural Extension: A Reference Manual (3rd Edition)” FAO

[9] 1999, Neuchatel Group, “Common Framework on Agricultural Extension”

[10] 2004, Cees Leeuwis and Anne van den Ban, “Communication for Rural Innovation: Rethinking Agricultural Extension” (3rd Edition), Blackwell Publishing

[11] 1994, Jules Pretty, "Alternative systems of inquiry for sustainable agriculture" IDS Bulletin, 25(2), University of Sussex

[12] This section is taken from the Lao PDR Country Paper, presented by Mr Bounliep Chounthavong, former Director of the Agricultural Extension Agency, to the “Regional Expert Consultations on Strengthening the Agricultural Extension Systems for Productive and Sustainable Agriculture and Rural Development”, FAO, Bangkok, 1996

[13] This section is based on the PEP ‘Project Completion Report: An Internal Assessment’, published by the Department of Agriculture in 1999.

[14] This section is based on the ‘Report of the Final Evaluation’ of FIAT (project LAO/92/007), produced by UNDP in 1999.

[15] The information in this section is largely taken from ‘IPM in the Lao PDR’, a booklet produced by the FAO Regional Vegetable IPM Programme in 2003.

[16] This section draws on a number of documents produced by the Lao-Swedish Forestry Programme, especially the ‘Guide to Participatory Extension Procedures and Methods’ and ‘Extension: A Component Description’, both published in 2001. The Guide is available on-line at this address: www.eldis.org/static/DOC10101.htm

[17] This section is based on ‘Existing Extension Approaches in Lao PDR, a report by LEAP, 2002

[18] Report of the ‘Review Workshop: Assessment on Existing Extension Approaches in Lao P.D.R’, published by LEAP, October 2002.

[19] Information collected during LEAP field visits, October 2004